# ພຣະທັມພຣະບັນຍັດທີສອງ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | 32 |
| 33 | 34 | | | | | | |


## ພຣະບັນຍັດທີສອງ

DEUTERONOMY

### 1 ຄຳແນະນຳ

Events at Horeb Recalled

1 ໜັງສືພຣະທັມນີ້ ແມ່ນຖ້ອຍຄຳທີ່ໂມເຊໄດ້ບອກປະຊາຊົນອິສຣາເອນ ເມື່ອຄາວພວກເຂົາຢູ່ໃນຖິ່ນກັນດານຟາກຕາເວັນອອກຂອງແມ່ນໍ້າຈໍແດນ ຄືໃນຮ່ອມພູຈໍແດນໃກ້ໆສູຟລະຫວ່າງເມືອງປາຣານ ແລະໂຕເຟນ ລາບານ ຮາເຊໂຣດ ແລະດີຊາຮັບ

2 ຫີນທາງຈາກໂຮເຣັບ ຕັ້ງແຕ່ພູຊີນາອີໄປເຖິງກາເດສບາເນອາ ເປັນລະຍະທາງເດີນສິບເອັດມື້

3 ພາຍຫລັງທີ່ພວກເຂົາອອກຈາກເອຢິບແລ້ວ ໃນວັນທີນຶ່ງເດືອນທີສິບເອັດປີທີສີ່ສິບ ໂມເຊໄດ້ບອກຊາວອິສຣາເອນທຸກຢ່າງຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາໄວ້

4 ຄືພາຍຫລັງທີ່ຕີຊະນະຊີໂຮນ ກະສັດອາໂມຣິດຜູ້ຊົງປົກຄອງເມືອງເຮສໂບນ ແລະກະສັດໂອກຂອງຊາວບາຊານ ຜູ້ຊົງປົກຄອງເມືອງອັຊຕາໂຣດແລະເມືອງເອດເຣອີແລ້ວ

5 ໂມເຊໄດ້ເລີ້ມອະທິບາຍພຣະທັມ ແລະຄຳສອນນີ້ໃຫ້ແກ່ປະຊາຊົນຢູ່ໃນເຂດແດນໂມອາບ ຟາກຕາເວັນອອກຂອງແມ່ນໍ້າຈໍແດນວ່າ,

6 “ເມື່ອພວກເຮົາຢູ່ທີ່ພູຊີນາອີ ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຮົາໄດ້ຊົງບອກວ່າ,

7 “ພວກເຈົ້າໄດ້ພັກຢູ່ພູນີ້ເຫິງນານແລ້ວ ບັດນີ້ ຈົ່ງເລີກຄ້າຍແລ້ວອອກເດີນທາງໄປຍັງດິນແດນພູດອຍຂອງຊາວອາໂມຣິດ ຕາມບ່ອນຕ່າງໆທີ່ເພື່ອນບ້ານຂອງເຂົາອາສັຍຢູ່ຄື ຮ່ອມພູຈໍແດນພູດອຍນ້ອຍບ່ອນດິນຕໍ່າ ດິນແດນພາກໃຕ້ແລະ

ຢູ່ແຄມທະເລເມດີເຕຣາເນຈົນເຖິງດິນແດນຂອງຊາວການາອານ ແລະເທິງພູເລບານອນເລີຍໄປຈົນເຖິງແມ່ນໍ້າໃຫຍ່ເອີ     ຟຣາດ

8 ຈົ່ງເບິ່ງດູ ນັ້ນແມ່ນດິນແດນທີ່ເຮົາໄດ້ສັນຍາວ່າຈະຍົກໃຫ້ ອັບຣາຮາມ ອີຊາກ ແລະຢາໂຄບ ບັນພະບຸຣຸດຂອງພວກເຈົ້າ ແລະເຊື້ອສາຍທັງຫລາຍຂອງພວກເຂົາ ພວກເຈົ້າຈົ່ງເຂົ້າໄປຍຶດຄອງເອົາເທີ້ນ”

Appointment of Tribal Leaders

(ອພຍ 18:13-27)

9 “ຂ້າພະເຈົ້າໄດ້ບອກທ່ານທັງຫລາຍວ່າ ຂ້າພະເຈົ້າຜູ້ດຽວແບກພວກທ່ານທັງຫລາຍບໍ່ໄດ້

10 ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານໄດ້ຊົງໃຫ້ທ່ານທັງຫລາຍເພີ້ມທະວີຫລາຍຂຶ້ນ ແລະເບິ່ງແມ໋, ທຸກວັນນີ້ທ່ານທັງຫລາຍມີຈຳນວນຫລາຍເຫມືອນດັ່ງດວງດາວທັງຫລາຍໃນທ້ອງຟ້າ

11 ຂໍພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງທ່ານທັງຫລາຍຊົງກະທຳໃຫ້ທ່ານທັງຫລາຍທະວີຂຶ້ນພັນເທົ່າ ແລະຊົງ
ອວຍພຣະພອນແກ່ພວກທ່ານ ດັ່ງທີ່ພຣະອົງໄດ້ຊົງສັນຍາໄວ້ແກ່ທ່ານທັງຫລາຍແລ້ວນັ້ນ
12 ຂ້າພະເຈົ້າຄົນດຽວຈະແບກທ່ານທັງຫລາຍຜູ້ເປັນພາຣະແລະເປັນຄວາມຍາກລຳບາກ ແລະການຖົກຖຽງຂອງ
ທ່ານທັງຫລາຍໄດ້ຢ່າງໃດໄດ້
13 ຈົ່ງເລືອກຄົນທີ່ມີປັນຍາ ມີຄວາມຮູ້ ແລະປະສົບການຕາມເຜົ່າຂອງທ່ານທັງຫລາຍ ແລະຂ້າພະເຈົ້າຈະຕັ້ງເຂົາ
ໃຫ້ເປັນຫົວຫນ້າຂອງທ່ານທັງຫລາຍ"
14 ທ່ານທັງຫລາຍໄດ້ຕອບຂ້າພະເຈົ້າວ່າ, "ສິ່ງທີ່ທ່ານກ່າວນັ້ນດີແລ້ວ ຄວນທີ່ຂ້າພະເຈົ້າທັງຫລາຍຈະກະທຳ"
15 ຂ້າພະເຈົ້າຈຶ່ງໄດ້ເລືອກຫົວຫນ້າຈາກທຸກເຜົ່າ ຊຶ່ງເປັນຄົນມີປັນຍາ ແລະປະສົບປະການຕັ້ງໄວ້ເປັນໃຫຍ່ເຫນືອ
ທ່ານທັງຫລາຍໃຫ້ເປັນນາຍພັນ ນາຍຮ້ອຍ ນາຍຫ້າສິບ ນາຍສິບ ແລະພະນັກງານຕ່າງໆຕາມເຜົ່າຂອງທ່ານ
16 ເວລານັ້ນ ຂ້າພະເຈົ້າໄດ້ແນະນຳພວກຜູ້ປົກຄອງຂອງທ່ານທັງຫລາຍວ່າ "ຈົ່ງພິຈາຣະນາຄະດີຂອງພີ່ນ້ອງແລະ
ຕັດສິນຄວາມຕາມຍຸດຕິທັມລະຫວ່າງຊາຍຄົນນຶ່ງແລະພີ່ນ້ອງຂອງຕົນ ຫລືຄົນຕ່າງດ້າວທີ່ອາສັຍຢູ່ກັບທ່ານ
17 ທ່ານທັງຫລາຍຢ່າລຳອຽງໃນການພິພາກສາ ຈົ່ງຟັງຜູ້ນ້ອຍແລະຜູ້ໃຫຍ່ໃຫ້ເຫມືອນກັນ ທ່ານທັງຫລາຍຢ່າຢ້ານ
ກົວຫນ້າມະນຸດເລີຍ ເພາະການພິພາກສານັ້ນເປັນການຂອງພຣະຜູ້ເປັນເຈົ້າ ແລະຄະດີໃດທີ່ຍາກຈົ່ງນຳມາໃຫ້
ຂ້າພະເຈົ້າ ຂ້າພະເຈົ້າຈະພິຈາຣະນາເອງ"
18 ຂ້າພະເຈົ້າໄດ້ສັ່ງທ່ານທັງຫລາຍເຖິງບັນດາສິ່ງທີ່ທ່ານທັງຫລາຍຄວນກະທຳ

## ສິ່ງຜູ້ສອດແນມອອກໄປ

Israel's Refusal to Enter the Land

(ຈຊບ 13:1-33)

19 "ດັ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຮົາໄດ້ຊົງສັ່ງເຮົາໄວ້ ພວກເຮົາໄດ້ອອກຈາກໂຮເຣັບ ແລະເດີນທາງ
ຜ່ານຖິ່ນກັນດານອັນເປັນທີ່ຫນ້າຢ້ານຕາມທີ່ທ່ານທັງຫລາຍໄດ້ເຫັນນັ້ນ ເດີນໄປຕາມແດນສາຍພູຂອງຊາວອາ
ໂມຣິດ ແລະພວກເຮົາໄດ້ມາເຖິງກາເດສບາເນອາ
20 ຂ້າພະເຈົ້າໄດ້ກ່າວແກ່ທ່ານທັງຫລາຍວ່າ, "ທ່ານທັງຫລາຍມາເຖິງແດນພູດອຍຂອງຊາວອາໂມຣິດແລ້ວ
ຊຶ່ງເປັນບ່ອນທີ່ ພຣະຜູ້ເປັນເຈົ້າຂອງເຮົາປະທານແກ່ເຮົາທັງຫລາຍ
21 ເບິ່ງແມ່, ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານ ໄດ້ຊົງຕັ້ງແຜ່ນດິນນັ້ນໄວ້ຊື່ຫນ້າທ່ານແລ້ວ ຈົ່ງຂຶ້ນໄປຍຶດ
ແຜ່ນດິນນັ້ນ ດັ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງບັນພະບຸຣຸດຂອງພວກທ່ານໄດ້ສັ່ງໄວ້ ຢ່າຢ້ານຫລືຢ່າຕົກໃຈ
ໄປເລີຍ"
22 ແລ້ວທ່ານທັງຫລາຍທຸກຄົນໄດ້ເຂົ້າມາຫາຂ້າພະເຈົ້າເວົ້າວ່າ, "ໃຫ້ເຮົາທັງຫລາຍໃຊ້ຄົນໄປກ່ອນເຮົາ ແລະ
ສອດແນມເບິ່ງແຜ່ນດິນນັ້ນແທນເຮົາ ນຳຂ່າວເຣື່ອງທາງທີ່ເຮົາຈະຕ້ອງຂຶ້ນໄປ ແລະເຣື່ອງຫົວເມືອງທີ່ເຮົາຈະ
ໄປນັ້ນມາໃຫ້ເຮົາ"
23 ເຣື່ອງນັ້ນຂ້າພະເຈົ້າເຫັນດີດ້ວຍ ຂ້າພະເຈົ້າຈຶ່ງໄດ້ເລືອກສິບສອງຄົນມາຈາກທ່ານທັງຫລາຍ ເຜົ່າລະຄົນ
24 ແລ້ວຄົນເຫລົ່ານັ້ນໄດ້ໄປຂຶ້ນແດນພູດອຍ ມາເຖິງຫ້ວຍຊື່ເອສໂກນ ແລະສອດແນມເບິ່ງຢູ່ທີ່ນັ້ນ
25 ເຂົາທັງຫລາຍໄດ້ເກັບເອົາຫມາກໄມ້ເມືອງນັ້ນຕິດມືມາໃຫ້ເຮົາທັງຫລາຍ ແລະນຳຂ່າວມາໃຫ້ເຮົາວ່າ "ທີ່ຊຶ່ງພ
ຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາປະທານແກ່ເຮົານັ້ນເປັນແຜ່ນດິນທີ່ດີ"
26 "ແຕ່ປານນັ້ນ ທ່ານທັງຫລາຍກໍບໍ່ຍອມຂຶ້ນໄປ ໄດ້ຂັດຂືນພຣະບັນຊາຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ທັງຫລາຍ

27 ແລະທ່ານໄດ້ຈົ່ມຢູ່ໃນເຕັນຂອງຕົນ ແລະວ່າ, "ເພາະພຣະເຈົ້າຊົງຊັງພວກເຮົາ ພຣະອົງຈຶ່ງຊົງພາເຮົາທັງຫລາຍ
ອອກມາຈາກແຜ່ນດິນເອຢິບ ຈະໄດ້ມອບເຮົາໄວ້ໃນມືຊາວອາໂມຣິດ ເພື່ອຈະທຳລາຍເຮົາເສັຽ
28 ເຮົາທັງຫລາຍຈະຂຶ້ນໄປທາງໃດ ພວກພີ່ນ້ອງຂອງເຮົາໄດ້ທຳໃຫ້ໃຈຂອງເຮົາທໍ້ຖອຍໄປໂດຍທີ່ວ່າ, "ຄົນເຫລົ່າ
ນັ້ນໃຫຍ່ກວ່າ ແລະສູງກວ່າພວກເຮົາອີກ ເມືອງເຫລົ່ານັ້ນກໍໃຫຍ່ມີກຳແພງສູງຫຍູ້ມຟ້າ ແລະນອກຈາກນີ້ເຮົາ
ໄດ້ເຫັນພວກຊາວອານາກີມຢູ່ທີ່ນັ້ນດ້ວຍ"
29 ແລ້ວຂ້າພະເຈົ້າຈຶ່ງໄດ້ເວົ້າກັບທ່ານທັງຫລາຍວ່າ, "ຢ່າຢ້ານຄົນເຫລົ່ານີ້ເລີຍ
30 ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຜູ້ນຳຫນ້າທ່ານທັງຫລາຍ ພຣະອົງຈະຊົງຕໍ່ສູ້ເພື່ອທ່ານທັງຫລາຍ ດັ່ງທີ່ພຣະ
ອົງໄດ້ຊົງກະທຳໃຫ້ແກ່ທ່ານທັງຫລາຍໃນເອຢິບຕໍ່ຫນ້າຕໍ່ຕາທ່ານທັງຫລາຍ
31 ແລະໃນຖິ່ນກັນດານ ຊຶ່ງໃນທີ່ນັ້ນພວກທ່ານໄດ້ເຫັນພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງອູ້ມຊູພວກທ່ານ ດັ່ງ
ພໍ່ອູ້ມລູກຂອງຕົນຕລອດທາງທີ່ທ່ານໄດ້ໄປນັ້ນ ຈົນທ່ານທັງຫລາຍໄດ້ມາເຖິງທີ່ນີ້"
32 ແຕ່ຢ່າງໃດກໍຕາມ ທ່ານທັງຫລາຍບໍ່ໄດ້ເຊື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍ
33 ຜູ້ໄດ້ຊົງນຳທາງຂ້າງຫນ້າທ່ານ ເພື່ອຈະຫາທີ່ໃຫ້ທ່ານທັງຫລາຍຕັ້ງເຕັນຂອງທ່ານ ເປັນໄຟໃນຍາມກາງຄືນ
ເພື່ອໂຜດໃຫ້ທ່ານທັງຫລາຍເຫັນທາງທີ່ຄວນຈະໄປ ແລະເປັນເມກໃນຍາມກາງເວັນ

**ພຣະເຈົ້າຊົງລົງໂທດອິສຣາເອນ**

The Penalty for Israel's Rebellion

(ຈຊບ 14:20-45)

34 "ພຣະຜູ້ເປັນເຈົ້າໄດ້ຊົງສະດັບສຽງຄຳເວົ້າຂອງທ່ານທັງຫລາຍ ຈຶ່ງຊົງພຣະພິໂຣດ ແລະສາບານວ່າ,
35 "ແທ້ຈິງຈະບໍ່ມີຜູ້ໃດໃນຊາດເຊື້ອທີ່ຊົ່ວນີ້ຈັກຄົນດຽວທີ່ຈະໄດ້ເຫັນແຜ່ນດິນດີນັ້ນ ທີ່ເຮົາໄດ້ສັນຍາວ່າຈະໃຫ້ແກ່
ບັນພະບຸຣຸດຂອງເຈົ້າທັງຫລາຍ
36 ເວັ້ນແຕ່ ກາເລັບບຸດຊາຍຂອງເຢຟຸນເນ ເຂົາຈະເຫັນເມືອງນັ້ນ ແລະເຮົາຈະໃຫ້ແຜ່ນດິນທີ່ເຂົາໄດ້ຢຽບນັ້ນແກ່
ເຂົາ ແລະແກ່ລູກຫລານ ເພາະເຂົາໄດ້ຕາມພຣະຜູ້ເປັນເຈົ້າຢ່າງສຸດໃຈ
37 ເພາະເຫດທ່ານທັງຫລາຍພຣະຜູ້ເປັນເຈົ້າກໍຊົງພິໂຣດເຮົາດ້ວຍ ກ່າວວ່າ, "ເຈົ້າຈະບໍ່ໄດ້ເຂົ້າໄປໃນທີ່ນັ້ນ
ເຫມືອນກັນ
38 ໂຢຊວຍບຸດຊາຍຂອງນູນຜູ້ຢືນຢູ່ຕໍ່ຫນ້າເຈົ້າ ຈະໄດ້ເຂົ້າໄປ ຈົ່ງສນັບສນຸນເຂົາ ເພາະເຂົາຈະພາຄົນອິສຣາເອນ
ໄປຖືກຳມະສິດພື້ນດິນນັ້ນ
39 ແລະເດັກນ້ອຍຂອງເຈົ້າທັງຫລາຍວ່າຈະຕົກເປັນເຫຍື່ອ ແລະເດັກນ້ອຍຂອງເຈົ້າທີ່ໃນວັນນີ້ຍັງບໍ່ຮູ້ຈັກຜິດແລະ
ຊອບ ຈະໄດ້ເຂົ້າໄປທີ່ນັ້ນ ເຮົາຈະໃຫ້ແຜ່ນດິນນັ້ນແກ່ເຂົາ ແລະເຂົາຈະຖືກຳມະສິດຢູ່ທີ່ນັ້ນ
40 ແຕ່ຝ່າຍເຈົ້າທັງຫລາຍຈົ່ງກັບເດີນເຂົ້າຖິ່ນກັນດານ ຕາມທາງທີ່ໄປສູ່ທະເລແດງເຖີດ"

**ອິສຣາເອນຜ່າຍແພ້ທີ່ໂຮມາ**

41 "ທ່ານທັງຫລາຍໄດ້ຕອບຂ້າພະເຈົ້າວ່າ, "ເຮົາທັງຫລາຍໄດ້ກະທຳບາບຕໍ່ພຣະຜູ້ເປັນເຈົ້າແລ້ວ ເຮົາທັງຫລາຍ
ຈະຂຶ້ນໄປສູ້ຮົບຕາມພຣະດຳຣັດ ທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາທັງຫລາຍໄດ້ຊົງສັ່ງນັ້ນ" ແລະທ່ານທັງ
ຫລາຍໄດ້ຄາດອາວຸດຕຽມຕົວໄວ້ທຸກຄົນ ຄິດວ່າທີ່ຈະຂຶ້ນໄປຍັງແດນພູດອຍນັ້ນເປັນເຣື່ອງງ່າຍ
42 ພຣະຜູ້ເປັນເຈົ້າໄດ້ສັ່ງຂ້າພະເຈົ້າວ່າ, "ຢ່າຂຶ້ນໄປສູ້ຮົບເລີຍ ຢ້ານວ່າເຈົ້າທັງຫລາຍຈະຜ່າຍແພ້ສັດຕຣູ ເພາະ
ເຮົາບໍ່ໄດ້ຢູ່ຖ້າມກາງເຈົ້າທັງຫລາຍ"
43 ຂ້າພະເຈົ້າຈຶ່ງໄດ້ກ່າວແກ່ທ່ານດັ່ງນັ້ນ ແລະທ່ານທັງຫລາຍບໍ່ຍອມເຊື່ອຟັງ ແຕ່ໄດ້ຂັດຂືນພຣະບັນຊາຂອງພ
ຣະຜູ້ເປັນເຈົ້າ ມີໃຈອົງອາດແລະໄດ້ຂຶ້ນໄປທີ່ແດນພູດອຍນັ້ນ

44 ແລະຄົນອາໂມຣິດທີ່ຢູ່ໃນແດນພູດອຍນັ້ນໄດ້ອອກມາຕໍ່ສູ້ ແລະໄລ່ຕີທ່ານທັງຫລາຍດັ່ງຝູງເຜິ້ງໄລ່ ແລະໄດ້ຂ້າ
ທ່ານທັງຫລາຍໃນເມືອງເຊອີຣ໌ຈົນເຖິງໂຮຣ໌ມາ
45 ແລະທ່ານທັງຫລາຍໄດ້ມາຮ້ອງໄຫ້ຕໍ່ພຣະຜູ້ເປັນເຈົ້າ ແຕ່ພຣະຜູ້ເປັນເຈົ້າບໍ່ໄດ້ຊົງຟັງສຽງຮ້ອງ ຫລືສົນໃຈຟັງ
ທ່ານທັງຫລາຍ
46 ທ່ານທັງຫລາຍຈຶ່ງພັກເຊົາຢູ່ທີ່ກາເດສຫລາຍວັນຕາມວັນທີ່ທ່ານທັງຫລາຍໄດ້ຢູ່ນັ້ນ

## 2 ລະຍະປີທີ່ຢູ່ໃນຖິ່ນກັນດານ

The Desert Years

1 “ພວກເຮົາທັງຫລາຍໄດ້ກັບເດີນເຂົ້າຖິ່ນກັນດານຕາມທາງໄປສູ່ທະເລແດງ ຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງຂ້າພ
ະເຈົ້າ ແລະພວກເຮົາທັງຫລາຍໄດ້ເດີນວົນວຽນພູເຂົາເຊອີຣ໌ຫລາຍມື້
2 ແລ້ວພຣະຜູ້ເປັນເຈົ້າສັ່ງຂ້າພະເຈົ້າວ່າ,
3 “ເຈົ້າທັງຫລາຍໄດ້ເດີນວົນວຽນທີ່ແດນພູດອຍນີ້ນານພໍແລ້ວ ຈົ່ງຫັນເດີນໄປທາງທິດເຫນືອເຖີດ
4 ແລະຈົ່ງບັນຊາຄົນທັງຫລາຍວ່າ ເຈົ້າທັງຫລາຍໃກ້ຈະເດີນຜ່ານເຂດແດນເມືອງພີ່ນ້ອງຂອງເຈົ້າ ຄືລູກຫລານ
ຂອງເອຊາວທີ່ຢູ່ເມືອງເຊອີຣ໌ແລ້ວ ແລະເຂົາທັງຫລາຍຈະຢ້ານພວກເຈົ້າ ສະນັ້ນເຈົ້າທັງຫລາຍຈົ່ງລະວັງຕົວ
5 ຢ່າຕໍ່ສູ້ເຂົາ ເພາະເຮົາຈະບໍ່ໃຫ້ທີ່ຂອງເຂົາແກ່ເຈົ້າ ຈະບໍ່ໃຫ້ທີ່ດິນແມ້ພຽງຝ່າຕີນຢຽບໄດ້ ດ້ວຍວ່າພູເຂົາເຊອີ
ຣ໌ນັ້ນເຮົາໄດ້ໃຫ້ເອຊາວຍຶດຄອງແລ້ວ
6 ເຈົ້າທັງຫລາຍຈົ່ງເອົາເງິນຊື້ສະບຽງອາຫານຈາກເຂົາເພື່ອຈະໄດ້ກິນ ແລະຈົ່ງເອົາເງິນຊື້ນ້ຳຈາກເຂົາດ້ວຍເພື່ອ
ຈະໄດ້ດື່ມ
7 ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າ ໄດ້ອວຍພຣະພອນແກ່ບັນດາການທີ່ມືຂອງພວກເຈົ້າໄດ້ກະທຳ
ພຣະອົງຊົງຊາບທາງທີ່ເຈົ້າໄດ້ເດີນໃນຖິ່ນກັນດານໃຫຍ່ນີ້ ພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າໄດ້ຢູ່ກັບເຈົ້າ
ສີ່ສິບປີນີ້ມາແລ້ວ ພວກເຈົ້າບໍ່ໄດ້ຂັດສົນສິ່ງໃດເລີຍ”
8 ແລ້ວເຮົາທັງຫລາຍໄດ້ເດີນໄປເລີຍໄປຈາກພີ່ນ້ອງຂອງເຮົາພວກລູກຫລານເອຊາວ ຜູ້ຢູ່ທີ່ເຊອີຣ໌ໄປຈາກທາງ
ອາຣາບາ ຈາກເອລັດ ແລະຈາກເອຊີໂອນເກເບີ ແລະເຮົາໄດ້ລ້ຽວໄປເດີນຕາມທາງຖິ່ນກັນດານໂມອາບ
9 ແລະພຣະຜູ້ເປັນເຈົ້າໄດ້ສັ່ງແກ່ເຮົາວ່າ, “ເຈົ້າທັງຫລາຍຢ່າສ້າງຄວາມເດືອດຮ້ອນແກ່ພວກໂມອາບ ຫລືສູ້ຮົບ
ກັບເຂົາ ເພາະເຮົາຈະບໍ່ໃຫ້ທີ່ຂອງເຂົາແກ່ພວກເຈົ້າເພື່ອຍຶດຄອງ ດ້ວຍເຮົາໄດ້ໃຫ້ທີ່ເມືອງອາຣ໌ນັ້ນແກ່ເຊື້ອ
ສາຍໂລດໃຫ້ປົກຄອງແລ້ວ
10 (ແຕ່ກ່ອນຄົນຄົນເອມິມຢູ່ທີ່ນັ້ນ ເປັນຊົນຊາດໃຫຍ່ ແລະຫລາຍ ແລະສູງຢ່າງຄົນອານາກິມ
11 ຄົນເຫລົ່ານີ້ໄດ້ຊື່ອີກວ່າເອຟາອິມເຫມືອນຄົນອານາກິມ ແຕ່ຄົນໂມອາບເອີ້ນຊື່ພວກນີ້ວ່າເອມິມ
12 ເມື່ອກ່ອນພວກໂຮຣິມໄດ້ຢູ່ທີ່ເຊອີຣ໌ດ້ວຍ ແຕ່ລູກຫລານເອຊາວໄດ້ມາຢູ່ແທນເຂົາ ແລະໄດ້ທຳລາຍເຂົາເສັຽໃຫ້
ພົ້ນຫນ້າ ແລະໄດ້ອາສັຍຢູ່ໃນທີ່ຂອງເຂົາເຫມືອນພວກອິສຣາເອນໄດ້ກະທຳແກ່ເມືອງທີ່ພຣະຜູ້ເປັນເຈົ້າປະ
ທານໃຫ້ເຂົາຍຶດຄອງນັ້ນ
13 “ບັດນີ້ເຈົ້າທັງຫລາຍຈົ່ງຍົກເດີນຂ້າມຫ້ວຍ ເຊເຣດ” ເຮົາທັງຫລາຍຈຶ່ງຂ້າມຫ້ວຍ ເຊເຣດ
14 ແລະນັບຕັ້ງແຕ່ເຮົາມາຈາກກາເດສບາເນອາ ຈົນເຖິງໄດ້ຂ້າມລຳຫ້ວຍເຊເຣດນັ້ນໄດ້ສາມສິບແປດປີ ຈົນສິ້ນ
ຊາດເຊື້ອສາຍນັ້ນ ຄືຄົນທັງຫລາຍທີ່ຈະອອກເສິກໄດ້ນັ້ນຕາຍຫມົດ ຕາມທີ່ພຣະຜູ້ເປັນເຈົ້າຊົງສັນຍາກັບເຂົາ
ໄວ້
15 ແທ້ຈິງພຣະຫັດພຣະຜູ້ເປັນເຈົ້າໄດ້ຊົງຕໍ່ສູ້ເຂົາ ຊົງທຳລາຍເຂົາຈາກຖ້າມກາງຄ້າຍ ຈົນເຂົາທັງຫລາຍສູນເສັຽ
ຫມົດ

16 “ເຫດສະນັ້ນເມື່ອຄົນທີ່ອອກເສິກໄດ້ມາຕາຍເສັ່ງຫມົດຈາກຖ້າມກາງຄົນເຫລົ່ານັ້ນແລ້ວ
17 ພຣະຜູ້ເປັນເຈົ້າໄດ້ກ່າວແກ່ຂ້າພະເຈົ້າວ່າ,
18 ວັນນີ້ເຈົ້າທັງຫລາຍຈະເດີນຂ້າມເມືອງອາຣ໌ ເຂດແດນຂອງຄົນໂມອາບ
19 ແລະເມື່ອເຂົ້າໃກ້ແນວຫນ້າຂອງຄົນອັມໂມນ ຢ່າຮາວີຫລືຮົບກັບເຂົາເລີຍ ເພາະເຮົາຈະບໍ່ໃຫ້ທີ່ຢູ່ຂອງລູກ
ຫລານຄົນອັມໂມນແກ່ເຈົ້າໃຫ້ຍຶດຄອງເລີຍ ດ້ວຍເຮົາໄດ້ໃຫ້ທີ່ນັ້ນແກ່ເຊື້ອສາຍໂລດເປັນຜູ້ຍຶດຄອງແລ້ວ”
20 (ທັງທີ່ນັ້ນກໍນັບວ່າເປັນແຜ່ນດິນຂອງພວກເຣຟາອິມ ແຕ່ກ່ອນຄົນເຣຟາອິມໄດ້ຢູ່ໃນນັ້ນ ແຕ່ຄົນອັມໂມນໄດ້
ເອີ້ນຊື່ຂອງເຂົາວ່າຊຳຊຸມມິມ
21 ຄົນເຫລົ່ານັ້ນໃຫຍ່ແລະຫລວງຫລາຍ ແລະສູງຢ່າງຄົນອານາກິມ ແຕ່ພຣະຜູ້ເປັນເຈົ້າໄດ້ຊົງທຳລາຍເຂົາເສັ່ງໃຫ້
ພົ້ນຫນ້າ ແລະພວກອັມໂມນໄດ້ເຂົ້າຍຶດທີ່ຂອງເຂົາ ແລະຕັ້ງຢູ່ແທນ
22 ເຫມືອນພຣະອົງໄດ້ຊົງກະທຳໃຫ້ແກ່ພວກລູກຫລານເອຊາວຜູ້ຢູ່ທີ່ເຊອີຣ໌ ເມື່ອພຣະອົງຊົງທຳລາຍພວກໂຮຣິມ
ເສັ່ງໃຫ້ພົ້ນຫນ້າ ແລະເຂົາໄດ້ຍຶດທີ່ຂອງພວກໂຮຣິມ ແລ້ວຕັ້ງຢູ່ແທນຈົນທຸກວັນນີ້
23 ສ່ວນພວກອາວິມທີ່ຢູ່ໃນຊົນນະບົດຈົນເຖິງກາຊາ ຄົນເກັບໂຕຣິມຊຶ່ງມາຈາກເມືອງເກັບໂຕກໍໄດ້ທຳລາຍເຂົາ
ແລະຕັ້ງຢູ່ແທນ)
24 “ພວກເຈົ້າຈົ່ງລຸກເດີນທາງໄປຂ້າມລຸ່ມແມ່ນ້ຳອາຣ໌ໂນນ ເບິ່ງແມ໋, ເຮົາໄດ້ມອບ ຊີໂຮນຊາວອາໂມຣິດຜູ້ເປັນກະ
ສັດເມືອງເຮສໂບນ ແລະເມືອງຂອງເຂົາໄວ້ໃນມືຂອງພວກເຈົ້າ ເຈົ້າທັງຫລາຍຕັ້ງຕົ້ນຍຶດເມືອງນັ້ນແລະສູ້ຮົບ
ກັບເຂົາ
25 ຕັ້ງແຕ່ມື້ນີ້ໄປເຮົາຈະໃຫ້ຊົນຊາດທັງຫລາຍທົ່ວໃຕ້ຟ້າເກງຂາມຕໍ່ພວກເຈົ້າແລະຢ້ານເຈົ້າ ຄົນປະເທດຜູ້ໄດ້ຍິນ
ຂ່າວເຣື່ອງເຈົ້າຈະຢ້ານຕົວສັ່ນ ແລະມີຄວາມຣະທົມເພາະເຈົ້າ”
Defeat of King Sihon
(ຈຊບ 21:21-32)
26 “ສະນັ້ນ ຂ້າພະເຈົ້າຈຶ່ງໃຊ້ຜູ້ນຳຂ່າວຈາກຖິ່ນກັນດານເກເດໂມທດໄປເຝົ້າຊີໂຮນກະສັດເມືອງເຮສໂບນນັ້ນ ທູນ
ຖ້ອຍຄຳອັນສັນຕິວ່າ
27 “ຂໍໃຫ້ຂ້າພະເຈົ້າເດີນຂ້າມແຜ່ນດິນຂອງທ່ານ ຂ້າພະເຈົ້າຈະເດີນໄປຕາມທາງຫລວງ ຈະບໍ່ລ້ຽວໄປທາງຂວາມື
ຫລືທາງຊ້າຍມືເລີຍ
28 ຂໍທ່ານໄດ້ຂາຍສະບຽງເອົາເງິນຂອງຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະມີອາຫານກິນ ແລະຂໍຂາຍນ້ຳເອົາເງິນຂອງ
ຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະໄດ້ດື່ມ ຂໍໃຫ້ຂ້າພະເຈົ້າເດີນຍ່າງຂ້າມປະເທດຂອງທ່ານເທົ່ານັ້ນ
29 ເຫມືອນດັ່ງພວກລູກຫລານເອຊາວທີ່ຢູ່ເມືອງເຊອີຣ໌ ແລະພວກໂມອາບທີ່ຢູ່ເມືອງອາຣ໌ ໄດ້ກະທຳແກ່ຂ້າພະ
ເຈົ້ານັ້ນ ຈົນຂ້າພະເຈົ້າຈະຂ້າມແມ່ນ້ຳຈໍແດນເຂົ້າໄປໃນປະເທດທີ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງຂ້າພະເຈົ້າ
ທັງຫລາຍໄດ້ຊົງປະທານແກ່ຂ້າພະເຈົ້າ
30 ແຕ່ຊີໂຮນກະສັດເມືອງເຮສໂບນ ບໍ່ຍອມໃຫ້ເຮົາທັງຫລາຍຂ້າມປະເທດຂອງທ່ານ ເພາະພຣະຜູ້ເປັນເຈົ້າ ພຣະ
ເຈົ້າຂອງພວກທ່ານໄດ້ຊົງກະທຳໃຫ້ຈິດໃຈຂອງທ່ານໃຫ້ແຂງໄປ ເພື່ອຈະໄດ້ຊົງມອບເຂົາໄວ້ໃນມືຂອງພວກ
ທ່ານດັ່ງເປັນຢູ່ທຸກ
ວັນນີ້
31 ແລະພຣະຜູ້ເປັນເຈົ້າໄດ້ສັ່ງແກ່ຂ້າພະເຈົ້າວ່າ, “ເບິ່ງແມ໋, ເຮົາໄດ້ເລີ້ມມອບຊີໂຮນ ແລະເມືອງຂອງເຂົາໄວ້ກັບ
ເຈົ້າ ຈົ່ງເຂົ້າຍຶດຄອງທີ່ນັ້ນ ເພື່ອເຈົ້າຈະໄດ້ແຜ່ນດິນຂອງເຂົາເປັນກຳມະສິດ”
32 ແລ້ວຊີໂຮນຍົກອອກມາຕໍ່ສູ້ກັບເຮົາ ທັງທ່ານແລະພົນໂຍທາທັງຫລາຍຂອງທ່ານທີ່ເມືອງຢາຮັສ

33 ແລະພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາທັງຫລາຍໄດ້ຊົງມອບທ່ານໄວ້ໃນມືຂອງເຮົາ ແລະເຮົາໄດ້ຕີທຳລາຍ
ທ່ານກັບໂອຣົດ ແລະພົນໂຍທາທັງຫລາຍຂອງທ່ານເສັຽ
34 ຄັ້ງນັ້ນເຮົາໄດ້ຍຶດເມືອງທັງປວງຂອງທ່ານ ແລະເຮົາໄດ້ທຳລາຍທຸກໆເມືອງເສັຽສິ້ນ ເຮົາທຳລາຍຜູ້ຊາຍຜູ້ຍິງ
ແລະເດັກທັງຫລາຍໃນທຸກເມືອງບໍ່ໃຫ້ມີເຫລືອເລີຍ
35 ແຕ່ຝູງສັດເຮົາໄດ້ຍຶດມາເປັນຂອງເຮົາທັງຂອງຍຶດໄດ້ໃນເມືອງເຫລົ່ານັ້ນທີ່ເຮົາຕີມາ
36 ຕັ້ງແຕ່ອາໂຣເອີ ທີ່ຢູ່ລຸ່ມແມ່ນ້ຳອາຣ໌ໂນນ ແລະຕັ້ງແຕ່ເມືອງທີ່ຢູ່ໃນລຸ່ມແມ່ນ້ຳນັ້ນຈົນເຖິງເມືອງກີເລອາດ ບໍ່ມີ
ເມືອງໃດທີ່ຕໍ່ຕ້ານເຮົາໄດ້ ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາໄດ້ຊົງມອບທັງຫມົດໄວ້ໃນມືຂອງເຮົາ
37 ແຕ່ທ່ານທັງຫລາຍບໍ່ໄດ້ເຂົ້າໃກ້ແຜ່ນດິນຄົນອັມໂມນ ຄືຝັ່ງແມ່ນ້ຳຢັບໂບກ ແລະເມືອງທີ່ຢູ່ເທິງພູເຂົາ ແລະທີ່
ໃດໆຊຶ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາໄດ້ສັ່ງຫ້າມເຮົານັ້ນ

## 3 ອິສຣາເອນຊະນະກະສັດໂອກແຫ່ງເມືອງ ບາຊານ

Defeat of King Og

(ຈຊບ21:33-35)

1 “ເຮົາທັງຫລາຍຈຶ່ງໄດ້ຫັນໄປຂຶ້ນທາງສູ່ເມືອງບາຊານ ແລ້ວກະສັດໂອກເມືອງບາຊານກໍອອກມາສູ້ຮົບກັບເຮົາ
ຕົວໂອກເອງແລະພົນໂຍທາຂອງທ່ານມາຮົບກັບເຮົາທີ່ເມືອງເອັດເຣອີ
2 ແຕ່ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, “ເຈົ້າຢ່າຢ້ານເຂົາເລີຍ ເພາະເຮົາຈະມອບເຂົາກັບພົນໂຍທາທັງ
ຫມົດຂອງເຂົາ ແລະແຜ່ນດິນຂອງເຂົາໄວ້ໃນມືຂອງເຈົ້າ ເຈົ້າຈະກະທຳແກ່ເຂົາເຫມືອນເຈົ້າໄດ້ກະທຳແກ່ຊີ
ໂຮນກະສັດຂອງຄົນອາໂມຣິດຊຶ່ງຢູ່ເມືອງເຮສໂບນນັ້ນ”
3 ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາຈຶ່ງໄດ້ຊົງມອບໄວ້ໃນມືຂອງເຮົາ ທັງກະສັດໂອກເມືອງບາຊານ ແລະພົນໂຍ
ທາທັງຫລາຍຂອງທ່ານ ແລະເຮົາທັງຫລາຍໄດ້ຂ້າຕີເຂົາຈົນບໍ່ມີເຫລືອ
4 ຄັ້ງນັ້ນເຮົາທັງຫລາຍໄດ້ຕີເອົາບ້ານເມືອງທັງຫລາຍຂອງເຂົາຈົນບໍ່ມີເຫລືອຈັກເມືອງດຽວຊຶ່ງເຮົາບໍ່ໄດ້ຍຶດມາ
ຮ່ວມຫົກສິບເມືອງ ດິນແດນອາຣ໌ໂກບທັງຫມົດ ຊຶ່ງເປັນຣາຊອານາຈັກຂອງກະສັດໂອກເມືອງບາຊານ
5 ບັນດາເມືອງເຫລົ່ານີ້ເປັນເມືອງທີ່ມີກຳແພງສູງໂດຍຮອບ ມີປະຕູ ມີດ່ານປະຕູ ແລະຍັງມີຊົນນະບົດອີກ
ຫລາຍທີ່ບໍ່ມີກຳແພງ
6 ເຮົາໄດ້ຕີທຳລາຍຫມົດ ໄດ້ທຳລາຍທຸກໆເມືອງເສັຽສິ້ນ ຮວມທັງຜູ້ຊາຍຜູ້ຍິງແລະເດັກນ້ອຍທັງຫລາຍເຫມືອນ
ເຮົາໄດ້ທຳລາຍຊີວິດກະສັດຊີໂຮນເມືອງເຮສໂບນນັ້ນ
7 ແຕ່ຝູງສັດທັງຫມົດ ແລະຂອງຍຶດໄດ້ໃນເມືອງເຫລົ່ານັ້ນເຮົາໄດ້ຍຶດມາເປັນຂອງເຮົາ
8 ຄັ້ງນັ້ນເຮົາໄດ້ຍຶດແຜ່ນດິນເສັຽຈາກມືຂອງກະສັດທັງສອງ ຂອງຄົນອາໂມຣິດ ຜູ້ຢູ່ຟາກຕາເວັນອອກຂອງແມ່
ນ້ຳຈໍແດນ ຕັ້ງແຕ່ລຸ່ມແມ່ນນ້ຳອາຣ໌ໂນນເຖິງພູເຂົາເຮີໂມນ
9 (ພູເຂົາເຮີໂມນນັ້ນຊາວຊີໂດນເອີ້ນຊື່ວ່າ ຊີຣີໂອນ ແລະຊາວອາໂມຣິດເອີ້ນຊື່ວ່າ ເຊນີ)
10 ຄືເມືອງທັງຫລາຍໃນທີ່ຮາບສູງແລະກີເລອາດທັງຫມົດ ແລະບາຊານທັງຫມົດ ຈົນເຖິງຊາເລກາ ແລະເອັດເຣອີ
ຊຶ່ງເປັນຫົວເມືອງແຫ່ງຣາຊອານາຈັກໂອກໃນເມືອງບາຊານ
11 (ຍັງເຫລືອຢູ່ແຕ່ກະສັດໂອກເມືອງບາຊານ ຊຶ່ງເປັນພວກເຣຟາອິມ ເບິ່ງແມ, ຕຽງນອນຂອງທ່ານທຳດ້ວຍເຫລັກ
ຕຽງນອນນັ້ນບໍ່ຢູ່ໃນເມືອງຣັບບາແຫ່ງຄົນອັມໂມນດອກຫລື ຍາວຕັ້ງເກົ້າສອກ ກວ້າງສີ່ສອກ ຂນາດສອກຄົນ
ເຮົາ)

**ຣູເບນ ກາດ ແລະເຄິ່ງເຜົ່າມານັສເຊ ຕັ້ງຢູ່ທາງຕາເວັນອອກຂອງແມ່ນ້ຳຈໍແດນ**

(ຈຊບ 32:1-42)
12 "ແຜ່ນດິນນີ້ທີ່ເຮົາຕີໄດ້ຄັ້ງນັ້ນ ຄືຕັ້ງແຕ່ອາໂຣເອີ ຊຶ່ງຢູ່ລຸ່ມນໍ້າອາຣໂນນ ແລະແດນພູດອຍກີເລອາດເຄິ່ງນຶ່ງກັບ
ທົວເມືອງທັງຫລາຍເຫລົ່ານັ້ນ ເຮົາກໍໄດ້ໃຫ້ແກ່ເຜົ່າຣູເບນ ແລະເຜົ່າກາດ
13 ສ່ວນກີເລອາດທີ່ຍັງເຫລືອຢູ່ກັບເມືອງບາຊານທັງຫມົດ ຊຶ່ງເປັນແຜ່ນດິນຂອງໂອກ ຄືດິນແດນອາຣໂກບທັງ
ຫມົດ ເຮົາກໍ ໄດ້ໃຫ້ໄວ້ກັບເຄິ່ງນຶ່ງຂອງຄົນເຜົ່າມານັສເຊ (ທັງຫມົດເມືອງບາຊານນັ້ນເອີ້ນວ່າດິນແດນຂອງ
ພວກເຣຟາອີມ
14 ຢາອີຣ ຄົນເຜົ່າມານັສເຊກໍຕີໄດ້ດິນແດນອາຣໂກບທັງຫມົດ ຄືເມືອງບາຊານ ຈົນເຖິງເຂດແດນເມືອງຊາວເກຊູ
ແລະເມືອງຕະກູນມາອາກາ ແລະໄດ້ເອີ້ນຊື່ເມືອງເຫລົ່ານັ້ນຕາມຊື່ຂອງຕົນວ່າຮາວໂວດຢາອີ ຈົນເຖິງທຸກວັນ
ນີ້)
15 ເມືອງກີເລອາດນັ້ນເຮົາໃຫ້ແກ່ມາຄີຣ
16 ແຕ່ເຜົ່າຣູເບນ ແລະກາດນັ້ນເຮົາໃຫ້ເມືອງຕັ້ງແຕ່ກີເລອາດເຖິງລຸ່ມນໍ້າອາຣໂນນ ຖືເອົາກາງລຸ່ມນໍ້າເປັນແດນ
ມາເຖິງແມ່ນໍ້າຢັບໂບກອັນເປັນແດນຂອງຄົນອັມໂມນ
17 ທັງແຖບອາຣາບາ ມີແມ່ນໍ້າຈໍແດນເປັນເຂດແດນ ຕັ້ງແຕ່ທະເລຄິນເນເຣທຈົນເຖິງທະເລແຫ່ງອາຣາບາ ຄືທະ
ເລຕາຍທີ່ຮາບແຖບເນີນເຂົາປີສກາ ຊຶ່ງຢູ່ທິດຕາເວັນອອກ
18 "ຄັ້ງນັ້ນ ຂ້າພະເຈົ້າໄດ້ສັ່ງທ່ານທັງຫລາຍວ່າ "ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ຊົງໃຫ້ທ່ານທັງຫລາຍຍຶດ
ຄອງແຜ່ນດິນນີ້ ທະຫານທີ່ເກັ່ງກ້າທັງຫມົດຂອງທ່ານ ຈົ່ງຖືກອາວຸດຍົກຂ້າມໄປກ່ອນຄົນອິສຣາເອນຜູ້ເປັນພີ່
ນ້ອງຂອງທ່ານ
19 ແຕ່ພັຣຍາຂອງທ່ານ ບຸດນ້ອຍໆທັງຫລາຍຂອງທ່ານ ກັບຝູງສັດຂອງທ່ານ (ເພາະຂ້າພະເຈົ້າຊາບຢູ່ແລ້ວວ່າ
ທ່ານທັງຫລາຍມີຝູງສັດເປັນຈຳນວນຫລວງຫລາຍ) ຈົ່ງຢູ່ໃນເຂດເມືອງທີ່ເຮົາຍົກໃຫ້ນັ້ນກ່ອນ
20 ຈົນກວ່າພຣະຜູ້ເປັນເຈົ້າຈະໂຜດໃຫ້ພີ່ນ້ອງຂອງທ່ານໄດ້ຢຸດພັກເຫມືອນໄດ້ປະທານແກ່ທ່ານແລ້ວ ຈົນເຂົາທັງ
ຫລາຍຈະຍຶດຄອງແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານປະທານແກ່ເຂົາທີ່ຟາກຕາເວັນຕົກຂອງແມ່
ນໍ້າຈໍແດນ ແລ້ວທ່ານທັງຫລາຍຕ່າງຈຶ່ງຈະກັບມາຍັງທີ່ຢູ່ຂອງຕົນ ຊຶ່ງຂ້າພະເຈົ້າໄດ້ໃຫ້ແກ່ທ່ານທັງຫລາຍ"
21 ຄັ້ງນັ້ນ ຂ້າພະເຈົ້າໄດ້ສັ່ງໂຢຊວຍວ່າ "ດວງຕາຂອງທ່ານໄດ້ເຫັນບັນດາກິຈການຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງທ່ານທັງຫລາຍໄດ້ຊົງກະທຳແກ່ກະສັດທັງສອງນັ້ນແລ້ວ ດັ່ງນັ້ນພຣະເຈົ້າຈະຊົງກະທຳແກ່ເມືອງທັງປວງ
ຊຶ່ງທ່ານຈະຂ້າມໄປ
ຢູ່ເຊັ່ນດຽວກັນ
22 ທ່ານທັງຫລາຍຢ່າໄດ້ຢ້ານເຂົາເລີຍ ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ພຣະອົງນັ້ນຊົງສູ້ຮົບເພື່ອທ່ານ
ທັງຫລາຍ"

**ບໍ່ຊົງອະນຸຍາດໃຫ້ໂມເຊເຂົ້າການາອານ**

Moses Views Canaan from Pisgah

23 "ຄັ້ງນັ້ນຂ້າພະເຈົ້າໄດ້ອ້ອນວອນພຣະຜູ້ເປັນເຈົ້າວ່າ,
24 "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ຊົງສຳແດງອານຸພາບ ແລະຣິດພຣະຫັດຂອງພຣະອົງແກ່ຜູ້ຮັບໃຊ້ຂອງພຣະ
ອົງ ເພາະມີພຣະເຈົ້າອົງໃດໃນສວັນ ໃນແຜ່ນດິນໂລກຊຶ່ງອາດກະທຳຕາມການສຳຄັນ ແລະການອິດທິຣິດດັ່ງພ
ຣະອົງໄດ້
25 ຂໍພຣະອົງຊົງໂຜດອະນຸຍາດໃຫ້ຂ້າພຣະອົງຂ້າມໄປເບິ່ງແຜ່ນດິນອັນດີທີ່ຢູ່ຟາກຕາເວັນຕົກຂອງແມ່ນໍ້າຈໍແດນ
ເບິ່ງແດນພູດອຍງົດງາມ ແລະເລບານອນດ້ວຍ"

26 ແຕ່ພຣະຜູ້ເປັນເຈົ້າໄດ້ພິໂຣດຕໍ່ຂ້າພະເຈົ້າ ເພາະທ່ານທັງຫລາຍເປັນເຫດ ພຣະອົງຈຶ່ງບໍ່ໄດ້ຊົງໂຜດ ແລະພຣະ
ຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ "ພໍແລ້ວ ເຈົ້າຢ່າໄດ້ເວົ້າກັບເຮົາໃນເຣື່ອງນີ້ຕໍ່ໄປເລີຍ
27 ເຈົ້າຈົ່ງຂຶ້ນໄປເຖິງຍອດປິສກາ ແລະເພັ່ງຕາຂອງເຈົ້າເບິ່ງທິດຕາເວັນອອກ ແລະເບິ່ງແຜ່ນດິນນັ້ນດ້ວຍຕາຂອງ
ເຈົ້າ ເພາະເຈົ້າຈະຂ້າມແມ່ນ້ຳຈໍແດນນີ້ໄປບໍ່ໄດ້ເລີຍ
28 ແຕ່ເຈົ້າຈົ່ງບອກໂຢຊວຍ ຈົ່ງສນັບສນຸນ ແລະຊູໃຈຂອງເຂົາໃຫ້ເຂັ້ມແຂງ ເພາະເຂົາຈະຕ້ອງນຳໜ້າຊົນຊາດນີ້
ຂ້າມໄປ ແລະຈະໃຫ້ເຂົາທັງຫລາຍເຂົ້າຖືກຳມະສິດໃນແຜ່ນດິນທີ່ເຈົ້າແລເຫັນນັ້ນ"
29 ສະນັ້ນເຮົາທັງຫລາຍຈຶ່ງຢັບຢັ້ງຢູ່ໃນຮ່ອມພູຕໍ່ໜ້າເບັດເປໂອຣ໌

## 4 ໂມເຊຕັກເຕືອນຊາວອິສຣາເອນໃຫ້ເຊື່ອຟັງ

Moses Commands Obedience

1 ໂມເຊໄດ້ກ່າວຕໍ່ປະຊາຊົນວ່າ, "ພຣະທັມທັງໝົດທີ່ຂ້າພະເຈົ້າບອກສອນນັ້ນ ພວກທ່ານຈົ່ງປະຕິບັດຕາມເພື່ອ
ວ່າຈະໄດ້ມີຊີວິດຢູ່ ແລະເພື່ອຈະໄດ້ເຂົ້າຍຶດຄອງເອົາແຜ່ນດິນທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງບັນພະບຸຣຸດ
ຂອງພວກທ່ານກຳລັງຈະປະທານໃຫ້
2 ຢ່າເພີ້ມເຕີມ ຫລືຕັດຖ້ອຍຄຳໃດໆທີ່ຂ້າພະເຈົ້າສັ່ງນັ້ນອອກ ໃຫ້ເຊື່ອຟັງທັງໝົດ ເພາະວ່າເປັນຄຳສັ່ງແຫ່ງ
ພຣະຜູ້ເປັນເຈົ້າຂອງພວກທ່ານ
3 ພວກທ່ານເອງກໍເຫັນແລ້ວສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳໃນພູເປໂອນັ້ນ ຄືຊົງທຳລາຍທຸກຄົນທີ່ຂາບໄຫວ້
ພຣະບາອານຢູ່ໃນທີ່ນັ້ນ
4 ແຕ່ຄົນທັງຫລາຍທີ່ຍຶດຖືພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານກໍຍັງມີຊີວິດຢູ່ທຸກວັນນີ້
5 ຂ້າພະເຈົ້າໄດ້ສອນພຣະທັມທັງໝົດນີ້ແກ່ພວກທ່ານ ເໝືອນດັ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າພະເຈົ້າໄດ້
ບອກສອນຂ້າພະເຈົ້າ ສະນັ້ນຢູ່ໃນດິນແດນທີ່ພວກເຈົ້າກຳລັງຈະບຸກເຂົ້າໄປຍຶດຄອງນັ້ນ
6 ຈົ່ງໄດ້ປະຕິບັດຕາມພຣະທັມເຫລົ່ານີ້ດ້ວຍຄວາມສັດຊື່ ເພາະວ່າການກະທຳເຊັ່ນນີ້ຈະເປັນເຄື່ອງສະແດງໃຫ້
ຊົນຊາດອື່ນໆ ເຫັນສະຕິປັນຍາ ແລະຄວາມຮອບຮູ້ຂອງພວກທ່ານ ອັນນຶ່ງ ເມື່ອຊົນຊາດເຫລົ່ານັ້ນໄດ້ຟັງພຣະ
ທັມນີ້ທັງໝົດ ພວກເຂົາກໍຈະພາກັນເວົ້າວ່າຊົນຊາດໃຫຍ່ນີ້ມີສະຕິປັນຍາ ແລະຄວາມຮອບຮູ້ແທ້
7 ບໍ່ມີຊົນຊາດໃຫຍ່ອື່ນໃດມີພຣະຢູ່ໃກ້ເໝືອນກັບພວກເຮົາມີພຣະຜູ້ເປັນເຈົ້າຢູ່ໃກ້ຄືເມື່ອໃດພວກເຮົາຮ້ອງຂໍໃຫ້
ຊົງຊ່ອຍເຫລືອ ພຣະອົງກໍຊົງຕອບ
8 ບໍ່ມີປະເທດໃຫຍ່ອື່ນໃດມີພຣະທັມທີ່ຍຸດຕິທັມຄືດັ່ງທີ່ຂ້າພະເຈົ້າໄດ້ສອນພວກທ່ານໃນມື້ນີ້

**ທົບທວນເຫດການຊຶ່ງອິສຣາເອນປະສົບທີ່ໂຮເຣັບ**

9 ຈົ່ງເຝົ້າລະວັງຢູ່ ແລະລະມັດລະວັງໃຫ້ດີຕລອດຊົ່ວຊີວິດຂອງພວກທ່ານນັ້ນ ຢ່າໄດ້ຫລົງລືມສິ່ງທີ່ພວກທ່ານໄດ້
ເຫັນກັບຕາມາແລ້ວ ຈົ່ງບອກໃຫ້ພວກລູກຫລານຂອງພວກທ່ານຮູ້
10 ເຖິງເຣື່ອງເຫດການໃນມື້ທີ່ພວກເຈົ້າໄດ້ເຂົ້າເຝົ້າພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າທີ່ໂຮເຣັບ ໃນວັນນັ້ນ ພຣະ
ອົງຊົງບອກຂ້າພະເຈົ້າວ່າ, "ຈົ່ງບອກໃຫ້ປະຊາຊົນມາໂຮມກັນ ເພາະວ່າເຮົາຢາກເວົ້າໃຫ້ເຂົາຟັງເພື່ອເຂົາທັງ
ຫລາຍ ຈະໄດ້ຮູ້ຈັກການໂຄຣົບຢຳເກງເຮົາຈົນຕລອດຊີວິດແລະເພື່ອຈະໄດ້ບອກສອນລູກຫລານຂອງເຂົາໃຫ້
ຢຳເກງເຮົາ"
11 ໃນວັນນັ້ນເອງ ພວກເຈົ້າໄດ້ຫຍັບເຂົ້າມາຢືນຢູ່ໃນຕີນພູ ຊຶ່ງມີເມກເປັນຄວັນໜາຕຶບປົກຄຸມຢູ່
12 ແລ້ວພຣະຜູ້ເປັນເຈົ້າໄດ້ໃຫ້ພວກທ່ານຮູ້ວ່າ ພຣະອົງໄດ້ຊົງເວົ້າແນວໃດແດ່ກັບພວກທ່ານອອກມາຈາກໄຟນັ້ນ
ທັງໆທີ່ພວກທ່ານບໍ່ເຫັນຮູບຮ່າງໃດໆຂອງພຣະອົງເລີຍ

13 พระอิงຊົງບອກໃຫ້ທ່ານທັງຫລາຍທຳຕາມຄຳໝັ້ນສັນຍາທີ່ຊົງໃຫ້ໄວ້ແລະຊົງໃຫ້ເຊື່ອຟັງພຣະບັນຍັດສິບປະ
ການ ທີ່ຊົງຈາລຶກໄວ້ໃນສີລາສອງແຜ່ນ
14 ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າ ສອນພຣະທັມທັງຫມົດນີ້ແກ່ພວກທ່ານ ເພື່ອຈະໄດ້ນຳໄປປະພຶດປະຕິ
ບັດຢູ່ໃນແຜ່ນດິນທີ່ກຳລັງຈະເຂົ້າຍຶດຄອງນັ້ນ

**ຕັກເຕືອນບໍ່ໃຫ້ຂາບໄຫວ້ຮູບໂຄຣົບ**

15 ເມື່ອພຣະຜູ້ເປັນເຈົ້າຊົງກ່າວຕໍ່ພວກທ່ານອອກມາຈາກໄຟຢູ່ເທິງພູຊີນາອີນັ້ນ ພວກທ່ານບໍ່ໄດ້ເຫັນຮູບຮ່າງໃດໆ
ມັນຈຶ່ງເປັນການດີສຳລັບພວກທ່ານ
16 ສະນັ້ນ ຈົ່ງລະວັງໃຫ້ດີ ຢ່າໄດ້ທຳບາບດ້ວຍການສ້າງຮູບໂຄຣົບໃດໆຂຶ້ນມາເລີຍ ບໍ່ວ່າຮູບຜູ້ຊາຍຫລືຜູ້ຍິງ
17 ບໍ່ວ່າຮູບສັດເດັຽລະສານ ຮູບນົກທີ່ມີປີກບິນໄປໃນອາກາດ
18 ຮູບສັດເລືອຄານຢູ່ເທິງດິນ ຮູບປາຢ່າງໃດທີ່ຢູ່ໃນນ້ຳໃຕ້ແຜ່ນດິນໂລກ
19 ຢ່າຫລົງຂາບໄຫວ້ ຫລືບົວລະບັດສິ່ງທີ່ເຫັນໃນທ້ອງຟ້າ ຄືພຣະອາທິດ ພຣະຈັນ ແລະດວງດາວທັງຫລາຍ ສິ່ງ
ເຫລົ່ານີ້ພຣະຜູ້ເປັນເຈົ້າຂອງພວກເຮົາຊົງປະທານໃຫ້ຊົນຊາດອື່ນທັງຫມົດຂາບໄຫວ້
20 ແຕ່ພວກທ່ານນັ້ນບໍ່ຕ້ອງຂາບໄຫວ້ ເພາະວ່າພວກທ່ານເປັນປະຊາຊົນທີ່ພຣະອົງຊົງນຳອອກມາຈາກເຕົາໄຟໃນ
ປະເທດເອຢິບ ເພື່ອໃຫ້ເປັນໄພ່ພົນຂອງພຣະອົງ ຢ່າງທີ່ພວກທ່ານກຳລັງເປັນຢູ່ໃນທຸກວັນນີ້
21 ຍ້ອນພວກທ່ານນັ້ນແຫລະ ພຣະຜູ້ເປັນເຈົ້າຂອງພວກເຮົາ ຈຶ່ງຊົງພຣະພິໂຣດຂ້າພະເຈົ້າ ຄືພຣະອົງຊົງປະກາດ
ຢ່າງຫນັກແຫນ້ນວ່າ ຈະບໍ່ໃຫ້ຂ້າພະເຈົ້າຂ້າມແມ່ນ້ຳຈໍແດນໄປຍັງແຜ່ນດິນອັນອຸດົມສົມບູນຊຶ່ງພຣະອົງຊົງປະ
ທານໃຫ້ແກ່ພວກທ່ານ
22 ຂ້າພະເຈົ້າຈະຕ້ອງຕາຍຢູ່ໃນແຜ່ນດິນນີ້ ຈະບໍ່ໄດ້ຂ້າມແມ່ນ້ຳຈໍແດນໄປ ແຕ່ພວກທ່ານນັ້ນຈະໄດ້ຂ້າມໄປຍຶດ
ເອົາແຜ່ນດິນອັນອຸດົມສົມບູນນັ້ນເປັນກຳມະສິດ
23 ຈົ່ງລະວັງໃຫ້ດີ ຢ່າໄດ້ລືມຄຳໝັ້ນສັນຍາທີ່ພຣະຜູ້ເປັນເຈົ້າຂອງພວກທ່ານໄດ້ຊົງໃຫ້ໄວ້ ໃຫ້ເຊື່ອຟັງຄຳສັ່ງຂອງ
ພຣະອົງຊົງສັ່ງຫ້າມບໍ່ໃຫ້ທຳຮູບເຄົາຣົບໃດໆຂາບໄຫວ້
24 ເພາະວ່າ ພຣະຜູ້ເປັນເຈົ້າຂອງທ່ານທັງຫລາຍເປັນພຣະເຈົ້າຜູ້ຊົງຫວງແຫນພວກທ່ານ ແລະຊົງເປັນເຫມືອນ
ໄຟທີ່ລຸກໄຫມ້ເຜົາຜານ
25 ເມື່ອພວກທ່ານມີລູກຫລານ ແລະໄດ້ເຂົ້າໄປຢູ່ໃນແຜ່ນດິນນັ້ນເທິງນານແລ້ວ ຢ່າໄດ້ທຳບາບດ້ວຍການສ້າງຮູບ
ໂຄຣົບໃດໆຂຶ້ນມາເລີຍ ເພາະໃນສາຍພຣະເນດຂອງພຣະຜູ້ເປັນເຈົ້ານັ້ນ ຊົງຖືວ່າການກະທຳຢ່າງນີ້ຊົ່ວຮ້າຍ
ຫລາຍ ແລະເປັນການກະທຳທີ່ພຣະອົງຊົງພິໂຣດ
26 ຖ້າພວກທ່ານທຳຢ່າງນີ້ ຂ້າພະເຈົ້າຈະອັນເຊີນເອົາຟ້າດິນມາເປັນພຍານກ່າວໂທດທ່ານໃນວັນນີ້ວ່າ ພວກ
ທ່ານຈະຈິບຫາຍຈາກແຜ່ນດິນນີ້ໃນບໍ່ຊ້າ ຈະບໍ່ໄດ້ຢູ່ເທິງນານໃນແຜ່ນດິນທີ່ທ່ານກຳລັງຈະຂ້າມແມ່ນ້ຳຈໍແດນ
ໄປຍຶດຄອງນັ້ນ ແຕ່ຈະຖືກທຳລາຍຈົນຫມົດສິ້ນ
27 ພຣະຜູ້ເປັນເຈົ້າຈະທຳໃຫ້ພວກທ່ານແຕກກະຈັດກະຈາຍໄປຢູ່ໃນປະເທດຕ່າງໆ ແລ້ວຈະໃຫ້ເຫລືອຢູ່ທີ່ນັ້ນພຽງ
ຈຳນວນຫນ້ອຍ
28 ພວກທ່ານຈະຮັບໃຊ້ພຣະໄມ້ ແລະພຣະຫີນທີ່ມະນຸດທຳຂຶ້ນ ພຣະເຫລົ່ານີ້ ເບິ່ງ ຟັງ ກິນ ແລະດົມກິ່ນບໍ່ໄດ້
29 ຖ້າວ່າຢູ່ທີ່ນັ້ນ ພວກທ່ານສແວງຫາພຣະຜູ້ເປັນເຈົ້າຂອງພວກທ່ານດ້ວຍຄວາມເຕັມໃຈພວກທ່ານກໍຈະພົບພຣະ
ອົງ
30 ແຕ່ເມື່ອໃດຫາກພວກທ່ານມີຄວາມລຳບາກໃຈໃນພາຍຂ້າງຫນ້າ ຍ້ອນສິ່ງເຫລົ່ານີ້ທັງຫມົດໄດ້ມາຖືກທ່ານ
ພວກທ່ານກໍຈະກັບຄືນມາຫາພຣະຜູ້ເປັນເຈົ້າ ແລະເຊື່ອຟັງພຣະອົງ

31 ເພາະວ່າຊົງເປັນພຣະເຈົ້າທີ່ເຕັມໄປດ້ວຍພຣະເມດຕາ ຈະບໍ່ຊົງປະຖິ້ມ ຫລືທຳລາຍພວກທ່ານ ແລະຈະບໍ່ຊົງ
ຫລົງລືມຄຳຫມັ້ນສັນຍາທີ່ພຣະອົງຊົງໃຫ້ໄວ້ກັບບັນພະບຸຣຸດຂອງພວກທ່ານ
32 ໃຫ້ຖາມທົ່ວໂລກນີ້ເບິ່ງດູວ່າ ໃນອະດີດຕະການກ່ອນພວກທ່ານເກີດ ຕັ້ງແຕ່ຄາວພຣະເຈົ້າຊົງສ້າງມະນຸດໃນ
ໂລກ ເຄີຍມີເຣື່ອງໃຫຍ່ໂຕເຫມືອນຢ່າງນີ້ເກີດຂຶ້ນມາແລ້ວຫລືບໍ່ ມີໃຜເຄີຍໄດ້ຍິນເຣື່ອງຢ່າງນີ້ຫລືບໍ່
33 ມີຊົນຊາດໃດແດ່ ເມື່ອໄດ້ຍິນພຣະເຈົ້າເວົ້າອອກມາຈາກໄຟແລ້ວກໍຍັງບໍ່ຕາຍເຫມືອນຢ່າງພວກທ່ານ
34 ມີພຣະເຈົ້າອົງໃດອີກ ທີ່ກ້າໄປເອົາຄົນອອກມາຈາກຊາດນຶ່ງມາຕັ້ງເປັນຊາດຂອງພຣະອົງເອງ ເຫມືອນຢ່າງພ
ຣະຜູ້ເປັນເຈົ້າຂອງພວກທ່ານໄດ້ກະທຳເພື່ອທ່ານໃນປະເທດເອຢິບນັ້ນ ພຣະອົງໄດ້ຊົງໃຊ້ອຳນາດ ແລະຣິດທາ
ນຸພາບອັນຍິ່ງໃຫຍ່ຂອງພຣະອົງທຳໃຫ້ເກີດມີໂລກແລະສົງຄາມ ທຳການອັດສະຈັນ ແລະຫມາຍສຳຄັນຕ່າງໆ
ພ້ອມທັງທຳສິ່ງທີ່ຫນ້າຢ້ານໃຫ້ພວກທ່ານເຫັນຕໍ່ຫນ້າຕໍ່ຕາ
35 ພຣະຜູ້ເປັນເຈົ້າຊົງສຳແດງສິ່ງເຫລົ່ານີ້ໃຫ້ພວກທ່ານເຫັນ ກໍເພື່ອໃຫ້ພວກທ່ານຮູ້ວ່າ ພຣະອົງ ອົງດຽວເທົ່ານັ້ນທີ່
ຊົງເປັນ   ພຣະເຈົ້າ ບໍ່ມີອົງອື່ນອີກເລີຍ
36 ພຣະອົງຊົງໂຜດໃຫ້ພວກທ່ານໄດ້ຍິນສຽງຂອງພຣະອົງຈາກສວັນນັ້ນໄດ້ ກໍເພື່ອສັ່ງສອນທ່ານ ແລະຍັງຊົງໂຜດ
ໃຫ້ພວກທ່ານໄດ້ເຫັນໄຟອັນສັກສິດຂອງພຣະອົງຢູ່ໃນໂລກ ພ້ອມທັງຊົງກ່າວອອກມາຈາກໄຟນັ້ນ
37 ເພາະວ່າພຣະອົງຊົງຮັກບັນພະບຸຣຸດຂອງພວກທ່ານ ຊົງເລືອກເອົາເຊື້ອສາຍຂອງເຂົາທັງຫລາຍ ແລະຊົງນຳພາ
ພວກທ່ານອອກຈາກປະເທດເອຢິບ ດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງເອງ
38 ໃນເວລາພວກທ່ານກ້າວໄປຂ້າງຫນ້ານັ້ນ ພຣະອົງໄດ້ຊົງຂັບໄລ່ຊົນຊາດໃຫຍ່ ແລະມີກຳລັງເຫນືອກວ່າພວກ
ທ່ານອອກຫນີໄປ ເພື່ອນຳທ່ານເຂົ້າມາຢູ່ໃນແຜ່ນດິນນັ້ນຊຶ່ງຍັງເປັນຂອງພວກທ່ານຢູ່ຈົນເທົ່າທຸກມື້ນີ້
39 ດັ່ງນັ້ນແຫລະ, ໃຫ້ຈື່ຈຳໄວ້ ແລະຢ່າລືມວ່າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າເທິງຟ້າສວັນ ແລະເທິງແຜ່ນດິນ ບໍ່ມີ
ພຣະເຈົ້າອົງອື່ນອີກນອກຈາກພຣະອົງ
40 ຈົ່ງທຳຕາມພຣະທັມ ແລະກົດບັນຍັດທັງຫມົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກພວກທ່ານແລ້ວໃນວັນນີ້
ເພື່ອທຸກສິ່ງທຸກຢ່າງຈະເປັນໄປໂດຍດີສຳລັບພວກທ່ານ ແລະພວກລູກຫລານ ແລ້ວພວກທ່ານຈະມີຊີວິດຫມັ້ນ
ຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງພວກທ່ານຊົງປະທານໃຫ້ເປັນເຈົ້າຂອງຕລອດໄປເປັນນິດນັ້ນ”

**ຫົວເມືອງລີ້ພັຍທາງຕາເວັນອອກຂອງແມ່ນ້ຳຈໍແດນ**

Cities of Refuge East of the Jordan

41 ແລ້ວໂມເຊກຳຫນົດຫົວເມືອງທາງທິດຕາເວັນອອກຟາກແມ່ນ້ຳຈໍແດນສາມຫົວເມືອງ
42 ເພື່ອຜູ້ໃດທີ່ຂ້າຄົນຈະໄດ້ຫລົບຫນີໄປຢູ່ທີ່ນັ້ນ ຄືຜູ້ທີ່ຂ້າເພື່ອນບ້ານໂດຍບໍ່ໄດ້ເຈຕນາ ໂດຍບໍ່ໄດ້ເປັນສັດຕຣູກັນ
ມາແຕ່ກ່ອນ ແລະເມື່ອຫນີໄປຢູ່ໃນເມືອງນີ້ເມືອງໃດເມືອງນຶ່ງກໍຈະລອດຊີວິດ
43 ຫົວເມືອງເຫລົ່ານີ້ ຄືເມືອງເບເຊີ ຢູ່ໃນຖິ່ນກັນດານ ເທິງທີ່ຮາບສູງສຳລັບຄົນເຜົ່າຣູເບນ ແລະເມືອງຣາໂມທທີ່ກີ
ເລອາດສຳລັບຄົນເຜົ່າກາດ ແລະເມືອງໂກລານໃນບາຊານສຳລັບຄົນເຜົ່າມານັສເຊ

**ຄຳນຳກ່ອນທົບທວນທັມບັນຍັດຂອງຄົນອິສຣາເອນ**

Transition to the Second Address

44 ຕໍ່ໄປນີ້ເປັນທັມບັນຍັດທີ່ໂມເຊໄດ້ຕັ້ງໄວ້ຕໍ່ຊາວອິສຣາເອນ
45 ເຫລົ່ານີ້ເປັນພຣະໂອວາດ ເປັນກົດລະບຽບ ແລະກົດຫມາຍ ຊຶ່ງໂມເຊກ່າວແກ່ຊາວອິສຣາເອນ ເມື່ອເຂົາອອກ
ຈາກປະເທດເອຢິບ
46 ທາງຕາເວັນອອກຂອງແມ່ນ້ຳຈໍແດນທີ່ພູກົງກັນຂ້າມເບັດເປໂອຣ໌ ໃນແຜ່ນດິນຂອງຊີໂຮນ ກະສັດຊາວອາໂມ
ຣິດ ຜູ້ຢູ່ທີ່ເຮສໂບນ ຊຶ່ງໂມເຊແລະຊາວອິສຣາເອນໄດ້ຕີຟ່າຍຫນີໄປຄັ້ງເມື່ອອອກມາຈາກປະເທດເອຢິບ

47 ຊາວອິສຣາເອນໄດ້ເຂົ້າຍຶດແຜ່ນດິນຂອງທ່ານ ແລະແຜ່ນດິນຂອງໂອກ ກະສັດເມືອງບາຊານ ເປັນກະສັດສອງ
ອົງຂອງຊາວອາໂມຣິດ ຜູ້ຢູ່ທາງທິດຕາເວັນອອກຟາກແມ່ນໍ້າຈໍແດນຂ້າງນັ້ນ
48 ຕັ້ງແຕ່ອາໂຣເອີ ທີ່ຢູ່ລຸ່ມນໍ້າອາຣໍໂນນໄປຈົນເຖິງພູຊີຣີໂອນ (ຄືເຮີໂມນ)
49 ຮວມກັບອາຣາບາທັງຫມົດຊຶ່ງຢູ່ຟາກຕາເວັນອອກຂອງແມ່ນໍ້າຈໍແດນໄກໄປຈົນເຖິງທະເລອາຣາບາ ທີ່ຮາບ
ແຖບເນີນພູປີສກາ

## 5 ພຣະບັນຍັດສິບປະການ

The Ten Commandments

(ອພຍ 20:1-17)

1 ໂມເຊໄດ້ເອີ້ນຊາວອິສຣາເອນທັງຫລາຍເຂົ້າມາແລ້ວກ່າວແກ່ພວກເຂົາທັງຫລາຍວ່າ, “ເບິ່ງກ່ອນ ທ່ານທັງ
ຫລາຍຈົ່ງຟັງກົດລະບຽບ ແລະກົດຫມາຍ ຊຶ່ງຂ້າພະເຈົ້າກ່າວໃຫ້ເຂົ້າຫູຂອງພວກທ່ານໃນວັນນີ້ ເພື່ອທ່ານທັງ
ຫລາຍຈະໄດ້ຈົດຈໍາ ແລະກະທໍາຕາມດ້ວຍຄວາມລະມັດລະວັງ
2 ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາຊົງກະທໍາຄໍາຫມັ້ນສັນຍາກັບເຮົາທັງຫລາຍທີ່ໂຮເຣັບ
3 ບໍ່ແມ່ນພຣະຜູ້ເປັນເຈົ້າຈະຊົງກະທໍາຄໍາຫມັ້ນສັນຍາກັບບັນພະບຸຣຸດຂອງເຮົາທັງຫລາຍເທົ່ານັ້ນ ແຕ່ຊົງກະທໍາ
ກັບພວກເຮົາ ຄືເຮົາທັງຫລາຍຜູ້ມີຊີວິດຢູ່ໃນວັນນີ້
4 ພຣະຜູ້ເປັນເຈົ້າໄດ້ສັ່ງກັບເຮົາທັງຫລາຍທີ່ພູຈາກຖ້າມກາງໄຟ ຫນ້າຕໍ່ຫນ້າ
5 ຂ້າພະເຈົ້າຢືນຢູ່ລະຫວ່າງພຣະຜູ້ເປັນເຈົ້າກັບທ່ານທັງຫລາຍ ເພື່ອຈະປະກາດພຣະວັຈນະຂອງພຣະຜູ້ເປັນເຈົ້າ
ແກ່ທ່ານທັງຫລາຍ ເພາະທ່ານທັງຫລາຍຢ້ານໄຟ ຈຶ່ງບໍ່ໄດ້ຂຶ້ນໄປເທິງພູ ພຣະອົງສັ່ງວ່າ,
6 “ເຮົາແມ່ນພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າ ຜູ້ໄດ້ນໍາພວກເຈົ້າອອກຈາກປະເທດເອຢິບ ຄືອອກຈາກປະ
ເທດທີ່ພວກເຈົ້າໄດ້ຕົກເປັນທາດ
7 “ພວກເຈົ້າຢ່າມີພຣະເຈົ້າອື່ນນອກຈາກເຮົາ
8 “ພວກເຈົ້າຢ່າທໍາຮູບໂຄຣົບສໍາລັບຕົນ ຫລືຮູບສິ່ງນຶ່ງສິ່ງໃດທີ່ມີຢູ່ໃນຟ້າສວັນ ໃນແຜ່ນດິນຫລືໃນນໍ້າລຸ່ມແຜ່ນ
ດິນ
9 ຢ່າຂາບໄຫວ້ຮູບເຫລົ່ານັ້ນ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະເປັນພຣະເຈົ້າຜູ້ຫວງແຫນ
ພວກເຈົ້າ ເຮົາຈະລົງໂທດລູກຫລານຂອງຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນ
10 ແຕ່ຈະສະແດງຄວາມຮັກຫມັ້ນຄົງຕໍ່ຜູ້ທີ່ຮັກເຮົາ ແລະຕໍ່ຜູ້ທີ່ປະພຶດຕາມພຣະບັນຍັດຂອງເຮົາສືບໄປຫລາຍຊົ່ວ
ອາຍຸພັນຄົນ
11 ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າ ໄປໃນທາງທີ່ຜິດ ເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງທີ່
ຜິດ
12 ພວກເຈົ້າຈົ່ງນັບຖືວັນສິນ ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ
13 ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກວັນ
14 ແຕ່ວັນຖ້ວນເຈັດໃຫ້ຖືເປັນວັນສັກສິດຂອງພຣະເປັນເຈົ້າຂອງເຈົ້າ ໃນວັນນີ້ໃຫ້ເຈົ້າເອງ ພ້ອມດ້ວຍລູກຊາຍຍິງ
ຂ້ອຍທາດແລະສັດລ້ຽງຂອງພວກເຈົ້າຕລອດທັງຄົນຕ່າງດ້າວທີ່ອາໄສຢູ່ໃນບ້ານເມືອງຂອງເຈົ້າຢຸດເຮັດວຽກທັງ
ຫມົດ
15 ຈົ່ງລະນຶກວ່າເຈົ້າເຄີຍເປັນທາດຢູ່ໃນປະເທດເອຢິບ ແລະພຣະຜູ້ເປັນເຈົ້າຂອງເຈົ້າໄດ້ພາເຈົ້າອອກມາຈາກທີ່
ນັ້ນດ້ວຍພຣະຫັດອັນຊົງຣິດ ແລະດ້ວຍພຣະກອນທີ່ຢຽດອອກ ເຫດສັນນີ້ພຣະຜູ້ເປັນເຈົ້າໄດ້ຊົງບັນຊາໃຫ້ເຈົ້າ
ຮັກສາວັນສະບາໂຕ

16 “ຈົ່ງນັບຖືບິດາມານດາຂອງເຈົ້າ ເພື່ອເຈົ້າຈະມີອາຍຸຫມັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງເຈົ້າໄດ້ມອບ
ໃຫ້

17 “ພວກເຈົ້າຢ່າຂ້າຄົນ

18 “ຢ່າລ່ວງເກີນຜົວເມັຽຜູ້ອື່ນ

19 “ຢ່າລັບຊັບ

20 “ຢ່າເປັນພຍານເທັດ ໃສ່ຮ້າຍເພື່ອນບ້ານຂອງຕົນ

21 “ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ຜົວ ຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ
ຢາກໄດ້ລໍ ຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ

Moses the Mediator of God’s Will

(ອພຍ 20:18-21)

22 “ພຣະທັມເຫລົ່ານີ້ ພຣະຜູ້ເປັນເຈົ້າໄດ້ຊົງກ່າວແກ່ຊຸມນຸມຊົນທັງປວງຂອງທ່ານທີ່ພູ ອອກມາຈາກຖ້າມກາງໄຟ
ເມກອັນຫນາຕຶບ ດ້ວຍພຣະສຸຣະສຽງອັນດັງ ແລະບໍ່ໄດ້ຊົງເພີ້ມເຕີມສິ່ງໃດອີກ ແລະພຣະອົງຊົງຈາລຶກໄວ້ເທິງ
ແຜ່ນສີລາສອງແຜ່ນ ແລະປະທານໃຫ້ແກ່ຂ້າພະເຈົ້າ

23 ເມື່ອພວກທ່ານໄດ້ຍິນພຣະສຸຣະສຽງອອກມາຈາກຄວາມມືດ ຂນະເມື່ອພູນັ້ນມີໄຟລຸກຢູ່ ທ່ານທັງຫລາຍເຂົ້າ
ມາຫາຂ້າພະ ເຈົ້າ ຄືຫົວຫນ້າເຜົ່າຂອງທ່ານທັງຫມົດ ແລະພວກຜູ້ໃຫຍ່ຂອງທ່ານ

24 ແລະທ່ານທັງຫລາຍໄດ້ເວົ້າວ່າ, “ເບິ່ງແມ໋, ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາໄດ້ຊົງສໍາແດງພຣະສະງ່າຣາສີ
ແລະຄວາມຍິ່ງໃຫຍ່ຂອງພຣະອົງ ແລະເຮົາໄດ້ຍິນພຣະສຸຣະສຽງຂອງພຣະອົງຈາກຖ້າມກາງໄຟ ໃນວັນນີ້ເຮົາ
ໄດ້ເຫັນພຣະເຈົ້າຕຣັສກັບມະນຸດ ແລະມະນຸດຍັງຄົງມີຊີວິດຢູ່ໄດ້

25 ເປັນຫຍັງພວກເຮົາຈະຕ້ອງສ່ຽງກັບຄວາມຕາຍຢ່າງນີ້ອີກ ໄຟອັນຫນ້າຢ້ານນີ້ຈະເຜົາຜານເຮົາ ຖ້າເຮົາໄດ້ຍິນພ
ຣະສຸຣະສຽງຂອງພຣະຜູ້ເປັນເຈົ້າອີກ ເຮົາກໍຈະຕ້ອງຕາຍ

26 ເພາະໃນບັນດາມະນຸດທັງຫລາຍ ມີໃຜແດ່ໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າຜູ້ຊົງພຣະຊົນກ່າວອອກມາຈາກ
ຖ້າມກາງໄຟຢ່າງທີ່ເຮົາໄດ້ຍິນ ແລະຍັງມີຊີວິດຢູ່ໄດ້

27 ທ່ານຈົ່ງເຂົ້າໄປໃກ້ ແລະຟັງທຸກສິ່ງຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາໄດ້ສັ່ງແກ່ທ່ານນັ້ນມາກ່າວແກ່ເຮົາທັງ
ຫລາຍ ແລະເຮົາທັງຫລາຍຈະຟັງ ແລະກະທໍາຕາມ”

28 “ເມື່ອທ່ານທັງຫລາຍເວົ້າກັບຂ້າພະເຈົ້ານັ້ນ ພຣະຜູ້ເປັນເຈົ້າຊົງຊາບຖ້ອຍຄໍາຂອງທ່ານທັງຫລາຍ ແລະພຣະ
ເຈົ້າກ່າວກັບຂ້າພະເຈົ້າວ່າ “ເຮົາໄດ້ຍິນຖ້ອຍຄໍາຂອງຊົນຊາດຊຶ່ງເຂົາເວົ້າກັບເຈົ້າແລ້ວ ຊຶ່ງເຂົາເວົ້າກັບເຈົ້າເຊັ່ນ
ນັ້ນກໍດີຢູ່

29 ຢາກໃຫ້ມີຈິດໃຈເຊັ່ນນີ້ຢູ່ສເມີໄປ ຄືທີ່ຈະຢໍາເກງເຮົາ ແລະຮັກສາບັນຍັດທັງຫມົດຂອງເຮົາ ເຂົາທັງຫລາຍກໍຈະ
ສຸກສະບາຍຢູ່ຕລອດຊົ່ວລູກຫລານຂອງເຂົາເປັນນິດ

30 ຈົ່ງກັບໄປບອກແກ່ເຂົາວ່າ “ເຈົ້າຈົ່ງກັບໄປເຕັນຂອງເຈົ້າທຸກຄົນເຖີດ”

31 ແຕ່ຕົວເຈົ້າ ຈົ່ງຢືນຢູ່ທີ່ນີ້ໃກ້ເຮົາ ແລະເຮົາຈະບອກຂໍ້ບັນຍັດ ແລະກົດລະບຽບແລະກົດຫມາຍທັງສິ້ນແກ່ເຈົ້າ
ຊຶ່ງເຈົ້າຈະຕ້ອງສອນເຂົາທັງຫລາຍ ເພື່ອເຂົາທັງຫລາຍຈະກະທໍາຕາມໃນແຜ່ນດິນຊຶ່ງເຮົາໃຫ້ເຂົາຍຶດຄອງນັ້ນ”

32 ເຫດສະນັ້ນທ່ານທັງຫລາຍຈົ່ງລະວັງທີ່ຈະກະທໍາດັ່ງທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍໄດ້ຊົງບັນ
ຊາໄວ້ນັ້ນ ທ່ານທັງຫລາຍຢ່າຫັນໄປທາງຂວາມື ຫລືທາງຊ້າຍເລີຍ

33 ທ່ານຈົ່ງດໍາເນີນຕາມວິຖີທາງທັງສິ້ນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ຊົງບັນຊາທ່ານໄວ້ເພື່ອທ່ານຈະມີ
ຊີວິດຢູ່ ແລະເພື່ອທ່ານຈະໄປດີມາດີ ແລະມີຊີວິດຍືນນານຢູ່ໃນແຜ່ນດິນຊຶ່ງທ່ານຈະຍຶດຄອງນັ້ນ

## 6 ບັນຍັດຂໍ້ສຳຄັນ

The Great Commandment

1 ຕໍ່ໄປນີ້ແມ່ນກົດບັນຍັດ ພຣະທັມ ແລະຮີດຄອງປະເພນີທັງຫມົດທີ່ພຣະຜູ້ເປັນເຈົ້າຊົງບອກໃຫ້ຂ້າພະເຈົ້າສອນພວກທ່ານ ສະນັ້ນເມື່ອພວກທ່ານຢູ່ໃນແຜ່ນດິນທີ່ກຳລັງຈະເຂົ້າຍຶດຄອງນັ້ນ ຈົ່ງໄດ້ທຳຕາມພຣະທັມເຫລົ່ານີ້

2 ທ່ານກັບພວກລູກຫລານຂອງທ່ານຈະຕ້ອງຢຳເກງພຣະຜູ້ເປັນເຈົ້າຈົນຕລອດຊີວິດ ແລະປະພຶດຕາມພຣະທັມທັງຫມົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກທ່ານທັງຫລາຍແລ້ວນັ້ນ ເພື່ອວ່າພວກທ່ານຈະມີອາຍຸຫມັ້ນຍືນ

3 ຊາວອິສຣາເອນເອີຍ ຈົ່ງສະດັບຮັບຟັງພຣະທັມແລະປະພຶດຕາມເທີ້ນ ເພື່ອກິຈການທຸກຢ່າງຂອງພວກທ່ານຈະລຸລ່ວງໄປດ້ວຍດີ ແລ້ວພວກທ່ານກໍຈະກາຍເປັນຄົນຊົນຊາດໃຫຍ່ຢູ່ໃນແຜ່ນດິນທີ່ອຸດົມສົມບູນເຫມືອນຢ່າງພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງພວກທ່ານທັງຫລາຍໄດ້ຊົງສັນຍາໄວ້

4 ອິສຣາເອນເອີຍ ຈົ່ງຟັງເທີ້ນ ພຣະຜູ້ເປັນເຈົ້າອົງດຽວທ່ານັ້ນທີ່ເປັນພຣະເຈົ້າຂອງເຮົາ

5 ຈົ່ງຮັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໃຫ້ສຸດຈິດສຸດໃຈ ແລະສຸດສະຕິກຳລັງຂອງທ່ານ

6 ຢ່າລືມສິ່ງທີ່ຂ້າພະເຈົ້າໄດ້ສັ່ງພວກທ່ານໃນວັນນີ້

7 ໃຫ້ບອກສອນລູກຫລານດ້ວຍ ເມື່ອພວກທ່ານຢູ່ໃນເຮືອນຫລືອອກຫນີໄປກໍດີ ເມື່ອທຳງານ ຫລືຢຸດພັກກໍດີ ໃຫ້ທ່ອງຈຳຄຳສັ່ງນີ້

8 ໃຫ້ຕິດມັນໄວ້ໃນແຂນ ແລະເທິງຫນ້າຜາກ

9 ພ້ອມທັງໃຫ້ຂຽນໄວ້ຕາມປະຕູເຮືອນຂອງທ່ານດ້ວຍ ເພື່ອເປັນສິ່ງເຕືອນໃຈ

**ຕັກເຕືອນໃຫ້ເຊື່ອຟັງ**

Caution against Disobedience

10 ພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍໄດ້ຊົງສັນຍາແກ່ບັນພະບຸຣຸດຂອງພວກທ່ານ ຄືອັບຣາຮາມ ອີຊາກ ແລະຢາໂຄບວ່າ ພຣະອົງຈະຊົງມອບແຜ່ນດິນຊຶ່ງມີຫົວເມືອງທີ່ຈະເຮີນຮຸ່ງເຮືອງຊຶ່ງທ່ານເອງບໍ່ໄດ້ສ້າງ ໃຫ້ແກ່ພວກທ່ານ

11 ໃນເຮືອນທັງຫລາຍກໍຈະເຕັມໄປດ້ວຍຂອງດີທີ່ທ່ານບໍ່ໄດ້ຫາໄວ້ ມີນ້ຳສ້າງທີ່ພວກທ່ານບໍ່ໄດ້ຂຸດໄວ້ ພ້ອມທັງມີສວນອະງຸ່ນ ແລະສວນຫມາກກອກເທດທີ່ປູກໄວ້ແລ້ວ ສະນັ້ນເມື່ອພຣະຜູ້ເປັນເຈົ້າຊົງນຳພວກທ່ານເຂົ້າໄປໃນແຜ່ນດິນນີ້ແລ້ວ ກໍຈະມີອາຫານການກິນທຸກຢ່າງຕາມຄວາມຕ້ອງການ

12 ແຕ່ພວກທ່ານຕ້ອງລະວັງໃຫ້ດີ ຈົ່ງຢ່າລືມພຣະຜູ້ເປັນເຈົ້າຜູ້ຊົງນຳພວກທ່ານອອກຈາກເອຢິບບ່ອນຕົກເປັນທາດ

13 ໃຫ້ຢຳເກງແລະຂາບໄຫວ້ແຕ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານອົງດຽວ ກັບທັງໃຫ້ສາບານໂດຍອອກພຣະນາມຂອງພຣະອົງເທົ່ານັ້ນ

14 ຢ່າຂາບໄຫວ້ພຣະຂອງຊົນຊາດອື່ນໃດທີ່ຢູ່ອ້ອມແອ້ມທ່ານ

15 ຖ້າພວກທ່ານຫາກດື້ດ້ານຂາບໄຫວ້ພຣະນັ້ນ ພຣະຜູ້ເປັນເຈົ້າຈະຊົງພຣະພິໂຣດທ່ານຢ່າງຮຸນແຮງ ແລະຈະທຳລາຍພວກທ່ານຈົນຫມົດສິ້ນ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງຫວງແຫນພວກທ່ານ

16 ຢ່າທົດລອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍ ດັ່ງທີ່ພວກທ່ານເຄີຍໄດ້ທົດລອງກັບພຣະອົງມາແລ້ວຢູ່ທີ່ມັດສານັ້ນ

17 ຈົ່ງເອົາໃຈໃສ່ທຳຕາມກົດບັນຍັດພຣະທັມ ແລະຮີດຄອງປະເພນີທັງຫມົດທີ່ພຣະອົງໄດ້ຊົງສອນທ່ານ

18 ໃຫ້ທຳແຕ່ສິ່ງທີ່ພຣະຜູ້ເປັນເຈົ້າຊົງເຫັນວ່າດີ ແລະຖືກຕ້ອງ ເພື່ອທຸກສິ່ງທຸກຢ່າງຈະໄດ້ເປັນໄປໂດຍດີ ແລະເພື່ອຈະໄດ້ເປັນເຈົ້າຂອງແຜ່ນດິນທີ່ອຸດົມສົມບູນ ຊຶ່ງພຣະຜູ້ເປັນເຈົ້າຊົງສັນຍາວ່າຈະປະທານໃຫ້ແກ່ບັນພະບຸຣຸດຂອງທ່ານທັງຫລາຍ

19 ແລະຈະຂັບໄລ່ສັດຕຣູຂອງພວກທ່ານຫນີຕາມທີ່ຊົງສັນຍາໄວ້
20 ໃນພາຍຄັ້ງຫນ້າ ເມື່ອລູກຫລານຂອງທ່ານຖາມວ່າ ເປັນຫຍັງພຣະຜູ້ເປັນເຈົ້າຂອງເຮົາຈຶ່ງສັ່ງໃຫ້ທຳກົດບັນຍັດ
ພຣະທັມ ແລະຮີດຄອງປະເພນີເຫລົ່ານີ້
21 ຈົ່ງບອກເຂົາວ່າ ເມື່ອພວກເຮົາເປັນທາດຂອງກະສັດເອຢິບ ພຣະຜູ້ເປັນເຈົ້າໄດ້ຊົງຊ່ອຍເຫລືອເອົາພວກເຮົາ
ໃຫ້ລອດພົ້ນດ້ວຍຣິດທານຸພາບອັນຍິ່ງໃຫຍ່
22 ກັບທັງໄດ້ເຫັນພຣະອົງຊົງກະທຳການອັດສະຈັນແລະສິ່ງອັນເປັນຕາຢ້ານຕໍ່ຫນ້າຕໍ່ຕາພວກເຮົາທັງຫລາຍຕໍ່
ຊາວເອຢິບ ຕໍ່ກະສັດຟາຣາໂອ ແລະຂ້າຣາຊການທັງຫມົດ
23 ພຣະອົງຊົງນຳພາພວກເຮົາອອກມາຈາກເອຢິບ ແລະຊົງມອບແຜ່ນດິນນີ້ໃຫ້ເຮົາຢູ່ອາໄສ ດັ່ງພຣະອົງໄດ້ຊົງສັນ
ຍາໄວ້ກັບບັນພະບຸຣຸດຂອງພວກເຮົານັ້ນ
24 ແລ້ວພຣະຜູ້ເປັນເຈົ້າຂອງເຮົາໄດ້ຊົງສັ່ງໃຫ້ເຊື່ອຟັງພຣະທັມທັງຫມົດນີ້ ແລະໃຫ້ໂຄຣົບຢຳເກງພຣະອົງ
25 ຖ້າພວກເຮົາປະຕິບັດຕາມທຸກສິ່ງທຸກຢ່າງທີ່ພຣະອົງຊົງສັ່ງນັ້ນ ກໍຈະເປັນການຖືກຕ້ອງດີ ແລະພຣະອົງກໍຈະຊົງ
ຮັກແພງ ແລະເບິ່ງແຍງພວກເຮົາຕໍ່ໄປ ພ້ອມທັງທຳໃຫ້ປະເທດຊາດຂອງເຮົາຈະເຣີນຮຸ່ງເຮືອງຕລອດໄປ

## 7 ໄພ່ພົນຂອງພຣະຜູ້ເປັນເຈົ້າ

A Chosen People

(ອພຍ 34:10-16)

1 ພຣະຜູ້ເປັນເຈົ້າຊົງນຳພວກທ່ານໄປຍັງແຜ່ນດິນທີ່ພວກທ່ານກຳລັງຈະເຂົ້າຍຶດຄອງ ແລະຈະຊົງຂັບໄລ່ຫລາຍ
ຊົນຊາດອອກຫນີໄປ ເມື່ອພວກທ່ານໄປເຖິງ ພຣະອົງຈະຊົງຂັບໄລ່ຊາດໃຫຍ່ ແລະມີອຳນາດອອກຫນີໄປ ຄື
ຊາວຮິດຕີ ກີຣ໌ກາຊີ ອາໂມຣິດ ເປຣີສຊີ ຮີວີ ແລະເຢບຸສ
2 ເມື່ອພຣະຜູ້ເປັນເຈົ້າຊົງໃຫ້ຊົນຊາດເຫລົ່ານີ້ປຣາໄຊ ແລະຢູ່ໃຕ້ອຳນາດຂອງທ່ານແລ້ວ ພວກເຂົາກໍຈະຕ້ອງຖືກ
ພວກທ່ານລົງໂທດເຖິງຕາຍ ຢ່າໄດ້ເມດຕາ ແລະທຳສັນຍາກັບພວກເຂົາ
3 ພວກທ່ານຕລອດທັງລູກຫລານຂອງທ່ານ ຢ່າໄດ້ແຕ່ງງານກັບພວກເຂົາ
4 ເພາະວ່າເຂົາຈະພາລູກຫລານຂອງທ່ານຫນີຈາກພຣະຜູ້ເປັນເຈົ້າໄປຂາບໄຫວ້ພຣະອື່ນ ແລ້ວພຣະຜູ້ເປັນເຈົ້າ
ຈະຊົງພຣະພິໂຣດ ແລະທຳລາຍພວກທ່ານທັນທີ
5 ໃຫ້ພວກທ່ານທຳກັບປະຊາຊົນເຫລົ່ານັ້ນດັ່ງນີ້ ຄືໃຫ້ພວກທ່ານທຳລາຍແທ່ນບູຊາ ທັບເສົາຫີນສັກສິດ ແລະເຜົາ
ຮູບໂຄຣົບຂອງພວກເຂົາຖິ້ມ
6 ທີ່ຕ້ອງກະທຳດັ່ງນັ້ນກໍເພາະວ່າ ພວກທ່ານເປັນຄົນຂອງພຣະຜູ້ເປັນເຈົ້າ ພຣະອົງໄດ້ຊົງເລືອກເອົາພວກທ່ານ
ມາຈາກຊົນຊາດທັງປວງໃນທົ່ວໂລກ ເພື່ອໃຫ້ເປັນຊົນຊາດພິເສດຂອງພຣະອົງເອງ
7 ພຣະຜູ້ເປັນເຈົ້າຊົງຮັກແລະເລືອກພວກທ່ານບໍ່ແມ່ນຍ້ອນຊົງເຫັນວ່າພວກທ່ານມີຈຳນວນຫລາຍກວ່າຊົນຊາດ
ອື່ນ
8 ຕາມຄວາມຈິງແລ້ວ ພວກທ່ານເປັນຊົນຊາດນ້ອຍທີ່ສຸດໃນໂລກ ພຣະອົງຊົງຮັກພວກທ່ານດ້ວຍໃຈຈິງ ແລະຊົງ
ຮັກສາຄຳຫມັ້ນສັນຍາທີ່ຊົງໃຫ້ໄວ້ກັບບັນພະບຸຣຸດຂອງພວກທ່ານທັງຫລາຍ ດ້ວຍເຫດນີ້ ພຣະອົງຈຶ່ງຊົງຊ່ອຍ
ພວກທ່ານໃຫ້ລອດພົ້ນຈາກການເປັນທາດຂອງກະສັດເອຢິບດ້ວຍຣິດທານຸພາບອັນຍິ່ງໃຫຍ່
9 ຈົ່ງຈຳໄວ້ວ່າ ພຣະຜູ້ເປັນເຈົ້າຂອງພວກທ່ານເທົ່ານັ້ນທີ່ຊົງເປັນພຣະເຈົ້າ ພຣະອົງຊົງສັດຊື່ ຊົງເຮັດຕາມຄຳ
ຫມັ້ນສັນຍາ ແລະຊົງມີຄວາມຮັກຫມັ້ນຄົງຫລາຍຊົ່ວອາຍຸພັນຄົນຕໍ່ຜູ້ທີ່ຮັກພຣະອົງ ແລະຕໍ່ຜູ້ທີ່ເຊື່ອຟັງຄຳສັ່ງ
ສອນຂອງພຣະອົງ
10 ແຕ່ຈະຊົງລົງໂທດຜູ້ທີ່ກຽດຊັງພຣະອົງໂດຍໄວ

11 ດ້ວຍເຫດນີ້ແຫລະ, ຈົ່ງເຊື່ອຟັງແລະເຮັດຕາມກົດບັນຍັດ ພຣະທັມ ແລະຮີດຄອງປະເພນີທັງຫມົດ ທີ່ຂ້າພະ
ເຈົ້າໄດ້ບອກສອນພວກທ່ານແລ້ວໃນມື້ນີ້

**ພຣະເຈົ້າຊົງອວຍພອນໃຫ້ຜູ້ເຊື່ອຟັງ**

Blessing for Obedience

(ລລວ 26:1-13, ພບຍ 28:1-14)

12 ຖ້າພວກທ່ານເຊື່ອຟັງ ຮັກສາແລະເຮັດຕາມຄຳສັ່ງເຫລົ່ານີ້ ພຣະຜູ້ເປັນເຈົ້າຂອງພວກທ່ານຈະຊົງເຮັດຕາມຄຳ
ຫມັ້ນສັນຍາທີ່ພຣະອົງຊົງໃຫ້ໄວ້ກັບພວກທ່ານສືບຕໍ່ໄປ ແລະຈະຊົງສະແດງຄວາມຮັກຫມັ້ນຄົງຕໍ່ພວກທ່ານ
ເຫມືອນດັ່ງພຣະອົງໄດ້ຊົງສັນຍາໄວ້ກັບບັນພະບຸຣຸດຂອງທ່ານທັງຫລາຍນັ້ນ
13 ພຣະອົງຈະຊົງຮັກ ແລະອວຍພອນໃຫ້ພວກທ່ານເພີ້ມທະວີມີລູກຫລານຫລາຍ ໃຫ້ນໍ້າມີປາ ໃຫ້ທົ່ງນາມີເຂົ້າ ມີ
ນໍ້າອະງຸ່ນ ມີນໍ້າຫມາກກອກເທດ ມີງົວຄວາຍ ແລະຝູງແບ້ຈຳນວນຫລວງຫລາຍ ຈະຊົງປະທານພອນເຫລົ່ານີ້
ໃຫ້ພວກທ່ານໃນແຜ່ນດິນທີ່ຊົງສັນຍາວ່າຈະໃຫ້ທ່ານ
14 ຈະບໍ່ມີຊົນຊາດໃດໄດ້ຮັບພອນອັນປະເສີດເຫມືອນກັບພວກທ່ານ ຈະບໍ່ມີຄົນແລະສັດລ້ຽງຕົວໃດໃນຖ້າມກາງ
ພວກທ່ານເປັນຫມັນ
15 ພຣະຜູ້ເປັນເຈົ້າຈະຊົງຄຸ້ມຄອງໃຫ້ພວກທ່ານພົ້ນຈາກຄວາມເຈັບໄຂ້ໄດ້ປ່ວຍທັງປວງ ຈະບໍ່ຊົງນຳໂຣກຮ້າຍ
ແຮງໃດໆດັ່ງທ່ານໄດ້ເຫັນໃນເອຢິບນັ້ນມາຖືກພວກທ່ານ ແຕ່ຈະຊົງນຳມາຖືກສັດຕຣູທັງປວງຂອງພວກທ່ານ
16 ຊົນຊາດທັງປວງທີ່ພຣະຜູ້ເປັນເຈົ້າຊົງມອບໃຫ້ຢູ່ໃຕ້ອຳນາດຂອງພວກທ່ານນັ້ນ ຈົ່ງທຳລາຍເສັຽ ຢ່າໄດ້ທຳຕາມ
ພວກເຂົາ ແລະຢ່າຂາບໄຫວ້ພຣະທັງຫລາຍຂອງພວກເຂົາ ເພາະວ່າການທຳຢ່າງນັ້ນເປັນການທຳລາຍພວກ
ທ່ານເອງ
17 "ຖ້າທ່ານທັງຫລາຍຈະຄິດໃນໃຈວ່າ ຊົນຊາດເຫລົ່ານີ້ມີຈຳນວນຫລາຍກວ່າເຮົາ ເຮົາຈະສາມາດຂັບໄລ່ພວກ
ເຂົາໄດ້ຢ່າງໃດ?
18 ທ່ານທັງຫລາຍຢ່າສູ່ຢ້ານພວກເຂົາ ໃຫ້ລະນຶກເຖິງສິ່ງທີ່ພຣະຜູ້ເປັນເຈົ້າຂອງພວກທ່ານໄດ້ກະທຳຕໍ່ກະສັດເອ
ຢິບ ແລະຕໍ່ພົນລະເມືອງຂອງພຣະອົງ
19 ຄືໄດ້ຊົງນຳໂຣກລະບາດອັນຮ້າຍແຮງມາຖືກຊາວເອຢິບ ຊົງກະທຳການອັສຈັນແລະຫມາຍສຳຄັນຕໍ່ຫນ້າຕໍ່ຕາ
ພວກທ່ານ ພ້ອມທັງໄດ້ຊົງໃຊ້ຣິດທານຸພາບອັນຍິ່ງໃຫຍ່ຊ່ອຍເອົາພວກທ່ານອອກມາ ພຣະອົງຈະຊົງທຳລາຍ
ຊົນຊາດທັງປວງທີ່ທ່ານຢ້ານໃນເວລານີ້ເຫມືອນຊົງທຳລາຍຊາວເອຢິບນັ້ນ
20 ນອກຈາກນີ້ ພຣະອົງຍັງຈະຊົງໃຫ້ຝູງຕໍ່ ຝູງແຕນຕອດຜູ້ທີ່ຫນີໄປລີ້ຢູ່ດ້ວຍ
21 ຢ່າສູ່ຢ້ານຊົນຊາດເຫລົ່ານີ້ ພຣະຜູ້ເປັນເຈົ້າຈະຊົງສະຖິດຢູ່ນຳພວກທ່ານ ພຣະອົງຊົງເປັນພຣະເຈົ້າອົງຍິ່ງໃຫຍ່
ທີ່ຫນ້າຢ້ານ ແລະຊົງຂັບໄລ່ຊົນຊາດເຫລົ່ານີ້ອອກຫນີຈາກທ່ານເທື່ອລະເລັກລະນ້ອຍ
22 ແຕ່ພວກທ່ານຢ່າກຳຈັດພວກເຂົາໃຫ້ຫມົດໄປໃນທັນທີ ເພາະຖ້າທຳຢ່າງນັ້ນ ບັນດາສັດປ່າຈະມີຫລາຍຂຶ້ນ
ແລ້ວມັນຈະມາຣົບກວນພວກທ່ານ
23 ພຣະຜູ້ເປັນເຈົ້າຈະຊົງໃຫ້ພວກສັດຕຣູຢູ່ໃຕ້ອຳນາດຂອງທ່ານ ຈະຊົງກະທຳໃຫ້ພວກເຂົາເກີດໂກລະຫົນວຸ້ນ
ວາຍຈົນເທົ່າຈິບຫາຍໄປ
24 ຈະຊົງໃຫ້ພວກກະສັດຂອງເຂົາທັງຫລາຍຢູ່ໃຕ້ອຳນາດຂອງທ່ານ ທ່ານຈະຂ້າເຂົາຕາຍແລະຊື່ຂອງເຂົາກໍຈະ
ຫມົດສິ້ນໄປ ພວກທ່ານຈະທຳລາຍທຸກໆຄົນໂດຍບໍ່ມີໃຜຈະຂັດຂວາງໄດ້
25 ຈົ່ງເຜົາຮູບໂຄຣົບຂອງພວກເຂົາຖິ້ມ ຢ່າຄິດຢາກໄດ້ເງິນ ຫລືຄຳທີ່ໂອບຮູບຢູ່ນັ້ນ ແລະຢ່າໄດ້ນຳມັນໄປເປັນ
ຂອງທ່ານ ຖ້າທ່ານທຳຢ່າງນັ້ນຈະເປັນອັນຕະລາຍ ເພາະວ່າພຣະຜູ້ເປັນເຈົ້າຊົງກຽດຊັງຮູບໂຄຣົບ

26 ຢ່ານຳຮູບໂຄຣົບໃດໆເຂົ້າໄປຍັງບ້ານເຮືອນຂອງຕົນ ເພາະຢ້ານວ່າຄຳສາບແຊ່ງທີ່ມີຢູ່ໃນນັ້ນຈະຕົກຖືກທ່ານ
ໃຫ້ກຽດຊັງຮູບໂຄຣົບເຫລົ່ານີ້ຢ່າງທີ່ສຸດ ເພາະວ່າມັນເປັນສິ່ງທີ່ພຣະຜູ້ເປັນເຈົ້າຊົງສາບແຊ່ງ

## 8 ແຜ່ນດິນທີ່ອຸດົມສົມບູນ

A Warning Not to Forget God in Prosperity

1 ທຸກສິ່ງທີ່ຂ້າພະເຈົ້າໄດ້ບອກສອນທ່ານໃນວັນນີ້ ຈົ່ງທຳຕາມດ້ວຍຄວາມສັດຊື່ ເພື່ອທ່ານທັງຫລາຍຈະມີຊີວິດຢູ່
ມີລູກຫລານຫລາຍ ແລະໄດ້ເຂົ້າຍຶດຄອງແຜ່ນດິນ ທີ່ພຣະຜູ້ເປັນເຈົ້າຊົງສັນຍາໄວ້ກັບພວກບັນພະບຸຣຸດຂອງ
ທ່ານທັງຫລາຍ

2 ຈົ່ງລະນຶກວ່າ ພຣະຜູ້ເປັນເຈົ້າຂອງທ່ານໄດ້ຊົງນຳພາພວກທ່ານເດີນທາງຢູ່ໃນຖິ່ນກັນດານຕລອດສີ່ສິບປີນັ້ນ
ເປັນຢ່າງໃດ ພຣະອົງຊົງທົດສອບທ່ານດ້ວຍຄວາມຍາກລຳບາກ ເພື່ອຢາກຈະຊົງຮູ້ວ່າຈິດໃຈຂອງພວກທ່ານ
ເປັນຢ່າງໃດ ແລະທ່ານຈະເຊື່ອຟັງຂໍ້ຄຳສັ່ງສອນຂອງພຣະອົງຫລືບໍ່

3 ພຣະອົງຊົງທຳໃຫ້ທ່ານອຶດຢາກ ແຕ່ຊົງປະທານມານາ ໃຫ້ພວກທ່ານກິນ ຊຶ່ງເປັນອາຫານທີ່ທ່ານແລະບັນພະບຸ
ຣຸດຂອງພວກທ່ານບໍ່ເຄີຍກິນມາກ່ອນ ພຣະອົງຊົງກະທຳດັ່ງນີ້ກໍເພື່ອສອນທ່ານວ່າ ບໍ່ແມ່ນແຕ່ອາຫານທີ່ນັ້ນທີ່
ໃຫ້ມະນຸດມີຊີວິດຢູ່ ແລະມະນຸດຈຳເປັນຕ້ອງລ້ຽງຊີວິດດ້ວຍພຣະທັມທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະ
ເຈົ້າ

4 ໃນເວລາສີ່ສິບປີນັ້ນ ສົ້ງເສື້ອຂອງພວກທ່ານບໍ່ໄດ້ຂາດ ແລະຕີນບໍ່ໄດ້ໄຂ່ບວມ

5 ຈົ່ງຈຳໄວ້ວ່າ ພຣະຜູ້ເປັນເຈົ້າຂອງພວກທ່ານຊົງຕີສອນແລະລົງໂທດທ່ານເຫມືອນພໍ່ຕີສອນລູກ

6 ດັ່ງນັ້ນແຫລະ, ຈົ່ງເຮັດຕາມຄຳພຣະຜູ້ເປັນເຈົ້າຊົງບອກສອນ ຄືປະພຶດຕາມບົດບັນຍັດຂອງພຣະອົງ ແລະໂຄ
ຣົບຢຳເກງ ພຣະອົງ

7 ພຣະຜູ້ເປັນເຈົ້າຈະຊົງນຳພາພວກທ່ານເຂົ້າໄປຍັງແຜ່ນດິນທີ່ມີແມ່ນ້ຳລຳຄອງ ມີນ້ຳອອກບໍ່ ແລະມີນ້ຳບາດານ
ໄຫລອອກມາແຕ່ຮ່ອມພູ ແລະພູນ້ອຍທັງຫລາຍມີເຂົ້າບາເລ

8 ເຂົ້າເດືອຍ ກົກອະງຸ່ນ ກົກເດື່ອເທດ ກົກຫມາກພິລາ ນ້ຳມັນຫມາກກອກເທດ ແລະນ້ຳເຜີ້ງ

9 ຢູ່ທີ່ນັ້ນພວກທ່ານຈະບໍ່ອຶດຫິວ ຫລືທຳສິ່ງໃດໂດຍໄຮ້ປໂຍດເລີຍ ມັນເປັນແຜ່ນດິນທີ່ມີບໍ່ເຫລັກ ແລະບໍ່ທອງ
ແດງຫລາຍ

10 ພວກທ່ານຈະມີອາຫານກິນຕາມຄວາມຕ້ອງການ ແລະຈະຂອບພຣະຄຸນພຣະຜູ້ເປັນເຈົ້າຂອງພວກທ່ານ ຍ້ອນ
ວ່າພຣະອົງຊົງໂຜດປະທານແຜ່ນດິນທີ່ອຸດົມສົມບູນນີ້ໃຫ້

**ຕັກເຕືອນບໍ່ໃຫ້ລືມພຣະຜູ້ເປັນເຈົ້າ**

11 ຈົ່ງລະວັງໃຫ້ດີ ຢ່າຫລົງລືມພຣະຜູ້ເປັນເຈົ້າຂອງພວກທ່ານ ຈົ່ງທຳຕາມກົດບັນຍັດ ພຣະທັມ ແລະຮີດຄອງປະ
ເພນີທັງຫມົດຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກທ່ານນັ້ນແລ້ວໃນມື້ນີ້

12 ເມື່ອພວກທ່ານມີອາຫານການກິນຕາມຄວາມຕ້ອງການ ໄດ້ສ້າງບ້ານເຮືອນດີໆຢູ່

13 ມີຝູງງົວຄວາຍ ແລະຝູງແກະ ມີເງິນຄຳແລະສິ່ງຂອງອື່ນໆເພີ້ມທະວີຫລາຍຂຶ້ນແລ້ວ

14 ພວກທ່ານຈົ່ງລະວັງ ຢ່າໄດ້ຈອງຫອງພອງຕົວຈົນຫລົງລືມພຣະຜູ້ເປັນເຈົ້າ ຜູ້ຊົງນຳທ່ານທັງຫລາຍອອກມາ
ຈາກເອຢິບບ່ອນຕົກເປັນທາດ

15 ພຣະອົງຊົງນຳພາພວກທ່ານຜ່ານຖິ່ນກັນດານອັນກວ້າງໃຫຍ່ໄພສານ ແລະເປັນຕາຫນ້າຢ້ານ ຊຶ່ງມີງູຮ້າຍແລະ
ແມງງອດ ເມື່ອຢູ່ໃນດິນແຫ້ງແລະບໍ່ມີນ້ຳກໍເຮັດໃຫ້ມີນ້ຳໄຫລອອກມາຈາກຫີນໃຫ້ພວກທ່ານດື່ມໄດ້

16 ຊົງປະທານມານາໃຫ້ກິນໃນຖິ່ນກັນດານ ຊຶ່ງເປັນອາຫານທີ່ບັນພະບຸຣຸດຂອງພວກທ່ານບໍ່ເຄີຍມີມາກ່ອນ ຊົງ
ທົດສອບພວກທ່ານດ້ວຍຄວາມຍາກລຳບາກ ເພື່ອວ່າໃນບັ້ນປາຍຈະຊົງປະທານຂອງດີໃຫ້ທ່ານ

17 ດັ່ງນັ້ນແຫລະ, ພວກທ່ານຢ່າຄິດວ່າຊັບສົມບັດນີ້ຫາມາໄດ້ດ້ວຍກຳລັງແລະເຫື່ອແຮງຂອງພວກທ່ານເອງເລີຍ
18 ຈົ່ງຈຳໄວ້ວ່າ ພວກທ່ານຮັ່ງມີຍ້ອນເຫື່ອແຮງທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ພຣະອົງຊົງກະທຳດັ່ງນີ້ ກໍຍ້ອນ
ວ່າຊົງສັດຊື່ຕໍ່ຄຳໝັ້ນສັນຍາທີ່ຊົງໃຫ້ໄວ້ກັບບັນພະບຸຣຸດຂອງທ່ານທັງຫລາຍ ແລະຍັງຊົງສັດຊື່ຕໍ່ຄຳໝັ້ນສັນ
ຍານັ້ນຈົນເທົ່າທຸກມື້ນີ້
19 ຢ່າປະຖິ້ມພຣະຜູ້ເປັນເຈົ້າໄປຂາບໄຫວ້ ແລະບົວລະບັດພຣະອື່ນ ຖ້າທ່ານຫາກທຳດັ່ງນີ້ ຂ້າພະເຈົ້າກໍຂໍເຕືອນ
ໃນມື້ນີ້ວ່າ ພວກທ່ານຈະຈິບຫາຍເປັນແນ່ແທ້
20 ຖ້າບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ ພວກທ່ານຈະຈິບຫາຍໄປເຫມືອນຊົນຊາດທີ່ພຣະອົງຊົງໄດ້ທຳລາຍຕໍ່ຫນ້າທ່ານ
ນັ້ນ

## 9 ປະຊາຊົນບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ

The Consequences of Rebelling against God

(ອພຍ 32:1-35)

1 ຊາວອິສຣາເອນເອີຍ ຈົ່ງຟັງເດີ ພວກທ່ານກຳລັງຈະຂ້າມແມ່ນ້ຳຈໍແດນໄປຍຶດຄອງແຜ່ນດິນຂອງຊົນຊາດໃຫຍ່
ແລະແຂງແຮງກວ່າທ່ານ ເມືອງກໍໃຫຍ່ກຳແພງກໍສູງຈຸຟ້າ
2 ປະຊາຊົນກໍມີຮູບຮ່າງສູງໃຫຍ່ ມີຄວາມສາມາດຢ່າງເລີດລ້ຳ ແລະຄຳທີ່ເລົ່າລືກັນວ່າ ບໍ່ມີໃຜຍືນຕໍ່ສູ້ກັບເຂົາໄດ້
ພວກທ່ານກໍເຄີຍໄດ້ຍິນມາແລ້ວ
3 ແຕ່ບັດນີ້ ທ່ານຈະເຫັນດ້ວຍຕົວທ່ານເອງວ່າ ພຣະຜູ້ເປັນເຈົ້າຈະນຳຫນ້າພວກທ່ານໄປເຫມືອນໄຟເພື່ອເຜົາ
ຜານ ຈະຊົງໃຫ້ພວກເຂົາເສັຽໄຊຕໍ່ພວກທ່ານ ແລະພວກເຂົາຈະຖືກພວກທ່ານຂັບໄລ່ພວກເຂົາອອກໄປ ແລະ
ສ້າງຄວາມຈິບຫາຍໃຫ້ແກ່ເຂົາຕາມດັ່ງພຣະອົງທີ່ໄດ້ຊົງສັນຍາໄວ້
4 ຫລັງຈາກພຣະຜູ້ເປັນເຈົ້າຊົງຂັບໄລ່ພວກເຂົາອອກໄປຈາກທ່ານແລ້ວ ຢ່າໄດ້ພາກັນເວົ້າວ່າ, “ພຣະອົງຊົງນຳ
ທ່ານເຂົ້າມາຄອບຄອງແຜ່ນດິນນີ້ຍ້ອນຄວາມຊອບທັມ ແລະກິຈການຂອງພວກທ່ານເອງ” ແຕ່ພຣະອົງຊົງຂັບ
ໄລ່ປະຊາຊົນເຫລົ່ານີ້ອອກໄປເພາະພວກເຂົາເຮັດຊົ່ວ
5 ຊຶ່ງທ່ານທັງຫລາຍກຳລັງເຂົ້າໄປຍຶດຄອງແຜ່ນດິນນີ້ນັ້ນ ບໍ່ແມ່ນເພາະຄວາມຊອບທັມຂອງພວກທ່ານ ຫລື
ຄວາມສັຈທັມໃນໃຈຂອງທ່ານ ແຕ່ເປັນເພາະຄວາມຊົ່ວຂອງປະຊາຊາດນີ້ ຊຶ່ງພຣະຜູ້ເປັນເຈົ້າຂອງທ່ານຕ້ອງ
ຂັບໄລ່ພວກເຂົາອອກເສັຽຕໍ່ຫນ້າທ່ານທັງຫລາຍ ເພາະວ່າພຣະອົງໄດ້ຮັກສາຄຳໝັ້ນສັນຍາທີ່ຊົງໃຫ້ໄວ້ກັບບັນ
ພະບຸຣຸດຂອງທ່ານທັງຫລາຍ ຄືອັບຣາຮາມ ອີຊາກ ແລະຢາໂຄບ
6 ສະນັ້ນທ່ານທັງຫລາຍຈົ່ງຮັບຮູ້ເຖີດວ່າ ພຣະຜູ້ເປັນເຈົ້າຈະບໍ່ຊົງປະທານແຜ່ນດິນທີ່ອຸດົມສົມບູນນີ້ໃຫ້ຍ້ອນກິຈ
ການຂອງພວກທ່ານ ເພາະວ່າທ່ານທັງຫລາຍເປັນຊົນຊາດທີ່ດື້ດ້ານ
7 ຢ່າລືມວ່າພວກທ່ານໄດ້ເຮັດໃຫ້ພຣະຜູ້ເປັນເຈົ້າຊົງພຣະພິໂຣດໃນຖິ່ນກັນດານ ໄດ້ກະບົດຕໍ່ສູ້ພຣະອົງຕັ້ງແຕ່
ວັນອອກມາຈາກປະເທດເອຢິບຈົນເທົ່າມາຮອດມື້ນີ້
8 ແມ່ນແຕ່ໃນພູໂຮເຣັບ ພວກທ່ານກໍເຮັດໃຫ້ພຣະອົງຊົງພຣະພິໂຣດຫລາຍຈົນວ່າພໍທີ່ຈະທຳລາຍພວກທ່ານໄດ້
9 ເມື່ອຂ້າພະເຈົ້າຂຶ້ນໄປຮັບເອົາແຜ່ນສີລາເທິງພູ ຄືແຜ່ນສີລາແຫ່ງຄຳໝັ້ນສັນຍາທີ່ພຣະຜູ້ເປັນເຈົ້າຊົງໃຫ້ໄວ້
ກັບທ່ານທັງຫລາຍນັ້ນ ຂ້າພະເຈົ້າໄດ້ພັກຢູ່ທີ່ນັ້ນສີ່ສິບມື້ສີ່ສິບຄືນ ໂດຍບໍ່ໄດ້ກິນເຂົ້າຫລືດື່ມນ້ຳເລີຍ
10 ແລ້ວພຣະຜູ້ເປັນເຈົ້າໄດ້ຊົງປະທານສີລາສອງແຜ່ນໃຫ້ຂ້າພະເຈົ້າ ເປັນແຜ່ນສີລາທີ່ນິ້ວພຣະຫັດຂອງພຣະອົງ
ເອງ ໄດ້ຊົງຈາລຶກພຣະຄຳໃສ່ຊຶ່ງເປັນພຣະຄຳທີ່ຊົງກ່າວກັບທ່ານທັງຫລາຍອອກມາຈາກໄຟໃນມື້ຊຸມນຸມກັນຢູ່
ເທິງພູນັ້ນ

11 ຄືວ່າຫລັງຈາກຄົບສີ່ສິບມື້ສີ່ສິບຄືນແລ້ວ ພຣະຜູ້ເປັນເຈົ້າກໍຊົງປະທານແຜ່ນສີລາທີ່ຈາລຶກຄຳຫມັ້ນສັນຍາໃຫ້
ຂ້າພະເຈົ້າ
12 ພຣະຜູ້ເປັນເຈົ້າໄດ້ຊົງກ່າວຕໍ່ຂ້າພະເຈົ້າໃນເວລານັ້ນວ່າ, “ຈົ່ງລົງຈາກພູດຽວນີ້ ດ້ວຍວ່າປະຊາຊົນທີ່ເຈົ້ານຳ
ອອກມາຈາກປະເທດເອຢິບນັ້ນໄດ້ຫລົງຜິດເສັຽແລ້ວ ຄືພວກເຂົາໄດ້ຫັນຫນີຈາກທາງທີ່ເຮົາໄດ້ສັ່ງໃຫ້ປະຕິບັດ
ນັ້ນຢ່າງວ່ອງໄວ ຄືພວກເຂົາໄດ້ຫລໍ່ຮູບໂຄຣົບຂຶ້ນສຳລັບຕົນເອງ”
13 ພຣະຜູ້ເປັນເຈົ້າຍັງໄດ້ກ່າວຕໍ່ຂ້າພະເຈົ້າອີກວ່າ, “ເຮົາຮູ້ດີວ່າປະຊາຊົນເຫລົ່ານີ້ຫົວດື້
14 ສະນັ້ນຢ່າຂັດຂວາງເຮົາ ເຮົາຕັ້ງໃຈຈະທຳລາຍເຂົາ ເພື່ອບໍ່ໃຫ້ຜູ້ໃດລະນຶກເຖິງພວກເຂົາອີກຕໍ່ໄປ ແລ້ວເຮົາຈະ
ເຮັດໃຫ້ເຈົ້າໄດ້ເປັນບິດາຂອງຊົນຊາດນຶ່ງທີ່ໃຫຍ່ແລະເຂັ້ມແຂງກວ່າ”
15 ຫລັງຈາກນັ້ນ ຂ້າພະເຈົ້າຈຶ່ງໄດ້ກັບຄືນລົງມາຈາກພູ ຊຶ່ງໄຟກຳລັງລຸກຢູ່ ໂດຍໄດ້ຖືແຜ່ນສີລາຄຳຫມັ້ນສັນຍາ
ສອງແຜ່ນນັ້ນລົງມາພ້ອມ
16 ແລ້ວຂ້າພະເຈົ້າກໍໄດ້ພົບວ່າ ພວກທ່ານໄດ້ລະເມີດຄຳສັ່ງທີ່ພຣະຜູ້ເປັນເຈົ້າຊົງໃຫ້ໄວ້ນັ້ນໂລດ ແລະໄດ້ເຫັນ
ພວກທ່ານເຮັດ ບາບຕໍ່ສູ້ພຣະອົງ ດ້ວຍການຫລໍ່ຮູບງົວນ້ອຍໄວ້ຂາບໄຫວ້
17 ດ້ວຍເຫດນັ້ນ ຂ້າພະເຈົ້າຈຶ່ງໄດ້ໂຍນສີລາສອງແຜ່ນນັ້ນຖິ້ມຕໍ່ຫນ້າຕໍ່ຕາທ່ານໃຫ້ມັນແຕກມຸ່ນເສັຽ
18 ແລ້ວຂ້າພະເຈົ້າກໍກົ້ມຫນ້າລົງຕໍ່ພຣະພັກພຣະຜູ້ເປັນເຈົ້າອີກເທື່ອນຶ່ງ ເປັນເວລາສີ່ສິບມື້ສີ່ສິບຄືນ ໂດຍບໍ່ໄດ້ກິນ
ເຂົ້າຫລືດື່ມນ້ຳເລີຍ ທີ່ເຮັດດັ່ງນີ້ ກໍຍ້ອນພວກທ່ານກະທຳບາບຕໍ່ສູ້ພຣະຜູ້ເປັນເຈົ້າ ແລະເຮັດໃຫ້ພຣະອົງຊົງພ
ຣະພິໂຣດ
19 ຂ້າພະເຈົ້າຢ້ານພຣະພິໂຣດອັນຮຸນແຮງຂອງພຣະອົງເພາະວ່າຊົງພຣະພິໂຣດຫລາຍຈົນພໍທີ່ຈະທຳລາຍທ່ານ
ໄດ້ ແຕ່ພຣະອົງກໍຍັງຊົງຟັງຂ້າພະເຈົ້າອີກເທື່ອນຶ່ງ
20 ພຣະຜູ້ເປັນເຈົ້າຊົງພຣະພິໂຣດອາໂຣນພໍທີ່ຈະຂ້າເຂົາໄດ້ ຂ້າພະເຈົ້າຈຶ່ງໄດ້ອ້ອນວອນເພື່ອເຂົາໃນຄັ້ງນັ້ນ
21 ພ້ອມທັງໄດ້ເອົາສິ່ງອັນເປັນບາບ ຄືຮູບງົວນ້ອຍທີ່ພວກທ່ານເຮັດໄວ້ບູຊານັ້ນໃສ່ໄຟ ແລ້ວນຳມາບົດໃຫ້ລະອຽດ
ແລ້ວເທລົງໃສ່ແມ່ນ້ຳທີ່ໄຫລລົງມາຈາກພູ
22 ເມື່ອຢູ່ທີ່ຕາເບຣາ ມັດສາ ແລະກິບໂຣດຮັດຕາອາວານັ້ນ ພວກທ່ານໄດ້ເຮັດໃຫ້ພຣະຜູ້ເປັນເຈົ້າຊົງພຣະພິໂຣດ
23 ແລະເມື່ອຊົງໃຊ້ທ່ານໄປຈາກກາເດສບາເນອາ ເພື່ອຍຶດຄອງເອົາແຜ່ນດິນທີ່ຊົງປະທານໃຫ້ ພວກທ່ານກໍໄດ້
ເປັນກະບົດຕໍ່ສູ້ ພຣະອົງເສັຽ ບໍ່ໄວ້ວາງໃຈຫລືເຊື່ອຟັງພຣະອົງເລີຍ
24 ພວກທ່ານໄດ້ກະບົດຕໍ່ສູ້ພຣະຜູ້ເປັນເຈົ້າຕລອດມາ ຕັ້ງແຕ່ວັນທີ່ຂ້າພະເຈົ້າໄດ້ຮູ້ຈັກກັບພວກທ່ານ
25 ດັ່ງນັ້ນ ຂ້າພະເຈົ້າຈຶ່ງກົ້ມຂາບລົງຕໍ່ພຣະພັກພຣະຜູ້ເປັນເຈົ້າສີ່ສິບມື້ສີ່ສິບຄືນ ເພາະວ່າພຣະອົງຊົງຕັດສິນພຣະ
ທັຍຈະທຳລາຍພວກທ່ານ
26 ຂ້າພະເຈົ້າໄດ້ອ້ອນວອນວ່າ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຢ່າຊົງທຳລາຍໄພ່ພົນພິເສດຂອງພຣະອົງ ຜູ້ຊຶ່ງພຣະອົງ
ຊົງໂຜດຊ່ອຍເອົາອອກຈາກເອຢິບດ້ວຍຄວາມຍິ່ງໃຫຍ່ແລະເດຊານຸພາບ
27 ຂໍຊົງລະນຶກເຖິງຜູ້ຮັບໃຊ້ຂອງພຣະອົງ ຄືອັບຣາຮາມ ອີຊາກ ແລະຢາໂຄບ ຢ່າຊົງສົນພຣະທັຍໃນຄວາມດື້ດ້ານ
ຄວາມຊົ່ວຮ້າຍແລະຄວາມບາບຂອງປະຊາຊົນນີ້
28 ເພາະຢ້ານຊາວເອຢິບເວົ້າວ່າ, “ພຣະອົງບໍ່ສາມາດພາພວກເຫລົ່ານີ້ໄປຍັງແຜ່ນດິນທີ່ຊົງສັນຍາວ່າຈະໃຫ້ ແຕ່
ຊົງພາພວກເຂົາໄປຕາຍໃນຖິ່ນກັນດານ ຍ້ອນວ່າຊົງກຽດຊັງພວກເຂົາ”
29 ເພາະຄົນເຫລົ່ານີ້ແມ່ນໄພ່ພົນພິເສດຂອງພຣະອົງ ຊຶ່ງພຣະອົງຊົງນຳອອກມາຈາກເອຢິບດ້ວຍກຳລັງແລະເດ
ຊານຸພາບອັນຍິ່ງໃຫຍ່

## 10 ພຣະເຈົ້າຊົງປະທານພຣະບັນຍັດແກ່ໂມເຊ

The Second Pair of Tablets

(ອພຍ 34:1-9)

1 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກຂ້າພະເຈົ້າວ່າ, "ຈົ່ງຖາກເອົາສີລາສອງແຜ່ນໃຫ້ຄືເກົ່າ ແລະທຳຫີບໄມ້ສຳລັບ
ໃສ່ໄວ້ດ້ວຍ ແລ້ວນຳຂຶ້ນມາຫາເຮົາເທິງພູ
2 ເຮົາຈະຈາຣຶກຖ້ອຍຄຳເຫມືອນໃນແຜ່ນເກົ່າທີ່ແຕກໄປແລ້ວນັ້ນໃຫ້ເຈົ້າອີກ ແລ້ວໃຫ້ຮັກສາໄວ້ໃນຫີບໄມ້ນັ້ນ"
3 ດັ່ງນັ້ນ ຂ້າພະເຈົ້າຈຶ່ງທຳຫີບດ້ວຍໄມ້ກະຖິນເທດ ແລະໄດ້ເອົາແຜ່ນສີລາໃຫມ່ສອງແຜ່ນຖືຂຶ້ນໄປເທິງພູ
4 ແລ້ວພຣະຜູ້ເປັນເຈົ້າໄດ້ຊົງຈາຣຶກຖ້ອຍຄຳເຫມືອນຄາວກ່ອນໃສ່ໃນສີລາສອງແຜ່ນນີ້ ຖ້ອຍຄຳທີ່ຊົງຈາຣຶກໃສ່
ນີ້ແມ່ນພຣະບັນຍັດສິບປະການ ຊຶ່ງພຣະອົງໄດ້ຊົງປະທານໃຫ້ພວກທ່ານຄາວຊົງກ່າວອອກມາຈາກໄຟ ໃນ
ວັນທີ່ທ່ານທັງຫລາຍໄດ້ຊຸມນຸມກັນຢູ່ເທິງພູນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງປະທານແຜ່ນສີລານັ້ນໃຫ້ຂ້າພະເຈົ້າ
5 ຂ້າພະເຈົ້າຈຶ່ງໄດ້ກັບລົງມາຈາກພູ ແລ້ວກໍມ້ຽນແຜ່ນສີລາໄວ້ໃນຫີບທີ່ໄດ້ທຳຂຶ້ນຕາມພຣະອົງຊົງສັ່ງ ແຜ່ນສີ
ລານັ້ນກໍຍັງຢູ່ໃນຫີບສືບຕໍ່ມາ
6 (ຊາວອິສຣາເອນໄດ້ອອກຈາກນ້ຳສ້າງຂອງຊາວເບເອີໂອດເບນເອຢາອາຄານ ເມື່ອມາເຖິງໂມເຊຣາ ອາ
ໂຣນກໍສິ້ນຊີວິດ ພວກເຂົາຈຶ່ງໄດ້ຝັງສົບທ່ານໄວ້ທີ່ນັ້ນແມ່ນ ເອເລອາຊາ ຜູ້ເປັນຫລານຊາຍໄດ້ປະຕິບັດຫນ້າທີ່
ປະໂຣຫິດແທນທ່ານ
7 ພວກເຂົາໄດ້ອອກຈາກທີ່ນັ້ນມາເຖິງກຸດໂກດາ ແລ້ວໄດ້ໄປຍັງ ໂຢດບາທາຄືດິນແດນທີ່ມີນ້ຳຫລາຍ
8 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງໄດ້ແຕ່ງຕັ້ງໃຫ້ພວກຄົນເລວີດູແລຫີບຄຳສັນຍາແຫ່ງພຣະຜູ້ເປັນເຈົ້າ ໃຫ້ເປັນປະໂຣ
ຫິດຮັບໃຊ້ ພຣະອົງ ແລະໃຫ້ອວຍພອນໃນພຣະນາມຂອງພຣະອົງສືບຕໍ່ມາຈົນເຖິງທຸກວັນນີ້
9 ດ້ວຍເຫດນີ້ຕະກູນເລວີຈຶ່ງບໍ່ໄດ້ຮັບສ່ວນມໍຣະດົກເຫມືອນຕະກູນອື່ນໆ ພວກເຂົາໄດ້ແຕ່ຮັບໃຊ້ເປັນປະໂຣຫິດ
ເທົ່ານັ້ນ ໂດຍມີພຣະຜູ້ເປັນເຈົ້າເປັນມໍຣະດົກຂອງພວກເຂົາເຫມືອນດັ່ງພຣະຜູ້ເປັນເຈົ້າຂອງທ່ານທັງຫລາຍໄດ້
ຊົງສັນຍາໄວ້
10 ຂ້າພະເຈົ້າໄດ້ພັກຢູ່ເທິງພູສີ່ສິບມື້ສີ່ສິບຄືນເຫມືອນຄາວກ່ອນໆ ພຣະຜູ້ເປັນເຈົ້າກໍຊົງຟັງຂ້າພະເຈົ້າອີກເທື່ອນຶ່ງ
ແລະບໍ່ຊົງທຳຮ້າຍພວກທ່ານ
11 ແລ້ວພຣະອົງໄດ້ຊົງບອກໃຫ້ຂ້າພະເຈົ້ານຳພາພວກທ່ານເຂົ້າໄປຍຶດເອົາແຜ່ນດິນທີ່ຊົງສັນຍາວ່າຈະໃຫ້ບັນພະ
ບຸຣຸດຂອງທ່ານທັງຫລາຍນັ້ນ

### ສິ່ງທີ່ພຣະເຈົ້າຊົງຕ້ອງການ

The Essence of the Law

12 ຊາວອິສຣາເອນເອີຍ ບັດນີ້ ຈົ່ງຟັງສິ່ງທີ່ພຣະຜູ້ເປັນເຈົ້າຂອງພວກທ່ານຕ້ອງການໃຫ້ພວກທ່ານທັງຫລາຍທຳ ຄື
ໃຫ້ຢຳເກງພຣະຜູ້ເປັນເຈົ້າແລະທຳທຸກສິ່ງຕາມພຣະອົງຊົງບອກ ໃຫ້ຮັກແລະຮັບໃຊ້ພຣະອົງຈົນສຸດຈິດສຸດໃຈ
13 ໃຫ້ປະພຶດຕາມຄຳສັ່ງທັງປວງຂອງພຣະອົງ ຊຶ່ງຂ້າພະເຈົ້າກຳລັງບອກພວກທ່ານໃນວັນນີ້ ເພື່ອຜົນປໂຍດຂອງ
ທ່ານທັງຫລາຍ
14 ເພາະວ່າສວັນທີ່ສູງສຸດເປັນຂອງພຣະອົງ ໂລກແລະທຸກໆສິ່ງໃນໂລກກໍເປັນຂອງພຣະອົງເຫມືອນກັນ ແຕ່ພຣະ
ຜູ້ເປັນເຈົ້າຊົງຮັກບັນພະບຸຣຸດຂອງພວກທ່ານຫລາຍທີ່ສຸດ
15 ດ້ວຍເຫດນັ້ນ ພຣະອົງຈຶ່ງຊົງເລືອກເອົາພວກທ່ານໃຫ້ເປັນຊົນຊາດພິເສດຂອງພຣະອົງດີກວ່າເອົາຊົນຊາດອື່ນ
ທຸກວັນນີ້ ພຣະອົງກໍຍັງຮັກແລະເລືອກເອົາພວກທ່ານຢູ່ດັ່ງນີ້ແຫລະ
16 ແຕ່ບັດນີ້ເປັນຕົ້ນໄປ ຈົ່ງເຊື່ອຟັງພຣະຜູ້ເປັນເຈົ້າ ແລະເຊົາດື້ດຶງເສັງ

17 ພຣະຜູ້ເປັນເຈົ້າຂອງພວກທ່ານຊົງຍິ່ງໃຫຍ່ກວ່າພຣະ ແລະເຈົ້ານາຍທັງປວງ ເປັນພຣະເຈົ້າອົງຍິ່ງໃຫຍ່ມີຣິດ
ເດດແລະຫນ້າຢຳເກງ ພຣະອົງບໍ່ຊົງເຫັນແກ່ຫນ້າແລະບໍ່ເຫັນແກ່ສິນຈ້າງຮາງວັນເລີຍ
18 ຊົງໃຫ້ຄວາມເປັນທັມແກ່ລູກກຳພ້າ ແລະພວກນາງຫມ້າຍ ຊົງຮັກຄົນຕ່າງດ້າວທີ່ຢູ່ນຳພວກເຮົາ ຊົງປະທານອາ
ຫານແລະເຄື່ອງນຸ່ງຫົ່ມໃຫ້ແກ່ພວກເຂົາ
19 ດ້ວຍເຫດນັ້ນ ພວກທ່ານຈົ່ງຮັກແພງຄົນຕ່າງດ້າວ ເພາະວ່າພວກທ່ານກໍເຄີຍເປັນຄົນຕ່າງດ້າວມາແລ້ວໃນປະ
ເທດເອຢິບ
20 ຈົ່ງຢຳເກງພຣະຜູ້ເປັນເຈົ້າຂອງພວກທ່ານແລະຂາບໄຫວ້ແຕ່ພຣະອົງ ຈົ່ງເຮັດສັດຊື່ຕໍ່ພຣະອົງ ແລະຈົ່ງສາບານ
ແຕ່ໃນພຣະນາມຂອງພຣະອົງ
21 ຈົ່ງສັຣເສີນພຣະອົງຜູ້ຊົງເປັນພຣະເຈົ້າຂອງທ່ານທັງຫລາຍ ແລະພວກທ່ານກໍໄດ້ເຫັນການກະທຳອັນຍິ່ງໃຫຍ່
ແລະຫນ້າຢ້ານທີ່ພຣະອົງຊົງກະທຳຕໍ່ພວກທ່ານດ້ວຍຕາຕົນເອງແລ້ວ
22 ເມື່ອບັນພະບຸຣຸດຂອງພວກທ່ານໄປຍັງປະເທດເອຢິບນັ້ນ ພວກເຂົາມີພຽງເຈັດສິບຄົນທໍ່ນັ້ນ ແຕ່ບັດນີ້ ພຣະຜູ້
ເປັນເຈົ້າພຣະເຈົ້າຂອງພວກທ່ານໄດ້ເຮັດໃຫ້ທ່ານມີຫລາຍຂຶ້ນເຫມືອນດວງດາວໃນທ້ອງຟ້າ

## 11 ຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ

Rewards for Obedience

1 ຈົ່ງຮັກພຣະຜູ້ເປັນເຈົ້າຂອງທ່ານ ແລະປະຕິບັດຂໍ້ຄຳສັ່ງທັງຫມົດຂອງພຣະອົງສເມີ
2 ຈົ່ງຈຳໄວ້ວ່າພວກທ່ານໄດ້ຮຽນຮູ້ເຣື່ອງພຣະຜູ້ເປັນເຈົ້າດ້ວຍເຫັນການກະທຳຂອງພຣະອົງ ບໍ່ແມ່ນລູກຫລານ
ຂອງພວກທ່ານໄດ້ເຫັນເຫດການເຫລົ່ານີ້
3 ຄືພວກທ່ານໄດ້ເຫັນຄວາມຍິ່ງໃຫຍ່ ອຳນາດ ຣິດເດດ ການອັດສະຈັນຂອງພຣະຜູ້ເປັນເຈົ້າ ໄດ້ເຫັນພຣະອົງຊົງ
ກະທຳຕໍ່ກະສັດເອຢິບແລະຕໍ່ປະເທດຂອງພຣະອົງ
4 ເມື່ອກອງທັບເອຢິບໄລ່ຕິດຕາມມາພວກທ່ານກໍໄດ້ເຫັນພຣະຜູ້ເປັນເຈົ້າຊົງເຮັດໃຫ້ນ້ຳທະເລໄມ້ອໍ້ໄຫລ
ຖ້ວມກອງທັບພ້ອມທັງຝູງມ້າ ແລະຣົດຣົບຂອງເອຢິບຈົມຫມົດສິ້ນ
5 ພວກທ່ານຮູ້ສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳຕໍ່ພວກທ່ານໃນຖິ່ນກັນດານ ກ່ອນມາເຖິງທີ່ນີ້ແລ້ວ
6 ຄືຈົ່ງລະນຶກເຖິງສິ່ງທີ່ພຣະອົງໄດ້ຊົງກະທຳຕໍ່ດາທານ ກັບອາບີຣາມ ທັງສອງຄົນນີ້ເປັນບຸດຊາຍຂອງເອລີອາບ
ແຫ່ງຕະກູນຣູເບນ ຄືພຣະອົງຊົງໃຫ້ແຜ່ນດິນຍະອອກກືນພວກເຂົາລົງໄປ ພ້ອມທັງຄອບຄົວ ຕູບຜ້າເຕັນ ພວກ
ຄົນໃຊ້ ແລະສັດລ້ຽງທັງຫມົດ
7 ພຣະຣາຊກິດອັນຍິ່ງໃຫຍ່ທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳນີ້ ພວກທ່ານກໍໄດ້ເຫັນກັບຕາມາແລ້ວ

**ພຣະພອນໃນແຜ່ນດິນທີ່ຊົງສັນຍາໄວ້**

8 ຈົ່ງທຳຕາມທຸກໆສິ່ງທີ່ຂ້າພະເຈົ້າໄດ້ບອກທ່ານໃນວັນນີ້ ພວກທ່ານຈຶ່ງຈະສາມາດເຂົ້າໄປຍຶດຄອງເອົາແຜ່ນດິນ
ທີ່ກຳລັງເຂົ້າໄປນັ້ນ
9 ແລະຈະມີຊີວິດຫມັ້ນຍືນຢູ່ໃນແຜ່ນດິນທີ່ອຸດົມສົມບູນ ຊຶ່ງພຣະຜູ້ເປັນເຈົ້າໄດ້ຊົງສັນຍາວ່າ ຈະຍົກໃຫ້ບັນພະບຸ
ຣຸດຂອງພວກທ່ານກັບເຊື້ອສາຍຂອງພວກເຂົາ
10 ແຜ່ນດິນທີ່ພວກທ່ານກຳລັງຈະເຂົ້າຍຶດຄອງນັ້ນ ບໍ່ເຫມືອນແຜ່ນດິນເອຢິບທີ່ພວກທ່ານໄດ້ເຄີຍອາສັຍຢູ່ແຕ່
ກ່ອນ ຢູ່ທີ່ນັ້ນເມື່ອພວກທ່ານປູກເຂົ້າຕ້ອງທຳງານຫນັກເພື່ອປ້ານຄັນຄູກັ້ນນ້ຳໄວ້
11 ແຕ່ແຜ່ນດິນທີ່ພວກທ່ານກຳລັງຈະເຂົ້າໄປນີ້ ເປັນພູແລະທົ່ງຈະມີຝົນຕົກລົງມາທົດໃຫ້
12 ພຣະຜູ້ເປັນເຈົ້າຂອງພວກທ່ານຊົງເບິ່ງແຍງ ແລະເຝົ້າຮັກສາທົ່ວແຜ່ນດິນນີ້ຕລອດປີ

13 ດ້ວຍເຫດນັ້ນ ຈົ່ງທຳຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າໄດ້ບອກທ່ານໃນມື້ນີ້ ຄືໃຫ້ຮັກພຣະຜູ້ເປັນເຈົ້າຂອງທ່ານ ແລະບົວລະບັດ ພຣະອົງຈົນສຸດຈິດສຸດໃຈ
14 ຖ້າພວກທ່ານເຮັດໄດ້ຕາມນີ້ ພຣະອົງຈະຊົງໃຫ້ຝົນຕົກລົງມາເທິງແຜ່ນດິນຂອງທ່ານຖືກຕ້ອງຕາມຣະດູການ ເພື່ອໃຫ້ໄດ້ ເຂົ້າກິນ ໄດ້ໝາກອະງຸ່ນເຮັດເຫລົ້າ ໄດ້ໝາກກອກເທດເຮັດນ້ຳມັນ ແລະໄດ້ຫຍ້າໃຫ້ຝູງສັດກິນ
15 ແລ້ວພວກທ່ານກໍຈະມີອາຫານກິນຕາມຄວາມຕ້ອງການ
16 ຈົ່ງລະວັງ ຢ່າໃຫ້ເຂົານຳພາໄປໃນທາງທີ່ຜິດ ເພາະຢ້ານວ່າທ່ານຈະປະຖິ້ມພຣະຜູ້ເປັນເຈົ້າ ໄປຂາບໄຫວ້ແລະບົວລະບັດ ພຣະອື່ນ
17 ຖ້າຂືນປະຕິບັດດັ່ງກ່າວນີ້ ພຣະຜູ້ເປັນເຈົ້າຈະຊົງພິໂຣດພວກທ່ານ ຈະບໍ່ຊົງໃຫ້ຝົນຕົກລົງມາເທິງແຜ່ນດິນຂອງພວກທ່ານ ແລ້ວແຜ່ນດິນຈະແຫ້ງພືດຜົນຈະບໍ່ເກີດ ໃນບໍ່ເທິງພວກທ່ານກໍຈະຕາຍຈາກແຜ່ນດິນດີໆທີ່ພຣະອົງໄດ້ຊົງປະທານໃຫ້ນີ້
18 ຈົ່ງໃສ່ຈິດໃສ່ໃຈຈົດຈຳເອົາຂໍ້ຄຳສັ່ງເຫລົ່ານີ້ ໃຫ້ຕິດມັນໄວ້ໃນແຂນ ແລະເທິງໜ້າຜາກເພື່ອເປັນສິ່ງເຕືອນໃຈ
19 ໃຫ້ບອກລູກຫລານຮຽນເອົາ ແລະເມື່ອທ່ານຢູ່ໃນເຮືອນຫລືອອກໜີໄປກໍດີ ເມື່ອທ່ານທຳງານຫລືຢຸດພັກກໍດີ ໃຫ້ທ່ອງຈຳຄຳສັ່ງນີ້
20 ພ້ອມທັງໃຫ້ຂຽນມັນໄວ້ຕາມປະຕູບ້ານເຮືອນຂອງທ່ານດ້ວຍ
21 ແລ້ວທ່ານກັບພວກລູກຫລານຈະມີອາຍຸໝັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າໄດ້ຊົງສັນຍາວ່າຈະໃຫ້ບັນພະບຸຣຸດຂອງທ່ານ ແລະພວກທ່ານຈະຢູ່ໃນທີ່ນັ້ນຊົ່ວຟ້າດິນສລາຍ
22 ຈົ່ງທຳຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າໄດ້ບອກພວກທ່ານນີ້ດ້ວຍຄວາມສັດຊື່ ຄືໃຫ້ຮັກພຣະຜູ້ເປັນເຈົ້າຂອງທ່ານ ທຳຕາມທຸກໆສິ່ງທີ່ພຣະອົງຊົງບອກແລະເຊື່ອວາງໃຈໃນພຣະອົງ
23 ແລ້ວພຣະອົງຈະຊົງຂັບໄລ່ຊົນຊາດເຫລົ່ານີ້ທັງໝົດໃຫ້ໜີໄປຈາກທ່ານ ແລະພວກທ່ານກໍຈະເຂົ້າຍຶດຄອງແຜ່ນດິນຂອງຊົນຊາດທີ່ໃຫຍ່ ແລະມີກຳລັງກວ່າທ່ານ
24 ດິນທຸກໆບ່ອນທີ່ທ່ານຢຽບຍ່າງໄປຈະເປັນຂອງທ່ານ ເຂດແດນຂອງພວກທ່ານຈະເລີ້ມຕົ້ນແຕ່ຖິ່ນກັນດານທາງທິດໃຕ້ໄປຈົນເຖິງພູເລບານອນທາງທິດເໜືອ ສ່ວນທາງທິດຕາເວັນອອກກໍຈະເລີ້ມຕົ້ນແຕ່ແມ່ນ້ຳເອີຟຣາດໄປຈົນເຖິງທະເລເມດີເຕຣາເນທາງທິດຕາເວັນຕົກ ຈະບໍ່ມີໃຜກ້າຂັດຂວາງພວກທ່ານໄດ້
25 ບໍ່ວ່າທ່ານຈະຢຽບຍ່າງໄປບ່ອນໃດໃນແຜ່ນດິນນັ້ນ ພຣະຜູ້ເປັນເຈົ້າຈະຊົງທຳໃຫ້ປະຊາຊົນເກງຂາມພວກທ່ານຕາມທີ່ຊົງສັນຍາໄວ້
26 ວັນນີ້ ຂ້າພະເຈົ້າຈະໃຫ້ທ່ານເລືອກເອົາລະຫວ່າງຄຳອວຍພອນກັບຄຳສາບແຊ່ງ
27 ຖ້າພວກທ່ານຫາກເຮັດຕາມຂໍ້ຄຳສັ່ງຂອງພຣະຜູ້ເປັນເຈົ້າຊຶ່ງຂ້າພະເຈົ້າຈະບອກທ່ານໃນມື້ນີ້ ພວກທ່ານກໍຈະໄດ້ຮັບພອນ
28 ຖ້າວ່າບໍ່ເຮັດຕາມຂໍ້ຄຳສັ່ງເຫລົ່ານີ້ ແຕ່ຫັນໜີໄປຂາບໄຫວ້ພຣະອື່ນທີ່ບໍ່ເຄີຍຂາບໄຫວ້ມາກ່ອນ ພວກທ່ານກໍຈະຖືກສາບແຊ່ງ
29 ເມື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກທ່ານຊົງນຳພວກທ່ານເຂົ້າໄປຍຶດຄອງເອົາແຜ່ນດິນນັ້ນ ຈົ່ງໄດ້ປະກາດຄຳອວຍພອນນີ້ຕັ້ງແຕ່ພູເກຣິຊິມ ແລະປະກາດຄຳສາບແຊ່ງແຕ່ພູເອບານ
30 ພູສອງໜ່ວຍນີ້ຢູ່ທາງທິດຕາເວັນຕົກຂອງແມ່ນ້ຳຈໍແດນ ທາງທິດຕາເວັນຕົກໄປຕາມທາງທີ່ດວງອາທິດຕົກໃນແຜ່ນດິນຄືນການາອານຜູ້ອາໄສຢູ່ໃນອາຣາບາທາງໜ້າເມືອງກິນການ ໃກ້ໆກັບກົກໄມ້ສັກສິດທີ່ເມືອງໂມເຣບໍ່ແມ່ນຫລື
31 ພວກທ່ານກຳລັງຈະຂ້າມແມ່ນ້ຳຈໍແດນໄປຍຶດຄອງແຜ່ນດິນທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງປະທານໃຫ້

32 ເມື່ອເຂົ້າຍຶດຄອງແລະອາໄສຢູ່ໃນທີ່ນັ້ນແລ້ວ ພວກທ່ານຈຶ່ງເຮັດຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າຈະບອກທ່ານໃນວັນ
ນີ້

## 12 ໃຫ້ມີສະຖານທີ່ນະມັສການພຽງແຫ່ງດຽວ

Pagan Shrines to Be Destroyed

1 ຕໍ່ໄປນີ້ແມ່ນຄຳສັ່ງຂອງພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງທ່ານທັງຫລາຍ ພວກທ່ານຕ້ອງປະຕິບັດຕາມຂໍ້
ຄຳສັ່ງນີ້ ຕລອດຊີວິດໃນແຜ່ນດິນທີ່ຈະຊົງປະທານໃຫ້
2 ຢູ່ໃນແຜ່ນດິນນີ້ ຈົ່ງທຳລາຍບ່ອນປະຊາຊົນຂາບໄຫວ້ພຣະຂອງເຂົາຖິ້ມຫມົດ ຄືເທິງພູໃຫຍ່ແລະນ້ອຍແລະໃຕ້
ຕົ້ນໄມ້ຂຽວສົດທຸກຕົ້ນ
3 ຈົ່ງມ້າງແທ່ນບູຊາ ທັບເສົາຫີນສັກສິດຂອງພວກເຂົາໃຫ້ແຕກມຸ່ນ ເຜົາຫລັກສັກສິດແລະທຳລາຍຮູບໂຄຣົບຖິ້ມ
ເພື່ອບໍ່ໃຫ້ພວກເຂົາໄດ້ຂາບໄຫວ້ໃນສະຖານທີ່ເຫລົ່ານັ້ນອີກ
4 ແລະຢ່າຂາບໄຫວ້ພຣະຜູ້ເປັນເຈົ້າຂອງພວກທ່ານຕາມແບບຢ່າງປະຊາຊົນເຫລົ່ານີ້ຂາບໄຫວ້ພຣະຂອງເຂົາ
5 ພຣະຜູ້ເປັນເຈົ້າຈະຊົງເລືອກເອົາບ່ອນນຶ່ງໃນເຂດແດນແຫ່ງຕະກູນຂອງພວກທ່ານ ເພື່ອປະຊາຊົນຈະໄດ້ມາ
ຂາບໄຫວ້ພຣະອົງຢູ່ທີ່ນັ້ນ
6 ໃນທີ່ນັ້ນ ພວກທ່ານຕ້ອງເຜົາສັດຖວາຍບູຊາ ແລະຖວາຍເຄື່ອງບູຊາອື່ນໆເຊັ່ນ ນຶ່ງສ່ວນສິບຂອງຊັບສິ່ງຂອງ
ຕ່າງໆຂອງຕົນ ເຄື່ອງທີ່ສັນຍາວ່າຈະຖວາຍແດ່ພຣະຜູ້ເປັນເຈົ້າ ເຄື່ອງຖວາຍຕາມໃຈສມັກ ລູກກົກຂອງງົວ
ແລະແກະທຸກໆຕົວ
7 ໃຫ້ພວກທ່ານກັບຄອບຄົວກິນຢູ່ທີ່ນັ້ນຊ້ອງຫນ້າພຣະພັກພຣະຜູ້ເປັນເຈົ້າ ແລະໃຫ້ມີຄວາມສຸກມ່ວນຊື່ນຕາມພ
ຣະພອນທີ່    ພຣະຜູ້ເປັນເຈົ້າໄດ້ຊົງປະທານໃຫ້ນັ້ນ
8 ເມື່ອເຖິງເວລານັ້ນ ພວກທ່ານບໍ່ຈຳເປັນທີ່ຈະຕ້ອງທຸ້ມເທກຳລັງເຫມືອນທີ່ເຄີຍເຮັດມາ ເພາະດຽວນີ້ພວກທ່ານ
ທຸກຄົນກຳລັງເຮັດຕາມຄວາມພໍໃຈຂອງຕົນ
9 ຍ້ອນວ່າຍັງບໍ່ທັນໄດ້ເຂົ້າໄປເຖິງດິນແດນທີ່ພຣະຜູ້ເປັນເຈົ້າຈະຊົງປະທານໃຫ້ ຢູ່ທີ່ນັ້ນພວກທ່ານຈະມີຊີວິດຢູ່
ດ້ວຍຄວາມ   ສງົບສຸກ
10 ເມື່ອຂ້າມແມ່ນ້ຳຈໍແດນໄປ ພຣະຜູ້ເປັນເຈົ້າຈະໃຫ້ພວກທ່ານອາສັຍຢູ່ທີ່ນັ້ນແລະເປັນເຈົ້າຂອງທີ່ດິນ ພຣະອົງ
ຈະຊົງຄຸ້ມຄອງຮັກສາພວກທ່ານໃຫ້ພົ້ນຈາກສັດຕຣູເພື່ອໃຫ້ມີຊີວິດຢູ່ຢ່າງສງົບສຸກ
11 ແລະຈະຊົງເລືອກເອົາບ່ອນນຶ່ງໃຫ້ເປັນທີ່ຂາບໄຫວ້ພຣະອົງ ແລ້ວໃຫ້ພວກທ່ານນຳເອົາທຸກສິ່ງທີ່ຂ້າພະເຈົ້າໄດ້
ສັ່ງໄວ້ໄປຖວາຍພຣະອົງຢູ່ທີ່ນັ້ນ ຄືສັດສຳລັບເຜົາບູຊາແລະເຄື່ອງບູຊາອື່ນໆເຊັ່ນ ນຶ່ງສ່ວນສິບຂອງສິ່ງຂອງ
ຕ່າງໆຂອງຕົນ ແລະຂອງທີ່ທ່ານສັນຍາວ່າຈະຖວາຍແດ່ພຣະຜູ້ເປັນເຈົ້າ
12 ແລ້ວພວກທ່ານພ້ອມທັງລູກ ຄົນໃຊ້ແລະຄົນເລວີທີ່ອາສັຍຢູ່ໃນເມືອງ ຈົ່ງມ່ວນຊື່ນຍິນດີຊ້ອງພຣະພັກພຣະຜູ້
ເປັນເຈົ້າ ໃຫ້ຈຳໄວ້ວ່າຄົນເລວີນັ້ນຈະບໍ່ມີແຜ່ນດິນຢູ່ເປັນຂອງຕົນເອງ

A Prescribed Place of Worship

13 ພວກທ່ານຢ່າຖວາຍເຄື່ອງບູຊາໃນບ່ອນທີ່ຕົນມັກ
14 ໃຫ້ຖວາຍຢູ່ບ່ອນທີ່ພຣະຜູ້ເປັນເຈົ້າຈະຊົງເລືອກໃນເຂດແດນຕະກູນນຶ່ງຂອງພວກທ່ານເທົ່ານັ້ນ ມີແຕ່ບ່ອນດັ່ງ
ກ່າວນີ້ເທົ່ານັ້ນ ທີ່ທ່ານຕ້ອງຖວາຍເຄື່ອງເຜົາບູຊາໄດ້ ແລະຈົ່ງທຳສິ່ງອື່ນໆທັງຫມົດຕາມທີ່ຂ້າພະເຈົ້າໄດ້ສັ່ງໄວ້
15 ອີກຢ່າງນຶ່ງພວກທ່ານຈະຕ້ອງກິນສັດຂອງຕົນເອງບ່ອນໃດກໍໄດ້ ຈະກິນຫນ້ອຍຫລາຍປານໃດກໍໄດ້ຕາມທີ່ພ
ຣະຜູ້ເປັນເຈົ້າໄດ້ຊົງປະທານໃຫ້ ກິນໄດ້ທັງຜູ້ທີ່ສະອາດແລະຜູ້ທີ່ມີມົນທິນ ຢ່າງດຽວກັນກັບກິນຊີ້ນກວາງ ແລະ
ມັ່ງ

16 ແຕ່ຈະຕ້ອງບໍ່ກິນເລືອດຂອງມັນ ໃຫ້ເທລົງດິນເຫມືອນເທນໍ້າເສັຽ
17 ຢ່າກິນຂອງທີ່ໄດ້ມາຈາກນຶ່ງສ່ວນສິບໃນບ້ານເຮືອນຂອງຕົນ ຄືເຂົ້າ ເຫລົ້າອະງຸ່ນ ຫລືນໍ້າມັນຫມາກກອກເທດ ສິ່ງໃດທີ່ຖວາຍພຣະຜູ້ເປັນເຈົ້າຢູ່ທີ່ນັ້ນບໍ່ຕ້ອງກິນ ລູກກົກຂອງງົວແລະແກະພ້ອມທັງສິ່ງຂອງທີ່ໄດ້ສັນຍາໄວ້ ຂອງຖວາຍຕາມໃຈ

ສມັກ ຫລືຂອງຖວາຍອື່ນໆຢ່າງໃດຢ່າງນຶ່ງ
18 ໃຫ້ພວກທ່ານພ້ອມທັງບຸດກັບຄົນໃຊ້ ແລະຄົນເລວີທີ່ອາສັຍຢູ່ໃນບ້ານເມືອງ ກິນຂອງຖວາຍເຫລົ່ານີ້ຢູ່ບ່ອນ ຂາບໄຫວ້ຕໍ່ ພຣະພັກພຣະຜູ້ເປັນເຈົ້າ ຈຶ່ງກິນແລະມ່ວນຊື່ນເທີນ ຍ້ອນວ່າພຣະຜູ້ເປັນເຈົ້າຊົງປະທານຂອງດີ ໃຫ້ພວກທ່ານແລ້ວ
19 ແລະຕາບໃດທີ່ພວກທ່ານຍັງອາສັຍຢູ່ໃນທີ່ດິນຂອງຕົນນີ້ ຢ່າໄດ້ປະຖິ້ມຄົນເລວີເລີຍ
20 ເມື່ອພຣະຜູ້ເປັນເຈົ້າຊົງຂຍາຍເຂດແດນຂອງທ່ານຕາມທີ່ຊົງສັນຍາໄວ້ແລ້ວ ພວກທ່ານຈະກິນຊີ້ນໄດ້ທຸກເວລາ ຕາມໃຈປາຖນາ
21 ຖ້າບ່ອນຂາບໄຫວ້ຫາກຢູ່ໄກເກີນໄປ ຈຶ່ງທຳຕາມທີ່ຂ້າພະເຈົ້າໄດ້ສັ່ງໄວ້ ຄືໃຫ້ຂ້າງົວ ຫລືແກະທີ່ພຣະຜູ້ເປັນເຈົ້າ ປະທານໃຫ້ນັ້ນ ກິນຢູ່ບ້ານເຮືອນຂອງຕົນຕາມໃຈປາຖນາ
22 ທັງຜູ້ສະອາດ ແລະຜູ້ມີມົນທິນກິນໄດ້ຄືກັນ ຢ່າງດຽວກັນກັບຮັບປະທານຊີ້ນກວາງ ຫລືມັ່ງ
23 ແຕ່ເມື່ອທ່ານຮັບປະທານຊີ້ນຂອງມັນ ຢ່າໄດ້ຮັບປະທານເລືອດນຳ ເພາະວ່າຊີວິດນັ້ນຢູ່ໃນເລືອດ ສະນັ້ນຢ່າ ໄດ້ຮັບປະທານຊີວິດພ້ອມກັບຊີ້ນຂອງມັນ
24 ຢ່າໄດ້ຮັບປະທານເລືອດໃຫ້ເທມັນລົງດິນເຫມືອນເທນໍ້າຖິ້ມ
25 ຖ້າພວກທ່ານບໍ່ຮັບປະທານເລືອດ ພຣະຜູ້ເປັນເຈົ້າຈະຊົງພໍພຣະທັຍ ແລະຄວາມຈະເຣີນຮຸ່ງເຮືອງຈະເກີດມີແກ່ ພວກທ່ານ ແລະເຊື້ອສາຍທັງຫລາຍ
26 ແຕ່ວ່າຈຶ່ງເອົາເຄື່ອງບູຊາ ແລະຂອງທີ່ສັນຍາວ່າຈະຖວາຍພຣະຜູ້ເປັນເຈົ້າໄປຍັງບ່ອນຂາບໄຫວ້
27 ແລ້ວຖວາຍເຄື່ອງເຜົາບູຊາທັງຊີ້ນແລະເລືອດເທິງແທ່ນບູຊາຂອງພຣະຜູ້ເປັນເຈົ້າ ແລະໃຫ້ເທເລືອດສັດເຜົາບູ ຊາລົງເທິງແທ່ນ ແຕ່ຊີ້ນນັ້ນໃຫ້ພວກທ່ານຮັບປະທານເສັຽ
28 ຂໍ້ຄຳສັ່ງທັງຫມົດທີ່ຂ້າພະເຈົ້າບອກພວກທ່ານນີ້ ຈຶ່ງໄດ້ທຳຕາມດ້ວຍຄວາມເອົາໃຈໃສ່ ເພາະວ່າເມື່ອທຳສິ່ງຖືກ ຕ້ອງ ແລະຊອບພຣະທັຍພຣະຜູ້ເປັນເຈົ້າແລ້ວ ພວກທ່ານກັບເຊື້ອສາຍຂອງທ່ານກໍຈະຈຳເຣີນຮຸ່ງເຮືອງສືບໄປ ເປັນນິດ

**ຕັກເຕືອນບໍ່ໃຫ້ຂາບໄຫວ້ຮູບເຄົາຣົບ**

Warning against Idolatry

29 ເມື່ອພວກທ່ານບຸກລຸກເຂົ້າໄປຍຶດຄອງແຜ່ນດິນຂອງຊົນຊາດທັງຫລາຍ ພຣະຜູ້ເປັນເຈົ້າຈະຊົງທຳລາຍຊົນ ຊາດເຫລົ່ານັ້ນແລ້ວຈະຊົງໃຫ້ພວກທ່ານເປັນເຈົ້າຂອງອາສັຍຢູ່ທີ່ນັ້ນ
30 ຫລັງຈາກພຣະຜູ້ເປັນເຈົ້າຊົງທຳລາຍຊົນຊາດເຫລົ່ານີ້ແລ້ວ ພວກທ່ານຈຶ່ງລະວັງຢ່າໄດ້ເຮັດຕາມຫລັກຄຳສອນ ແຫ່ງສາສນາຂອງເຂົາ ເພາະວ່າການເຮັດຢ່າງນັ້ນເປັນພັຍອັນຕະລາຍຮ້າຍແຮງ ຢ່າສົນໃຈວ່າພວກເຂົາຂາບ ໄຫວ້ພຣະຂອງເຂົາຢ່າງໃດ ໂດຍຢ້ານວ່າພວກທ່ານຈະເອົາຢ່າງເຂົາ
31 ສະນັ້ນ ຢ່າຂາບໄຫວ້ພຣະຜູ້ເປັນເຈົ້າເຫມືອນພວກເຂົາຂາບໄຫວ້ພຣະອື່ນ ເພາະວ່າໃນເວລາຂາບໄຫວ້ພຣະ ເຫລົ່ານັ້ນ ພວກເຂົາໄດ້ທຳສິ່ງຂີ້ດຽດທີ່ພຣະຜູ້ເປັນເຈົ້າຊົງກຽດຊັງ ຄືພວກເຂົາເຜົາລູກຊາຍຍິງຂອງຕົນເທິງ ແທ່ນບູຊາ
32 ທຸກໆສິ່ງທີ່ຂ້າພະເຈົ້າບັນຊາທ່ານໄວ້ ຈຶ່ງລະວັງທີ່ຈະກະທຳຕາມ ທ່ານຢ່າເພີ້ມເຕີມຫລືຕັດຖ້ອຍຄຳໃດໆອອກ ໄປຈາກທີ່ຂ້າພະເຈົ້າໄດ້ບັນຊາໄວ້

13

Chapter 13

1 ຖ້າໃນຫມູ່ພວກທ່ານເກີດມີຜູ້ປະກາດພຣະທັມ ຫລືຜູ້ຝັນເຫັນເຫດການຂຶ້ນ ແລະສຳແດງຫມາຍສຳຄັນ ຫ
ລືການອັສຈັນແກ່ທ່ານ

2 ແລະຫມາຍສຳຄັນ ຫລືການອັສຈັນຊຶ່ງເຂົາບອກທ່ານນັ້ນສຳເຣັດຈິງ ຖ້າເຂົາກ່າວວ່າ “ໃຫ້ເຮົາຕິດຕາມພຣະອື່ນ
ກັນເຖີດ (ຊຶ່ງເປັນພຣະທີ່ທ່ານບໍ່ຮູ້ຈັກ) ແລະໃຫ້ເຮົາມານົບວລະບັດພຣະນັ້ນ

3 ທ່ານຢ່າເຊື່ອຟັງຄຳຂອງຜູ້ປະກາດພຣະທັມຫລືຜູ້ຝັນເຫັນເຫດການຄົນນັ້ນ ເພາະພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງທ່ານ ຊົງໃຊ້ເຂົາມາທົດລອງໃຈທ່ານເບິ່ງ ເພື່ອຢາກຊົງຊາບວ່າທ່ານທັງຫລາຍຈະຮັກ ແລະນັບຖືພຣະ
ອົງສຸດຈິດສຸດໃຈຂອງທ່ານຫລືບໍ່

4 ທ່ານທັງຫລາຍຈົ່ງຕິດຕາມພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະຢຳເກງພຣະອົງ ເຊື່ອຟັງພຣະສຸຣະສຽງ
ຂອງພຣະອົງ ແລະເຮັດຕາມຂໍ້ຄຳສັ່ງຂອງພຣະອົງ ໃຫ້ຂາບໄຫວ້ແລະສັດຊື່ຕໍ່ພຣະອົງ

5 ແຕ່ຜູ້ປະກາດພຣະທັມ ຫລືຜູ້ຝັນເຫັນເຫດການ ຄົນນັ້ນຈະມີໂທດເຖິງຕາຍ ເພາະເຂົາໄດ້ສັ່ງສອນໃຫ້ກະບົດຕໍ່
ສູ້ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຜູ້ຊົງໂຜດເອົາທ່ານອອກຈາກເອຢິບ ແລະຊົງໄຖ່ທ່ານອອກຈາກແດນ
ທາດ ເຂົາກະທຳໃຫ້ທ່ານຖິ້ມຫົນທາງຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານບັນຊາໃຫ້ດຳເນີນຕາມເສັຽ ດັ່ງນັ້ນ
ທ່ານຈະຕ້ອງກຳຈັດຄວາມຊົ່ວໃຫ້  ຫມົດຈາກຖ້າມກາງທ່ານ

6 ຖ້າວ່າອ້າຍນ້ອງບຸດຊາຍຍິງ ພັຣຍາຮັກຫລືເພື່ອນສນິດຂອງທ່ານຊັກຊວນຢ່າງລັບໆໃຫ້ທ່ານຂາບໄຫວ້ພຣະ
ອື່ນ ຄືພຣະທີ່ທ່ານເອງ ແລະພວກບັນພະບຸຣຸດບໍ່ເຄີຍຂາບໄຫວ້ມາກ່ອນ

7 ແລະບາງຄົນອາດຊັກຊວນທ່ານຂາບໄຫວ້ພຣະຂອງຊົນຊາດທີ່ຢູ່ອ້ອມຮອບຫລືຢູ່ຫ່າງໄກ

8 ແຕ່ທ່ານຢ່າຍອມຕາມຫລືເຊື່ອຟັງເລີຍ ຢ່າເມດຕາປານີ ແລະໃຫ້ຄວາມຄຸ້ມຄອງເຂົາ

9 ແຕ່ໃຫ້ຂ້າເຂົາເສັຽ ໂດຍໃຫ້ທ່ານລົງມືແກວ່ງຫີນໃສ່ຈົນຕາຍ

10 ເພາະວ່າເຂົາພຍາຍາມເອົາທ່ານຫນີຈາກພຣະຜູ້ເປັນເຈົ້າ ຜູ້ຊົງຊ່ອຍທ່ານອອກຈາກເອຢິບບ່ອນຕົກເປັນທາດ

11 ເມື່ອຊາວອິສຣາເອນທັງປວງໄດ້ຍິນເຣື່ອງນີ້ ພວກເຂົາກໍຈະຢ້ານ ແລະຈະບໍ່ທຳຊົ່ວຢ່າງນີ້ອີກ”

12 “ຖ້າທ່ານທັງຫລາຍໄດ້ຍິນວ່າເມືອງນຶ່ງເມືອງໃດ ຊຶ່ງພຣະຜູ້ເປັນເຈົ້າຂອງທ່ານປະທານໃຫ້ທ່ານອາສັຍຢູ່ນັ້ນ

13 ມີຄົນຖ່ອຍບາງຄົນໄດ້ອອກໄປຈາກທ່ານຊັກຊວນປະຊາຊົນເມືອງນັ້ນວ່າ, “ໃຫ້ເຮົາໄປນົບວລະບັດພຣະອື່ນກັນ
ເຖີດ” ຊຶ່ງເປັນພຣະທີ່ທ່ານບໍ່ຮູ້ຈັກ

14 ທ່ານທັງຫລາຍຈົ່ງສອບຖາມ ແລະອິດສາຄົ້ນຄວ້າ ແລະຖາມເບິ່ງ ຖ້າເປັນຄວາມຈິງແລະແນ່ນອນວ່າ ສິ່ງທີ່
ຫນ້າກຽດຊັງນັ້ນມີບາງຄົນຈະກະທຳກັນຢູ່ໃນຫມູ່ພວກທ່ານ

15 ທ່ານຈົ່ງຂ້າຊາວເມືອງນັ້ນເສັຽດ້ວຍຄົມດາບ ທຳລາຍເສັຽໃຫ້ຫມົດສິ້ນດ້ວຍຄົມດາບຂອງທ່ານທັງຄົນທີ່ອາສັຍ
ໃນເມືອງນັ້ນ ແລະຝູງສັດດ້ວຍ

16 ທ່ານຈົ່ງເກັບເອົາເຂົ້າຂອງໃນເມືອງນັ້ນໄປກອງໄວ້ທີ່ສີ່ແຍກກາງເມືອງ ແລະເຜົາເມືອງນັ້ນກັບບັນດາເຄື່ອງຂອງ
ໃນເມືອງນັ້ນເສັຽດ້ວຍໄຟ ເປັນເຄື່ອງເຜົາບູຊາຖວາຍແດ່ພຣະຜູ້ເປັນເຈົ້າຂອງທ່ານ ໃຫ້ເມືອງນັ້ນຮ້າງຢູ່ເປັນນິດ
ຢ່າສ້າງຂຶ້ນ

ມາໃຫມ່ອີກເລີຍ

17 ຢ່າໃຫ້ຂອງຕ້ອງຫ້າມນັ້ນມາຕິດພັນມືຂອງທ່ານ ເພື່ອວ່າພຣະຜູ້ເປັນເຈົ້າຈະຊົງຫັນຫນີຈາກພຣະພິໂຣດຂອງພ
ຣະອົງ ແລະຊົງສຳແດງພຣະກະຣຸນາຄຸນຕໍ່ທ່ານ ແລະຊົງມີຄວາມຮັກເມດຕາທ່ານ ໃຫ້ທ່ານທະວີຫລາຍຂຶ້ນ ດັ່ງ
ທີ່ພຣະອົງໄດ້ສັນຍາໄວ້ກັບບັນພະບຸຣຸດຂອງທ່ານນັ້ນ

18 ຖ້າທ່ານທັງຫລາຍເຊື່ອຟັງພຣະສຸຣະສຽງຂອງ ພຣະຜູ້ເປັນເຈົ້າຂອງທ່ານ ຄືຮັກສາຂໍ້ຄຳສັ່ງທັງຫມົດຂອງພຣະ
ອົງ ດັ່ງທີ່ຂ້າພະເຈົ້າບອກທ່ານໄວ້ໃນວັນນີ້ ແລະຈົ່ງກະທຳສິ່ງທີ່ຖືກຕ້ອງຕາມສາຍ ພຣະເນດພຣະຜູ້ເປັນເຈົ້າ
ຂອງທ່ານ

## 14 ຂໍ້ຫ້າມເມື່ອມີການໄວ້ທຸກ

Pagan Practices Forbidden

1 ທ່ານທັງຫລາຍເປັນບຸດຂອງພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າຂອງພວກທ່ານ ພວກທ່ານຢ່າປາດເນື້ອເຖືອ
ຫນັງຕົນເອງ ຫລືແຖຫົວເພື່ອຄົນຕາຍ
2 ເພາະທ່ານທັງຫລາຍເປັນຊົນຊາດບໍຣິສຸດຂອງ ອົງພຣະຜູ້ເປັນເຈົ້າຂອງທ່ານ ແລະພຣະຜູ້ເປັນເຈົ້າຊົງເລືອກ
ພວກທ່ານຈາກປະຊາຊາດທັງຫລາຍທີ່ຢູ່ເທິງແຜ່ນດິນໂລກໃຫ້ເປັນຊົນຊາດໃນກຳມະສິດຂອງພຣະອົງ

**ສັດທີ່ສະອາດແລະມີມົນທິນ**

Clean and Unclean Foods

(ລລວ 11:1-47)

3 “ທ່ານທັງຫລາຍຢ່າຮັບປະທານສິ່ງໃດທີ່ຫນ້າລັງກຽດ
4 ສັດທີ່ຮັບປະທານໄດ້ມີດັ່ງຕໍ່ໄປນີ້ ຄືງົວ ແກະ ແບ້
5 ກວາງ ເຍືອງ ຟານ ແລະແກະປ່າ
6 ທ່ານຮັບປະທານສັດທຸກຊະນິດທີ່ແຍກກີບແລະກີບຜ່າອອກເປັນສອງ ແລະຄ້ຽວເອື້ອງນັ້ນໄດ້
7 ແຕ່ໃນຈຳພວກສັດທັງຫລາຍທີ່ຄ້ຽວເອື້ອງ ຫລືມີກີບຜ່າ ທ່ານຢ່າຮັບປະທານສັດຕໍ່ໄປນີ້ ຄືອູດ ກະຕ່າຍ ເຫມັ້ນ
ເພາະວ່າສັດເຫລົ່ານີ້ຄ້ຽວເອື້ອງແຕ່ກີບບໍ່ຜ່າ ຈຶ່ງເປັນສັດມົນທິນແກ່ທ່ານ
8 ແລະຫມູດ້ວຍ ເພາະວ່າຫມູມີກີບຜ່າແຕ່ບໍ່ຄ້ຽວເອື້ອງ ຈຶ່ງເປັນສັດມົນທິນແກ່ທ່ານ ທ່ານຢ່າຮັບປະທານເນື້ອ
ຂອງມັນ ແລະຊາກຂອງມັນທ່ານກໍຢ່າແຕະຕ້ອງ
9 “ໃນບັນດາສັດນ້ຳທັງສິ້ນ ທ່ານຮັບປະທານສັດເຫລົ່ານີ້ໄດ້ ຄື ສັດໃດໆທີ່ມີຄີ ແລະເກັດ ທ່ານຮັບປະທານໄດ້
10 ແຕ່ສັດໃດໆທີ່ບໍ່ມີຄີ ແລະເກັດທ່ານຢ່າຮັບປະທານ ເປັນສັດມົນທິນແກ່ທ່ານ
11 “ນົກສະອາດທຸກຊະນິດທ່ານຮັບປະທານໄດ້
12 ແຕ່ນົກເຫລົ່ານີ້ທ່ານຢ່າຮັບປະທານຄື ນົກອິນຊີ ແຮ້ງ ນົກເຄົ້າ
13 ແຫລວດຳ ແຫລວຫາງຍາວ ແຫລວດຳຕາມຊນິດຕ່າງໆຂອງມັນ
14 ນົກແກຕາມຊະນິດຂອງມັນ
15 ນົກກະຈອກເທດ ນົກເຄົ້າ ນົກນາງນວນ ນົກເຂົາຕາມຊະນິດຂອງມັນ
16 ນົກເຄົ້າແມວນ້ອຍ ນົກທຶດທື ນົກອີໂກ້ງ
17 ນົກກະທຸງ ແຮ້ງ ແລະນົກເປັດ
18 ນົກກະສາດຳ ນົກກະສາຕາມຊະນິດຂອງມັນ ນົກຫອນຍາວ ແລະເຈຍ
19 “ແມງມີປີກທຸກຊະນິດເປັນສັດມົນທິນແກ່ທ່ານ ຢ່າຮັບປະທານ ຢ່າຮັບປະທານເລີຍ
20 ສັດມີປີກທີ່ສະອາດທຸກຊະນິດ ທ່ານຮັບປະທານໄດ້
21 “ທ່ານຢ່າຮັບປະທານສັດຊະນິດໃດທີ່ຕາຍເອງ ທ່ານຈະໃຫ້ແກ່ຄົນຕ່າງດ້າວທີ່ຢູ່ພາຍໃນເມືອງຂອງທ່ານຮັບປະ
ທານກໍໄດ້ ຫລືທ່ານຈະຂາຍໃຫ້ແກ່ຄົນຕ່າງປະເທດກໍໄດ້ ເພາະວ່າທ່ານເປັນຊົນຊາດທີ່ບໍຣິສຸດແດ່ພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງທ່ານທັງຫລາຍ “ທ່ານຢ່າຕົ້ມລູກແບ້ດ້ວຍນ້ຳນົມແມ່ຂອງມັນເລີຍ

**ກົດຫມາຍເຣື່ອງການຖວາຍນຶ່ງສ່ວນສິບ**

Regulations concerning Tithes

22 “ຜົນລະປູກທີ່ໄດ້ເປັນປີໆຈາກພືດພັນໃນນາຂອງທ່ານນັ້ນ ອອກມາເປັນສິບສ່ວນ ແລະຫັກເອົານຶ່ງສ່ວນໄວ້ສຳລັບພຣະຜູ້ເປັນເຈົ້າ

23 ທ່ານຈິ່ງຮັບປະທານພືດຜົນລະປູກທີ່ໄດ້ມາຈາກເຂົ້າ ເຫລົ້າອະງຸ່ນຂອງທ່ານ ຫລືນ້ຳມັນຂອງທ່ານ ແລະຜົນທຳອິດຈາກຝູງງົວ ແລະຝູງແບ້ ແກະຂອງທ່ານ ທີ່ໄດ້ຖືກນຳມາຖວາຍນຶ່ງສ່ວນສິບຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໃນ

ສະຖານທີ່ຊຶ່ງພຣະອົງຊົງເລືອກໄວ້ ເພື່ອໃຫ້ພຣະນາມຂອງພຣະອົງສະຖິດຢູ່ທີ່ນັ້ນ ເພື່ອທ່ານທັງຫລາຍຈະໄດ້ຮຽນຮູ້ທີ່ຈະຢຳເກງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍສເມີ

24 ຖ້າລະຍະທາງໄກຫລາຍ ທ່ານບໍ່ສາມາດນຳເຄື່ອງຖວາຍນຶ່ງສ່ວນສິບມາໄດ້ ໃນເມື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານອວຍພອນແກ່ທ່ານ ເພາະວ່າສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກ ເພື່ອເປັນທີ່ຕັ້ງພຣະນາມ

ຂອງພຣະອົງນັ້ນ ຢູ່ຫ່າງໄກຈາກທ່ານເກີນໄປ

25 ທ່ານຈິ່ງຂາຍຂອງນັ້ນເອົາເງິນ ແລະຫໍ່ເງິນຖືໄວ້ ແລະໄປຍັງສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ຊົງເລືອກໄວ້

26 ແລະເອົາເງິນນັ້ນຊື້ສິ່ງໃດໆທີ່ທ່ານປາຖນາ ຈະເປັນງົວ ແກະ ຫລືເຫລົ້າອະງຸ່ນ ຫລືສຸຣາ ແລະສິ່ງໃດໆທີ່ທ່ານຢາກຮັບປະທານ ແລະທ່ານຈິ່ງຮັບປະທານທີ່ນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະຈິ່ງຊົມຊື່ນຍິນດີທັງຕົວທ່ານແລະຄອບຄົວຂອງທ່ານດ້ວຍ

27 ທ່ານທັງຫລາຍຢ່າປະຖິ້ມຄົນເລວີຊຶ່ງຢູ່ໃນເມືອງຂອງທ່ານ ເພາະເຂົາບໍ່ມີສ່ວນແບ່ງ ຫລືມໍຣະດົກກັບທ່ານ

28 “ພໍຄົບສາມປີທຸກເທື່ອ ທ່ານທັງຫລາຍຈິ່ງນຳເຄື່ອງຖວາຍນຶ່ງສ່ວນສິບຈາກພືດຜົນລະປູກທີ່ໄດ້ໃນປີນັ້ນ ມາສະສົມໄວ້ໃນເມືອງຂອງທ່ານ

29 ຄົນເລວີ ເພາະເຂົາບໍ່ມີສ່ວນແບ່ງ ຫລືມໍຣະດົກເຫມືອນທ່ານ ແລະຄົນຕ່າງດ້າວແລະລູກກໍາພ້າ ແລະແມ່ຫມ້າຍ ຜູ້ຊຶ່ງຢູ່ພາຍໃນເມືອງຂອງທ່ານ ຈະໄດ້ມາຮັບປະທານຕາມຄວາມຕ້ອງການຂອງເຂົາ ເພື່ອວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອວຍພຣະພອນແກ່ບັນດາກິຈການຊຶ່ງມືຂອງທ່ານທັງຫລາຍໄດ້ກະທຳ

## 15 ປີທີ່ໃຫ້ປົດປ່ອຍ

Laws concerning the Sabbatical Year

(ອພຍ 21:1-11; ລລວ 25:1-7)

1 “ທຸກໆເຈັດປີທ່ານທັງຫລາຍຕ້ອງມີການປົດປ່ອຍ

2 ໃຫ້ກະທຳການປົດປ່ອຍດັ່ງນີ້ ເຈົ້າຫນີ້ທຸກຄົນຈະຕ້ອງຍົກສິ່ງທີ່ຕົນໃຫ້ເພື່ອນບ້ານຢືມໄປນັ້ນເສັຽ ຢ່າທວງສິ່ງນັ້ນຄືນຈາກເພື່ອນບ້ານຫລືພີ່ນ້ອງຂອງຕົນເລີຍ ເພາະວ່າໄດ້ປະກາດການປົດປ່ອຍຂອງພຣະຜູ້ເປັນເຈົ້າແລ້ວ

3 ທ່ານທັງຫລາຍຈະທວງຈາກຄົນຕ່າງປະເທດຄືນໄດ້ ແຕ່ຖ້າມີສິ່ງໃດຂອງທ່ານຊຶ່ງຢູ່ກັບພີ່ນ້ອງກໍໃຫ້ຫລຸດໄປ

4 ແຕ່ຈະບໍ່ມີຄົນຍາກຈົນໃນຫມູ່ພວກທ່ານທັງຫລາຍ (ເພາະວ່າພຣະເຈົ້າຈະຊົງອວຍພຣະພອນແກ່ທ່ານໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານໃຫ້ທ່ານເປັນມໍຣະດົກຍຶດຄອງນັ້ນ)

5 ຖ້າທ່ານພຽງແຕ່ກະທຳຕາມພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະຍຶດກະທຳຕາມພຣະບັນຍັດຊຶ່ງຂ້າພະເຈົ້າໄດ້ສັ່ງທ່ານໄວ້ໃນວັນນີ້

6 ເພາະພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອວຍພຣະພອນທ່ານດັ່ງທີ່ພຣະອົງສັນຍາຕໍ່ທ່ານນັ້ນ ທ່ານທັງຫລາຍຈະໃຫ້ປະຊາຊາດຫລາຍຊາດຢືມສິ່ງຂອງຂອງທ່ານ ແຕ່ທ່ານຢ່າຢືມຂອງເຂົາເລີຍ ທ່ານທັງຫລາຍຈະປົກຄອງຢູ່ເຫນືອຫລາຍປະຊາຊາດ ແຕ່ເຂົາທັງຫລາຍຈະບໍ່ປົກຄອງເຫນືອທ່ານ

7 “ຖ້າໃນຖ້າມກາງທ່ານທັງຫລາຍມີຄົນທຸກຍາກຈັກຄົນນຶ່ງເປັນພີ່ນ້ອງຂອງທ່ານຢູ່ໃນເມືອງໃດໆໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ ທ່ານຢ່າມີໃຈແຂງຫົດມືຂອງທ່ານໄວ້ເສັຽຕໍ່ຫນ້າພີ່ນ້ອງຂອງທ່ານທີ່ຍາກຈົນນັ້ນ

8 ແຕ່ທ່ານທັງຫລາຍຈົ່ງຍື່ນມືຂອງທ່ານໃຫ້ເຂົາ ແລະໃຫ້ເຂົາຢືມເຄື່ອງຂອງພໍແກ່ຄວາມຕ້ອງການຂອງເຂົາ ບໍ່ວ່າເປັນເຄື່ອງຂອງສິ່ງໃດໆ

9 ຈົ່ງລະວັງໃຫ້ດີ ຢ້ານວ່າຈະມີການຄິດຖ່ອຍໃນຈິດໃຈຂອງທ່ານວ່າ “ປີທີເຈັດ ປີທີ່ຈະຕ້ອງປົດປ່ອຍມາເຖິງແລ້ວ” ແລະທ່ານກໍອິດສາຕໍ່ພີ່ນ້ອງຂອງທ່ານ ທ່ານຈຶ່ງບໍ່ຍອມໃຫ້ສິ່ງໃດເຂົາເລີຍ ແລະເຂົາຈະຮ້ອງທູນພຣະເຈົ້າບາບກໍຈະຕົກແກ່ທ່ານ

10 ທ່ານຈົ່ງໃຫ້ເຂົາດ້ວຍຄວາມເຕັມໃຈ ແລະເມື່ອໃຫ້ເຂົາແລ້ວຢ່າມີຈິດຄິດເສັຽດາຍ ໃນກໍຣະນີນີ້ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອວຍພຣະພອນແກ່ທ່ານ ໃນບັນດາກິຈການທັງສິ້ນຂອງທ່ານບໍ່ວ່າທ່ານຈະກະທຳສິ່ງໃດ

11 ເພາະວ່າຄົນທຸກຍາກຈະບໍ່ຫມົດໄປຈາກແຜ່ນດິນ ເພາະສະນັ້ນຂ້າພະເຈົ້າຈຶ່ງສັ່ງທ່ານວ່າ ທ່ານຕ້ອງຍື່ນມືໃຫ້ຢ່າງໃຈກວ້າງຕໍ່ພີ່ນ້ອງຂອງທ່ານ ຄືຕໍ່ຄົນຂັດສົນຄົນຍາກຈົນ ຊຶ່ງຢູ່ໃນແຜ່ນດິນຂອງທ່ານ

**ການປະຕິບັດຕໍ່ທາດ**

12 “ຖ້າພີ່ນ້ອງຂອງທ່ານຊຶ່ງເປັນຄົນເຮັບເຣີ ບໍ່ວ່າຊາຍຫລືຍິງ ທີ່ເຂົາຂາຍໄວ້ແກ່ທ່ານ ຈົ່ງໃຫ້ບົວລະບັດທ່ານຫົກປີເມື່ອເຖິງປີທີ່ເຈັດກໍໃຫ້ປ່ອຍເຂົາເປັນອິສຣະພົ້ນໄປຈາກທ່ານ

13 ແລະເມື່ອທ່ານປ່ອຍເຂົາເປັນອິສຣະໄປຈາກທ່ານ ທ່ານຢ່າປ່ອຍເຂົາໄປມືເປົ່າ

14 ທ່ານຈົ່ງມີໃຈກວ້າງຂວາງຈັດສິ່ງຂອງໃຫ້ແກ່ເຂົາ ເປັນຂອງຈາກຝູງແບ້ ແກະຂອງທ່ານ ຈາກລານນວດເຂົ້າຂອງທ່ານ ແລະຈາກບໍ່ຢໍ່າອະງຸ່ນຂອງທ່ານ ທ່ານຈົ່ງໃຫ້ແກ່ເຂົາຕາມສົມຄວນແກ່ທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງອວຍພຣະພອນໃຫ້ແກ່ທ່ານ

15 ທ່ານຈົ່ງຈຳໄວ້ວ່າທ່ານເຄີຍເປັນທາດໃນແຜ່ນດິນເອຢິບ ແລະພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ຊົງໄຖ່ທ່ານໄວ້ ເພາະສະນັ້ນຂ້າພະເຈົ້າຈຶ່ງສັ່ງເຣື່ອງນີ້ແກ່ທ່ານ

16 ແຕ່ຖ້າທາດນັ້ນຈະກ່າວແກ່ທ່ານວ່າ, “ຂ້າພະເຈົ້າຈະບໍ່ໄປຈາກທ່ານ” ເພາະເຂົາຮັກທ່ານແລະຄອບຄົວຂອງທ່ານ ເພາະເຂົາຢູ່ກັບທ່ານສະບາຍດີ

17 ຈົ່ງເອົາເຫລັກແຫຼງໃບຫູຂອງເຂົາໃຫ້ທະລຸໄປຕິດກັບປະຕູເຮືອນ ດັ່ງນີ້ເຂົາຈະເປັນທາດເດັດຂາດຂອງທ່ານທ່ານຈົ່ງກະທຳເຊັ່ນນີ້ແກ່ທາດຍິງເຫມືອນກັນ

18 ເມື່ອທ່ານປ່ອຍເຂົາໃຫ້ເປັນອິສຣະນັ້ນ ທ່ານຢ່າຮູ້ສຶກຫນັກໃຈ ເພາະວ່າເຂົາໄດ້ຮັບໃຊ້ທ່ານມາເຈັດປີດ້ວຍຄ່າແຮງເຄິ່ງນຶ່ງຂອງລູກຈ້າງເທົ່ານັ້ນ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອວຍພຣະພອນແກ່ທ່ານໃນການທີ່ທ່ານໄດ້ກະທຳນັ້ນ

**ການຖວາຍສັດຫົວປີ**

The Firstborn of Livestock

19 “ສັດໂຕເຖິກຫົວປີຊຶ່ງເກີດໃນຝູງງົວ ຫລືຝູງແບ້ ແກະນັ້ນ ທ່ານທັງຫລາຍຈົ່ງຖວາຍໄວ້ແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ທ່ານຢ່າໃຊ້ງົວຫົວປີທຳງານ ຫລືຕັດຂົນຈາກແກະຫົວປີ

20 ທ່ານແລະຄອບຄົວຂອງທ່ານຈົ່ງຮັບປະທານສັດທົວປີນັ້ນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທຸກໆປີ ໃນສະ
ຖານທີ່ຊຶ່ງ ພຣະຜູ້ເປັນເຈົ້າຊົງກຳນົດໄວ້ນັ້ນ
21 ແຕ່ຖ້າສັດນັ້ນມີຕຳໜິໃດໆຄືຂາເປ້ຍ ຫລືຕາບອດ ຫລືມີຕຳໜິອື່ນອີກ ທ່ານຢ່າຖວາຍບູຊາແດ່ພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງທ່ານ
22 ທ່ານຈົ່ງຮັບປະທານສັດນັ້ນພາຍໃນເມືອງຂອງທ່ານ ຄົນມົນທິນ ແລະຄົນສະອາດກໍຮັບປະທານໄດ້ ດັ່ງວ່າເປັນ
ຟານ ຫລືກວາງ
23 ພຽງແຕ່ທ່ານຢ່າຮັບປະທານເລືອດຂອງມັນເທົ່ານັ້ນ ທ່ານຈົ່ງເທອອກຖິ້ມເທິງດິນເໝືອນເທນໍ້າ

## 16 ພິທີລ້ຽງຕາມກຳນົດສາມພິທີ

The Passover Reviewed

(ອພຍ 12:1-20; 23:14-19; 34:18-26)

1 ທ່ານຈົ່ງຖືເດືອນອາບີບ (Or new moon) ທ່ານທັງຫລາຍຈົ່ງຖືປັສຄາແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ເພາະວ່າໃນເດືອນອາບີບນັ້ນພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງນຳທ່ານອອກຈາກເອຢິບໃນເວລາກາງຄືນ
2 ແລະທ່ານຈົ່ງຖວາຍປັສຄາ ເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຈາກຝູງແບ້ ແກະ ຫລືຝູງງົວ
ໃນທີ່ຊຶ່ງ ພຣະຜູ້ເປັນເຈົ້າຊົງເລືອກໄວ້ ໃຫ້ພຣະນາມຂອງພຣະອົງປະທັບຢູ່ທີ່ນັ້ນ
3 ຢ່າຮັບປະທານເຂົ້າຈີ່ທີ່ມີເຊື້ອກັບປັສຄາ ຕລອດເຈັດວັນທ່ານຈົ່ງຮັບປະທານເຂົ້າຈີ່ທີ່ບໍ່ມີເຊື້ອເປັນເຂົ້າຈີ່ແຫ່ງ
ຄວາມທຸກໃຈ ເພາະທ່ານຈະຣະນຶກເຖິງວັນທີ່ທ່ານອອກຈາກແຜ່ນດິນເອຢິບນັ້ນຕລອດຊີວິດຂອງທ່ານ
4 ຕລອດເຈັດວັນນັ້ນ ຢ່າໃຫ້ເຫັນເຊື້ອແປ້ງພາຍໃນອານາເຂດປະເທດຂອງທ່ານ ຫລືເນື້ອສັດຊຶ່ງທ່ານໄດ້ບູຊາໃນ
ເວລາຄ່ຳວັນທຳອິດເຫລືອຢູ່ຕລອດຄືນຈົນເຊົ້າວັນຮຸ່ງຂຶ້ນ
5 ທ່ານທັງຫລາຍຢ່າຖວາຍປັສຄາພາຍໃນທົວເມືອງຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ
6 ແຕ່ທ່ານຈົ່ງຖວາຍປັສຄາໃນສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກໄວ້ໃຫ້ພຣະນາມຂອງພ
ຣະອົງປະທັບຢູ່ທີ່ນັ້ນ ທ່ານຈົ່ງຖວາຍປັສຄາໃນເວລາຄ່ຳເມື່ອດວງອາທິດຕົກແລ້ວ ໃນເວລາດຽວກັບທີ່ທ່ານ
ອອກຈາກເອຢິບ
7 ທ່ານຈົ່ງທຳໃຫ້ສຸກແລະຮັບປະທານໃນສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກໄວ້ ພໍຮຸ່ງເຊົ້າ
ທ່ານຈົ່ງກັບໄປສູ່ເຕັນຂອງທ່ານ
8 ທ່ານຈົ່ງຮັບປະທານເຂົ້າຈີ່ບໍ່ມີເຊື້ອຫົກມື້ ແຕ່ວັນທີ່ເຈັດເປັນວັນປະຊຸມຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ທ່ານ ໃນວັນນັ້ນຢ່າກະທຳການງານໃດໆ

**ເທສການຣະດູເກັບກ່ຽວ**

The Festival of Weeks Reviewed

(ອພຍ 34:22; ລລວ 23:15-21; ຈຊບ 28:26-31)

9 "ທ່ານທັງຫລາຍຈົ່ງນັບໃຫ້ຄົບເຈັດສັປດາ ຈົ່ງຕັ້ງຕົ້ນນັບໃຫ້ຄົບເຈັດສັປດາ ເລີ້ມແຕ່ວັນທຳອິດທີ່ທ່ານລົງມືກ່ຽວ
ເຂົ້າ
10 ທ່ານທັງຫລາຍຈົ່ງຖືເທສການສັປດາ ຖວາຍແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຕາມຂນາດຂອງຖວາຍ
ຕາມໃຈສມັກຈາກມືຂອງທ່ານ ຊຶ່ງທ່ານຈະຖວາຍຕາມທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງອວຍພຣະ
ພອນແດ່ທ່ານ
11 ທ່ານຈົ່ງຊົມຊື່ນຍິນດີຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ທັງຕົວທ່ານແລະບຸດຊາຍຍິງຂອງທ່ານ ທັງ
ທາດຊາຍຍິງຂອງທ່ານ ຄົນເລວີຊຶ່ງຢູ່ໃນເມືອງຂອງທ່ານ ທັງຄົນຕ່າງດ້າວ ເດັກກຳພ້າ ແລະແມ່ໝ້າຍຊຶ່ງຢູ່

ຖ້າມກາງທ່ານໃນສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກໄວ້ ໃຫ້ພຣະນາມຂອງພຣະອົງປະ
ທັບຢູ່ທີ່ນັ້ນ
12 ທ່ານຈື່ຈໍາໄວ້ວ່າທ່ານເຄີຍເປັນທາດໃນເອຢິບ ທ່ານຈຶ່ງແນ່ໃຈວ່າທີ່ຈະປະຕິບັດຕາມກົດເກນເຫລົ່ານີ້

**ເທສການປຸກຕູບຢູ່**

The Festival of Booths Reviewed

(ລລວ 23:33-43; ຈຊບ 29:12-40)

13 "ທ່ານຈົ່ງຖືເທສການປຸກຕູບຢູ່ເປັນເວລາເຈັດວັນ ເມື່ອທ່ານເກັບຮອບຮອມພືດຜົນຂອງທ່ານຈາກລານຟາດເຂົ້າ
ແລະຈາກບໍ່ຢໍ່າອະງຸ່ນຂອງທ່ານແລ້ວ
14 ໃນການລ້ຽງນັ້ນທ່ານຢ່າຈົ່ງຊົມຊື່ນຍິນດີ ທັງທ່ານແລະບຸດຊາຍຍິງຂອງທ່ານ ແລະທາດຊາຍຍິງຂອງທ່ານ ທັງ
ຄົນເລວີແລະຄົນຕ່າງດ້າວ ທັງເດັກກໍາພ້າແລະແມ່ຫມ້າຍຊຶ່ງຢູ່ໃນເມືອງຂອງທ່ານ
15 ທ່ານຈົ່ງຖືເທສການນັ້ນແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານເຈັດວັນໃນສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າຊົງ
ເລືອກໄວ້ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອວຍພຣະພອນແດ່ພືດຜົນຂອງທ່ານ ແລະແກ່
ຜົນງານທີ່ມືທ່ານກະທໍາ ເພື່ອວ່າທ່ານຈະມີແຕ່ຄວາມຊົມຊື່ນຍິນດີ
16 "ບັນດາຜູ້ຊາຍທັງສິ້ນຈະຕ້ອງເຂົ້າມາເຝົ້າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປີລະສາມເທື່ອໃນສະຖານທີ່ຊຶ່ງພ
ຣະອົງຊົງເລືອກໄວ້ ຄືໃນເທສການກິນເຂົ້າຈີ່ບໍ່ມີເຊື້ອ ເທສການສັປດາ ແລະເທສການປຸກຕູບຢູ່ ຢ່າໃຫ້ເຂົາໄປ
ເຝົ້າພຣະຜູ້ເປັນເຈົ້າມືເປົ່າໆ
17 ໃຫ້ທຸກຄົນຖວາຍຕາມຄວາມສາມາດຂອງຕົນ ຕາມສ່ວນພຣະພອນທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງ
ຫລາຍປະທານແກ່ທ່ານ

**ລະບຽບການໃຫ້ຄວາມຍຸດຕິທັມ**

Municipal Judges and Officers

18 "ທ່ານທັງຫລາຍຈົ່ງເລືອກຕັ້ງຜູ້ພິພາກສາ ແລະເຈົ້າຫນ້າທີ່ຕາມທົ່ວເມືອງຂອງທ່ານ ຊຶ່ງພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງທ່ານປະທານແກ່ທ່ານ ຕາມເຜົ່າຄົນຂອງທ່ານ ໃຫ້ເຂົາພິພາກສາປະຊາຊົນຕາມຄວາມຍຸດຕິທັມ
19 ທ່ານຢ່າກະທໍາໃຫ້ເສັຽຄວາມຍຸດຕິທັມ ຢ່າລໍາອຽງ ຢ່າຮັບສິນບົນ ເພາະວ່າສິນບົນທໍາໃຫ້ຕາຂອງຄົນມີປັນຍາ
ມືດມົວໄປ ແລະປີ້ນກັບຄະດີຂອງຄົນຊອບທັມເສັຽ
20 ຄວາມຍຸດຕິທັມທ່ານຈົ່ງຕິດຕາມຄວາມຍຸດຕິທັມເທົ່ານັ້ນ ເພື່ອທ່ານຈະມີຊີວິດແລະສືບມໍຣະດົກໃນແຜ່ນດິນ
ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ

Forbidden Forms of Worship

21 "ທ່ານທັງຫລາຍຢ່າປູກຕົ້ນໄມ້ໃດໆໃຊ້ເປັນອາເຊຣາ ຂ້າງແທ່ນບູຊາພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊຶ່ງ
ທ່ານສ້າງໄວ້
22 ແລະທ່ານຢ່າຕັ້ງເສົາສັກສິດເປັນຮູບໂຄຣົບ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງກຽດຊັງ

## 17

Chapter 17

1 "ທ່ານທັງຫລາຍຢ່ານໍາງົວເຖິກ ຫລືແກະທີ່ມີຕໍາຫນິຫລືສ່ວນພິການໃດໆເປັນເຄື່ອງບູຊາແດ່ພຣະຜູ້ເປັນເຈົ້າພ
ຣະເຈົ້າຂອງທ່ານ ເພາະເປັນການທີ່ຫນ້າລັງກຽດແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
2 "ໃນເມືອງຂອງທ່ານທັງຫລາຍຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານນັ້ນ ຖ້າມີຊາຍ ຫລືຍິງ
ຄົນໃດກະທໍາສິ່ງທີ່ຊົ່ວຕໍ່ພຣະພັກພຣະຜູ້ເປັນເຈົ້າຂອງທ່ານ ໂດຍລະເມີດຄໍາຫມັ້ນສັນຍາຂອງພຣະອົງ

3 ແລະໄປບົວລະບັດພຣະອື່ນ ແລະນະມັສການພຣະເຫລົ່ານັ້ນ ຫລືດວງອາທິດ ດວງຈັນ ຫລືອັນໃດທີ່ເປັນບໍຣິ
ວານທ້ອງຟ້າ ຊຶ່ງຂ້າພະເຈົ້າໄດ້ຫ້າມໄວ້
4 ມີຄົນເຂົາບອກທ່ານແລ້ວແລະທ່ານກໍໄດ້ຍິນ ທ່ານທັງຫລາຍຈົ່ງອຸດສາສືບສວນ ແລະຖ້າເປັນຄວາມຈິງແລະ
ປະຈັກວ່າສິ່ງຫນ້າລັງກຽດນັ້ນມີຄົນກະທຳກັນໃນອິສຣາເອນ
5 ທ່ານຈົ່ງນຳຊາຍຫລືຍິງຜູ້ກະທຳສິ່ງທີ່ຊົ່ວຮ້າຍນັ້ນມາທີ່ປະຕູເມືອງ ແລະທ່ານຈົ່ງເອົາຫີນຄວ່າງໃສ່ຊາຍຫລືຍິງ
ນັ້ນເສັຽໃຫ້ຕາຍ
6 ຜູ້ທີ່ຖືກກ່າວໂທດເຖິງຕາຍນັ້ນ ໃຫ້ມີພຍານສອງຫລືສາມປາກຢືນຢັນວ່າຜູ້ນັ້ນມີຄວາມຜິດຈຶ່ງໃຫ້ປັບໂທດເຖິງ
ຕາຍໄດ້ ຢ່າລົງໂທດຜູ້ໃດເຖິງຕາຍດ້ວຍພຍານປາກດຽວ
7 ຜູ້ທີ່ເປັນພຍານຕ້ອງລົງມືກ່ອນໃນການທຳໂທດເຂົາເຖິງຕາຍ ຕໍ່ໄປຄົນທັງປວງຈຶ່ງຮ່ວມມືດ້ວຍກັນ ທັງນີ້ເພື່ອ
ທ່ານທັງຫລາຍຈະກຳຈັດຄວາມຊົ່ວເສັຽຈາກຖ້າມກາງທ່ານ

Legal Decisions by Priests and Judges

8 "ຖ້າຄະດີໃດເກີດຂຶ້ນເປັນເຣື່ອງຍາກທີ່ຈະຕັດສິນໄດ້ວ່າ ເປັນຄະດີຂ້າຄົນຕາຍໂດຍເຈຕນາຫລືບໍ່ ເປັນຄະດີ
ກ່ຽວດ້ວຍເຣື່ອງກັມມະສິດໃນຊັບ ເປັນຄະດີທຳຮ້າຍຮ່າງກາຍ ເປັນຄະດີໃດໆຊຶ່ງໂຕ້ແຍ້ງກັນໃນເມືອງຂອງ
ທ່ານ ທ່ານຈົ່ງລຸກຂຶ້ນພາກັນ
ໄປຍັງສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກໄວ້
9 ຈົ່ງໄປຫາຄົນເລວີຊຶ່ງເປັນປະໂຣຫິດ ແລະໄປຫາຜູ້ພິພາກສາປະຈຳການໃນສມັຍນັ້ນ ທ່ານຈົ່ງປຶກສາຫາລືກັບ
ເຂົາ ແລະເຂົາຈະຊີ້ແຈງໃຫ້ທ່ານຊາບເຖິງຄຳຕັດສິນ
10 ແລ້ວທ່ານຈົ່ງກະທຳຕາມຊຶ່ງເຂົາຊີ້ແຈງແກ່ທ່ານຈາກສະຖານທີ່ຊຶ່ງພຣະຜູ້ເປັນເຈົ້າຊົງເລືອກນັ້ນ ແລະທ່ານຈົ່ງ
ລະວັງກະທຳຕາມທຸກສິ່ງຊຶ່ງເຂົາແນະນຳທ່ານ
11 ທ່ານຈົ່ງກະທຳຕາມຄຳແນະນຳຊຶ່ງເຂົາໃຫ້ແກ່ທ່ານ ແລະກະທຳຕາມຄຳຕັດສິນຊຶ່ງເຂົາໄດ້ສັ່ງທ່ານ ທ່ານທັງ
ຫລາຍຢ່າຫັນຫນີໄປຈາກຄຳຕັດສິນຊຶ່ງເຂົາຊີ້ແຈງແກ່ທ່ານ ຢ່າຫັນໄປທາງຂວາມືຫລືຊ້າຍມື
12 ຜູ້ໃດທີ່ຂັດຂືນບໍ່ໄດ້ກະທຳຕາມ ຄືບໍ່ໄດ້ເຊື່ອຟັງປະໂຣຫິດຜູ້ທີ່ຢືນບົວລະບັດພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
ທີ່ນັ້ນ ຫລືເຊື່ອຟັງຜູ້ພິພາກສາຜູ້ນັ້ນຕ້ອງຕາຍ ທັງນີ້ເພື່ອທ່ານທັງຫລາຍຈະກຳຈັດຄວາມຊົ່ວເສັຽຈາກອິສຣາ
ເອນ
13 ແລະປະຊາຊົນທັງຫລາຍຈະໄດ້ຍິນ ແລະຢຳເກງ ແລະບໍ່ໄດ້ຂັດຂືນຕໍ່ໄປອີກ

**ການແນະນຳກ່ຽວກັບເຣື່ອງກະສັດ**

Limitations of Royal Authority

14 "ເມື່ອທ່ານມາເຖິງແຜ່ນດິນທີ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ ແລະທ່ານຖືກຳມະສິດອາສັຍຢູ່
ໃນແຜ່ນດິນນັ້ນ ແລ້ວທ່ານຈະກ່າວວ່າ "ເຮົາຈະຕັ້ງກະສັດໄວ້ເຫນືອເຮົາເຫມືອນປະຊາຊາດອື່ນຊຶ່ງຢູ່ຮອບເຮົາ"
15 ກໍຈົ່ງຕັ້ງຜູ້ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງເລືອກໄວ້ໃຫ້ເປັນກະສັດເຫນືອທ່ານ ຄືຕັ້ງຜູ້ນຶ່ງຜູ້ໃດໃນ
ພວກພີ່ນ້ອງຂອງທ່ານໃຫ້ເປັນກະສັດເຫນືອທ່ານ ທ່ານຢ່າຕັ້ງຄົນຕ່າງດ້າວຊຶ່ງບໍ່ແມ່ນພີ່ນ້ອງຂອງທ່ານໃຫ້ຢູ່
ເຫນືອທ່ານ
16 ແຕ່ວ່າຢ່າໃຫ້ຜູ້ນັ້ນມີມ້າຂອງຕົນເອງຫລາຍເກີນໄປ ຫລືເປັນເຫດໃຫ້ປະຊາຊົນກັບໄປເອຢິບເພື່ອຈະມີມ້າ
ຫລາຍໆ ເພາະ   ພຣະຜູ້ເປັນເຈົ້າໄດ້ສັ່ງກັບທ່ານທັງຫລາຍແລ້ວວ່າ "ເຈົ້າທັງຫລາຍຈະບໍ່ໄດ້ກັບໄປທາງນັ້ນ
ອີກເລີຍ"
17 ແລະຢ່າໃຫ້ຜູ້ນັ້ນມີເມັຽຫລາຍ ຢ້ານວ່າຈິດໃຈຂອງເຂົາຈະຫັນຫນີໄປເສັຽ ຫລືຢ່າໃຫ້ມີເງິນມີທອງເປັນຂອງຕົນ
ຢ່າງຫລວງຫລາຍ

18 “ເມື່ອຜູ້ນັ້ນນັ່ງບັນລັງໃນຣາຊອານາຈັກ ກໍໃຫ້ຜູ້ນັ້ນຄັດລອກກົດຫມາຍນີ້ໄວ້ໃນຫນັງສືເພື່ອປໂຍດແກ່ຕົນເອງ
ຈາກຫນັງສືເພື່ອປໂຍດແກ່ຕົນຈາກຫນັງສືທີ່ປະໂຣຫິດຄົນເລວີຮັກສາຢູ່ນັ້ນ
19 ໃຫ້ກົດຫມາຍນັ້ນຢູ່ກັບຜູ້ນັ້ນ ແລະໃຫ້ເຂົາອ່ານຢູ່ສເມີຕລອດຊີວິດຂອງຕົນ ເພື່ອເຂົາຈະໄດ້ຮຽນຮູ້ທີ່ຈະຢຳເກງ
ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ ໂດຍຮັກສາຖ້ອຍຄຳໃນກົດຫມາຍນີ້ ແລະກົດລະບຽບເຫລົ່ານີ້ແລະປະພຶດ
ຕາມ
20 ເພື່ອວ່າຈິດໃຈຂອງເຂົາຈະບໍ່ໄດ້ພອງຂຶ້ນສູງກວ່າພີ່ນ້ອງຂອງຕົນ ແລະເພື່ອເຂົາເອງຈະບໍ່ໄດ້ຫັນຫນີຈາກພຣະ
ບັນຍັດໄປທາງຂວາມື ຫລືທາງຊ້າຍມື ເພື່ອເຂົາຈະໄດ້ປົກຄອງຣາຊອານາຈັກຂອງເຂົາຢູ່ໄດ້ນານ ທັງຕົນເອງ
ແລະລູກຫລານຂອງຕົນໃນອິສຣາເອນ

## 18 ສ່ວນແບ່ງຂອງປະໂຣຫິດ ແລະຄົນເລວີ

Privileges of Priests and Levites

1 “ຄົນເລວີຊຶ່ງເປັນປະໂຣຫິດ ແລະເຜົ່າເລວີທັງຫມົດ ຈະບໍ່ມີສ່ວນແບ່ງ ຫລືມໍຣະດົກຮ່ວມກັບຄົນອິສຣາເອນ
ເຂົາຈະຮັບປະທານຜົນທີ່ຖວາຍດ້ວຍໄຟແດ່ພຣະຜູ້ເປັນເຈົ້າ ແລະສ່ວນທີ່ຕົກເປັນຂອງພຣະອົງ
2 ເຂົາຈະບໍ່ມີມໍຣະດົກໃນຫມູ່ພວກພີ່ນ້ອງຂອງເຂົາ ພຣະຜູ້ເປັນເຈົ້າຊົງເປັນມໍຣະດົກຂອງເຂົາ ຕາມທີ່ພຣະອົງຊົງ
ສັນຍາໄວ້ແກ່ເຂົາແລ້ວນັ້ນ
3 ໃຫ້ສ່ວນຕໍ່ໄປນີ້ເປັນສ່ວນທີ່ປະໂຣຫິດໄດ້ອັນຕົກຈາກປະຊາຊົນ ຄືສ່ວນທີ່ໄດ້ຈາກຜູ້ທີ່ຖວາຍສັດບູຊາ ບໍ່ວ່າຈະ
ເປັນງົວເຖິກ ຫລືແກະ ກໍໃຫ້ເຂົາມອບຊີ້ນສັນຂາຫນ້າ ຊີ້ນແກ້ມທັງສອງຂ້າງ ແລະຊີ້ນທ້ອງໃຫ້ແກ່ປະໂຣຫິດ
4 ຜົນອັນທຳອິດຂອງທ່ານຄື ຜົນເຂົ້າ ຜົນເຫລົ້າອະງຸ່ນ ຜົນນ້ຳມັນ ແລະຂົນແກະອັນທຳອິດທີ່ໄດ້ຈາກແກະຂອງ
ທ່ານ ຈົ່ງມອບໃຫ້ແກ່ປະໂຣຫິດ
5 ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໄດ້ເລືອກເຂົາຈາກເຜົ່າຊົນທັງສິ້ນຂອງທ່ານ ໃຫ້ຢືນບົວລະບັດໃນ
ພຣະນາມ  ພຣະຜູ້ເປັນເຈົ້າ ທັງຕົວເຂົາ ແລະບຸດຫລານຂອງເຂົາສືບຕໍ່ກັນໄປເປັນນິດ
6 “ຖ້າຄົນເລວີຄົນໃດມາຈາກເມືອງໃດໃນອິສຣາເອນອັນເປັນທີ່ຢູ່ຂອງເຂົາ ຈະມາຍັງສະຖານທີ່ຊຶ່ງພຣະຜູ້ເປັນ
ເຈົ້າຊົງ  ເລືອກໄວ້ກໍໃຫ້ເຂົາມາໄດ້ຕາມໃຈປາຖນາ
7 ແລ້ວເຂົາຈະບົວລະບັດໃນພຣະນາມພຣະຜູ້ເປັນເຈົ້າຂອງເຂົາ ເຊັ່ນດຽວກັບຄົນເລວີພີ່ນ້ອງຂອງເຂົາ ຜູ້ຢືນບົວ
ລະບັດຕໍ່ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ
8 ໃຫ້ເຂົາໄດ້ສ່ວນທີ່ຈະຮັບປະທານເທົ່າໆກັນນອກເຫນືອຈາກສ່ວນທີ່ເຂົາໄດ້ມາດ້ວຍການຂາຍຊັບສິນຂອງເຂົາ
ເອງ

### ຕັກເຕືອນບໍ່ໃຫ້ປະຕິບັດຕາມຄົນຕ່າງສາສນາ

Child-Sacrifice, Divination, and Magic Prohibited

9 “ເມື່ອທ່ານທັງຫລາຍເຂົ້າໄປໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ ທ່ານຢ່າຮຽນ
ຮູ້ທີ່ຈະກະທຳສິ່ງທີ່ຫນ້າລັງກຽດຕາມປະຊາຊາດເຫລົ່ານັ້ນ
10 ຢ່າໃຫ້ມີຄົນນຶ່ງຄົນໃດໃນຫມູ່ພວກທ່ານຊຶ່ງໃຫ້ບຸດຊາຍຫລືບຸດຍິງຂອງເຂົາລຸຍໄຟ ຢ່າໃຫ້ຜູ້ໃດເປັນຄົນທຳນ
ວາຍ ເປັນຫມໍດູ ເປັນຫມໍຈັບຍາມເບິ່ງເຫດການ ຫລືເປັນນັກວິຊາອາຄົມ
11 ເປັນຫມໍຜີ ເປັນຫມໍຜີທີ່ປຸກວິນຍານຂຶ້ນມາປຶກສາ ເປັນພໍ່ມົດ ແມ່ມົດ ຫລືເປັນຫມໍພາຍ
12 ຜູ້ໃດທີ່ກະທຳຢ່າງນີ້ຍ່ອມເປັນທີ່ລັງກຽດແດ່ພຣະຜູ້ເປັນເຈົ້າ ເພາະກະທຳສິ່ງທີ່ຫນ້າລັງກຽດເຫລົ່ານີ້ ພຣະຜູ້
ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍຈຶ່ງຊົງຂັບໄລ່ເຂົາເສັຽຈາກທ່ານ
13 ທ່ານທັງຫລາຍຈົ່ງເປັນຄົນປາສຈາກຕຳຫນິຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ

14 ເພາະວ່າປະຊາຊາດເຫລົ່ານີ້ ຊຶ່ງທ່ານກຳລັງຈະໄປຂັບໄລ່ນັ້ນເຊື່ອຟັງຫມໍດູ ແລະຄຳທຳນວາຍ ແຕ່ສ່ວນຕົວ
ທ່ານນັ້ນພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານບໍ່ຊົງຍອມໃຫ້ທ່ານກະທຳເຊັ່ນນັ້ນ

**ພຣະເຈົ້າຊົງສັນຍາຈະໃຫ້ມີຜູ້ປະກາດພຣະທັມ**

A New Prophet Like Moses

15 ໂມເຊໄດ້ເວົ້າຕໍ່ໄປວ່າ ພຣະຜູ້ເປັນເຈົ້າຈະຊົງເລືອກເອົາຄົນຈາກຊົນຊາດຂອງທ່ານເອງເປັນຜູ້ປະກາດພຣະທັມ
ເຫມືອນຂ້າພະເຈົ້າ ສະນັ້ນຈົ່ງເຊື່ອຟັງພວກທ່ານເທີນໃນວັນຊຸມນຸມກັນຢູ່ເທິງພູຊີນາອີນັ້ນ ພວກທ່ານຂໍຮ້ອງບໍ່
ໃຫ້ໄດ້ຍິນສຽງຂອງພຣະຜູ້ເປັນເຈົ້າ ຫລືເຫັນໄຟອັນຫນ້າຢ້ານຂອງພຣະອົງຕໍ່ໄປອີກ ເພາະວ່າຖ້າເປັນດັ່ງນັ້ນ
ພວກທ່ານຈະຕ້ອງຕາຍ

16 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງບອກຂ້າພະເຈົ້າວ່າ ທີ່ພວກເຂົາຂໍຮ້ອງນັ້ນດີຫລາຍແລ້ວ

17 ເຮົາຈະເລືອກເອົາຄົນນຶ່ງໃນຊົນຊາດຂອງເຂົາເອງເປັນຜູ້ປະກາດພຣະທັມຂອງເຂົາເຫມືອນທ່ານນີ້ ເຮົາຈະ
ບອກເຣື່ອງໃຫ້ເຂົາເວົ້າ ແລ້ວເຂົາຈະບອກປະຊາຊົນທຸກສິ່ງຕາມທີ່ເຮົາສັ່ງ

18 ຜູ້ໃດບໍ່ເຊື່ອຟັງຜູ້ປະກາດພຣະທັມທີ່ເວົ້າໃນນາມຂອງເຮົາ ເຮົາຈະລົງໂທດຜູ້ນັ້ນ

19 ຖ້າຜູ້ປະກາດພຣະທັມຄົນໃດບັງອາດເວົ້າຖ້ອຍຄຳ ທີ່ເຮົາບໍ່ໄດ້ສັ່ງ ຫລືຜູ້ທີ່ເວົ້າໃນນາມຂອງພຣະອື່ນ ຄົນຜູ້ນັ້ນ
ຕ້ອງມີໂທດເຖິງຕາຍ

20 ຖ້າພວກເຈົ້າຄິດໃນໃຈວ່າ ເຮັດແນວໃດຈຶ່ງຈະຮູ້ຄຳທີ່ພຣະຜູ້ເປັນເຈົ້າບໍ່ໄດ້ກ່າວນັ້ນໄດ້

21 ກໍຂໍໃຫ້ເຂົ້າໃຈວ່າເມື່ອຜູ້ປະກາດພຣະທັມຄົນໃດເວົ້າໃນນາມຂອງພຣະຜູ້ເປັນເຈົ້າ ແຕ່ຄວາມນັ້ນບໍ່ເປັນຈິງ
ຖ້ອຍຄຳນັ້ນກໍບໍ່ແມ່ນຂອງພຣະຜູ້ເປັນເຈົ້າ ເປັນຖ້ອຍຄຳທີ່ເຂົາເວົ້າເອົາເອງ ສະນັ້ນພວກເຈົ້າຢ່າຢ້ານເຂົາເລີຍ"

## 19 ເມືອງລີ້ພັຍແລະຂອບເຂດບູຮານ

Laws concerning the Cities of Refuge

(ຈຊບ 35:9-28; ຢຊຍ 20:1-9)

1 "ເມື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍຊົງທຳລາຍບັນດາປະຊາຊາດຜູ້ຊຶ່ງພຣະຜູ້ເປັນເຈົ້າຂອງ
ທ່ານປະທານແຜ່ນດິນຂອງເຂົາແກ່ທ່ານ ແລະທ່ານທັງຫລາຍຂັບໄລ່ເຂົາອອກໄປ ແລະເຂົ້າໄປຢູ່ໃນຫົວເມືອງ
ແລະໃນບ້ານເຮືອນຂອງເຂົາເຫລົ່ານັ້ນ

2 ທ່ານຈົ່ງແຍກເມືອງໄວ້ສາມເມືອງສຳລັບພວກທ່ານທັງຫລາຍໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ທ່ານປະທານແກ່ທ່ານເປັນກຳມະສິດນັ້ນ

3 ທ່ານຈົ່ງຈັດຕຽມໃຫ້ມີທາງ ແລະຈົ່ງແບ່ງແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານປະທານແກ່ທ່ານເປັນ
ກຳມະສິດນັ້ນອອກເປັນສາມສ່ວນ ເພື່ອວ່າຜູ້ໃດທີ່ໄດ້ຂ້າຄົນແລ້ວຈະຫລົບຫນີໄປຢູ່ໃນເມືອງເຫລົ່ານັ້ນໄດ້

4 "ຕໍ່ໄປນີ້ເປັນເຣື່ອງຂອງຄົນຂ້າຄົນຜູ້ທີ່ຫນີໄປຢູ່ໃນເມືອງເຫລົ່ານັ້ນໄດ້ ແລະລອດຊີວິດຢູ່ ຄືຜູ້ໃດທີ່ໄດ້ຂ້າເພື່ອນ
ບ້ານຂອງຕົນໂດຍບໍ່ໄດ້ເຈຕນາ ໂດຍບໍ່ໄດ້ເປັນສັດຕຣູກັນມາກ່ອນ

5 ຕົວຢ່າງເຊັ່ນ ຊາຍຄົນນຶ່ງເຂົ້າໄປໃນປ່າພ້ອມກັບເພື່ອນບ້ານຂອງເຂົາເພື່ອຈະຕັດໄມ້ ເມື່ອເຂົາແກວ່ງຂວານ
ເພື່ອຈະໂຄ່ນຕົ້ນໄມ້ລົງ ຫົວຂວານຫລຸດຈາກດ້າມຖືກເພື່ອນບ້ານຂອງເຂົາ ແລະຄົນນັ້ນກໍເຖິງແກ່ຄວາມຕາຍ
ກໍໃຫ້ເຂົາຫນີໄປຍັງເມືອງເຫລົ່ານີ້ເມືອງໃດເມືອງນຶ່ງ ແລະລອດຕາຍໄດ້

6 ດ້ວຍຢ້ານວ່າຜູ້ອາຄາດກຳລັງຄຽດຮ້າຍຈະໄລ່ຕາມຊາຍຜູ້ຂ້າຄົນໆນັ້ນທັນ ເພາະຫົນທາງໄກແລ້ວຂ້າເຂົາເສັຽ
ແມ້ວ່າຊາຍຜູ້ນັ້ນບໍ່ມີໂທດເຖິງຕາຍ ເພາະເຂົາບໍ່ໄດ້ເປັນສັດຕຣູກັບເພື່ອນບ້ານຂອງເຂົາມາກ່ອນ

7 ເຫດສັນນັ້ນຂ້າພະເຈົ້າຈຶ່ງສັ່ງທ່ານວ່າ ໃຫ້ທ່ານຈັດແຍກຫົວເມືອງໄວ້ສາມຫົວເມືອງ

8 ແລະຖ້າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຂຍາຍອານາເຂດຂອງທ່ານ ດັ່ງທີ່ພຣະອົງໄດ້ຊົງປະຕິຍານໄວ້ກັບບັນພະບຸຣຸດຂອງທ່ານ ແລະປະທານແຜ່ນດິນທັງສິ້ນຊຶ່ງພຣະອົງຊົງສັນຍາຈະປະທານແກ່ບັນພະບຸຣຸດຂອງທ່ານໃຫ້ແກ່ທ່ານ

9 ໂດຍມີຂໍ້ແມ້ວ່າ ທ່ານໄດ້ລະວັງທີ່ຈະຮັກສາບັນຍັດທັງຫມົດນີ້ຊຶ່ງຂ້າພະເຈົ້າໄດ້ສັ່ງທ່ານໃນວັນນີ້ ໂດຍທີ່ທ່ານທັງຫລາຍຮັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະດຳເນີນຢູ່ໃນທາງຂອງພຣະອົງສເມີ ແລ້ວທ່ານຈຶ່ງເພີ້ມຫົວເມືອງອີກສາມຫົວເມືອງນອກຈາກສາມຫົວເມືອງເຫລົ່ານັ້ນ

10 ດ້ວຍຢ້ານວ່າຜູ້ທີ່ບໍ່ມີຜິດຈະຕາຍໃນແຜ່ນດິນຂອງທ່ານ ຊຶ່ງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານປະທານແກ່ທ່ານເປັນມໍຣະດົກ ແລະທ່ານທັງຫລາຍຈຶ່ງຕ້ອງຮັບຜິດຊອບຄວາມຜິດໃນເຣື່ອງທີ່ເຂົາຕາຍນັ້ນ

11 "ແຕ່ຖ້າວ່າຜູ້ໃດກຽດຊັງເພື່ອນບ້ານຂອງຕົນ ແລະຊຸ້ມຄອຍດັກເຂົາຢູ່ ແລະໄດ້ລອບຕີເຂົາເຖິງແກ່ຄວາມຕາຍແລ້ວຊາຍຜູ້ນັ້ນກໍຫນີເຂົ້າໄປໃນຫົວເມືອງເຫລົ່ານັ້ນເມືອງໃດເມືອງນຶ່ງ

12 ແລ້ວພວກຜູ້ໃຫຍ່ໃນເມືອງຂອງຊາຍຜູ້ນັ້ນຈະສົ່ງຄົນໃຫ້ໄປຮັບຕົວຊາຍຜູ້ນັ້ນມາຈາກທີ່ນັ້ນ ແລະສົ່ງຕົວເຂົາໃຫ້ແກ່ຜູ້ອາຄາດ ເພື່ອເຂົາຈະຕ້ອງຖືກໂທດເຖິງຕາຍ

13 ທ່ານຢ່າເມດຕາສົງສານເຂົາເລີຍ ແຕ່ທ່ານຈົ່ງກຳຈັດຄວາມຜິດອັນເນື່ອງຈາກຄວາມຕາຍຂອງຜູ້ທີ່ບໍ່ໄດ້ກະທຳຜິດນັ້ນ ໃຫ້ສິ້ນໄປຈາກອິສຣາເອນເພື່ອທ່ານທັງຫລາຍຈະໄດ້ໄປດີມາດີ

Property Boundaries

14 "ໃນເຣື່ອງມໍຣະດົກຊຶ່ງທ່ານຈະຮັບໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານເປັນກຳມະສິດນັ້ນ ທ່ານຢ່າຍົກຍ້າຍເສົາເຂດຂອງເພື່ອນບ້ານຂອງທ່ານ ຊຶ່ງຄົນບູຮານໄດ້ປັກໄວ້

**ພຣະບັນຍັດກ່ຽວກັບພຍານ**

Law concerning Withnesses

15 ພຍານປາກດຽວຈະຢືນຢັນກ່າວໂທດຜູ້ທຳຜິດແນວນຶ່ງແນວໃດບໍ່ໄດ້ ຢ່າງນ້ອຍທີ່ສຸດຕ້ອງມີສອງປາກຂຶ້ນໄປຈຶ່ງຈະພິສູດໄດ້ວ່າຄົນນັ້ນທຳຜິດ

16 ຖ້າຄົນນຶ່ງກ່າວຮ້າຍປ້າຍສີອີກຄົນນຶ່ງວ່າທຳຜິດ

17 ກໍໃຫ້ທັງສອງຝ່າຍເຂົ້າເຝົ້າພຣະຜູ້ເປັນເຈົ້າຕໍ່ຫນ້າປະໂຣຫິດແລະຜູ້ພິພາກສາຊຶ່ງຢູ່ທີ່ນັ້ນ

18 ແລ້ວຜູ້ພິພາກສາຈະສືບສວນຫາຄວາມຈິງຢ່າງລະອຽດແລະເລິກເຊິ່ງ ຖ້າພົບວ່າມີຜູ້ຫາເຣື່ອງໃສ່ຮ້າຍປ້າຍສີເພື່ອນບ້ານຂອງຕົນ

19 ຜູ້ນັ້ນຈະໄດ້ຮັບໂທດແລະຖືກໃສ່ຮ້າຍປ້າຍສີເຫມືອນກັນ ພວກທ່ານຈະກຳຈັດຄວາມຊົ່ວຮ້າຍໃຫ້ຫມົດໄປໄດ້ດ້ວຍວິທີນີ້ແຫລະ

20 ເມື່ອຄົນອື່ນໄດ້ຍິນເຣື່ອງນີ້ ພວກເຂົາກໍຈະຢ້ານແລະຈະບໍ່ມີໃຜທຳສິ່ງຊົ່ວຮ້າຍຢ່າງນັ້ນອີກ

21 ພວກທ່ານຢ່າເມດຕາສົງສານ ຈົ່ງລົງໂທດດ້ວຍວິທີເອົາຊີວິດແທນຊີວິດ ຕາແທນຕາ ແຂ້ວແທນແຂ້ວ ມືແທນມືແລະຕີນແທນຕີນ

## 20 ກົດຫມາຍກ່ຽວກັບການສົງຄາມ

Rules of Warfare

1 "ເມື່ອທ່ານທັງຫລາຍຈະຍົກໄປທຳສົງຄາມກັບພວກສັດຕຣູຂອງທ່ານ ເຫັນມ້າ ຣົດຮົບ ແລະກອງທັບຫລວງຫລາຍກວ່າຂອງທ່ານ ທ່ານຢ່າຢ້ານກົວເຂົາເລີຍ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງສະຖິດຢູ່ກັບທ່ານຜູ້ຊົງນຳທ່ານຂຶ້ນມາຈາກແຜ່ນດິນເອຢິບ

2 ແລະເມື່ອໃກ້ຈະຮົບກັນ ປະໂຣຫິດຈະອອກມາຢູ່ຂ້າງຫນ້າແລະກ່າວແກ່ປະຊາຊົນ

3 ແລະຈະກ່າວວ່າ, “ໂອ ອິສຣາເອນ ຈົ່ງຟັງເຖີດ ວັນນີ້ທ່ານມາໃກ້ຈະສູ້ຮົບກັບສັດຕຣູຂອງທ່ານ ຢ່າໃຫ້ໃຈຂອງ
ທ່ານທັງຫລາຍວິຕົກ ຢ່າຢ້ານຫລືຕົກໃຈ ຫລືເກງຂາມຕໍ່ສັດຕຣູເລີຍ
4 ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານສະເດັດໄປກັບທ່ານ ຊົງຕໍ່ສູ້ສັດຕຣູຂອງທ່ານເພື່ອທ່ານ ຈະປະ
ທານຊັຍຊະນະແກ່ທ່ານ
5 ແລ້ວນາຍທະຫານຈະເວົ້າກັບປະຊາຊົນວ່າ “ແມ່ນໃຜທີ່ສ້າງບ້ານໃຫມ່ ແລະຍັງບໍ່ໄດ້ທຳພິທີຖວາຍບ້ານນັ້ນ
ໃຫ້ຜູ້ນັ້ນກັບໄປບ້ານຂອງຕົນ ຢ້ານວ່າເຂົາຈະຕາຍເສັຽໃນສົງຄາມ ແລະຄົນອື່ນຈະຖວາຍບ້ານນັ້ນ
6 ແມ່ນໃຜທີ່ປູກສວນອະງຸ່ນ ແລະຍັງບໍ່ໄດ້ຮັບປະທານຜົນຈາກສວນອະງຸ່ນນັ້ນ ໃຫ້ຜູ້ນັ້ນກັບໄປບ້ານ ຢ້ານວ່າເຂົາ
ຈະຕາຍເສັຽໃນສົງຄາມ ແລະຄົນອື່ນຈະຮັບປະທານຜົນອະງຸ່ນນັ້ນ
7 ຜູ້ໃດທີ່ຫມັ້ນຍິງໄວ້ເປັນເມັຽແລ້ວ ແຕ່ຍັງບໍ່ໄດ້ແຕ່ງງານກັນ ໃຫ້ຜູ້ນັ້ນກັບໄປບ້ານຂອງຕົນ ຢ້ານວ່າເຂົາຈະຕາຍ
ເສັຽໃນສົງຄາມ ແລະຊາຍອື່ນຈະໄດ້ນາງໄປເສັຽ”
8 ແລະນາຍທະຫານຈະເວົ້າກັບປະຊາຊົນຕໍ່ໄປອີກວ່າ “ຜູ້ໃດທີ່ຢູ່ທີ່ນີ້ມີຈິດໃຈຢ້ານກົວແລະວິຕົກ ໃຫ້ຜູ້ນັ້ນກັບໄປ
ບ້ານຂອງຕົນເສັຽ ຢ້ານວ່າຈິດໃຈເພື່ອນຂອງເຂົາຈະສລາຍໄປເຫມືອນກັບຈິດໃຈຂອງເຂົາ”
9 ເມື່ອນາຍທະຫານເວົ້າກັບປະຊາຊົນຈົບລົງແລ້ວ ກໍໃຫ້ເລືອກຕັ້ງຜູ້ບັງຄັບບັນຊາກອງຕ່າງໆໃຫ້ເປັນຫົວຫນ້າປະ
ຊາຊົນ
10 “ເມື່ອພວກທ່ານເຂົ້າໄປໃກ້ເມືອງຊຶ່ງທ່ານທັງຫລາຍຈະໄປສູ້ຮົບນັ້ນ ຈົ່ງສເນີຫລັກສັນຕິພາບແກ່ເມືອງນັ້ນກ່ອນ
11 ຖ້າເຂົາຕອບທ່ານຢ່າງສັນຕິແລະເປີດປະຕູເມືອງໃຫ້ແກ່ທ່ານ ກໍໃຫ້ປະຊາຊົນທັງປວງທີ່ພົບຢູ່ໃນເມືອງນັ້ນທຳ
ງານໂຍທາໃຫ້ແກ່ທ່ານແລະບົວລະບັດທ່ານ
12 ຖ້າເມືອງນັ້ນບໍ່ໄປຮ່ວມສັນຕິກັບທ່ານ ແຕ່ກັບອອກມາຮົບ ກໍໃຫ້ທ່ານເຂົ້າລ້ອມຕີເມືອງນັ້ນໄດ້
13 ເມື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ປະທານເມືອງນັ້ນໄວ້ໃນມືທ່ານແລ້ວ ທ່ານຈົ່ງຂ້າຊາຍທຸກຄົນເສັຽດ້ວຍ
ຄົມດາບ
14 ແຕ່ຜູ້ຍິງແລະເດັກ ສັດແລະທຸກສິ່ງໃນເມືອງນັ້ນ ຄືຂອງທີ່ຍຶດໄວ້ທັງຫມົດທ່ານຈົ່ງຍຶດເອົາເປັນຂອງຕົນ ທ່ານຈົ່ງ
ພໍໃຈໃນຂອງທີ່ຍຶດມາຈາກສັດຕຣູຂອງທ່ານ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ
15 ທ່ານທັງຫລາຍຈົ່ງກະທຳເຊັ່ນນີ້ແກ່ທຸກຫົວເມືອງທີ່ຢູ່ໄກຈາກທ່ານ ຊຶ່ງບໍ່ແມ່ນຫົວເມືອງຂອງປະຊາຊາດໃກ້ໆນີ້
16 ແຕ່ໃນຫົວເມືອງຂອງຊົນຊາດທັງຫລາຍນີ້ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານເປັນມໍຣະດົກ
ທ່ານຢ່າໄວ້ຊີວິດສິ່ງໃດໆທີ່ຫາຍໃຈໄດ້ເລີຍ
17 ແຕ່ຈົ່ງທຳລາຍເຂົາເສັຽໃຫ້ຫມົດສິ້ນ ຄືຄົນຮິດຕີ ຄົນອາໂມຣິດ ຄົນການາອານ ຄົນເປຣິສຊີ ຄົນຮີວີ ແລະຄົນເຢ
ບຸສ ດັ່ງທີ່ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງບັນຊາໄວ້
18 ເພື່ອວ່າເຂົາຈະບໍ່ໄດ້ສອນທ່ານໃຫ້ກະທຳສິ່ງທີ່ຫນ້າລັງກຽດຊຶ່ງເຂົາໄດ້ກະທຳເປັນການບົວລະບັດຕໍ່ພຣະຂອງ
ເຂົາ ເພາະການກະທຳເຊັ່ນນັ້ນເປັນການກະທຳບາບຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
19 “ເມື່ອທ່ານລ້ອມຫົວເມືອງນຶ່ງຢູ່ຊ້ານານ ເພື່ອຈະສູ້ຮົບເອົາຫົວເມືອງນັ້ນ ຢ່າໃຊ້ຂວານຟັນທຳລາຍຕົ້ນໄມ້ຂອງ
ເມືອງນັ້ນເສັຽ ເພາະທ່ານທັງຫລາຍຈະຮັບປະທານຫມາກຈາກຕົ້ນໄມ້ນັ້ນ ຢ່າໂຄ່ນລົງເລີຍ ຕົ້ນໄມ້ໃນທົ່ງນາ
ເປັນມະນຸດຫລືທ່ານຈຶ່ງຕ້ອງລ້ອມເພື່ອຈະຮົບກັບມັນ
20 ສະເພາະຕົ້ນໄມ້ທີ່ທ່ານຊາບວ່າບໍ່ແມ່ນເປັນອາຫານ ທ່ານຈະທຳລາຍແລະໂຄ່ນລົງກໍໄດ້ ເພື່ອຈະໃຊ້ສ້າງເຄື່ອງ
ລ້ອມເມືອງຊຶ່ງສູ້ຮົບກັບທ່ານ ຈົນກວ່າເມືອງນັ້ນຈະແຕກ

## 21 ການຈັດການເຣື່ອງຄາຕກັມທີ່ບໍ່ຮູ້ຕົວຜູ້ກະທຳຜິດ

Law concerning Murder by persons Unknown

1 “ໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານໃຫ້ທ່ານເປັນກຳມະສິດນັ້ນ ຖ້າພົບສົບຄົນທີ່ຖືກຂ້າຖິ້ມຢູ່ກາງແຈ້ງ ບໍ່ຮູ້ວ່າຜູ້ໃດຂ້າເຂົາຕາຍ

2 ກໍໃຫ້ພວກຜູ້ໃຫຍ່ ແລະຜູ້ພິພາກສາຂອງທ່ານອອກມາວັດເບິ່ງວ່າ ເມືອງທີ່ຢູ່ກັບສົບຜູ້ຕາຍນັ້ນເມືອງໃດຢູ່ໃກ້ທີ່ສຸດ

3 ໃຫ້ພວກຜູ້ໃຫຍ່ຂອງເມືອງທີ່ຢູ່ໃກ້ທີ່ສຸດນັ້ນນຳງົວແມ່ໂຕນຶ່ງຊຶ່ງຍັງບໍ່ເຄີຍໃຊ້ງານ ແລະຍັງບໍ່ເຄີຍທຽມແອກ

4 ແລະໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນນຳງົວແມ່ໂຕນັ້ນໄປທີ່ຮ່ອມພູຊຶ່ງມີນ້ຳໄຫລ ຊຶ່ງບໍ່ມີໃຜໄຖ ຫລືຫວ່ານເລີຍ ແລະໃຫ້ຫັກຄໍງົວແມ່ທີ່ຫຸບເຂົານັ້ນ

5 ແລະປະໂຣຫິດຜູ້ເປັນບຸດຫລານຂອງເລວີຈະຕ້ອງອອກມາ ດ້ວຍພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາໄດ້ຊົງເລືອກເຂົາໄວ້ໃຫ້ບົວລະບັດພຣະອົງ ແລະໃຫ້ອວຍພອນໃນພຣະນາມຂອງພຣະຜູ້ເປັນເຈົ້າ ໃຫ້ການວິວາດ ແລະການທຳຮ້າຍທຸກເຣື່ອງສິ້ນສຸດລົງດ້ວຍຄຳຂອງປະໂຣຫິດເຫລົ່ານີ້

6 ແລະພວກຜູ້ໃຫຍ່ຂອງເມືອງທີ່ຢູ່ໃກ້ຜູ້ຖືກຂ້າທີ່ສຸດນັ້ນຈະລ້າງມືຂອງເຂົາທັງຫລາຍເຫນືອງົວແມ່ຊຶ່ງຖືກຫັກຄໍທີ່ໃນຮ່ອມພູນັ້ນ

7 ແລະເຂົາຈະເປັນພຍານວ່າ “ມືຂອງເຮົາທັງຫລາຍບໍ່ໄດ້ກະທຳໃຫ້ເລືອດຂອງຊາຍຜູ້ນີ້ອອກ ແລະຕາຂອງເຮົາທັງຫລາຍກໍບໍ່ໄດ້ເຫັນເລືອດຂອງເຂົາອອກ

8 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດຍົກໂທດໃຫ້ຊົນຊາດອິສຣາເອນຄືປະຊາຊົນຂອງພຣະອົງ ຜູ້ຊຶ່ງພຣະອົງໄດ້ຊົງໄຖ່ໄວ້ ຂໍຢ່າຊົງຖືກໂທດຊົນຊາດອິສຣາເອນເນື່ອງດ້ວຍຄວາມຕາຍຂອງຜູ້ບໍ່ມີຄວາມຜິດ ແຕ່ຂໍຊົງອະພັຍໂທດອັນເນື່ອງຈາກຄວາມຕາຍນີ້ໃຫ້ແກ່ເຂົາ

9 ດັ່ງນີ້ແຫລະ ທ່ານຈະກຳຈັດຄວາມຜິດ ອັນເນື່ອງຈາກຄວາມຕາຍຂອງຜູ້ທີ່ບໍ່ມີຜິດນັ້ນເສັຽຈາກຖ້າມກາງທ່ານ ເມື່ອທ່ານກະທຳສິ່ງທີ່ຊອບໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ

**ການປະຕິບັດຕໍ່ຍິງຊະເລີຍເສິກ**

Female Captives

10 “ເມື່ອທ່ານອອກໄປສູ້ຮົບກັບສັດຕຣູຂອງທ່ານ ແລະພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງມອບເຂົາໄວ້ໃນມືຂອງທ່ານແລ້ວ ແລະທ່ານຈັບເຂົາມາເປັນຊະເລີຍ

11 ແລະທ່ານເຫັນຍິງງາມຄົນນຶ່ງໃນຫມູ່ຊະເລີຍນັ້ນ ແລະປາຖນາຢາກໄດ້ມາເປັນເມັຽຂອງທ່ານ

12 ທ່ານຈຶ່ງພາຍິງມາໄວ້ທີ່ເຮືອນຂອງທ່ານ ໃຫ້ນາງແຖຫົວ ແລະຕັດເລັບມືເສັຽ

13 ແລະໃຫ້ນາງປ່ຽນເຄື່ອງແຕ່ງກາຍຢ່າງຊະເລີຍອອກ ແລະໃຫ້ຢູ່ໃນເຮືອນຂອງທ່ານ ໃຫ້ໄວ້ທຸກເຖິງບິດາມານດາຂອງນາງນຶ່ງເດືອນເຕັມ ຫລັງຈາກນັ້ນທ່ານຈຶ່ງຈະເຂົ້າໄປຫານາງ ແລະເປັນຜົວຂອງນາງໄດ້ ແລະໃຫ້ນາງເປັນພັຣຍາຂອງທ່ານ

14 ພາຍຫລັງຖ້າທ່ານບໍ່ພໍໃຈນາງນັ້ນເສັຽແລ້ວ ຈົ່ງປ່ອຍນາງໄປຕາມແຕ່ນາງຈະພໍໃຈໄປທີ່ໃດ ຢ່າຂາຍນາງເອົາເງິນ ຢ່າກະທຳກັບນາງຢ່າງທາດ ເພາະທ່ານໄດ້ກະທຳໃຫ້ນາງໄດ້ອາຍແລ້ວ

**ກົດຫມາຍເຣື່ອງບຸດຫົວປີ**

The Right of the Firstborn

15 “ຖ້າຊາຍຄົນນຶ່ງມີພັຣຍາສອງຄົນ ຮັກຄົນນຶ່ງ ບໍ່ມັກອີກຄົນນຶ່ງ ພັຣຍາທັງສອງຄືທັງຄົນທີ່ຮັກ ແລະຄົນທີ່ບໍ່ມັກ ກໍມີບຸດດ້ວຍກັນ ແລະບຸດຫົວປີເປັນບຸດຂອງພັຣຍາຄົນທີ່ຕົນບໍ່ມັກ

16 ເມື່ອເຖິງວັນແບ່ງຊັບສົມສິນໃຫ້ແກ່ບຸດເປັນມໍຣະດົກນັ້ນ ຢ່າໃຫ້ເຂົາກະທຳແກ່ບຸດຂອງພັຣຍາທີ່ຕົນຮັກນັ້ນເຫມືອນຢ່າງກັບເປັນບຸດຫົວປີ ແທນບຸດຂອງພັຣຍາທີ່ຕົນບໍ່ມັກຊຶ່ງເປັນບຸດຫົວປີ

17 ແຕ່ເຂົາຕ້ອງຍອມຮັບບຸດຫົວປີຄືບຸດຂອງພັຣຍາຄົນທີ່ຕົນບໍ່ມັກ ໂດຍແບ່ງເຄື່ອງຂອງໃຫ້ແກ່ບຸດຫົວປີສອງເທົ່າ
ເພາະວ່າຄົນນີ້ເປັນຕົ້ນກຳລັງຂອງບິດາ ສິດຂອງບຸດຫົວປີເປັນຂອງເຂົາ

### ບຸດທີ່ບໍ່ເຊື່ອຟັງ

Rebellious Children

18 "ຖ້າຊາຍຄົນໃດມີບຸດທີ່ດື້ ແລະບໍ່ຢູ່ໃນໂອວາດ ບໍ່ເຊື່ອຟັງສຽງຂອງພໍ່ຂອງຕົນ ຫລືສຽງຂອງແມ່ຂອງຕົນ ເຖິງ
ແມ່ນວ່າພໍ່ແມ່ຈະຕີສອນ ເຂົາກໍບໍ່ຍອມຟັງ
19 ໃຫ້ພໍ່ແມ່ຈັບຕົວເຂົາໃຫ້ອອກມາຫາພວກຜູ້ໃຫຍ່ຂອງເມືອງນັ້ນໃນປະຕູເມືອງທີ່ເຂົາອາສັຍຢູ່
20 ແລະເຂົາຈະເວົ້າກັບພວກຜູ້ໃຫຍ່ຂອງເມືອງນັ້ນວ່າ "ບຸດຊາຍຂອງເຮົາຄົນນີ້ເປັນຄົນດື້ດຶງ ແລະບໍ່ຢູ່ໃນໂອວາດ
ບໍ່ເຊື່ອຟັງສຽງເຮົາ ເປັນຄົນເກເລ ແລະຂີ້ເມົາ
21 ແລ້ວຜູ້ຊາຍໃນເມືອງນັ້ນຈະເອົາຫີນແກ່ວງໃສ່ເຂົາໃຫ້ຕາຍ ດັ່ງນັ້ນທ່ານຈະໄດ້ກຳຈັດຄວາມຊົ່ວເສັຽຈາກຖ້າມ
ກາງທ່ານ ຄົນອິສຣາເອນທັງປວງຈະໄດ້ຍິນແລະຢຳເກງ

### ກົດຫມາຍຕ່າງໆ

Miscellaneous Laws

22 "ຖ້າຄົນໃດໄດ້ກະທຳຄວາມຜິດອັນມີໂທດເຖິງຕາຍ ແລະເຂົາຖືກປະຫານຊີວິດ ແລະແຂວນເຂົາໄວ້ທີ່ຕົ້ນໄມ້
23 ຢ່າໃຫ້ສົບຄ້າງຢູ່ທີ່ຕົ້ນໄມ້ຂ້າມຄືນ ທ່ານຈົ່ງຝັງເຂົາເສັຽໃນວັນດຽວກັນນັ້ນ ດ້ວຍວ່າຜູ້ທີ່ຕ້ອງຖືກແຂວນໄວ້ເທິງ
ຕົ້ນໄມ້ກໍຕ້ອງຖືກສາບແຊ່ງໂດຍພຣະຜູ້ເປັນເຈົ້າ ທ່ານຢ່າກະທຳໃຫ້ແຜ່ນດິນຂອງທ່ານຊຶ່ງພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງທ່ານປະທານແກ່ທ່ານໃຫ້ເປັນມໍຣະດົກນັ້ນເປັນມົນທິນ

## 22

Chapter 22

1 "ເມື່ອທ່ານທັງຫລາຍເຫັນງົວ ຫລືແກະຂອງພີ່ນ້ອງຂອງທ່ານຫລົງມາ ຢ່າໄດ້ທຳເມີນເສີຍ ຈົ່ງພາສັດເຫລົ່ານັ້ນ
ກັບໄປໃຫ້ພີ່ນ້ອງຂອງທ່ານ
2 ຖ້າບ້ານເຂົາຢູ່ບໍ່ໃກ້ ຫລືທ່ານບໍ່ຮູ້ຈັກຕົວເຂົາ ຈົ່ງນຳສັດເຫລົ່ານັ້ນມາໄວ້ທີ່ບ້ານຂອງທ່ານ ແລະໃຫ້ຢູ່ກັບທ່ານຈົນ
ພີ່ນ້ອງມາທ່ຽວຊອກຫາ ແລ້ວທ່ານຈົ່ງມອບຄືນໃຫ້ເຂົາໄປ
3 ລໍຂອງພີ່ນ້ອງທ່ານກໍຈົ່ງຄືນໃຫ້ເຫມືອນກັນ ເສື້ອຜ້າຂອງພີ່ນ້ອງທ່ານກໍຈົ່ງຄືນໃຫ້ເຫມືອນກັນ ສິ່ງໃດຂອງພີ່ນ້ອງ
ທີ່ຫາຍໄປ ແລະທີ່ທ່ານພົບເຫັນ ທ່ານຈົ່ງຄືນໃຫ້ແກ່ເຂົາ ທ່ານຢ່າທຳເມີນເສີຍບໍ່ຊ່ອຍເຂົາ
4 ຖ້າທ່ານເຫັນລໍ ຫລືງົວຂອງພີ່ນ້ອງລົ້ມຢູ່ຕາມທາງ ຢ່າທຳເມີນເສີຍ ທ່ານຈົ່ງຊ່ອຍໂຈມສັດເຫລົ່ານັ້ນຂຶ້ນອີກ
5 "ຢ່າໃຫ້ຜູ້ຍິງໃຊ້ເຄື່ອງນຸ່ງຂອງຜູ້ຊາຍ ແລະຢ່າໃຫ້ຜູ້ຊາຍນຸ່ງເຄື່ອງດ້ວຍເຄື່ອງຂອງຜູ້ຍິງ ເພາະຜູ້ໃດກະທຳສິ່ງ
ເຫລົ່ານີ້ກໍເປັນທີ່ຫນ້າລັງກຽດແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
6 "ຖ້າທ່ານບັງເອີນໄປພົບຮັງນົກຢູ່ຕາມທາງ ເທິງຕົ້ນໄມ້ຫລືພື້ນດິນ ມີລູກນົກ ຫລືໄຂ່ ແລະແມ່ນົກກຳລັງຟັກໄຂ່
ຫລືເຝົ້າລູກຂອງມັນຢູ່ ທ່ານຢ່າເອົາແມ່ນົກກັບລູກນົກໄປ
7 ທ່ານຈົ່ງປ່ອຍແມ່ນົກໄປເສັຽ ແຕ່ລູກນົກນັ້ນທ່ານຈະເອົາໄປເປັນຂອງທ່ານກໍໄດ້ ເພື່ອທ່ານຈະໄດ້ຮັບຄວາມຈຳ
ເຣີນ ແລະທ່ານຈະມີອາຍຸຍືນນານ
8 "ເມື່ອທ່ານກໍ່ເຮືອນໃຫມ່ ຈົ່ງກໍ່ຂອບຂຶ້ນກັນໄວ້ທີ່ດາດຟ້າຫລັງຄາ ເພື່ອທ່ານຈະບໍ່ໄດ້ນຳໂທດມາສູ່ເຮືອນນັ້ນ
ເພາະມີຄົນພັດຕົກລົງມາຈາກຫລັງຄາຕາຍ
9 "ຢ່າເອົາເມັດພືດສອງຊະນິດຫວ່ານລົງໃນສວນອະງຸ່ນຂອງທ່ານ ຢ້ານວ່າຜົນທັງຫມົດນັ້ນຈະຕ້ອງມອບໃຫ້ແກ່
ສະຖານນະມັສການຄືທັງພືດຜົນທີ່ທ່ານຫວ່ານ ແລະຜົນອະງຸ່ນຂອງສວນນັ້ນ

10 ທ່ານຢ່າເອົາງົວ ແລະລໍເຂົ້າທຽມໄຖດ້ວຍກັນ
11 ທ່ານຢ່າສວມເຄື່ອງນຸ່ງທີ່ຕ່ຳດ້ວຍຂົນສັດປົນດ້າຍປ່ານ
12 "ທ່ານຈົ່ງຫຍິບຍ່ອຍຫ້ອຍໄວ້ທີ່ສີ່ແຈຂອງເສື້ອຄຸມຂອງທ່ານ ຊຶ່ງທ່ານໃຊ້ຄຸມຕົວ

**ກົດໝາຍເຣື່ອງຄວາມບໍຣິສຸດທາງເພດ**

Laws concerning Sexual Relations

13 "ຖ້າຊາຍຄົນໃດໄດ້ພັຣຍາ ແລະໄດ້ສົມສູ່ຢູ່ກັບນາງ ແລ້ວເກີດກຽດຊັງນາງ
14 ແລະຫາເຫດວ່າຍິງນັ້ນປະພຶດສິ່ງທີ່ໜ້າອາຍ ກະທຳໃຫ້ຊື່ສຽງຂອງນາງເສັຽຫາຍ ໂດຍກ່າວວ່າ "ຂ້າພະເຈົ້າຮັບຍິງຄົນນີ້ມາເປັນພັຣຍາ ຄັນຂ້າພະເຈົ້າສົມສູ່ກັບນາງກໍເຫັນວ່ານາງບໍ່ມີເຄື່ອງໝາຍຂອງຍິງພົມມະຈາຣີ
15 ພໍ່ຂອງຍິງສາວຄົນນັ້ນ ແລະແມ່ຈະຕ້ອງນຳຂອງສຳຄັນ ອັນເປັນພຍານວ່າຍິງສາວນັ້ນເປັນພົມມະຈາຣີມາໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນທີ່ປະຕູເມືອງ
16 ແລະພໍ່ຂອງຍິງສາວນັ້ນຈະບອກກັບພວກຜູ້ໃຫຍ່ວ່າ "ຂ້າພະເຈົ້າໄດ້ຍົກລູກສາວຂອງຂ້າພະເຈົ້າໃຫ້ເປັນພັຣຍາຊາຍຄົນນີ້ ແລະເຂົາກັບກຽດຊັງ
17 ນີ້ແຫລະຊາຍຄົນນີ້ຫາເຫດກ່າວຕິຕຽນວ່າ "ຂ້າພະເຈົ້າບໍ່ເຫັນວ່າບຸດສາວຂອງທ່ານມີເຄື່ອງໝາຍຂອງຍິງພົມມະຈາຣີເລີຍ" ນີ້ແຫລະແມ່ນຂອງສຳຄັນວ່າລູກສາວຂອງຂ້າພະເຈົ້າເປັນຍິງພົມມະຈາຣີ" ແລ້ວເຂົາຈະໃຈ້ເຄື່ອງແຕ່ງກາຍນັ້ນອອກຕໍ່ໜ້າພວກຜູ້ໃຫຍ່ໃຫ້ເປັນພຍານ
18 ໃຫ້ພວກຜູ້ໃຫຍ່ຂອງເມືອງນັ້ນຈັບຊາຍຄົນນັ້ນມາຂ້ຽນ
19 ແລະປັບໂທດເຂົານຶ່ງຮ້ອຍເຊເກລ ແລະມອບເງິນນັ້ນໃຫ້ແກ່ບິດາຂອງຍິງສາວ ເພາະເຂົາທຳໃຫ້ຍິງພົມມະຈາຣີອິສຣາເອນຄົນນຶ່ງເສັຽຊື່ ຍິງນັ້ນຈະເປັນພັຣຍາຂອງເຂົາຕໍ່ໄປ ເຂົາຈະຢ່າຮ້າງບໍ່ໄດ້ເລີຍຕລອດຊີວິດ
20 ແຕ່ຖ້າເຣື່ອງນັ້ນເປັນຄວາມຈິງ ແລະຫາເຄື່ອງໝາຍຂອງຍິງພົມມະຈາຣີທີ່ຍິງສາວນັ້ນບໍ່ໄດ້
21 ເຂົາຈະພາຍິງສາວນັ້ນອອກມານອກປະຕູເຮືອນພໍ່ຂອງນາງ ແລ້ວຊາວເມືອງຈະເອົາຫີນແກ່ວງໃສ່ນາງໃຫ້ຕາຍເພາະນາງໄດ້ກະທຳຄວາມໂງ່ຈ້າໃນອິສຣາເອນ ຄືເປັນຍິງໂສເພນີໃນເຮືອນຂອງພໍ່ ດັ່ງນີ້ແຫລະທ່ານຈະກຳຈັດຄວາມຊົ່ວອອກຈາກຖ້າມກາງທ່ານ
22 "ຖ້າພົບຊາຍຄົນນຶ່ງໄປສົມສູ່ກັບພັຣຍາຂອງຄົນອື່ນ ທັງສອງຄົນ ຄືຊາຍທີ່ໄປສົມສູ່ກັບຍິງ ແລະຍິງຄົນນັ້ນຈະຕ້ອງມີໂທດເຖິງຕາຍ ດັ່ງນີ້ແຫລະທ່ານຈະກຳຈັດຄວາມຊົ່ວຈາກອິສຣາເອນ
23 "ຖ້າມີຍິງພົມມະຈາຣີຄົນນຶ່ງໝັ້ນໄວ້ແລ້ວ ແລະມີຊາຍຄົນນຶ່ງໄປພົບນາງໃນເມືອງ ແລະໄດ້ສົມສູ່ກັບນາງ
24 ທ່ານຈົ່ງພາເຂົາທັງສອງອອກໄປນອກປະຕູເມືອງນັ້ນ ແລະທ່ານຈົ່ງເອົາຫີນແກ່ວງໃສ່ເຂົາທັງສອງໃຫ້ຕາຍເສັຽຍິງສາວຄົນນັ້ນ ເພາະວ່າເຖິງຢູ່ໃນເມືອງກໍບໍ່ໄດ້ຮ້ອງຂໍຄວາມຊ່ອຍເຫລືອ ຊາຍຄົນນັ້ນ ເພາະວ່າໄດ້ກະທຳໃຫ້ພ
ັຣຍາຂອງເພື່ອນ
ບ້ານໄດ້ຮັບຄວາມລະອາຍ ດັ່ງນີ້ແຫລະ ທ່ານທັງຫລາຍຈະກຳຈັດຄວາມຊົ່ວເສັຽຈາກຖ້າມກາງທ່ານ
25 "ແຕ່ຖ້າຊາຍຄົນນຶ່ງໄປພົບຍິງສາວທີ່ຄົນອື່ນໝັ້ນໄວ້ແລ້ວທີ່ກາງທົ່ງ ຊາຍຄົນນັ້ນຈັບຕົວຍິງນັ້ນແລະໄດ້ສົມສູ່ກັບນາງ ສະເພາະຜູ້ຊາຍຄົນທີ່ສົມສູ່ກັບນາງເທົ່ານັ້ນຈະຕ້ອງມີໂທດເຖິງຕາຍ
26 ແຕ່ທ່ານຢ່າທຳໂທດຍິງສາວນັ້ນເລີຍ ຝ່າຍຍິງສາວນັ້ນບໍ່ມີຄວາມຜິດສິ່ງໃດທີ່ຈະຕ້ອງມີໂທດເຖິງຕາຍ ເພາະຄະດີເຣື່ອງນີ້ກໍເໝືອນກັບຄະດີເຣື່ອງຊາຍຄົນນຶ່ງເຂົ້າຕໍ່ສູ້ ແລະຂ້າເພື່ອນບ້ານຂອງຕົນ
27 ເພາະຊາຍນັ້ນພົບນາງທີ່ກາງທົ່ງ ແມ້ວ່າຍິງສາວທີ່ເຂົາໝັ້ນໄວ້ຄົນນັ້ນຈະຮ້ອງຂໍຄວາມຊ່ອຍເຫລືອກໍບໍ່ມີໃຜມາຊ່ອຍໄດ້
28 "ຖ້າຊາຍຄົນນຶ່ງພົບຍິງພົມມະຈາຣີຍັງບໍ່ມີຄົນໝັ້ນ ເຂົາຈຶ່ງຈັບຕົວນາງ ແລະໄດ້ສົມສູ່ກັບນາງ ມີຜູ້ຮູ້ເຫັນ

29 ຊາຍຜູ້ທີ່ໄດ້ສົມສູ່ກັບນາງນັ້ນຈະຕ້ອງມອບເງິນຫ້າສິບເຊເຄລໃຫ້ແກ່ພໍ່ຂອງຍິງສາວຄົນນັ້ນ ແລະໃຫ້ຍິງຕົກເປັນ
ພັຣຍາຂອງຜູ້ຊາຍຄົນນັ້ນ ເພາະເຂົາໄດ້ທຳໃຫ້ນາງໄດ້ຮັບຄວາມອາຍ ແລະເຂົາຈະຢ່າຮ້າງກັບນາງບໍ່ໄດ້ຕ
ລອດຊີວິດ
30 “ຫ້າມບໍ່ໃຫ້ຜູ້ຊາຍຄົນໃດເອົາເມັຽຂອງພໍ່ມາເປັນພັຣຍາຂອງຕົນ ແລະຫ້າມບໍ່ໃຫ້ເປີດຜ້າຂອງນາງຜູ້ເປັນຂອງພໍ່

## 23 ຜູ້ທີ່ຕ້ອງຢູ່ນອກການປະຊຸມ

Those Excluded from the Assembly

1 “ຊາຍຄົນໃດທີ່ຖືກຕອນ ຫລືອະວັຍະວະສືບພັນພິການ ຢ່າໃຫ້ເຂົ້າໃນການປະຊຸມຂອງພຣະຜູ້ເປັນເຈົ້າ
2 “ຫ້າມບໍ່ໃຫ້ລູກນອກກົດຫມາຍເຂົ້າໃນການປະຊຸມຂອງພຣະຜູ້ເປັນເຈົ້າ ຢ່າໃຫ້ເຊື້ອສາຍຂອງເຂົາເຂົ້າໃນການ
ປະຊຸມຂອງ ພຣະຜູ້ເປັນເຈົ້າຈົນເຖິງສິບຊົ່ວອາຍຸຄົນ
3 “ຢ່າໃຫ້ຄົນອັມໂມນ ຫລືຄົນໂມອາບເຂົ້າໃນການປະຊຸມຂອງພຣະຜູ້ເປັນເຈົ້າ ບຸກຄົນທີ່ເປັນເຊື້ອສາຍຂອງຄົນ
ທັງສອງເຜົ່ານີ້ຫ້າມບໍ່ໃຫ້ເຂົາໃນການປະຊຸມຂອງພຣະຜູ້ເປັນເຈົ້າເລີຍຈົນເຖິງສິບຊົ່ວອາຍຸຄົນ
4 ເພາະວ່າຄົນເຫລົ່ານີ້ບໍ່ໄດ້ມາຕ້ອນຮັບທ່ານທັງຫລາຍຕາມທາງດ້ວຍເຂົ້າຈີ່ແລະນໍ້າ ເມື່ອທ່ານອອກຈາກເອ
ຢິບເພາະວ່າເຂົາໄດ້ຈ້າງບາລາອາມບຸດເບໂອຣ໌ ມາຈາກເປໂດຣ໌ ແຫ່ງເມໂຊໂປຕາເມັຽມາສາບແຊ່ງພວກເຈົ້າ
5 ຢ່າງໃດກໍດີພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານບໍ່ໄດ້ຟັງບາລາອາມ ແຕ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງ
ປ່ຽນຄຳສາບແຊ່ງໃຫ້ເປັນຄຳອວຍພອນທ່ານ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງຮັກທ່ານ
6 ທ່ານຢ່າສ້າງຄວາມສຸກສຳຣານ ຫລືຄວາມຈຳເຣີນໃຫ້ເຂົາຕລອດຊີວິດຂອງທ່ານທັງຫລາຍເປັນນິດ
7 “ທ່ານທັງຫລາຍຢ່າກຽດຄົນເອໂດມ ເພາະເຂົາເປັນພີ່ນ້ອງຂອງທ່ານ ທ່ານຢ່າກຽດຄົນເອຢິບ ເພາະທ່ານທັງ
ຫລາຍເປັນຄົນຕ່າງດ້າວຢູ່ໃນແຜ່ນດິນຂອງເຂົານັ້ນ
8 ເດັກນ້ອຍຊົ່ວອາຍຸທີສາມຊຶ່ງເກີດກັບຄົນເຫລົ່ານີ້ຈະເຂົ້າໃນການປະຊຸມຂອງພຣະເຈົ້າກໍໄດ້

**ການຮັກສາຄ້າຍທະຫານ**

Sanitary, Ritual, and Humanitarian Precepts

9 “ເມື່ອທ່ານອອກໄປສູ້ຮົບກັບສັດຕຣູຂອງທ່ານ ແລະເມື່ອທ່ານຍັງຢູ່ໃນຄ້າຍ ທ່ານຈົ່ງລະວັງຕົວໃຫ້ພົ້ນຈາກສິ່ງ
ຊົ່ວທຸກຢ່າງ
10 “ຖ້າຄົນໃດໃນພວກທ່ານບໍ່ສະອາດ ດ້ວຍເຫດການທີ່ເກີດຂຶ້ນໃນເວລາກາງຄືນ ເຂົາຕ້ອງໄປຢູ່ນອກຄ້າຍ ຢ່າ
ໃຫ້ເຂົາເຂົ້າມາໃນຄ້າຍ
11 ແຕ່ເມື່ອເຖິງເວລາຄໍ່າແລ້ວ ໃຫ້ເຂົາອາບນໍ້າຊຳຣະຕົວ ແລະເມື່ອດວງອາທິດຕົກແລ້ວເຂົາຈະກັບເຂົ້າມາໃນ
ຄ້າຍກໍໄດ້
12 “ທ່ານທັງຫລາຍຕ້ອງມີທີ່ພາຍນອກຄ້າຍ ເພື່ອຈະອອກໄປເຖິງໄດ້
13 ແລະທ່ານຕ້ອງມີໄມ້ສ້ຽມຮວມໄວ້ກັບເຄື່ອງອາວຸດ ແລະເມື່ອທ່ານນັ່ງລົງໃນທີ່ຂ້າງນອກນັ້ນ ທ່ານຈົ່ງໃຊ້ໄມ້ຂຸດ
ຂຸມໄວ້ ແລະທັບໄປໃຊ້ດິນຖົມໄວ້
14 ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງດຳເນີນຢູ່ຖ້າມກາງຄ້າຍຂອງທ່ານ ເພື່ອຈະຊ່ອຍເຫລືອທ່ານ
ແລະມອບສັດຕຣູຂອງທ່ານໄວ້ໃນມືທ່ານ ເພາະສະນັ້ນຄ້າຍຂອງທ່ານຕ້ອງບໍຣິສຸດ ເພື່ອພຣະອົງຈະບໍ່ທອດພ
ຣະເນດໃນສິ່ງເປິເປື້ອນໃນຫມູ່ພວກທ່ານ ແລະສະເດັດໄປເສັຽຈາກທ່ານ
15 “ຖ້າມີທາດຫນີຈາກນາຍຂອງເຂົາມາຢູ່ກັບທ່ານ ຢ່າຈັບທາດນັ້ນໄປສົ່ງນາຍຂອງເຂົາ
16 ຈົ່ງໃຫ້ທາດນັ້ນຢູ່ກັບທ່ານ ຢູ່ໃນຫມູ່ພວກທ່ານ ໃຫ້ຢູ່ໃນທີ່ຊຶ່ງເຂົາຈະເລືອກໃນເມືອງນຶ່ງເມືອງໃດຕາມຄວາມພໍ
ໃຈຂອງເຂົາ ຢ່າກົດຂີ່ຂົ່ມເຫັງເຂົາເລີຍ

17 “ຜູ້ຍິງຊາວອິສຣາເອນນັ້ນ ຢ່າໃຫ້ມີຍິງໂສເພນີຈັກຄົນດຽວ ແລະໃນພວກບຸດຊາຍອິສຣາເອນຢ່າໃຫ້ມີຊາຍທີ່ຫລິ້ນຊູ້ສູ່ເມັຽຄົນອື່ນຈັກຄົນດຽວ( ກະສັດເຈມສ໌ =ຢ່າໃຫ້ບຸດຊາຍອິສຣາເອັນຄົນນຶ່ງຄົນໃດເປັນກະເທີຍ)

18 ທ່ານຢ່ານຳຄ່າຈ້າງຂອງຍິງໂສເພນີ ຫລືຄ່າຈ້າງຈາກຫມາ ມາໃນວິຫານຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານເປັນເງິນແກ້ບົນຢ່າງໃດຢ່າງນຶ່ງ ເພາະທັງສອງນີ້ເປັນສິ່ງທີ່ຫນ້າລັງກຽດແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ

19 “ທ່ານຢ່າໃຫ້ພີ່ນ້ອງຂອງທ່ານຢືມເງິນເພື່ອເອົາດອກເບັ້ຽ ບໍ່ວ່າດອກເບັ້ຽເງິນກູ້ ຫລືດອກເບັ້ຽເຄື່ອງບໍຣິໂພກ ຫລືດອກເບັ້ຽຂອງສິ່ງໃດໆທີ່ໃຫ້ຢືມເພື່ອເອົາດອກເບັ້ຽ

20 ທ່ານຈະໃຫ້ຄົນຕ່າງດ້າວຢືມເພື່ອເອົາດອກເບັ້ຽກໍໄດ້ ແຕ່ສຳລັບພີ່ນ້ອງຂອງທ່ານຢ່າໃຫ້ຢືມເພື່ອເອົາດອກເບັ້ຽເພື່ອພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງອວຍພຣະພອນແກ່ທ່ານໃນທຸກສິ່ງຊຶ່ງທ່ານກະທຳໃນແຜ່ນດິນຊຶ່ງທ່ານກຳລັງຈະເຂົ້າໄປຍຶດຄອງນັ້ນ

**ການແກ້ບະແລະການກິນ**

21 ເມື່ອພວກທ່ານບະບົນຕໍ່ພຣະຜູ້ເປັນເຈົ້າ ຢ່າລະເລີຍຕໍ່ສິ່ງທີ່ໄດ້ສັນຍາໄວ້ ຈົ່ງແກ້ບະເສັຽ ເພາະວ່າພຣະຜູ້ເປັນເຈົ້າຊົງຫມັ້ນ ພຣະທັຍວ່າຈະໄດ້ສິ່ງນັ້ນຈາກທ່ານອື່ຫລື

22 ການບໍ່ຮັກສາຄຳຫມັ້ນສັນຍາຈະເປັນບາບ ແລະເມື່ອບໍ່ບະບົນຕໍ່ພຣະຜູ້ເປັນເຈົ້າກໍບໍ່ມີບາບ

23 ແຕ່ຖ້າທ່ານເຕັມໃຈບະບົນຕໍ່ພຣະຜູ້ເປັນເຈົ້າຂອງທ່ານ ຈົ່ງໄດ້ເອົາໃຈໃສ່ເຮັດຕາມນັ້ນ

24 ເມື່ອທ່ານຍ່າງຜ່ານໄປໃນສວນອະງຸ່ນຂອງເພື່ອນບ້ານ ທ່ານຈະກິນຫມາກອະງຸ່ນໃນສວນນັ້ນຈົນອີ່ມກໍໄດ້ ແຕ່ບໍ່ຕ້ອງເກັບໃສ່ກະຕ່າຖືໄປນຳ

25 ເມື່ອທ່ານເຂົ້າໄປໃນນາຂອງເພື່ອນບ້ານຂອງທ່ານ ທ່ານຈະເອົາມືເດັດຮວງເຂົ້າມາກໍໄດ້ ແຕ່ທ່ານຈະໃຊ້ກ່ຽວຕັດເອົາເຂົ້າຂອງເພື່ອນບ້ານຂອງທ່ານບໍ່ໄດ້

## 24 ການຢ່າຮ້າງແລະການແຕ່ງດອງໃຫມ່

Laws concerning Marriage and Divorce

1 ສົມມຸດວ່າ ຊາຍຜູ້ນຶ່ງມີພັຣຍາແລ້ວ ພາຍຫລັງມານາງບໍ່ຮັກສາມີອີກຕໍ່ໄປ ແລະນາງມີພຶດຕິການບໍ່ດີບໍ່ງາມຊາຍຜູ້ນັ້ນຈຶ່ງທຳຫນັງສືຢ່າຮ້າງຍື່ນໃຫ້ນາງ ແລ້ວກໍບອກໃຫ້ນາງຫນີອອກຈາກເຮືອນໄປ

2 ຕໍ່ມາສົມມຸດວ່າ ນາງແຕ່ງດອງກັບຊາຍອີກຄົນນຶ່ງ

3 ຊາຍຜູ້ນັ້ນກໍຄິດຢາກປະນາງເຫມືອນກັນ ເຂົາຈຶ່ງທຳຫນັງສືຢ່າຮ້າງຍື່ນໃຫ້ນາງ ແລ້ວບອກໃຫ້ນາງຫນີອອກຈາກເຮືອນໄປ

4 ຫລືສົມມຸດວ່າ ສາມີທີສອງຂອງນາງຕາຍໄປ ໃນກໍຣະນີຢ່າງນີ້ ສາມີຜູ້ທຳອິດຈະເອົານາງຜູ້ມີມົນທິນແລ້ວມາເປັນພັຣຍາອີກບໍ່ໄດ້ ເພາະຈະທຳໃຫ້ພຣະຜູ້ເປັນເຈົ້າຊົງເສັຽພຣະທັຍ ພວກທ່ານຢ່າທຳໃຫ້ແຜ່ນດິນທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ນັ້ນມີຄວາມຜິດ

**ກົດຫມາຍຕ່າງໆ**

Miscellaneous Laws

5 ເມື່ອຊາຍຜູ້ໃດເອົາພັຣຍາໃຫມ່ ຢ່າໃຫ້ຜູ້ນັ້ນເປັນທະຫານ ຫລືຮັບຣາຊການຢ່າງໃດຢ່າງນຶ່ງ ໃຫ້ເຂົາພັກຢູ່ບ້ານນຶ່ງປີ ເພື່ອຈະໄດ້ມີຄວາມສຸກຢູ່ກັບພັຣຍາ

6 ເມື່ອທ່ານໃຫ້ຄົນຢືມ ຢ່າໄດ້ເອົາຫີນໂມ້ແປ້ງຂອງເຂົາໄວ້ເປັນເຄື່ອງປະກັນ ເພາະຫີນນັ້ນໃຊ້ເປັນເຄື່ອງມືສຳລັບລ້ຽງຊີບຂອງເຂົາ

7 ຜູ້ໃດລັກເອົາຄົນອິສຣາເອນເພື່ອນບ້ານຂອງຕົນໄປໃຊ້ເປັນທາດ ຫລືຂາຍໄປເປັນທາດເສັຽ ຄົນນັ້ນຈະຕ້ອງມີ
ໂທດເຖິງຕາຍ ທ່ານຈິ່ງກຳຈັດຄົນຊົ່ວດ້ວຍວິທີຢ່າງນີ້ແຫລະ
8 ກ່ຽວກັບໂຣກຜິວຫນັງນັ້ນ ທ່ານຈິ່ງເອົາໃຈໃສ່ປິ່ນປົວຕາມຄຳແນະນຳຂອງປະໂຣຫິດຊາວເລວີ ຕາມທີ່ຂ້າພະ
ເຈົ້າໄດ້ບອກເຂົາແລ້ວ
9 ແລະຈົ່ງລະນຶກເຖິງເຣື່ອງທີ່ພຣະຜູ້ເປັນເຈົ້າຂອງທ່ານຊົງເຮັດຕໍ່ ຊາວມີຣີອາມໃນເວລາພວກເຂົາເດີນທາງມາ
ຈາກເອຢິບນັ້ນ
10 ເມື່ອທ່ານໃຫ້ຄົນຢືມຂອງ ຢ່າໄດ້ເຂົ້າໄປເອົາຂອງປະກັນໃນບ້ານເຮືອນຂອງເຂົາ ຈົ່ງຢືນຖ້າຢູ່ຂ້າງນອກ
11 ໃຫ້ເຂົາເອົາອອກມາໃຫ້ທ່ານເອງ
12 ຖ້າເຂົາເປັນຄົນທຸກຍາກ ຢ່າເກັບຂອງປະກັນນັ້ນໄວ້ຈົນເທົ່າຄ້າງຄືນ ເມື່ອຕາເວັນຕົກໃຫ້ສົ່ງເຂົາໂລດ
13 ເພື່ອເຂົາຈະໄດ້ໃຊ້ຫົ່ມໃນເວລາເຂົ້ານອນ ແລ້ວເຂົາຈະຂອບໃຈທ່ານ ແລະພຣະຜູ້ເປັນເຈົ້າກໍຈະຊົງພໍພຣະທັຍ
ດ້ວຍ
14 ຢ່າບີບບັງຄັບລູກຈ້າງທີ່ທຸກຍາກແລະຂັດສົນ ບໍ່ວ່າເຂົາຜູ້ນັ້ນຈະເປັນອິສຣາເອນເພື່ອນບ້ານຂອງທ່ານ ຫລືເປັນ
ຄົນຕ່າງດ້າວທີ່ອາໄສຢູ່ໃນເມືອງຂອງທ່ານກໍຕາມ
15 ຈົ່ງຈ່າຍຄ່າຈ້າງໃຫ້ເຂົາທຸກໆມື້ກ່ອນຕາເວັນຕົກ ເພາະເຂົາຕ້ອງການເງິນ ແລະເອົາໃຈຈົດຈໍ່ຢູ່ໃນຄ່າຈ້າງນັ້ນ
ຖ້າທ່ານບໍ່ຈ່າຍໃຫ້ເຂົາກໍຈະຟ້ອງຮ້ອງຕໍ່ພຣະຜູ້ເປັນເຈົ້າ ແລ້ວທ່ານຈະຖືກໂທດ
16 ຢ່າໃຫ້ພໍ່ຕ້ອງຮັບໂທດເຖິງຕາຍແທນລູກຂອງຕົນ ຫລືໃຫ້ລູກຕ້ອງຮັບໂທດເຖິງຕາຍແທນພໍ່ຂອງຕົນ ໃຫ້ທຸກຄົນ
ຮັບໂທດເຖິງຕາຍດ້ວຍໂທດຂອງຕົນເອງ
17 “ທ່ານທັງຫລາຍຢ່າໃຫ້ເສັຽຄວາມຍຸດຕິທັມ ຊຶ່ງຄວນໄດ້ແກ່ຄົນຕ່າງດ້າວ ຫລືຄວນໄດ້ແກ່ລູກກຳພ້າ ແລະຢ່າ
ໄດ້ຮັບເຄື່ອງນຸ່ງຂອງຍິງຫມ້າຍໄວ້ເປັນປະກັນ
18 ຈົ່ງຈຳໄວ້ວ່າ ພວກທ່ານຕົກເປັນທາດຢູໃນປະເທດເອຢິບ ແລ້ວພຣະຜູ້ເປັນເຈົ້າຊົງຊ່ອຍໃຫ້ມີ
ອິສຣະ ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງສັ່ງໃຫ້ພວກທ່ານທຳສິ່ງດັ່ງກ່າວນີ້
19 ເມື່ອທ່ານລືມຟ່ອນເຂົ້າບາງຟ່ອນໄວ້ໃນນາ ຢ່າໄດ້ກັບຄືນໄປເອົາມັນມາ ຈົ່ງປະໄວ້ໃຫ້ຄົນຕ່າງດ້າວ ລູກກຳພ້າ
ແລະແມ່ຫມ້າຍເສັຽ ເພື່ອພຣະຜູ້ເປັນເຈົ້າຈະຊົງອວຍພຣະພອນໃຫ້ການງານຂອງທ່ານຈະເຣີນຂຶ້ນ
20 ເມື່ອທ່ານໄປເກັບເອົາຫມາກກອກເທດ ຢ່າເກັບທີ່ງ່າເດີມຊ້ຳຄັ້ງທີສອງ ໃຫ້ເຫລືອໄວ້ສຳລັບຄົນຕ່າງດ້າວ ລູກ
ກຳພ້າ ແລະແມ່ຫມ້າຍ
21 ເມື່ອທ່ານເກັບຫມາກອະງຸ່ນຈາກສວນຂອງທ່ານ ຢ່າໄດ້ກັບຄືນໄປເກັບເລັມເອົາທີ່ຍັງເຫລືອຄ້າງຢູ່ນັ້ນອີກ ຈົ່ງ
ປະໄວ້ໃຫ້ຄົນຕ່າງດ້າວ ທັງລູກກຳພ້າ ແລະແມ່ຫມ້າຍ
22 ຢ່າລືມວ່າພວກທ່ານເຄີຍຕົກເປັນທາດໃນປະເທດເອຢິບມາແລ້ວ ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງສັ່ງໃຫ້ທຳສິ່ງດັ່ງ
ກ່າວນີ້

## 25

Chapter 25

1 ສົມມຸດວ່າມີຄົນອິສຣາເອນສອງຄົນເປັນຄວາມກັນຢູ່ສານ ຄົນນຶ່ງຖືກຕັດສິນວ່າເປັນຝ່າຍຖືກ ອີກຄົນນຶ່ງເປັນ
ຝ່າຍຜິດ
2 ຖ້າສານຕັດສິນໃຫ້ຂ້ຽນຕີຜູ້ຜິດ ກໍໃຫ້ຜູ້ພິພາກສາບອກຜູ້ນັ້ນນອນລົງ ແລ້ວໃຫ້ຂ້ຽນຕີນ້ອຍຫລາຍຕາມກຳນົດ
ຄວາມຜິດ
3 ອາດຈະເປັນສີ່ສິບບາດກໍໄດ້ ແຕ່ຢ່າໃຫ້ຫລາຍກວ່ານັ້ນ ເພາະຈະເປັນການຢຽບຢ່ຳຄົນຜິດໃນທີ່ສາທາຣະນະ

4 ຢ່າເອົາກະສອບອັດປາກງົວທີ່ກຳລັງຢຽບເຂົ້າ

**ພາຣະໜ້າທີ່ຂອງພີ່ນ້ອງຝ່າຍຜູ້ຕາຍ**

Levirate Marriage

5 ຖ້າມີສອງອ້າຍນ້ອງຢູ່ໃນຄອບຄົວດຽວກັນ ແລ້ວຄົນນຶ່ງໄດ້ຕາຍໄປໂດຍທີ່ຍັງບໍ່ມີບຸດ ພັຣຍາຂອງຜູ້ຕາຍຈະເອົາ
ຊາຍໃນຄອບຄົວອື່ນມາເປັນສາມີບໍ່ໄດ້

6 ໃຫ້ອ້າຍຫລືນ້ອງຂອງຜູ້ຕາຍເອງຮັບນາງໄປເປັນພັຣຍາ ຖ້ານາງໄດ້ບຸດຊາຍກ່ອນ ໃຫ້ນັບເປັນບຸດຊາຍຂອງຜູ້
ຕາຍນັ້ນ ເພື່ອເຊື້ອສາຍວົງວານຂອງເຂົາຈະມີຢູ່ໃນອິສຣາເອນສືບຕໍ່ໄປ

7 ແຕ່ຖ້າອ້າຍຫລືນ້ອງຂອງຜູ້ຕາຍບໍ່ຢາກໄດ້ນາງເປັນພັຣຍາ ກໍໃຫ້ນາງໄປບອກພວກເຖົ້າແກ່ໃນເມືອງວ່າ ພີ່ນ້ອງ
ທາງສາມີຂອງນາງບໍ່ເອົານາງເປັນພັຣຍາ ເຂົາບໍ່ຍອມສືບໜໍ່ແນວໃຫ້ມີຢູ່ໃນອິສຣາເອນ

8 ແລ້ວພວກເຖົ້າແກ່ຈະໄດ້ເອີ້ນເຂົາມາເວົ້າຈາກັນຖ້າເຂົາຍັງຢືນຢັນໂດຍກ່າວວ່າ ຂ້າພະເຈົ້າບໍ່ຍອມແຕ່ງກັບ
ນາງ

9 ກໍໃຫ້ນາງໝ້າຍນັ້ນເຂົ້າໄປຫາເຂົາຕໍ່ໜ້າພວກເຖົ້າແກ່ ດຶງເອົາເກີບຂອງເຂົາກີ່ງນຶ່ງພ້ອມກັບຖົ່ມນໍ້າລາຍໃສ່
ໜ້າຜູ້ນັ້ນແລະເວົ້າວ່າ ຜູ້ບໍ່ຍອມສືບເຊື້ອສາຍໃຫ້ອ້າຍນ້ອງຜູ້ຕາຍກໍເປັນຢ່າງນີ້ແຫລະ

10 ແລະຄົນທັງຫລາຍໃນອິສຣາເອນຈະເອີ້ນຄອບຄົວນີ້ວ່າ ຄອບຄົວຂອງຜູ້ຖືກຖອດເກີບ

**ກົດໝາຍອື່ນໆ**

Various Commands

11 “ຖ້າຊາຍສອງຄົນວິວາດທຸບຕີກັນ ແລະພັຣຍາຂອງຊາຍຄົນນຶ່ງເຂົ້າມາໃກ້ຈະຊ່ອຍສາມີຂອງຕົນໃຫ້ພົ້ນຈາກມື
ຂອງຜູ້ທີ່ຕີ ແລະນາງຍື່ນມືອອກບີບຂອງລັບຂອງຜູ້ຊາຍຄົນນັ້ນ

12 ທ່ານຈົ່ງຕັດມືຂອງນາງຖິ້ມເສັຽ ຢ່າໃຫ້ຕາຂອງທ່ານສົງສານນາງເລີຍ

13 “ທ່ານຢ່າມີລູກຕຸ້ມສຳລັບຕາຊັ່ງຕ່າງກັນໄວ້ໃນຖົງ ອັນນຶ່ງໜັກ ອັນນຶ່ງເບົາ

14 ໃນເຮືອນຂອງທ່ານຢ່າໃຫ້ມີເຄື່ອງຕວງສອງຊະນິດ ໃຫຍ່ອັນນຶ່ງ ນ້ອຍອັນນຶ່ງ

15 ທ່ານຈົ່ງມີລູກຕຸ້ມອັນທ່ຽງຕົງ ແລະມີຖັງຕວງອັນທ່ຽງຕົງ ເພື່ອວ່າວັນຄືນຂອງທ່ານຈະຍືນນານໃນແຜ່ນດິນຊຶ່ງພ
ຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານປະທານແກ່ທ່ານ

16 ເພາະວ່າຜູ້ໃດທີ່ກະທຳດັ່ງນີ້ ຄືທຸກຄົນທີ່ຄົດໂກງເປັນຜູ້ທີ່ໜ້າກຽດຊັງແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານ

17 “ຈົ່ງລະນຶກເຖິງການທີ່ຄົນອາມາເລກກະທຳແກ່ທ່ານທັງຫລາຍຕາມທາງທີ່ທ່ານອອກຈາກປະເທດເອຢິບ

18 ເຂົາໄດ້ອອກໂຈມຕີທ່ານຕາມທາງ ເມື່ອທ່ານອ່ອນເພັຽເມື່ອຍລ້າ ແລະຕັດຕອນພວກທີ່ຢູ່ທາງຫລັງ ເຂົາບໍ່ໄດ້
ຢຳເກງພຣະຜູ້ເປັນເຈົ້າ

19 ເພາະສະນັ້ນເມື່ອພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານປະທານໃຫ້ທ່ານຢຸດພັກຈາກສັດຕຣູທີ່ຢູ່ຮອບຂ້າງແລ້ວ
ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງທ່ານປະທານແກ່ທ່ານເປັນມໍຣະດົກໃຫ້ເປັນກຳມະສິດນັ້ນ ທ່ານທັງຫລາຍ
ຈົ່ງທຳລາຍລ້າງຄົນອາມາເລກເສັຽຈາກຄວາມຊົງຈຳພາຍໃຕ້ຟ້າ ທ່ານທັງຫລາຍຢ່າລືມເລີຍ

## 26 ການຖວາຍຜົນເກັບກ່ຽວ

First Fruits and Tithes

1 ເມື່ອພວກທ່ານເຂົ້າໄປຍຶດຄອງແຜ່ນດິນ ທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ແລະອາໄສຢູ່ໃນແຜ່ນດິນນັ້ນແລ້ວ

2 ແຕ່ລະຄົນຈົ່ງເອົາຜົນລະປູກແຕ່ລະຢ່າງທີ່ເກັບກ່ຽວມາຣຸ່ນແຣກ ໃສ່ກະຕ່ານຳໄປຖວາຍໄວ້ໃນສະຖານສັກສິດ
ຊຶ່ງເປັນບ່ອນທີ່ພຣະຜູ້ເປັນເຈົ້າຂອງພວກທ່ານໄດ້ຊົງເລືອກໄວ້ ເພື່ອຈະໄດ້ໄປນະມັສການພຣະນາມຂອງພຣະ
ອົງ

3 ແລ້ວເຂົ້າໄປຫາປະໂຣຫິດຜູ້ທຳຫນ້າທີ່ຮັບຕ້ອນຢູ່ໃນເວລານັ້ນ ໃຫ້ເວົ້ານຳທ່ານວ່າ, "ບັດນີ້ ຂ້າພະເຈົ້າຍອມຮັບ
ຕໍ່ພຣະຜູ້ເປັນເຈົ້າວ່າ ຂ້າພະເຈົ້າໄດ້ມາຢູ່ໃນແຜ່ນດິນທີ່ພຣະອົງໄດ້ຊົງສັນຍາໄວ້ ຕໍ່ບັນພະບຸຣຸດຂອງພວກຂ້າ
ພະເຈົ້ານັ້ນແລ້ວ ວ່າຈະມອບໃຫ້ພວກຂ້າພະເຈົ້າ"
4 ປະໂຣຫິດຈະຮັບເອົາກະຕ່າຈາກທ່ານໄປວາງໄວ້ຕໍ່ຫນ້າແທ່ນຖວາຍບູຊາແດ່ພຣະຜູ້ເປັນເຈົ້າ
5 ແລ້ວທ່ານຈຶ່ງເລົ່າເຣື່ອງຕໍ່ໄປນີ້ຕໍ່ພຣະພັກພຣະເຈົ້າ ບັນພະບຸຣຸດຂອງຂ້າພຣະອົງເປັນຊາວອາຣາມ ທ່ານທ່ອງ
ທ່ຽວໄປມາບໍ່ມີທີ່ຢູ່ເປັນຫລັກແຫລ່ງ ໄດ້ພາຄອບຄົວໄປອາໄສຢູ່ປະເທດເອຢິບ ເມື່ອຢູ່ທີ່ນັ້ນກໍມີຫນ້ອຍຄົນ ແຕ່
ຕໍ່ມາໄດ້ກາຍເປັນຊົນຊາດໃຫຍ່ທີ່ເຂັ້ມແຂງຊາດນຶ່ງ
6 ຄົນເອຢິບໄດ້ທຳຕໍ່ຂ້າພຣະອົງທັງຫລາຍຢ່າງໂຫດຮ້າຍໄດ້ຂົ່ມເຫັງໃຫ້ເຮັດວຽກຫນັກຢ່າງເປັນທາດ
7 ຕໍ່ມາຂ້າພຣະອົງທັງຫລາຍໄດ້ໄຫ້ຮ້ອງຂໍຄວາມຊ່ອຍເຫລືອຈາກພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງຂ້າພຣະ
ອົງທັງຫລາຍ ພຣະອົງຊົງໄດ້ຍິນສຽງຮ້ອງໄຫ້ນັ້ນ ທັງໄດ້ເຫັນຄວາມລຳບາກ ຄວາມທຸກຍາກແລະເຄາະຮ້າຍ
ຂອງຂ້າພຣະອົງທັງຫລາຍ
8 ແລ້ວໄດ້ຊົງທຳການອັສຈັນ ແລະສິ່ງທີ່ຫນ້າຢ້ານດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ ເພື່ອຊ່ອຍເອົາຂ້າ
ພຣະອົງທັງຫລາຍອອກຈາກເອຢິບ
9 ໄດ້ຊົງນຳພາຂ້າພຣະອົງທັງຫລາຍມາເຖິງທີ່ນີ້ແລະຊົງປະທານແຜ່ນດິນອັນອຸດົມສົມບູນນີ້ໃຫ້
10 ດັ່ງນີ້ແຫລະ ຂ້າພຣະອົງຈຶ່ງນຳຫມາກຜົນອັນທຳອິດທີ່ພຣະອົງປະທານໃຫ້ມາຖວາຍແດ່ພຣະຜູ້ເປັນເຈົ້າ ແລ້ວ
ໃຫ້ປົງກະຕ່າລົງຖວາຍ ແລະຂາບໄຫວ້ ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ
11 ທ່ານແລະຄອບຄົວຕລອດທັງຊາວຕ່າງດ້າວທີ່ອາໄສຢູ່ນຳ ຈົ່ງຊົມຊື່ນຍິນດີໃນຂອງດີທີ່ພຣະຜູ້ເປັນເຈົ້າຊົງປະ
ທານໃຫ້ນັ້ນ
12 ພືດຜົນນຶ່ງສ່ວນສິບທີ່ເກັບກ່ຽວໄດ້ໃນທຸກໆສາມປີ ຈົ່ງເອົາໃຫ້ຄົນເລວີ ຄົນຕ່າງດ້າວ ລູກກຳພ້າ ແລະແມ່ຫມ້າຍ
ເສັງ ເພື່ອພວກເຂົາຈະໄດ້ກິນອີ່ມຫນຳສຳຣານຕາມຄວາມຕ້ອງການ ເມື່ອທ່ານໃຫ້ຂອງເຫລົ່ານີ້ແລ້ວ
13 ຈົ່ງກາບທູນພຣະຜູ້ເປັນເຈົ້າວ່າ ຂ້າພຣະອົງໄດ້ເອົາຂອງສັກສິດອອກຈາກເຮືອນຫມົດແລ້ວ ໄດ້ເອົາໃຫ້ຄົນເລວີ
ຄົນຕ່າງດ້າວ ລູກກຳພ້າ ແລະແມ່ຫມ້າຍຕາມພຣະອົງຊົງສັ່ງ ບໍ່ໄດ້ລະເມີດ ຫລືຫລົງລືມຄຳສັ່ງຂອງພຣະອົງໃນ
ຂໍ້ໃດເລີຍ
14 ຂ້າພຣະອົງບໍ່ໄດ້ຮັບປະທານຂອງນີ້ເມື່ອເວລາໄວ້ທຸກ ບໍ່ໄດ້ເອົາສ່ວນໃດອອກໄປຖວາຍນອກເຮືອນ ເມື່ອຂ້າພ
ຣະອົງມີມົນທິນ ແລະບໍ່ໄດ້ອຸທິດສ່ວນໃດສຳລັບຄົນຕາຍ ຂ້າພຣະອົງໄດ້ເຊື່ອຟັງພຣະອົງຜູ້ຊົງເປັນພຣະເຈົ້າ ໄດ້
ປະຕິບັດທຸກໆສິ່ງຕາມ  ພຣະອົງຊົງສັ່ງໄວ້
15 ຂໍຊົງທອດພຣະເນດລົງມາຈາກສວັນອັນບໍຣິສຸດ ຂໍຊົງອວຍພຣະພອນໃຫ້ອິສຣາເອນໄພ່ພົນຂອງພຣະອົງ ແລະ
ອວຍພຣະພອນແຜ່ນດິນອັນອຸດົມສົມບູນທີ່ພຣະອົງຊົງປະທານໃຫ້ຂ້າພຣະອົງທັງຫລາຍ ດັ່ງພຣະອົງໄດ້ຊົງສັນ
ຍາໄວ້ກັບບັນພະບຸຣຸດຂອງຂ້າພຣະອົງທັງຫລາຍນັ້ນ

**ຊົນຊາດບໍຣິສຸດແດ່ພຣະຜູ້ເປັນເຈົ້າ**

Concluding Exhortation

16 ວັນນີ້ ພຣະຜູ້ເປັນເຈົ້າຂອງທ່ານຊົງສັ່ງ ໃຫ້ກະທຳຕາມກົດເກນແລະກົດຫມາຍເຫລົ່ານີ້ ສະນັ້ນທ່ານຈົ່ງກະທຳ
ຕາມດ້ວຍສຸດຈິດສຸດໃຈຂອງທ່ານ
17 ໃນວັນນີ້ທ່ານໄດ້ຍອມຮັບແລ້ວວ່າ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະທ່ານຈະດຳເນີນຕາມພຣະມັນຄາ
ຂອງພຣະອົງ ແລະຮັກສາກົດເກນ ພຣະບັນຍັດແລະກົດຫມາຍຂອງພຣະອົງ ແລະຈະເຊື່ອຟັງພຣະສຸຣະສຽງ
ຂອງພຣະອົງ

18 ວັນນີ້ ພຣະຜູ້ເປັນເຈົ້າໄດ້ຊົງຮັບເອົາທ່ານເປັນໄພ່ພົນພິເສດຂອງພຣະອົງຕາມທີ່ຊົງສັນຍາໄວ້ ພ້ອມທັງຊົງສັ່ງ
ໃຫ້ທຳຕາມກົດບັນຍັດທັງຫມົດຂອງພຣະອົງ
19 ແລ້ວພຣະອົງຈະຊົງທຳໃຫ້ຊາດຂອງທ່ານໃຫຍ່ກວ່າທຸກໆຊາດທີ່ໄດ້ສ້າງຂຶ້ນມາ ທ່ານຈະເປັນໄພ່ພົນຜູ້ບໍຣິສຸດ
ຂອງພຣະອົງຕາມທີ່ຊົງສັນຍາໄວ້ ແລະທັງຈະເປັນຜູ້ນຳເອົາກຽດຕິຍົດແລະຊື່ສຽງມາສູ່ພຣະນາມຂອງພຣະອົງ
ດັ່ງທີ່ພຣະອົງຕຣັສແລ້ວ"

## 27 ກົດຫມາຍທີ່ຕ້ອງບັນທຶກໄວ້ເທິງພູເອບານ

The Inscribed Stones and Altar on Mount Ebal

1 ໂມເຊ ແລະພວກຜູ້ໃຫຍ່ຂອງຄົນອິສຣາເອນໄດ້ສັ່ງປະຊາຊົນວ່າ, "ຈົ່ງຮັກສາພຣະບັນຍັດທັງສິ້ນຊຶ່ງຂ້າພະເຈົ້າ
ສັ່ງທ່ານທັງຫລາຍໃນວັນນີ້
2 ໃນວັນທີ່ທ່ານທັງຫລາຍຈະຂ້າມແມ່ນ້ຳຈໍແດນເຂົ້າສູ່ແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານ
ແກ່ທ່ານ ທ່ານຈົ່ງຕັ້ງສິລາກ້ອນໃຫຍ່ໆຂຶ້ນ ໂປະດ້ວຍປູນຂາວ
3 ແລ້ວທ່ານຈົ່ງຈາຣຶກຖ້ອຍຄຳຂອງກົດຫມາຍນີ້ໄວ້ເທິງນັ້ນເມື່ອທ່ານຂ້າມໄປເພື່ອເຂົ້າແຜ່ນດິນຊຶ່ງພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ ແລະແຜ່ນດິນຊຶ່ງມີນ້ຳນົມແລະນ້ຳເຜີ້ງໄຫລບໍຣິບູນ ດັ່ງທີ່ພຣະຜູ້ເປັນ
ເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງທ່ານໄດ້ຊົງສັນຍາໄວ້ກັບທ່ານ
4 ແລະເມື່ອທ່ານຂ້າມແມ່ນ້ຳຈໍແດນໄປແລ້ວ ເທິງພູເຂົາເອບານທ່ານຈົ່ງຕັ້ງສິລາເຫລົ່ານີ້ຕາມເຣື່ອງທີ່ຂ້າພະເຈົ້າ
ສັ່ງທ່ານໃນວັນນີ້ ແລ້ວຈົ່ງໂປະເສັຽດ້ວຍປູນຂາວ
5 ແລະທ່ານຈົ່ງສ້າງແທ່ນບູຊາແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງທ່ານທີ່ນັ້ນ ເປັນແທ່ນສິລາ ຢ່າໃຊ້ເຄື່ອງມືເຫລັກ
ສະກັດສິລານັ້ນ
6 ທ່ານຈົ່ງສ້າງແທ່ນບູຊາແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານດ້ວຍສິລາທີ່ບໍ່ຕ້ອງຕົກແຕ່ງ ແລະທ່ານຈົ່ງຖວາຍ
ເຄື່ອງເຜົາບູຊາເທິງແທ່ນນັ້ນແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
7 ແລະທ່ານຈົ່ງຖວາຍສານຕິບູຊາ ແລະຮັບປະທານເສັຽທີ່ນັ້ນ ແລະທ່ານຈົ່ງຊົມຊື່ນຍິນດີຕໍ່ພຣະຜູ້ເປັນເຈົ້າພຣະ
ເຈົ້າຂອງທ່ານ
8 ແລະທ່ານຈົ່ງຈາຣຶກບັນດາຖ້ອຍຄຳຂອງກົດຫມາຍນີ້ເທິງສິລານັ້ນຢ່າງຊັດເຈນ"
9 ໂມເຊແລະປະໂຣຫິດຄົນເລວີໄດ້ກ່າວແກ່ຄົນອິສຣາເອນທັງຫລາຍວ່າ, "ໂອ ອິສຣາເອນ ຈົ່ງງຽບແລະສະດັບ
ຮັບຟັງ ວັນນີ້ທ່ານທັງຫລາຍໄດ້ເປັນໄພ່ພົນຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
10 ເຫດສັນນັ້ນ ທ່ານຈົ່ງເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຄືຮັກສາພຣະບັນຍັດແລະ
ກົດເກນຂອງພຣະອົງ ຊຶ່ງຂ້າພະເຈົ້າສັ່ງທ່ານໄວ້ໃນວັນນີ້"

### ຄຳສາບແຊ່ງທີ່ພູເຂົາເອບານ

Twelve Curses

11 ໃນວັນດຽວກັນນັ້ນໂມເຊໄດ້ກຳຊັບປະຊາຊົນວ່າ,
12 "ເມື່ອທ່ານທັງຫລາຍຍົກຂ້າມແມ່ນ້ຳຈໍແດນນັ້ນແລ້ວໃຫ້ຄົນຕໍ່ໄປນີ້ຢືນເທິງພູເຂົາເກຣິຊິມກ່າວຄຳອວຍພອນ
ແກ່ປະຊາຊົນ ຄືຊີເມໂອນ ເລວີ ຢູດາ ອິສຊາຄາ ໂຢເຊັບ ແລະເບັນຢາມິນ
13 ແລະໃຫ້ຄົນຕໍ່ໄປນີ້ຢືນແຊ່ງຢູ່ເທິງພູເຂົາເອບານ ຄືຣູເບນ ກາດ ອາເຊີ ເຊບູລູນ ດານ ແລະເນັຟທາລີ
14 ແລະໃຫ້ຄົນເລວີກ່າວປະກາດແກ່ປະຊາຊົນດ້ວຍສຽງອັນດັງ

15 “ຜູ້ໃດທີ່ກະທຳຮູບໂຄຣົບເປັນຮູບສລັກ ຫລືຮູບຫລໍ່ ຊຶ່ງເປັນສິ່ງທີ່ໜ້າລັງກຽດແດ່ພຣະຜູ້ເປັນເຈົ້າ ເປັນສິ່ງທີ່ທຳ
ດ້ວຍສີມື ຊ່າງ ແລະຕັ້ງໄວ້ຢ່າງລັບໆໃຫ້ຜູ້ນັ້ນຖືກສາບແຊ່ງ” ໃຫ້ປະຊາຊົນທັງປວງຕອບພ້ອມກັນແລະກ່າວ
ວ່າ “ອາແມນ”
16 “ຜູ້ໃດໝິ່ນປມາດພໍ່ຂອງຕົນ ຫລືແມ່ຂອງຕົນ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມກັນ
ວ່າ “ອາແມນ”
17 “ຜູ້ໃດທີ່ຍັບຍ້າຍເສົາເຂດຂອງເພື່ອນບ້ານ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວວ່າ “ອາແມນ”
18 “ຜູ້ໃດທຳໃຫ້ຄົນຕາບອດຫລົງທາງ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ “ອາ
ແມນ”
19 “ຜູ້ໃດທຳໃຫ້ເສັຽຄວາມຍຸດຕິທັມອັນຄວນໄດ້ແກ່ຄົນຕ່າງດ້າວ ລູກກຳພ້າ ແລະແມ່ໝ້າຍ ໃຫ້ຜູ້ນັ້ນຮັບຄຳສາບ
ແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ “ອາແມນ”
20 “ຜູ້ໃດສົມສູ່ຢູ່ກັບພັຣຍາຂອງພໍ່ຕົນ ເພາະເຂົາໄດ້ເປີດຜ້າຂອງນາງຜູ້ເປັນຂອງພໍ່ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້
ປະຊາຊົນທັງປວງກ່າວວ່າ “ອາແມນ”
21 “ຜູ້ໃດສົມສູ່ກັບສັດເດັຽຣະສານຊະນິດໃດໆກໍຕາມ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມ
ກັນວ່າ “ອາແມນ”
22 “ຜູ້ໃດທີ່ສົມສູ່ກັບເອື້ອຍ ຫລືນ້ອງສາວ ຈະເປັນບຸດສາວຂອງບິດາ ຫລືບຸດສາວຂອງມານດາຂອງຕົນກໍຕາມ ໃຫ້
ຜູ້ນັ້ນໄດ້ຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ “ອາແມນ
23 “ຜູ້ໃດສົມສູ່ກັບແມ່ເຖົ້າຂອງຕົນ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນກ່າວພ້ອມກັນວ່າ “ອາແມນ”
24 “ຜູ້ໃດຂ້າເພື່ອນບ້ານຂອງຕົນຢ່າງລັບໆ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມກັນວ່າ “ອາ
ແມນ”
25 ຜູ້ໃດຮັບສິນບົນໃຫ້ຂ້າບຸກຄົນທີ່ບໍ່ໄດ້ກະທຳຜິດ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງປວງກ່າວພ້ອມກັນ
ວ່າ “ອາແມນ”
26 “ຜູ້ໃດບໍ່ດຳຣົງຖ້ອຍຄຳແຫ່ງທັມບັນຍັດນີ້ໂດຍການກະທຳຕາມ ໃຫ້ຜູ້ນັ້ນຮັບຄຳສາບແຊ່ງ” ໃຫ້ປະຊາຊົນທັງ
ປວງກ່າວພ້ອມກັນວ່າ “ອາແມນ”

## 28 ຜົນດີຂອງການເຊື່ອຟັງ

Blessings for Obedience

(ລລວ 26:1-13; ພບຍ7:12-24)

1 “ຖ້າທ່ານທັງຫລາຍເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະລະວັງທີ່ຈະກະທຳ
ຕາມພຣະບັນຍັດຂອງພຣະອົງຊຶ່ງຂ້າພະເຈົ້າສັ່ງທ່ານໃນວັນນີ້ ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຈະຊົງຕັ້ງ
ທ່ານໄວ້ໃຫ້ສູງກວ່າບັນດາປະຊາຊາດທັງຫລາຍທົ່ວໂລກ
2 ພຣະພອນເຫລົ່ານີ້ຈະຕາມມາທັນທ່ານ ຖ້າທ່ານທັງຫລາຍຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າ
ຂອງທ່ານ
3 ທ່ານທັງຫລາຍຈະຮັບພຣະພອນໃນເມືອງ ທ່ານທັງຫລາຍຈະຮັບພຣະພອນໃນທົ່ງນາ
4 ເຊື້ອສາຍຂອງຕົວທ່ານເອງ ຜົນແຫ່ງພື້ນດິນຂອງທ່ານ ແລະພັນແຫ່ງສັດຂອງທ່ານຈະຮັບພຣະພອນ ຄືຝູງງົວ
ຂອງທ່ານທີ່ເພີ້ມຂຶ້ນ ຝູງແກະຂອງທ່ານທີ່ເພີ້ມລູກຂຶ້ນ
5 ຖາດຂອງທ່ານ ແລະຮາງນວດແປ້ງຂອງທ່ານຈະຮັບພຣະພອນ
6 ທ່ານຈະຮັບພຣະພອນເມື່ອທ່ານເຂົ້າມາ ແລະທ່ານຈະຮັບພຣະພອນເມື່ອທ່ານອອກໄປ

7 “ພຣະຜູ້ເປັນເຈົ້າຈະຊົງກະທຳໃຫ້ສັດຕຣູຜູ້ລຸກຂຶ້ນຕໍ່ສູ້ທ່ານຝ່າຍແພ້ແກ່ທ່ານ ເຂົາຈະອອກມາຕໍ່ສູ້ທ່ານທາງນຶ່ງ ແລະໜີຈາກທ່ານເຈັດທາງ

8 ພຣະຜູ້ເປັນເຈົ້າຈະຊົງບັນຊາພຣະພອນໃຫ້ແກ່ສາງຂອງທ່ານ ແລະບັນດາກິຈການທີ່ທ່ານກະທຳ ແລະພຣະອົງຈະຊົງອວຍພຣະພອນແດ່ທ່ານໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ

9 ພຣະຜູ້ເປັນເຈົ້າຈະຊົງຕັ້ງທ່ານໃຫ້ເປັນຊົນຊາດບໍຣິສຸດແດ່ພຣະອົງ ດັ່ງທີ່ພຣະອົງຊົງປະຕິຍານແກ່ທ່ານແລ້ວ ຖ້າທ່ານຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະດຳເນີນໃນທາງຂອງພຣະອົງ

10 ແລະຊົນຊາດທັງຫລາຍໃນໂລກຈະເຫັນວ່າເຂົາເອີ້ນທ່ານຕາມພຣະນາມພຣະຜູ້ເປັນເຈົ້າ ແລະເຂົາທັງຫລາຍຈະເກງກົວທ່ານ

11 ພຣະຜູ້ເປັນເຈົ້າຈະຊົງກະທຳໃຫ້ທ່ານທັງຫລາຍອຸດົມສົມບູນໄປດ້ວຍເຊື້ອສາຍຂອງຕົວທ່ານເອງ ຜົນຂອງຝູງສັດຂອງທ່ານແລະຜົນແຫ່ງພື້ນດິນຂອງທ່ານ ໃນແຜ່ນດິນຊຶ່ງພຣະຜູ້ເປັນເຈົ້າຊົງປະຕິຍານແກ່ບັນພະບຸຣຸດວ່າຈະໃຫ້ທ່ານ

12 ພຣະເຈົ້າຈະເປີດຄັງຟ້າອັນດີຂອງພຣະອົງ ປະທານຝົນແກ່ທ່ານຕາມຣະດູການແລະຊົງອວຍພຣະພອນແກ່ກິຈການນ້ຳມືຂອງທ່ານ ແລະທ່ານຈະໃຫ້ປະຊາຊາດຫລາຍປະຊາກຊາດຂໍຢືມ ແຕ່ທ່ານຈະບໍ່ຂໍຢືມເຂົາ

13 ຖ້າທ່ານເຊື່ອຟັງພຣະບັນຍັດຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຊຶ່ງຂ້າພະເຈົ້າສັ່ງທ່ານໃນວັນນີ້ ແລະລະວັງທີ່ຈະກະທຳຕາມ ພຣະຜູ້ເປັນເຈົ້າຈະຊົງກະທຳໃຫ້ທ່ານເປັນຫົວ ບໍ່ແມ່ນເປັນຫາງ ກະທຳໃຫ້ສູງຂຶ້ນທາງດຽວ ບໍ່ແມ່ນຕ່ຳລົງ

14 ແລະຖ້າທ່ານບໍ່ຫັນໜີໄປຈາກຖ້ອຍຄຳຊຶ່ງຂ້າພະເຈົ້າສັ່ງທ່ານໃນວັນນີ້ ໂດຍຫັນໄປທາງຂວາມືຫລືທາງຊ້າຍມື ໄປຕິດຕາມນິວລະບັດພຣະອື່ນ

**ຜົນສນອງຂອງການບໍ່ເຊື່ອຟັງ**

15 “ແຕ່ຖ້າທ່ານບໍ່ເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ແລະບໍ່ລະວັງທີ່ຈະກະທຳຕາມພຣະບັນຍັດທັງສິ້ນຂອງພຣະອົງ ແລະພຣະຣາຊກຳນົດກົດເກນຂອງພຣະອົງ ຊຶ່ງຂ້າພະເຈົ້າສັ່ງທ່ານໃນວັນນີ້ ແລ້ວຄຳສາບແຊ່ງເຫລົ່ານີ້ຈະຕາມມາທັນທ່ານ

16 ທ່ານທັງຫລາຍຈະຮັບຄຳສາບແຊ່ງໃນເມືອງ ທ່ານທັງຫລາຍຈະຮັບຄຳສາບແຊ່ງໃນທົ່ງນາ

17 ຖາດຂອງທ່ານ ແລະຣາງນວດແປ້ງຂອງທ່ານຈະຮັບຄຳສາບແຊ່ງ

18 ເຊື້ອສາຍຂອງຕົວທ່ານເອງຈະຮັບຄຳສາບແຊ່ງ ຜົນແຫ່ງພື້ນດິນຂອງທ່ານ ຝູງງົວຂອງທ່ານທີ່ເພີ້ມຂຶ້ນ ຝູງແກະຂອງທ່ານທີ່ເພີ້ມຈະຮັບຄຳສາບແຊ່ງ

19 ທ່ານຈະຮັບຄຳສາບແຊ່ງເມື່ອທ່ານເຂົ້າມາ ແລະທ່ານຈະຮັບຄຳສາບແຊ່ງເມື່ອທ່ານອອກໄປ

20 “ພຣະຜູ້ເປັນເຈົ້າຈະຊົງບັນດານໃຫ້ຄຳສາບແຊ່ງ ຄວາມວຸ້ນວາຍ ແລະການລົບລ້າງມີຂຶ້ນແກ່ກິຈການທີ່ທ່ານກະທຳຈົນທ່ານຈະຖືກທຳລາຍແລະພິນາດຢ່າງໄວໆ ເຫດດ້ວຍຄວາມຊົ່ວຊຶ່ງທ່ານໄດ້ກະທຳ ເພາະເຈົ້າໄດ້ປະຖິ້ມເຮົາເສັຽ

21 ພຣະຜູ້ເປັນເຈົ້າຈະຊົງບັນດານໃຫ້ໂຣກຮ້າຍຕິດພັນທ່ານ ຈົນພຣະອົງຈະຊົງເຜົາຜານທ່ານໃຫ້ສິ້ນເສັຽຈາກແຜ່ນດິນ ຊຶ່ງທ່ານເຂົ້າໄປຍຶດຄອງນັ້ນ

22 ພຣະຜູ້ເປັນເຈົ້າຈະຊົງຊົງນຕີທ່ານ ດ້ວຍພຍາດຕິດຕໍ່ ພຍາດອັກເສບ ແລະຄວາມເຈັບໄຂ້ໄດ້ປ່ວຍ ນອກນີ້ພຣະອົງຍັງຈະໃຫ້ເກີດການແຫ້ງແລ້ງ ແລະແມງໄມ້ຈະມາທຳລາຍເຄື່ອງປູກຂອງຝັງຂອງທ່ານຈົນສິ້ນ ແລະສິ່ງເຫລົ່ານີ້ຈະຕິດຕາມທ່ານໄປຈົນທ່ານພິນາດ

23 ແລະຟ້າສວັນທີ່ຢູ່ເຫນືອຫົວຂອງທ່ານຈະເປັນທອງເຫລືອງ ແລະແຜ່ນດິນທີ່ຢູ່ໃຕ້ທ່ານຈະເປັນເຫລັກ

24 ພຣະຜູ້ເປັນເຈົ້າຈະຊົງບັນດານໃຫ້ຝົນໃນແຜ່ນດິນຂອງທ່ານເປັນຝຸ່ນແລະລະອອງ ລົງມາຈາກອາກາດຢູ່ເຫນືອ
ທ່ານທັງຫລາຍຈົນກວ່າທ່ານຈະຖືກທຳລາຍ
25 “ພຣະຜູ້ເປັນເຈົ້າຈະຊົງກະທຳໃຫ້ທ່ານຜ່າຍແພ້ຕໍ່ສັດຕຣູຂອງທ່ານ ທ່ານຈະອອກໄປຕໍ່ສູ້ເຂົາທາງດຽວ ແຕ່ຈະ
ຫນີຈາກເຂົາເຈັດທາງ ແລະທ່ານທັງຫລາຍຈະເປັນທີ່ຫນ້າສຍົດສຍອງຍິ່ງກວ່າບັນດາຣາຊອານາຈັກທົ່ວໂລກ
26 ຊາກສົບຂອງທ່ານທັງຫລາຍຈະເປັນອາຫານຂອງນົກໃນອາກາດ ແລະສຳລັບສັດປ່າໃນໂລກ ແລະບໍ່ມີຜູ້ໃດ
ຂັບໄລ່ຝູງສັດເຫລົ່ານັ້ນໄປ
27 ພຣະຜູ້ເປັນເຈົ້າຈະຊົງຂ້ຽນຕີທ່ານ ດ້ວຍຝີເອຢິບດ້ວຍແຜຮ້າຍ ຈະມີເກັດເຕັມຕົວ ແລະໂຣກຄັນຊຶ່ງຮັກສາບໍ່ໄດ້
28 ພຣະຜູ້ເປັນເຈົ້າຈະຊົງຂ້ຽນຕີທ່ານດ້ວຍໂຣກວິກົນຈິດ ໂຣກຕາບອດ ແລະໃຫ້ຈິດໃຈສັບສົນວຸ້ນວາຍ
29 ທ່ານຈະຕ້ອງຄຳໄປໃນເວລາທ່ຽງ ເຫມືອນຄົນຕາບອດຄຳໄປໃນຄວາມມືດ ແລະທ່ານຈະບໍ່ມີຄວາມຈະເຣີນ
ໃນຫົນທາງຂອງທ່ານ ທ່ານຈະຖືກບີບຄັ້ນແລະຖືກປຸ້ນຢູ່ສເມີ ແລະຈະບໍ່ມີໃຜຊ່ອຍທ່ານໄດ້ເລີຍ
30 ທ່ານຈະຫມັ້ນຍິງຄົນນຶ່ງໄວ້ເປັນພັຣຍາ ແລະຊາຍອື່ນຈະເຂົ້າໄປສົມສູ່ກັບນາງ ທ່ານຈະກໍ່ສ້າງເຮືອນ ແຕ່ຈະບໍ່
ໄດ້ອາໄສຢູ່ໃນນັ້ນ ທ່ານຈະປູກສວນອະງຸ່ນ ແຕ່ທ່ານຈະບໍ່ໄດ້ກິນຫມາກເລີຍ
31 ຄົນຈະຂ້າງົວຂອງທ່ານຕໍ່ຫນ້າຕໍ່ຕາທ່ານ ທ່ານຈະບໍ່ໄດ້ຮັບປະທານຊີ້ນງົວນັ້ນ ເຂົາຈະມາຍາດຊີງລໍໄປຕໍ່ຫນ້າຕໍ່
ຕາທ່ານ ແລະເຂົາຈະບໍ່ເອົາກັບຄືນມາໃຫ້ທ່ານ ຝູງແບ້ ແກະຂອງທ່ານຈະຕ້ອງເອົາໄປໃຫ້ສັດຕຣູຂອງທ່ານ
ແລະຈະບໍ່ມີໃຜຊ່ອຍທ່ານໄດ້ເລີຍ
32 ເຂົາຈະເອົາບຸດຊາຍແລະບຸດຍິງຂອງທ່ານໄປໃຫ້ແກ່ປະຊາຊາດອື່ນ ສ່ວນຕາຂອງທ່ານຈະມອງເບິ່ງແລະມືດ
ມົວລົງດ້ວຍຄວາມອາລັຍອາວອນຕລອດເວລາ ອຳນາດນ້ຳມືຂອງທ່ານກໍບໍ່ສາມາດຈະປ້ອງກັນໄດ້
33 ຊົນຊາດທີ່ທ່ານບໍ່ເຄີຍຮູ້ຈັກມາແຕ່ກ່ອນຈະມາຮັບປະທານພືດຜົນແຫ່ງແຜ່ນດິນຂອງທ່ານ ແລະກິນຜົນແຫ່ງ
ແຜ່ນດິນຂອງທ່ານ ແລະກິນຜົນງານຂອງທ່ານ ເຂົາຈະບີບຄັ້ນແລະຢຽບຢ່ຳທ່ານສເມີໄປ
34 ດັ່ງນັ້ນພາບທີ່ທ່ານເຫັນຈຶ່ງຈະກະທຳໃຫ້ທ່ານບ້າປ່ວງໄປ
35 ເພາະພຣະຜູ້ເປັນເຈົ້າຈະຊົງຂ້ຽນຕີທ່ານ ດ້ວຍຝີຮ້າຍທີ່ຫົວເຂົ່າ ແລະທີ່ຂາ ຊຶ່ງທ່ານຈະຮັກສາໃຫ້ຫາຍບໍ່ໄດ້
ເປັນຕັ້ງແຕ່ສົ້ນຕີນຈົນເຖິງກະຫມ່ອມຂອງທ່ານ
36 “ພຣະຜູ້ເປັນເຈົ້າຈະຊົງນຳທ່ານ ແລະກະສັດຜູ້ທີ່ທ່ານແຕ່ງຕັ້ງໄວ້ເຫນືອທ່ານນັ້ນໄປຍັງປະຊາຊາດຊຶ່ງທ່ານ
ແລະບັນພະບຸຣຸດຂອງທ່ານບໍ່ຮູ້ຈັກມາກ່ອນໃນທີ່ນັ້ນທ່ານຈະບົວລະບັດພຣະອື່ນທີ່ທຳດ້ວຍໄມ້ ແລະດ້ວຍຫີນ
37 ທ່ານຈະເປັນທີ່ຫນ້າຢ້ານກົວ ເປັນພາສິດ ເປັນຂີ້ປາກຖ້າມກາງຊົນຊາດທັງຫລາຍທີ່ພຣະຜູ້ເປັນເຈົ້າຊົງພາກ
ທ່ານໄປນັ້ນ
38 ທ່ານຈະຕ້ອງເອົາພືດໄປຫວ່ານໄວ້ໃນນາຫລາຍແລະເກັບຜົນເຂົ້າມາແຕ່ຫນ້ອຍ ເພາະຕັກແຕນໃຫຍ່ຈະກັດ
ກິນເສັຽ
39 ທ່ານຈະປູກແລະແຕ່ງຕົ້ນອະງຸ່ນ ແຕ່ທ່ານຈະບໍ່ໄດ້ດື່ມເຫລົ້າອະງຸ່ນ ຫລືເກັບຜົນເຂົ້າມາ ເພາະຕົວຫນອນຈະ
ກິນມັນເສັຽ
40 ທ່ານຈະມີຕົ້ນຫມາກກອກເທດຢູ່ທົ່ວອານາເຂດຂອງທ່ານ ແຕ່ທ່ານຈະບໍ່ໄດ້ນ້ຳມັນມາຊະໂລມຕົວທ່ານ ເພາະ
ວ່າຜົນຫມາກກອກເທດຂອງທ່ານຈະຮ່ວງຫລົ່ນເສັຽ
41 ທ່ານຈະມີບຸດຊາຍແລະບຸດຍິງ ແຕ່ຈະບໍ່ເປັນຂອງທ່ານ ເພາະເຂົາຈະຕົກໄປເປັນຊະເລີຍ
42 ຕົ້ນໄມ້ທັງຫລາຍຂອງທ່ານ ແລະຜົນຈາກພື້ນດິນຂອງທ່ານນັ້ນ ຕັກແຕນຈະຖືກຳມະສິດ
43 ຄົນຕ່າງດ້າວຊຶ່ງຢູ່ຖ້າມກາງທ່ານ ຈະສູງຂຶ້ນໄປເຫນືອທ່ານແລະທ່ານຈະຕ່ຳລົງ
44 ເຂົາຈະໃຫ້ທ່ານທັງຫລາຍຢືມເຄື່ອງຂອງຂອງເຂົາໄດ້ ແລະທ່ານຈະບໍ່ມີໃຫ້ເຂົາຢືມ ເຂົາຈະເປັນຫົວ ແລະທ່ານ
ຈະເປັນຫາງ

45 ຄຳສາບແຊ່ງທັງຫມົດນີ້ຈະຕາມຫາທ່ານ ແລະຕາມທັນທ່ານຈົນກວ່າທ່ານຈະຖືກທຳລາຍ ເພາະວ່າທ່ານບໍ່ເຊື່ອ
ຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທີ່ຈະຮັກສາພຣະບັນຍັດແລະກົດລະບຽບຂອງພຣະ
ອົງຊຶ່ງພຣະອົງບັນຊາທ່ານໄວ້
46 ສິ່ງເຫລົ່ານີ້ຈະເປັນຫມາຍສຳຄັນ ແລະການອັດສະຈັນຢູ່ເຫນືອທ່ານ ແລະເຫນືອເຊື້ອສາຍຂອງທ່ານເປັນນິດ
47 “ເພາະທ່ານບໍ່ໄດ້ບົວລະບັດພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານດ້ວຍຄວາມລົ້ນເລີງແລະໃຈຍິນດີ ເພາະເຫດມີ
ສິ່ງສາຣະພັດບໍຣິບູນ
48 ເພາະສະນັ້ນທ່ານຈຶ່ງຕ້ອງບົວລະບັດສັດຕຣູຂອງທ່ານ ຊຶ່ງພຣະຜູ້ເປັນເຈົ້າຈະຊົງໃຊ້ມາຕໍ່ສູ້ທ່ານ ດ້ວຍຄວາມ
ຫິວແລະກະຫາຍ ເປືອຍກາຍແລະຂັດສົນທຸກຢ່າງ ແລະພຣະອົງຈະຊົງວາງແອກເຫລັກເທິງຄໍຂອງທ່ານ ຈົນ
ກວ່າພຣະອົງຈະທຳລາຍທ່ານເສັຽສິ້ນ
49 ພຣະຜູ້ເປັນເຈົ້າຈະຊົງນຳປະຊາຊາດນຶ່ງມາຕໍ່ສູ້ກັບທ່ານຈາກທາງໄກ ຈາກທີ່ສຸດປາຍແຜ່ນດິນໂລກ ໄວ
ເຫມືອນນົກອິນຊີບິນມາ ເປັນປະຊາຊາດທີ່ທ່ານບໍ່ຮູ້ຈັກພາສາຂອງເຂົາ
50 ເປັນປະຊາຊາດທີ່ມີຫນ້າຕາໂຫດຮ້າຍ ຄືຜູ້ຊຶ່ງບໍ່ໂຄຣົບຄົນເຖົ້າ ແລະບໍ່ພໍໃຈຫນຸ່ມສາວ
51 ແລະຈະຮັບປະທານລູກສັດຂອງທ່ານແລະພືດຜົນຈາກພື້ນດິນຂອງທ່ານຈົນທ່ານຈະຖືກທຳລາຍ ທັງເຂົາຈະບໍ່
ເຫລືອເຂົ້າ ເຫລົ້າອະງຸ່ນ ຫລືນ້ຳມັນ ລູກງົວ ຫລືລູກແກະອ່ອນໄວ້ໃຫ້ທ່ານ ຈົນກວ່າເຂົາຈະກະທຳໃຫ້ທ່ານພິ
ນາດ
52 ເຂົາຈະລ້ອມທ່ານໄວ້ທຸກຫົວເມືອງຈົນກຳແພງສູງ ແລະເຂັ້ມແຂງຊຶ່ງທ່ານໄວ້ວາງໃຈນັ້ນພັງທະລາຍລົງທົ່ວ
ແຜ່ນດິນຂອງທ່ານ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ
53 ທ່ານຈະຕ້ອງຮັບປະທານເຊື້ອສາຍແຫ່ງຮ່າງກາຍຂອງທ່ານເປັນອາຫານ ຄືເນື້ອລູກຊາຍແລະລູກຍິງຂອງທ່ານ
ຜູ້ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານປະທານແກ່ທ່ານ ໃນການລ້ອມແລະໃນຄວາມທຸກລຳບາກຊຶ່ງສັດຕຣູ
ຂອງທ່ານມາທຳໃຫ້ທ່ານທັງຫລາຍທຸກລຳບາກນັ້ນ
54 ຜູ້ຊາຍຮັ່ງມີ ແລະສະງ່າເຫລືອເກີນໃນຫມູ່ພວກທ່ານທັງຫລາຍຈະຫວງອາຫານບໍ່ໃຫ້ພີ່ນ້ອງຂອງຕົນ ບໍ່ໃຫ້ເມັຽ
ທີ່ຢູ່ໃນອ້ອມເອິກຂອງຕົນ ແລະບໍ່ໃຫ້ລູກໆຄົນສຸດທ້າຍທີ່ເຂົາເຫລືອຢູ່ກັບຕົນ
55 ຈົນເຂົາຈະບໍ່ຍອມໃຫ້ໃຜກິນເນື້ອລູກຂອງຕົນຊຶ່ງກຳລັງກິນຢູ່ ເພາະບໍ່ມີສິ່ງໃດເຫລືອໃຫ້ເຂົາອີກແລ້ວ ໃນການ
ລ້ອມແລະໃນຄວາມທຸກລຳບາກຊຶ່ງສັດຕຣູຂອງທ່ານມາທຳໃຫ້ທ່ານທັງຫລາຍທຸກລຳບາກທຸກຫົວເມືອງ
56 ຜູ້ຍິງຖານະສູງທີ່ລ້ຳຣວຍຮັ່ງມີໃນຫມູ່ພວກທ່ານ ຈະຫວງບໍ່ໃຫ້ສາມີໃນອ້ອມເອິກຂອງນາງ ແລະບໍ່ໃຫ້ບຸດຊາຍ
ແລະບຸດຍິງຂອງນາງ
57 ໄດ້ສາຍແຮ່ຊຶ່ງອອກມາຈາກຫວ່າງຂາຂອງນາງແລະລູກນ້ອຍທີ່ຫາກໍ່ເກີດໃຫມ່ໆ ເພາະວ່ານາງຈະກິນເປັນອາ
ຫານຢ່າງງຽບໆ ເພາະຂັດສົນທຸກຢ່າງ ໃນການຖືກປິດລ້ອມແລະໃນຄວາມທຸກລຳບາກ ຊຶ່ງສັດຕຣູຂອງທ່ານ
ມາທຳໃຫ້ທ່ານທັງຫລາຍທຸກລຳບາກທຸກຫົວເມືອງ
58 “ຖ້າທ່ານທັງຫລາຍບໍ່ລະວັງທີ່ຈະກະທຳຕາມຖ້ອຍຄຳຂອງທັມບັນຍັດຊຶ່ງຂຽນໄວ້ໃນຫນັງສືເຫລັ້ມນີ້ ທີ່ຈະໃຫ້ຢ
ຳເກງພຣະນາມທີ່ຊົງປະເສີດແລະຫນ້າເກງກົວນີ້ ຄືພຣະນາມພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
59 ແລ້ວພຣະຜູ້ເປັນເຈົ້າຈະຊົງນຳມາສູ່ທ່ານ ແລະລູກຫລານຂອງທ່ານຊຶ່ງຄວາມທຸກໃຈຢ່າງຜິດທຳມະດາ ຄວາມ
ທຸກໃຈຮ້າຍແຮງ ແລະຊ້ານານ
60 ແລະພຣະອົງຈະຊົງນຳໂຣກທັງຫລາຍແຫ່ງເອຢິບ ຊຶ່ງທ່ານຢ້ານກົວນັ້ນມາສູ່ທ່ານອີກ ແລະມັນຈະຕິດພັນທ່ານ
ຢູ່
61 ໂຣກທຸກຢ່າງແລະຄວາມທຸກໃຈທຸກຢ່າງ ຊຶ່ງບໍ່ໄດ້ລະບຸໄວ້ໃນຫນັງສືນີ້ ພຣະຜູ້ເປັນເຈົ້າຈະຊົງນຳມາຍັງທ່ານ
ຈົນກວ່າທ່ານທັງຫລາຍຈະຖືກທຳລາຍ

62 ຊຶ່ງພວກທ່ານທັງຫລາຍມີຫລວງຫລາຍຢ່າງດວງດາວໃນທ້ອງຟ້ານັ້ນ ທ່ານກໍຈະເຫລືອແຕ່ຈໍານວນຫນ້ອຍ
ເພາະວ່າທ່ານບໍ່ເຊື່ອຟັງພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ
63 ຊຶ່ງພຣະຜູ້ເປັນເຈົ້າພໍພຣະທັຍທີ່ຈະຊົງກະທໍາດີຕໍ່ທ່ານ ແລະອວຍພຣະພອນໃຫ້ແກ່ທ່ານທະວີມາກຂຶ້ນນັ້ນ ພ
ຣະອົງກໍຈະຊົງພໍພຣະທັຍທີ່ຈະຊົງໃຫ້ທ່ານພິນາດແລະທໍາລາຍທ່ານເສັຽເຊັ່ນດຽວກັນ ທ່ານຈະຕ້ອງຖືກເດັດຖິ້ມ
ໄປເສັຽຈາກແຜ່ນດິນຊຶ່ງທ່ານກໍາລັງຈະເຂົ້າໄປຍຶດຄອງນັ້ນ
64 ແລະພຣະຜູ້ເປັນເຈົ້າຈະຊົງກະທໍາໃຫ້ທ່ານທັງຫລາຍກະຈັດກະຈາຍໄປຖ້າມກາງຊົນຊາດທັງຫລາຍ ຕັ້ງແຕ່ທີ່
ສຸດປາຍໂລກຂ້າງນີ້ໄປເຖິງຂ້າງນັ້ນໃນທີ່ນັ້ນທ່ານຈະບົວລະບັດພຣະອື່ນໆຊຶ່ງທ່ານແລະບັນພະບຸຣຸດຂອງທ່ານ
ບໍ່ຮູ້ຈັກ ຄືພຣະຊຶ່ງທໍາດ້ວຍໄມ້ແລະສີລາ
65 ເມື່ອທ່ານຢູ່ຖ້າມກາງປະຊາຊາດຕ່າງໆນັ້ນ ທ່ານຈະບໍ່ພົບຄວາມສະບາຍເລີຍ ສົ້ນຕີນຂອງທ່ານຈະບໍ່ມີທີ່ຢຸດ
ພັກ ເພາະພຣະຜູ້ເປັນເຈົ້າຈະປະທານໃຫ້ທ່ານມີຈິດໃຈທີ່ຫວາດຫວັ່ນ ມີຕາທີ່ມືດມົວລົງ ແລະມີຊີວິດທີ່
ຄ່ອຍສິ້ນຫວັງລົງ
66 ແລະຊີວິດຂອງທ່ານກໍຈະແຂວນຢູ່ຂ້າງຫນ້າທ່ານຢ່າງສົງໄສ ທ່ານຈະຢ້ານກົວຢູ່ທັງກາງຄືນແລະກາງເວັນບໍ່ມີ
ຄວາມແນ່ໃຈໃນຊີວິດຂອງທ່ານເລີຍ
67 ໃນຕອນເຊົ້າທ່ານຈະກ່າວວ່າ, “ຖ້າເປັນເວລາຄໍ່າກໍຈະຍິນດີ” ແລະໃນເວລາຄໍ່າທ່ານຈະກ່າວວ່າ,”ຖ້າເປັນຕອນ
ເຊົ້າກໍຈະດີ” ເພາະຄວາມຢ້ານກົວທີ່ທ່ານມີຢູ່ນັ້ນ ແລະເພາະສິ່ງທີ່ຕາທ່ານຈະເຫັນ
68 ແລະພຣະຜູ້ເປັນເຈົ້າຈະນໍາທ່ານກັບມາທາງເຮືອເຖິງເອຢິບ ເປັນການເດີນທາງຊຶ່ງຂ້າພະເຈົ້າໄດ້ສັນຍາວ່າ
ທ່ານຈະບໍ່ພົບເຫັນອີກເລີຍ ໃນທີ່ນັ້ນທ່ານຈະຕ້ອງມອບຕົວຂາຍໃຫ້ສັດຕຣູເປັນທາດຊາຍແລະທາດຍິງ ແຕ່ຈະ
ບໍ່ມີຜູ້ໃດຊື້ທ່ານ”

## 29 ຄໍາຫມັ້ນສັນຍາຂອງພຣະເຈົ້າຕໍ່ອິສຣາເອນໃນແຜ່ນດິນໂມອາບ

1 ຕໍ່ໄປນີ້ເປັນຖ້ອຍຄໍາໃນຄໍາຫມັ້ນສັນຍາຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໂມເຊໃຫ້ກະທໍາກັບຄົນອິສຣາເອນໃນ
ແຜ່ນດິນໂມອາບ ນອກເຫນືອຄໍາຫມັ້ນສັນຍາຊຶ່ງພຣະອົງຊົງກະທໍາກັບເຂົາທີ່ໂຮເຣັບ

The Covenant Renewed in Moab

2 ໂມເຊຮຽກບັນດາຄົນອິສຣາເອນມາ ແລະກ່າວແກ່ເຂົາວ່າ, “ທ່ານທັງຫລາຍໄດ້ເຫັນທຸກສິ່ງດ້ວຍຕາຂອງທ່ານ
ຊຶ່ງພຣະເຈົ້າຊົງກະທໍາໃນປະເທດເອຢິບ ຕໍ່ຟາຣາໂອແລະຕໍ່ຂ້າຣາຊບໍຣິພານຂອງທ່ານທັງສິ້ນ
3 ທັງການທົດລອງໃຫຍ່ຊຶ່ງຕາຂອງທ່ານໄດ້ເຫັນ ທັງຫມາຍສໍາຄັນແລະການອັສຈັນຍິ່ງໃຫຍ່ເຫລົ່ານັ້ນ
4 ແຕ່ຈົນເຖິງວັນນີ້ພຣະຜູ້ເປັນເຈົ້າປະທານຈິດໃຈທີ່ເຂົ້າໃຈ ຕາທີ່ເບິ່ງເຫັນໄດ້ ແລະຫູທີ່ຍິນໄດ້ໃຫ້ແກ່ທ່ານ
5 ເຮົາໄດ້ນໍາເຈົ້າຢູ່ໃນຖິ່ນກັນດານສີ່ສິບປີ ເສື້ອຜ້າຂອງເຈົ້າບໍ່ໄດ້ຂາດໄປຈາກເຈົ້າ ແລະເກີບບໍ່ໄດ້ຂາດຫລຸດໄປ
ຈາກຕີນຂອງເຈົ້າ
6 ເຈົ້າທັງຫລາຍບໍ່ໄດ້ຮັບປະທານເຂົ້າຈີ່ ເຈົ້າບໍ່ໄດ້ດື່ມເຫລົ້າອະງຸ່ນ ຫລືສຸຣາ ເພື່ອເຈົ້າຈະໄດ້ຮູ້ວ່າເຮົາເປັນພຣະຜູ້
ເປັນເຈົ້າ ພຣະເຈົ້າຂອງພວກເຈົ້າ
7 ແລະເມື່ອທ່ານມາເຖິງທີ່ນີ້ ຊີໂຮນກະສັດເມືອງເຮສໂບນ ແລະໂອກກະສັດເມືອງບາຊານ ອອກມາທໍາສົງຄາມ
ກັບທ່ານ ແຕ່ເຮົາທັງຫລາຍກໍໄດ້ກະທໍາໃຫ້ເຂົາຝ່າຍແພ້ໄປ
8 ເຮົາຍຶດແຜ່ນດິນຂອງເຂົາ ແລະມອບໃຫ້ເປັນມໍຣະດົກແກ່ຄົນເຜົ່າຣູເບນ ຄົນເຜົ່າກາດ ແລະຄົນເຄິ່ງເຜົ່າມານັສ
ເຊ
9 ເພາະສະນັ້ນ ຈົ່ງລະວັງທີ່ຈະກະທໍາຕາມຖ້ອຍຄໍາແຫ່ງຄໍາຫມັ້ນສັນຍານີ້ ເພື່ອທ່ານທັງຫລາຍຈະຈະເຣີນຂຶ້ນໃນ
ບັນດາກິຈການຊຶ່ງທ່ານກະທໍາ

10 “ໃນວັນນີ້ທ່ານທັງຫລາຍທຸກຄົນຢືນຢູ່ຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຄືບັນດາຜູ້ຫົວໜ້າເຜົ່າທັງຫລາຍ
ພວກຜູ້ໃຫຍ່ຂອງທ່ານ ແລະເຈົ້າໜ້າທີ່ຂອງທ່ານບັນດາຜູ້ຊາຍຂອງອິສຣາເອນ
11 ເດັກນ້ອຍຂອງທ່ານ ພັຣຍາຂອງທ່ານ ແລະຄົນຕ່າງດ້າວທີ່ຢູ່ໃນຄ້າຍຂອງທ່ານ ທັງຄົນທີ່ຕັດຟືນໃຫ້ທ່ານ ແລະ
ຄົນທີ່ຕັກນໍ້າໃຫ້ທ່ານ
12 ເພື່ອທ່ານຈະໄດ້ເຂົ້າມາໃນຄໍາໝັ້ນສັນຍາແຫ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານ ຄືໃນຄໍາໝັ້ນສັນຍາທີ່ສາ
ບານໄວ້ ຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງກະທໍາກັບທ່ານໃນວັນນີ້
13 ເພື່ອພຣະອົງຈະຊົງແຕ່ງຕັ້ງທ່ານທັງຫລາຍໃນວັນນີ້ໃຫ້ເປັນໄພ່ພົນຂອງພຣະອົງ ແລະເພື່ອພຣະອົງຈະເປັນພຣ
ະຜູ້ເປັນເຈົ້າຂອງທ່ານດັ່ງທີ່ພຣະອົງຊົງສັນຍາກັບທ່ານນັ້ນ ແລະດັ່ງທີ່ພຣະອົງຊົງໃຫ້ຄໍາໝັ້ນສັນຍາກັບບັນພະ
ບຸຣຸດຂອງທ່ານ ຄືກັບອັບຣາຮາມ ອີຊາກ ແລະຢາໂຄບ
14 ຂ້າພະເຈົ້າບໍ່ໄດ້ກະທໍາຄໍາໝັ້ນສັນຍານີ້ກັບທ່ານເທົ່ານັ້ນ
15 ແຕ່ກັບຜູ້ທີ່ຢືນຢູ່ກັບເຮົາທັງຫລາຍໃນວັນນີ້ ຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ແລະກັບຜູ້ທີ່ບໍ່ໄດ້ຢູ່ທີ່ນີ້ກັບ
ເຮົາໃນວັນນີ້
16 “ທ່ານຊາບຢູ່ແລ້ວວ່າເຮົາອາສັຍຢູ່ໃນແຜ່ນດິນເອຢິບຢ່າງໃດ ແລະເຮົາທັງຫລາຍໄດ້ຜ່ານຖ້າມກາງປະຊາຊາດ
ຊຶ່ງທ່ານທັງຫລາຍຜ່ານພົ້ນຢ່າງໃດ
17 ທ່ານທັງຫລາຍໄດ້ເຫັນສິ່ງທີ່ໜ້າຂີ້ດຽດຂອງເຂົາທັງຫລາຍແລ້ວ ຄືເຫັນຮູບໂຄຣົບທີ່ທໍາດ້ວຍໄມ້ ດ້ວຍຫີນ
ແລະດ້ວຍເງິນ ແລະທອງຄໍາ ຊຶ່ງຢູ່ຖ້າມກາງເຂົາທັງຫລາຍ
18 ຈົ່ງລະວັງໃຫ້ດີ ຢ້ານວ່າຈະມີຊາຍຫລືຍິງຄົນໃດ ຫລືຄອບຄົວໃດ ຫລືເຜົ່າໃດ ຊຶ່ງຈິດໃຈຂອງເຂົາຫັນໜີໄປ
ຈາກພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາໄປບົວລະບັດພຣະຂອງປະຊາຊາດເຫລົ່ານັ້ນ ຢ້ານວ່າຖ້າມກາງທ່ານ
ຈະມີຮາກຊຶ່ງເກີດເປັນພິດຂົມຂື່ນແລະເປັນພິດ
19 ເມື່ອຄົນນັ້ນໄດ້ຍິນຖ້ອຍຄໍາຂອງຄໍາໝັ້ນສັນຍາທີ່ສາບານນີ້ ຈະນຶກອວຍພອນຕົນເອງໃນໃຈວ່າ “ເຖິງຂ້າພະ
ເຈົ້າຈະເດີນດ້ວຍຄວາມດື້ດຶງຕາມໃຈຂອງຂ້າພະເຈົ້າ ຂ້າພະເຈົ້າກໍຈະເປັນສຸກ” ຄວາມຄິດເຊັ່ນນີ້ກໍນໍາ
ການກວາດທໍາລາຍບໍ່ວ່າຜືນທີ່ລຸ່ມແລະທີ່ແລ້ງໄປດ້ວຍກັນ
20 ພຣະຜູ້ເປັນເຈົ້າຈະບໍ່ຊົງໃຫ້ອະພັຍແກ່ຄົນນັ້ນ ແຕ່ພຣະພິໂຣດຂອງພຣະເຈົ້າແລະຄວາມຫວງແຫນຂອງພຣະ
ອົງຈະພຸ່ງຂຶ້ນຕໍ່ຊາຍຄົນນັ້ນ ແລະຄໍາສາບແຊ່ງຊຶ່ງຂຽນໄວ້ໃນໜັງສືເຫລັ້ມນີ້ຈະຕົກຢູ່ເໜືອເຂົາ ແລະພຣະຜູ້
ເປັນເຈົ້າຈະຊົງລົບຊື່ຂອງເຂົາເສັຽຈາກໃຕ້ຟ້າ
21 ແລ້ວພຣະເຈົ້າຈະຊົງແຍກເຂົາອອກຈາກເຜົ່າຄົນອິສຣາເອນທັງປວງໃຫ້ປະສົບຄວາມພິນາດຕາມຄໍາສາບແຊ່ງ
ທັງສິ້ນຂອງຄໍາໝັ້ນສັນຍາ ຊຶ່ງຈາຣຶກໄວ້ໃນໜັງສືພຣະບັນຍັດນີ້
22 ແລະຄົນຊົ່ວອາຍຸຕໍ່ມາ ຄືລູກຫລານຊຶ່ງເກີດມາພາຍຫລັງທ່ານ ແລະຊົນຕ່າງດ້າວຊຶ່ງມາຈາກແຜ່ນດິນທີ່ຢູ່ຫ່າ
ງໄກ ຈະກ່າວເມື່ອເຂົາເຫັນຄວາມທຸກໃຈຂອງແຜ່ນດິນນັ້ນ ແລະໂຣກພັຍຊຶ່ງພຣະຜູ້ເປັນເຈົ້າຊົງບັນດານໃຫ້
ເປັນ
23 ຄືແຜ່ນດິນທັງໝົດຈະແຫ້ງແລ້ງແລະແຂງເປັນດິນດາກ ແລະປົນເກືອ ເປັນທີ່ວ່າງເປົ່າເພາະຖືກເຜົາໄຟ ບໍ່ມີ
ໃຜປູກຫວ່ານ ແລະບໍ່ມີສິ່ງໃດງອກຂຶ້ນ ເປັນບ່ອນທີ່ຫຍ້າບໍ່ງອກ ເປັນການທີ່ຖືກຂວ້ໍາເໝືອນດັ່ງໂຊໂດມ
ແລະໂກໂມຣາ ເມືອງອັດມາ ເມືອງເຊໂບອິມ ຊຶ່ງພຣະຜູ້ເປັນເຈົ້າຊົງຂວ້ໍາດ້ວຍຄວາມກິ້ວ ແລະພຣະພິໂຣດ
24 ປະຊາຊາດທັງຫລາຍຈະກ່າວວ່າ “ເປັນຫຍັງພຣະເຈົ້າຊົງກະທໍາເຊັ່ນນີ້ແກ່ແຜ່ນດິນນີ້ ພຣະພິໂຣດຫລວງ
ຫລາຍເຊັ່ນນີ້ໝາຍຄວາມຢ່າງໃດ”
25 ແລ້ວຄົນຈະເວົ້າກັນວ່າ “ເພາະເຂົາປະຖິ້ມຄໍາໝັ້ນສັນຍາຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງບັນພະບຸຣຸດຂອງ
ເຂົາ ຊຶ່ງພຣະອົງຊົງກະທໍາໄວ້ກັບເຂົາເມື່ອພຣະອົງຊົງພາເຂົາອອກຈາກແຜ່ນດິນເອຢິບ

26 ໄປບົວລະບັດນະມັສການພຣະອື່ນ ເປັນພຣະຊຶ່ງເຂົາບໍ່ເຄີຍຮູ້ຈັກ ແລະຊຶ່ງພຣະອົງບໍ່ໄດ້ປະທານແກ່ເຂົາ
27 ເຫດສັນນັ້ນ ພຣະພິໂຣດຂອງພຣະຜູ້ເປັນເຈົ້າຈຶ່ງພຸ່ງຂຶ້ນຕໍ່ແຜ່ນດິນນີ້ ນຳເອົາຄຳສາບແຊ່ງຊຶ່ງຈາຣຶກໄວ້ໃນໜັງສືນີ້ມາເຖິງ
28 ແລະພຣະຜູ້ເປັນເຈົ້າຊົງຖອນຮາກເຂົາເສັຽ ຈາກແຜ່ນດິນດ້ວຍຄວາມກິ້ວ ແລະພຣະພິໂຣດອັນຫລວງຫລາຍ ແລະຖິ້ມເຂົາໄປໃນອີກແຜ່ນດິນນຶ່ງດັ່ງທີ່ເປັນຢູ່ໃນວັນນີ້”
29 “ສິ່ງລີ້ລັບທັງປວງເປັນຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາທັງຫລາຍ ແຕ່ສິ່ງຊົງສຳແດງນັ້ນເປັນຂອງເຮົາທັງຫລາຍແລະຂອງລູກຫລານຂອງເຮົາເປັນນິດ ເພື່ອເຮົາຈະກະທຳຕາມຖ້ອຍຄຳທັງສິ້ນຂອງກົດໝາຍນີ້

## 30 ເງື່ອນໄຂການສ້າງຂຶ້ນໃໝ່ ແລະຮັບພຣະພອນ

God’s Fidelity Assured

1 ບັດນີ້ ຂ້າພະເຈົ້າຂໍໃຫ້ທ່ານເລືອກເອົາລະຫວ່າງພຣະພອນກັບຄຳສາບແຊ່ງ ເມື່ອເຫດການເຫລົ່ານີ້ເກີດຂຶ້ນກັບທ່ານແລ້ວ ແລະເມື່ອຢູ່ໃນຖ້າມກາງຊົນຊາດທີ່ພຣະຜູ້ເປັນເຈົ້າຊົງຂັບໄລ່ທ່ານໄປນັ້ນ ທ່ານຈະລະນຶກໄດ້ເຖິງສິ່ງທີ່ຂ້າພະເຈົ້າເວົ້າ
2 ແລ້ວທ່ານກັບເຊື້ອສາຍຂອງທ່ານຈະກັບຄືນມາຫາພຣະຜູ້ເປັນເຈົ້າ ແລະຈະທຳຕາມຂໍ້ຄຳສັ່ງຂອງພຣະອົງ ຊຶ່ງຂ້າພະເຈົ້າໄດ້ບອກທ່ານໃນມື້ນີ້ຢ່າງສຸດຈິດສຸດໃຈ
3 ເມື່ອນັ້ນພຣະຜູ້ເປັນເຈົ້າຈະຊົງເມດຕາທ່ານ ຈະນຳທ່ານກັບຄືນມາຈາກຊົນຊາດທີ່ຊົງຂັບໄລ່ໄປ ທັງຈະທຳໃຫ້ທ່ານກັບມາທ້ອນໂຮມກັນຄືເກົ່າອີກ
4 ເຖິງແມ່ນວ່າທ່ານຈະຕົກໄປຢູ່ໄກຄືນລະຟາກຟ້າ ພຣະຜູ້ເປັນເຈົ້າກໍຈະຊົງຮວບຮວມເອົາພວກທ່ານກັບມາຈາກທີ່ນັ້ນພຣະອົງຈະຊົງນຳທ່ານກັບຄືນ
5 ແລະພຣະຜູ້ເປັນເຈົ້າຈະຊົງນຳທ່ານເຂົ້າມາໃນແຜ່ນດິນຊຶ່ງບັນພະບຸຣຸດຂອງທ່ານໄດ້ຍຶດຄອບຄອງ ແລະພຣະອົງຈະຊົງກະທຳໃຫ້ແຜ່ນດິນນັ້ນອຸດົມສົມບູນແລະມີຄົນຈຳນວນຫລາຍກວ່າທີ່ເຄີຍມີມາແລ້ວໃນສມັຍບັນພະບຸຣຸດຂອງທ່ານ
6 ພຣະຜູ້ເປັນເຈົ້າຈະຊົງທຳໃຫ້ທ່ານກັບເຊື້ອສາຍມີໃຈເຊື່ອຟັງເພື່ອຈະໄດ້ຮັກພຣະອົງຢ່າງສຸດຈິດສຸດໃຈ ແລະມີຊີວິດຢູ່ໃນແຜ່ນດິນນັ້ນສືບຕໍ່ໄປ
7 ແລະພຣະຜູ້ເປັນເຈົ້າ ຈະຊົງສາບແຊ່ງພວກສັດຕຣູຜູ້ທີ່ກຽດຊັງແລະຂົ່ມເຫັງທ່ານ ແລ້ວທ່ານຈະເຊື່ອຟັງແລະທຳຕາມຂໍ້ຄຳສັ່ງທີ່ພຣະອົງຊົງບອກຂ້າພະເຈົ້າວັນນີ້ອີກ
8 ພຣະຜູ້ເປັນເຈົ້າຈະຊົງໃຫ້ການງານຂອງທ່ານຈະເຣີນຮຸ່ງເຮືອງ ໃຫ້ມີລູກຫລານ ແລະງົວຄວາຍຫລາຍ ພ້ອມທັງມີເຂົ້າປານານ້ຳອຸດົມສົມບູນ
9 ຈະຊົງພໍພຣະທັຍທຳໃຫ້ທ່ານອຸດົມສົມບູນ ແລະຮັ່ງມີເໝືອນພຣະອົງຊົງທຳໃຫ້ພວກບັນພະບຸຣຸດຂອງທ່ານ
10 ແຕ່ທ່ານຈະຕ້ອງເຊື່ອຟັງແລະທຳຕາມກົດບັນຍັດແລະພຣະທັມຊຶ່ງໄດ້ບົ່ງໄວ້ໃນໜັງສືຄຳສອນນີ້ ພ້ອມກັບໃຫ້ເຊື່ອຟັງພຣະອົງຢ່າງສຸດຈິດສຸດໃຈ

Exhortation to Choose Life

11 ພຣະບັນຍັດທີ່ຂ້າພະເຈົ້າຈະບອກທ່ານໃນວັນນີ້ ບໍ່ແມ່ນວ່າເປັນຂອງຍາກ ຫລືເຫລືອວິໄສທີ່ທ່ານຈະເຂົ້າໃຈໄດ້
12 ບໍ່ແມ່ນພຣະບັນຍັດຢູ່ເທິງຟ້າ ຊຶ່ງທ່ານຈະກ່າວວ່າ ໃຜຈະຂຶ້ນເທິງຟ້າແລະເອົາມາໃຫ້ເຮົາ ເພື່ອເຮົາຈະໄດ້ຟັງແລະປະພຶດຕາມ
13 ບໍ່ແມ່ນຢູ່ຟາກທະເລ ຊຶ່ງທ່ານຈະກ່າວວ່າ ໃຜຈະຂ້າມທະເລໄປແທນເຮົາ ແລະເອົາມາໃຫ້ເຮົາ ເພື່ອເຮົາຈະໄດ້ຟັງແລະປະພຶດຕາມ

14 ແຕ່ຖ້ອຍຄຳນັ້ນຢູ່ໃກ້ທ່ານທັງຫລາຍ ຢູ່ໃນປາກຂອງທ່ານ ແລະຢູ່ໃນໃຈຂອງທ່ານສະນັ້ນທ່ານຈຶ່ງປະພຶດຕາມໄດ້
15 ວັນນີ້ຂ້າພະເຈົ້າໄດ້ເອົາຄວາມຮັ່ງມີແລະຊີວິດ ຫລືການທຳລາຍ ແລະຄວາມຕາຍມາໃຫ້ທ່ານເລືອກ
16 ຖ້າທ່ານທຳຕາມພຣະບັນຍັດຂອງພຣະຜູ້ເປັນເຈົ້າທີ່ຂ້າພະເຈົ້າໃຫ້ໃນວັນນີ້ ຄືວ່າຮັກແລະເຊື່ອຟັງພຣະອົງພ້ອມທັງປະຕິບັດຕາມກົດບັນຍັດພຣະທັມແລະຮີດຄອງປະເພນີທັງຫມົດ ທ່ານກໍຈະຈຳເຣີນຮຸ່ງເຮືອງແລະກາຍເປັນຊົນຊາດໃຫຍ່ ພຣະຜູ້ເປັນເຈົ້າຈະຊົງອວຍພອນທ່ານໃນແຜ່ນດິນທີ່ຈະເຂົ້າຍຶດຄອງ
17 ແຕ່ຖ້າມີໃຈດື້ບໍ່ຍອມຮັບຟັງ ແລະຖືກເຂົາລໍ້ລວງໃຫ້ຂາບໄຫວ້ພຣະອື່ນ
18 ຂ້າພະເຈົ້າຂໍເຕືອນໃນທີ່ນີ້ ແລະດຽວນີ້ວ່າ ພວກທ່ານຈະຖືກທຳລາຍ ຈະມີຊີວິດບໍ່ຍືນນານຢູ່ໃນແຜ່ນດິນທີ່ກຳລັງຈະຂ້າມແມ່ນ້ຳຈໍແດນໄປຍຶດຄອງນັ້ນ
19 ບັດນີ້ ຂ້າພະເຈົ້າຂໍໃຫ້ທ່ານເລືອກເອົາລະຫວ່າງຊີວິດກັບຄວາມຕາຍ ລະຫວ່າງພຣະພອນກັບຄຳສາບແຊ່ງຂອງພຣະເຈົ້າ ຂໍສິ່ງສັກສິດໃນສວັນແລະໂລກ ຈົ່ງເປັນພຍານຕໍ່ການເລືອກນີ້
20 ສະນັ້ນ ຂໍໃຫ້ທ່ານເລືອກເອົາຊີວິດເທີນ ຈົ່ງຮັກພຣະຜູ້ເປັນເຈົ້າ ເຊື່ອຟັງແລະຕິດພັນຢູ່ກັບພຣະອົງ ເພື່ອວ່າທ່ານກັບເຊື້ອສາຍຂອງທ່ານຈະມີອາຍຸຫມັ້ນຍືນຢູ່ໃນແຜ່ນດິນທີ່ພຣະອົງຊົງສັນຍາວ່າຈະຍົກໃຫ້ບັນພະບຸຣຸດຂອງທ່ານຄື ອັບຣາຮາມ ອີຊາກ ແລະຢາໂຄບນັ້ນ”

## 31 ໂຢຊວຍຮັບຫນ້າທີ່ສືບແທນໂມເຊ

Joshua Becomes Moses’ Successor

(ຈຊບ 27:12-23)

1 ໂມເຊໄດ້ເວົ້າກັບຊາວອິສຣາເອນຕໍ່ໄປວ່າ,
2 “ດຽວນີ້ອາຍຸຂ້າພະເຈົ້າໄດ້ຮ້ອຍຊາວປີແລ້ວ ເຫັນວ່າຈະເປັນຜູ້ນຳຂອງພວກທ່ານຕໍ່ໄປອີກບໍ່ໄດ້ ນອກຈາກນີ້ພຣະຜູ້ເປັນເຈົ້າຍັງຊົງບອກວ່າ ຂ້າພະເຈົ້າຈະບໍ່ໄດ້ຂ້າມແມ່ນ້ຳຈໍແດນໄປ
3 ພຣະອົງເອງຈະຊົງເປັນຜູ້ນຳຫນ້າທ່ານໄປ ໂດຍຈະຊົງທຳລາຍຊົນຊາດຊຶ່ງຢູ່ທີ່ນັ້ນ ເພື່ອທ່ານຈະໄດ້ເປັນເຈົ້າຂອງແຜ່ນດິນຂອງພວກເຂົາ ແລະໂຢຊວຍຈະເປັນຜູ້ນຳຂອງພວກທ່ານຕາມພຣະຜູ້ເປັນເຈົ້າຊົງກ່າວ
4 ພຣະອົງຈະຊົງທຳລາຍປະຊາຊົນເຫລົ່ານີ້ເຫມືອນດັ່ງຊົງທຳລາຍກະສັດຊີໂຮນ ແລະກະສັດໂອກຂອງຊາວອາໂມຣິດກັບປະເທດຂອງພຣະອົງນັ້ນ
5 ພຣະຜູ້ເປັນເຈົ້າຊົງໃຫ້ທ່ານມີໄຊຊະນະ ແລະພວກທ່ານຈົ່ງທຳກັບພວກເຂົາໄດ້ທຸກຢ່າງຕາມທີ່ຂ້າພະເຈົ້າບອກ
6 ຈົ່ງເຂັ້ມແຂງ ແລະກ້າຫານເທີນ ຢ່າສູ່ຢ້ານເຂົາ ເພາະວ່າພຣະຜູ້ເປັນເຈົ້າເອງຈະຊົງຢູ່ນຳທ່ານ ພຣະອົງບໍ່ຊົງປ່ອຍໃຫ້ຫມົດຫວັງ ຫລືປະຖິ້ມທ່ານດອກ”
7 ແລ້ວໂມເຊໄດ້ເອີ້ນໂຢຊວຍເຂົ້າມາຫາ ແລະເວົ້າກັບທ່ານຕໍ່ຫນ້າຊາວອິສຣາເອນວ່າ, “ຈົ່ງເຂັ້ມແຂງແລະກ້າຫານເທີນ ເພາະທ່ານເປັນຄົນນຶ່ງຊຶ່ງຈະນຳພາປະຊາຊົນເຫລົ່ານີ້ໄປຍຶດຄອງແຜ່ນດິນທີ່ພຣະຜູ້ເປັນເຈົ້າຊົງສັນຍາຈະຍົກໃຫ້ບັນພະບຸຣຸດຂອງເຂົາ ແລະແມ່ນທ່ານຊຶ່ງຈະເປັນຜູ້ຈະໃຫ້ແຜ່ນດິນນີ້ແກ່ເຂົາເປັນກຳມະສິດ
8 ພຣະຜູ້ເປັນເຈົ້າຈະຢູ່ນຳທ່ານ ແລະນຳຫນ້າທ່ານໄປ ຈະບໍ່ປ່ອຍໃຫ້ຫມົດຫວັງຫລືປະຖິ້ມທ່ານເລີຍ ສະນັ້ນຈົ່ງກ້າຫານແລະຢ່າສູ່ຢ້ານ

### ອ່ານພຣະທັມຂອງພຣະເຈົ້າທຸກໆເຈັດປີ

The Law to Be Read Every Seventh Year

9 ຕໍ່ມາ ໂມເຊໄດ້ຂຽນພຣະທັມຂອງພຣະເຈົ້າ ແລ້ວມອບໃຫ້ພວກຜູ້ນຳຂອງຊາວອິສຣາເອນກັບປະໂຣຫິດຊາວເລວີ ຜູ້ຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ

10 ແລະໂມເຊສັ່ງເຂົາວ່າ, “ເມື່ອຄົບທຸກໆເຈັດປີ ຕາມເວລາກຳນົດປີປົດປ່ອຍໃນເທສການປຸກຕູບ
11 ເມື່ອຄົນອິສຣາເອນປະຊຸມພ້ອມກັນຕໍ່ພຣະພັກພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານໃນສະຖານທີ່ຊຶ່ງພຣະອົງຊົງ
ເລືອກໄວ້ນັ້ນ ທ່ານທັງຫລາຍຈົ່ງອ່ານກົດຫມາຍນີ້ໃຫ້ຄົນອິສຣາເອນທັງປວງຟັງ
12 ຈົ່ງເອີ້ນຄົນທັງປວງມາປະຊຸມກັນ ທັງຜູ້ຍິງ ເດັກນ້ອຍແລະຊາວຕ່າງດ້າວໃນເມືອງຂອງທ່ານ ເພື່ອວ່າທຸກຄົນ
ຈະໄດ້ຍິນ  ພຣະທັມນັ້ນ ແລ້ວຈະໄດ້ຢຳເກງພຣະຜູ້ເປັນເຈົ້າ ແລະເອົາໃຈໃສ່ທຳຕາມຄຳສອນຂອງພຣະອົງ
13 ແລະເພື່ອລູກຫລານຂອງທ່ານຜູ້ຍັງບໍ່ທັນໄດ້ຍິນພຣະທັມນີ້ ແລ້ວພວກເຂົາກໍຈະຮູ້ຈັກຢຳເກງພຣະຜູ້ເປັນເຈົ້າ
ຕາບເທົ່າເວລາທີ່ຢູ່ໃນແຜ່ນດິນທີ່ພວກທ່ານຈະຂ້າມແມ່ນ້ຳຈໍແດນໄປຍຶດຄອງນັ້ນ”

Moses and Joshua Receive God’s Charge

14 ຕໍ່ມາພຣະຜູ້ເປັນເຈົ້າຊົງກ່າວຕໍ່ໂມເຊວ່າ, “ເຈົ້າໃກ້ຈະຫມົດອາຍຸແລ້ວ ຈົ່ງເອີ້ນໂຢຊວຍໄປຍັງເຕັນນັດພົບ ເພື່ອ
ເຮົາຈະໄດ້ບອກສອນເຂົາ”
15 ໂມເຊກໍໄປຍັງເຕັນນັ້ນ ແລ້ວພຣະຜູ້ເປັນເຈົ້າຊົງປາກົດໃຫ້ເຂົາເຫັນໃນກ້ອນເສົາເມກໃກ້ໆປະຕູຕູບນັ້ນ
16 ພຣະຜູ້ເປັນເຈົ້າບອກໂມເຊວ່າ, “ເຈົ້າຈະຕາຍໃນບໍ່ຊ້ານີ້ ເມື່ອເຈົ້າຕາຍແລ້ວປະຊາຊົນຈະທຳບໍ່ສັດຊື່ຕໍ່ເຮົາ ຈະ
ລະເມີດຄຳສັນຍາທີ່ເຮົາໄດ້ໃຫ້ ແລະຈະປະຖິ້ມເຮົາໄປຂາບໄຫວ້ພຣະໃນປະເທດທີ່ເຂົາເຂົ້າໄປ
17 ເມື່ອມັນເກີດຂຶ້ນດັ່ງນັ້ນ ເຮົາຈະຮ້າຍ ຈະປະຖິ້ມ ແລະທຳລາຍພວກເຂົາ ພັຍວິບັດອັນຫນ້າຢ້ານຫລາຍຢ່າງຈະ
ມາຖືກພວກເຂົາ ແລ້ວພວກເຂົາຈະສຳນຶກໃນໃຈວ່າ ສິ່ງເຫລົ່ານີ້ໄດ້ເກີດຂຶ້ນຍ້ອນວ່າ ເຮົາບໍ່ໄດ້ຢູ່ນຳພວກເຂົາຕໍ່
ໄປ
18 ເຮົາຈະບໍ່ຊ່ອຍເຫລືອເຂົາເພາະວ່າເຂົາໄດ້ທຳຊົ່ວ ແລະຂາບໄຫວ້ພຣະອື່ນ
19 ດ້ວຍເຫດນີ້ ເຈົ້າຈົ່ງຂຽນບົດເພງຕໍ່ໄປນີ້ ແລ້ວສອນໃຫ້ພວກອິສຣາເອນຮ້ອງສຽດສີເຂົາເອງ
20 ເຮົາຈະພາເຂົາເຂົ້າໄປຍັງແຜ່ນດິນອັນອຸດົມສົມບູນແລະຮັ່ງມີຕາມທີ່ເຮົາໄດ້ສັນຍາໄວ້ກັບບັນພະບຸຣຸດຂອງ
ພວກເຂົາ ຢູ່ທີ່ນັ້ນຈະມີອາຫານທຸກຢ່າງກິນ ແລະຈະມີຊີວິດຢູ່ດ້ວຍຄວາມຜາສຸກ ແຕ່ພວກເຂົາຈະປ່ຽນໃຈໄປ
ຂາບໄຫວ້ພຣະອື່ນ ຈະປະຖິ້ມເຮົາແລະລະເມີດຄຳຫມັ້ນສັນຍາ ພັຍວິບັດອັນຫນ້າຢ້ານຫລາຍຢ່າງຈະຕົກຖືກ
ພວກເຂົາ
21 ແລ້ວລູກຫລານຂອງເຂົາຈະຮ້ອງເພງສຽດສີພວກເຂົາ ເພາະກ່ອນເຮົານຳພວກເຂົາເຂົ້າໄປຍັງແຜ່ນດິນທີ່ເຮົາ
ສັນຍາວ່າຈະໃຫ້ນັ້ນ ເຮົາໄດ້ຮູ້ຄວາມຄິດໃນໃຈຂອງເຂົາແລ້ວ”
22 ໂມເຊໄດ້ຂຽນບົດເພງນີ້ ແລະນຳເອົາມາສອນປະຊາຊົນອິສຣາເອນໃນວັນນັ້ນເອງ
23 ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກໃຫ້ໂຢຊວຍບຸດຊາຍທ່ານນູນວ່າ, “ຈົ່ງເຂັ້ມແຂງແລະກ້າຫານເທີນ ເພາະວ່າເຈົ້າ
ຈະນຳຊາວ ອິສຣາເອນເຂົ້າໄປໃນແຜ່ນດິນທີ່ເຮົາສັນຍາວ່າຈະໃຫ້ແກ່ເຂົາ ແລະເຮົາຈະຢູ່ກັບເຈົ້າ”
24 ໂມເຊໄດ້ຂຽນພຣະທັມຂອງພຣະຜູ້ເປັນເຈົ້າລົງໃນປຶ້ມ ໄດ້ຂຽນລົງທັງຫມົດບໍ່ໄດ້ເວັ້ນຈັກຄຳ
25 ເມື່ອຂຽນສຸດແລ້ວ ທ່ານໄດ້ເວົ້າກັບຊາວເລວີທີ່ຫາມຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າວ່າ,
26 “ຈົ່ງເອົາຫນັງສືພຣະທັມນີ້ໄວ້ໃນຂ້າງຫີບຄຳສັນຍາຂອງພຣະຜູ້ເປັນເຈົ້າ ເພື່ອໄວ້ເປັນພຍານຕໍ່ສູ້ໄພ່ພົນຂອງພ
ຣະເຈົ້າຢູ່ທີ່ນັ້ນ
27 ຂ້າພະເຈົ້າຮູ້ດີວ່າເຂົາເປັນຄົນຫົວດື້ດ້ານ ແລະທໍຣະຍົດໃນລະຫວ່າງຂ້າພະເຈົ້າມີຊີວິດຢູ່ນັ້ນ ເຂົາໄດ້ເປັນກະ
ບົດຕໍ່ສູ້ພຣະຜູ້ເປັນເຈົ້າຫລາຍເທື່ອ ສະນັ້ນເມື່ອຂ້າພະເຈົ້າຕາຍແລ້ວເຂົາແຮງຈະເປັນກະບົດຫລາຍຂຶ້ນອີກ
28 ຈົ່ງເອີ້ນບັນດາຜູ້ນຳຕະກູນ ແລະເຈົ້ານາຍທຸກຄົນມາປະຊຸມຊ້ອງຫນ້າກັນຂ້າພະເຈົ້າເສັຽ ເພື່ອຂ້າພະເຈົ້າຈະໄດ້
ບອກສິ່ງນີ້ແກ່ພວກເຂົາ ຂ້າພະເຈົ້າຈະຂໍໃຫ້ສວັນແລະໂລກເປັນພຍານໃນການຕໍ່ສູ້ເຂົາ

29 ອັນນີ້ງຂ້າພະເຈົ້າຮູ້ດີວ່າ ເມື່ອຂ້າພະເຈົ້າຕາຍແລ້ວ ພວກທ່ານຈະທຳຊົ່ວແລະລະເລີຍສິ່ງທີ່ຂ້າເຈົ້າສອນສັ່ງໄວ້
ດັ່ງນັ້ນພັຍວິບັດຈະຕົກຖືກທ່ານໃນວັນຂ້າງໜ້າເພາະວ່າພວກທ່ານໄດ້ລະເມີດຕໍ່ຄຳສັ່ງຂອງພຣະຜູ້ເປັນເຈົ້າ”

**ບົດເພງຂອງໂມເຊ**

The Song of Moses

30 ແລ້ວໂມເຊໄດ້ຮ້ອງເພງຕໍ່ໄປນີ້ໃຫ້ຊາວອິສຣາເອນຟັງຈົນຈົບ

## 32

Chapter 32

1 “ແຜ່ນດິນແລະທ້ອງຟ້າ ຈົ່ງຟັງສຽງຂ້າພະເຈົ້າ ໃຫ້ຟັງຂ້າພະເຈົ້າໃກ້ໆ
2 ຄຳສອນຂອງຂ້າພະເຈົ້າຈະຕົກລົງເໝືອນເມັດຝົນ ຈະກໍ່ຕົວຢູ່ເທິງໂລກເໝືອນນ້ຳໝອກ ຄຳເວົ້າຂອງຂ້າພະ
ເຈົ້າຈະຕົກລົງມາເທິງຫຍ້າອ່ອນເໝືອນຝົນເໝືອນຫ່າຝົນໂຮຍລົງເທິງຫຍ້າຂຽວ
3 ຂ້າພະເຈົ້າຈະສັຣເສີນພຣະນາມພຣະຜູ້ເປັນເຈົ້າ ໄພ່ພົນຂອງພຣະອົງຈະປະກາດຄວາມຍິ່ງໃຫຍ່ຂອງພຣະອົງ
4 ພຣະຜູ້ເປັນເຈົ້າຊົງເປັນທີ່ເພິ່ງອັນຍິ່ງໃຫຍ່ຂອງພວກເຈົ້າ ທາງທັງຫລາຍຂອງພຣະອົງກໍສົມບູນແລະຖືກຕ້ອງ ພ
ຣະເຈົ້າຂອງພວກເຈົ້າຊົງສັດຊື່ແລະທ່ຽງທັມ ຊົງທຳແຕ່ສິ່ງຖືກຕ້ອງແລະດີງາມ
5 ແຕ່ພວກເຈົ້າທຳບໍ່ສັດຊື່ ບໍ່ເໝາະສົມທີ່ຈະເປັນໄພ່ພົນຂອງພຣະອົງ ເປັນຊົນຊາດບາບແລະຄິດໂກງ
6 ຊົນຊາດໂງ່ງ່າວເບົາປັນຍາເອີຍ ພວກເຈົ້າຈະທຳຕໍ່ພຣະຜູ້ເປັນເຈົ້າຢ່າງນີ້ບໍ ພຣະອົງຊົງເປັນບິດາແລະຜູ້ສ້າງ
ເຈົ້າ ຊົງສ້າງເຈົ້າເປັນຊົນຊາດນຶ່ງ
7 ຈົ່ງລະນຶກເຖິງ ຄາວອະດີດຕະການທີ່ລ່ວງມາເຫິງແລ້ວ ຈົ່ງຮ້ອງຂໍໃຫ້ພໍ່ຂອງເຈົ້າບອກສິ່ງທີ່ເກີດຂຶ້ນ ແລະຈົ່ງ
ຮ້ອງຂໍໃຫ້ພວກຜູ້ເຖົ້າເລົ່າເຣື່ອງໃນອະດີດ
8 ຜູ້ສູງສຸດຊົງໃຫ້ທຸກຊາດມີແຜ່ນດິນຂອງຕົນເອງ ຊົງໃຫ້ເຂົາມີບ່ອນຢູ່ເປັນຂອງຕົນເອງ ພຣະອົງຊົງມອບໝາຍ
ໃຫ້ແຕ່ລະຊົນຊາດມີເທວະດາອົງນຶ່ງ
9 ແຕ່ຈະຊົງເລືອກເອົາເຊື້ອສາຍຂອງຢາໂຄບເປັນຂອງພຣະອົງເອງ
10 ພຣະອົງຊົງພົບເຫັນເຂົາທ່ອງທ່ຽວໄປມາໃນຖິ່ນກັນດານ ໃນບ່ອນເປົ່າປ່ຽວລົມແຮງ ຊົງຄຸ້ມຄອງແລະເບິ່ງແຍງ
ເຂົາ ຊົງ ເອົາໃຈໃສ່ເຂົາເໝືອນພຣະເນດຂອງພຣະອົງ
11 ເໝືອນນົກອິນຊີທີ່ສອນລູກໃຫ້ບິນ ມັນບິນລົງຮັງແລະໃຫ້ລູກເກາະຢູ່ເທິງປີກຢ່າງປອດພັຍ ພຣະຜູ້ເປັນເຈົ້າຊົງ
ຮັກສາອິສຣາເອນບໍ່ໃຫ້ເສັຽໄປ
12 ພຣະຜູ້ເປັນເຈົ້າອົງດຽວໄດ້ຊົງນຳໄພ່ພົນຂອງພຣະອົງມາປາສຈາກຄວາມຊ່ອຍເຫລືອຂອງພຣະຕ່າງປະເທດ
13 ພຣະອົງຊົງໃຫ້ເຂົາປົກຄອງແຜ່ນດິນກວ້າງໃຫຍ່ ແລະໄດ້ກິນພືດຜົນທີ່ເກີດໃນນາ ພວກເຂົາໄດ້ພົບຮັງເຜິ້ງຢູ່
ຕາມໂງ່ນຫີນ ກົກໝາກກອກຂອງເຂົາໄດ້ເກີດຂຶ້ນໃນດິນແຂງ
14 ຝູງງົວ ແລະແບ້ໃຫ້ນ້ຳນົມຢ່າງພຽງພໍ ພວກເຂົາມີແກະ ແບ້ ແລະງົວຕຸ້ຍພີດີ ມີເຂົ້າບາເລ ແລະເຫລົ້າອະງຸ່ນຢ່າງ
ດີທີ່ສຸດ
15 ໄພ່ພົນຂອງພຣະຜູ້ເປັນເຈົ້າໄດ້ມັ່ງຄັ່ງສົມບູນ ແລະເປັນກະບົດ ພວກເຂົາຕຸ້ຍ ແລະກິນຫລາຍ ໄດ້ປະຖິ້ມພຣະ
ເຈົ້າຜູ້ຊົງສ້າງເຂົາ ແລະປະຖິ້ມພຣະຜູ້ຊ່ອຍອົງຍິ່ງໃຫຍ່ຂອງຕົນ
16 ພຣະຜູ້ເປັນເຈົ້າຊົງກຽດຊັງທີ່ພວກເຂົາຂາບໄຫວ້ຮູບໂຄຣົບ ຊົງພຣະພິໂຣດທີ່ພວກເຂົາທຳຊົ່ວ
17 ພວກເຂົາບູຊາພຣະອື່ນທີ່ບໍ່ມີປໂຍດ ຄືພຣະທີ່ອິສຣາເອນບໍ່ເຄີຍຂາບໄຫວ້ມາກ່ອນ ແລະປູ່ຍ່າຕາຍາຍຂອງເຂົາ
ກໍບໍ່ເຄີຍຢຳເກງ
18 ພວກເຂົາຫລົງລືມພຣະເຈົ້າອົງຊົງຊ່ອຍຄຸ້ມຄອງຂອງຕົນ ອົງຊົງໃຫ້ຊີວິດແກ່ພວກເຮົາ

19 ເມື່ອພຣະຜູ້ເປັນເຈົ້າເຫັນດັ່ງນີ້ກໍຊົງພຣະພິໂຣດ ແລະຊົງປະຖິ້ມລູກຊາຍຍິງຂອງເຂົາ

20 ພຣະອົງຊົງກ່າວວ່າ ເຮົາຈະບໍ່ຊ່ອຍເຂົາອີກຕໍ່ໄປ ເພາະວ່າເຂົາດື້ ແລະບໍ່ສັດຊື່ ເຮົາຈະຊອມເບິ່ງວ່າເຂົາ ຈະເຮັດແນວໃດ

21 ເຂົາໄດ້ທຳໃຫ້ເຮົາຮ້າຍຍ້ອນຮູບໂຄຣົບ ເຮົາກຽດຊັງພວກເຂົາຍ້ອນມີພຣະຢ່າງນັ້ນຊຶ່ງບໍ່ແມ່ນພຣະແທ້ເລີຍ ດັ່ງ ນັ້ນ ເຮົາຈຶ່ງຈະໃຫ້ເຂົາຮ້າຍຍ້ອນຊົນຊາດໂງ່ ຈະໃຫ້ເຂົາມີໃຈອິດສາພວກທີ່ບໍ່ມີຊາດ

22 ຄວາມຮ້າຍຂອງເຮົາຈະຮ້າຍແຮງເຫມືອນໄຟ ຈະໄຫມ້ທຸກໆສິ່ງເທິງໂລກໃຫ້ຫມົດໄປ ມັນຈະລຸກລາມໄປຈົນ ເຖິງພິພົບຄົນຕາຍ ແລະຈະໄຫມ້ລົງໄປເຖິງຮາກພູ

23 ເຮົາຈະນຳພັຍວິບັດອັນເຫລືອຄັນນານັບມາຍັງເຂົາ ຈະໃຊ້ລູກທະນູຍິງໃສ່ພວກເຂົາ

24 ເຂົາຈະຕາຍຍ້ອນອຶດຢາກ ແລະເຈັບໄຂ ຍ້ອນໂຣກພັຍໄຂ້ເຈັບອັນຮ້າຍແຮງ ເຮົາຈະໃຫ້ສັດປ່າມາທຳຮ້າຍເຂົາ ແລະໃຫ້ງູພິດມາຂົບຕອດເຂົາ

25 ຈະມີການຣົບເລວກັນຕາມຖນົນຫົນທາງ ໃນບ້ານເຮືອນຈະມີແຕ່ຄວາມຢ້ານ ພວກຊາຍຫນຸ່ມຍິງສາວກໍຈະ ຕາຍ ແມ່ນແຕ່ເດັກອ່ອນແລະຜູ້ເຖົ້າກໍຈະບໍ່ເຫລືອ

26 ເຮົາຈະທຳລາຍເຂົາໃຫ້ຫມົດສິ້ນໄປ ເພື່ອຈະບໍ່ມີໃຜໄດ້ລະນຶກເຖິງເຂົາ

27 ແຕ່ເຮົາຈະບໍ່ໃຫ້ພວກສັດຕຣູຄຸຍອວດອ້າງໄດ້ວ່າພວກເຂົາໄດ້ຊະນະໄພ່ພົນຂອງເຮົາ ແລະວ່າເຮົາກຳຈັດເຂົາບໍ່ ໄດ້

28 ອິສຣາເອນເປັນຊົນຊາດຂາດສະຕິປັນຍາ ແລະບໍ່ມີຄວາມສລາດເລີຍ

29 ພວກເຂົາບໍ່ຮູ້ເລີຍວ່າເປັນຫຍັງຈຶ່ງຜ່າຍແພ້ໄປ ບໍ່ເຂົ້າໃຈໃນສິ່ງທີ່ບັງເກີດຂຶ້ນ

30 ເປັນຫຍັງຄົນຜູ້ດຽວຈຶ່ງຊະນະຄົນເປັນພັນ ຄົນເປັນຫມື່ນຈຶ່ງຜ່າຍແພ້ຄົນສອງຄົນ ກໍເພາະວ່າພຣະຜູ້ເປັນເຈົ້າ ຂອງເຂົາໄດ້ປະຖິ້ມເຂົາແລ້ວ ພຣະເຈົ້າອົງຍິ່ງໃຫຍ່ໄດ້ໃຫ້ເຂົາຜ່າຍແພ້

31 ພວກສັດຕຣູຂອງເຂົາຮູ້ວ່າພຣະຂອງຕົນອ່ອນແອ ບໍ່ມີອຳນາດເຫມືອນພຣະເຈົ້າຂອງອິສຣາເອນ

32 ພວກເຂົາຖືກທຳລາຍເສັຽຫາຍເຫມືອນເມືອງໂຊໂດມ ແລະເມືອງໂກໂມຣາ ເຫມືອນກົກອະງຸ່ນທີ່ເກີດຫມາກ ຂົມແລະເປັນພິດ ຊົງຄອຍຖ້າວັນເວລາເພື່ອລົງໂທດເຂົາ

33 ເຫລົ້າອະງຸ່ນຂອງເຂົາເປັນພິດຂອງງູ ເປັນພິດຮ້າຍແຮງຂອງງູເຫົ່າ

34 “ເຣື່ອງນີ້ບໍ່ໄດ້ສະສົມໄວ້ກັບເຮົາດອກຫລື ປະທັບຕາໄວ້ໃນຄັງຂອງເຮົາ

35 ພຣະອົງຊົງແກ້ແຄ້ນແລະລົງໂທດເຂົາ ເວລາເຂົາຕຳສະດຸດລົ້ມຈະມາຮອດແລ້ວ ວັນເວລາແຫ່ງການລົງໂທດ ໃກ້ເຂົ້າມາແລ້ວ

36 ພຣະຜູ້ເປັນເຈົ້າຈະຊົງປ້ອງກັນສິດທິໄພ່ພົນຂອງພຣະອົງ ເມື່ອຊົງເຫັນວ່າເຂົາຫມົດເຫື່ອແຮງ ຈະຊົງເມດຕາປາ ນີຜູ້ຮັບໃຊ້ ພຣະອົງ ເມື່ອຊົງເຫັນວ່າບໍ່ມີໃຜເຫລືອຢູ່

37 ແລ້ວພຣະຜູ້ເປັນເຈົ້າຈະຊົງຖາມໄພ່ພົນຂອງພຣະອົງວ່າ, “ພຣະທີ່ມີອຳນາດທີ່ເຈົ້ານັບຖືນັ້ນຢູ່ໃສ

38 ຄືຜູ້ທີ່ຮັບປະທານໄຂມັນຂອງເຄື່ອງບູຊາສັຕບູຊາຂອງເຂົາ ແລະດື່ມເຫລົ້າທີ່ເປັນເຄື່ອງບູຊາ ໃຫ້ບັນດາພຣະ ເຫລົ່ານັ້ນລຸກຂຶ້ນຊ່ອຍເຈົ້າ ໃຫ້ພຣະເຫລົ່ານັ້ນເປັນຜູ້ປ້ອງກັນເຈົ້າ

39 ບັດນີ້ ເບິ່ງແມ່, ແມ່ນເຮົາຜູ້ດຽວເປັນພຣະເຈົ້າ ບໍ່ມີພຣະແທ້ອົງອື່ນອີກ ນຳເອົາຄວາມຕາຍແລະໃຫ້ຊີວິດແກ່ ພວກເຈົ້າ ໃຫ້   ບາດເຈັບ ແລະປົວໃຫ້ດີ ບໍ່ມີໃຜຂັດຂວາງເຮົາໄດ້

40 ແນ່ນອນລະ ເຮົາເປັນພຣະເຈົ້າຜູ້ມີຊີວິດຢູ່ ເຮົາຍົກມືຂຶ້ນສາບານວ່າ

41 ຈະຝົນດາບຂອງເຮົາໃຫ້ຄົມໆ ແລະຈະເປັນຜູ້ພິພາກສາ ເຮົາຈະແກ້ແຄ້ນສັດຕຣູຂອງເຮົາ ຈະລົງໂທດຜູ້ກຽດ ຊັງເຮົາ

42 ເລືອດຂອງເຂົາຈະໄຫລອອກຍ້ອນລູກທະນູຂອງເຮົາ ດາບຂອງເຮົາຈະຂ້າຜູ້ທີ່ຂັດຂວາງເຮົາ ເຮົາຈະບໍ່ໄວ້ຊີວິດ
ຜູ້ທີ່ຕໍ່ສູ້ເຮົາ ແມ່ນແຕ່ຜູ້ບາດເຈັບແລະພວກຊະເລີຍກໍຈະຕາຍ
43 ຊົນຊາດທັງຫລາຍເອີຍ ຈົ່ງສັຣເສີນຍ້ອງຍໍໄພ່ພົນຂອງພຣະຜູ້ເປັນເຈົ້າ ພຣະອົງຊົງລົງໂທດຄົນທັງປວງທີ່ຂ້າ
ພວກເຂົາ ຊົງແກ້ແຄ້ນສັດຕຣູຂອງພຣະອົງ ແລະຊົງໃຫ້ອະພັຍບາບແກ່ໄພ່ພົນຂອງພຣະອົງ”
44 ໂມເຊກັບໂຢຊວຍບຸດຂອງນູນ ໄດ້ຮ້ອງເພງນີ້ໃຫ້ປະຊາຊົນອິສຣາເອນຟັງ

**ຄຳສອນເທື່ອສຸດທ້າຍຂອງໂມເຊ**

45 ເມື່ອໂມເຊເລົ່າຄຳສອນຂອງພຣະຜູ້ເປັນເຈົ້າໃຫ້ປະຊາຊົນຟັງສຸດແລ້ວ ທ່ານກໍກ່າວວ່າ,
46 “ຈົ່ງທຳຕາມຂໍ້ຄຳສັ່ງທີ່ຂ້າພະເຈົ້າໄດ້ໃຫ້ພວກທ່ານແລ້ວ ໃນມື້ນີ້ ໃຫ້ບອກສອນລູກຫລານຂອງທ່ານດ້ວຍ ເພື່ອ
ເຂົາຈະໄດ້ທຳຕາມຄຳສອນຂອງພຣະເຈົ້າດ້ວຍເອົາໃຈໃສ່
47 ຄຳສອນນີ້ບໍ່ແມ່ນຂອງບໍ່ມີປໂຍດ ແຕ່ມັນເປັນຊີວິດຈິດໃຈຂອງທ່ານແທ້ຈິງ ສະນັ້ນ ຈົ່ງທຳຕາມເພື່ອພວກທ່ານ
ຈະໄດ້ມີອາຍຸຫມັ້ນຍືນຢູ່ໃນແຜ່ນດິນຟາກແມ່ນ້ຳຈໍແດນ ຊຶ່ງພວກທ່ານກຳລັງຕຽມຈະເຂົ້າໄປຍຶດຄອງເອົານັ້ນ

**ໂມເຊຮັບອະນຸຍາດໃຫ້ເບິ່ງແຜ່ນດິນການາອານ**

Moses’ Death Foretold

48 ໃນວັນນີ້ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ,“ຈົ່ງຂຶ້ນໄປເທິງພູອາບາຣິມໃນປະເທດໂມອາບ ຊຶ່ງຢູ່ກົງກັນຂ້າມ
ກັບເມືອງເຢຣິໂກ ໃຫ້ປີນຂຶ້ນໄປເຖິງຍອດພູເນໂບ ແລ້ວຫລຽວເບິ່ງປະເທດການາອານທີ່ເຮົາຈະຍົກໃຫ້ປະຊາ
ຊົນອິສຣາເອນ
49 ເຈົ້າຈະຕາຍຢູ່ເທິງພູຫນ່ວຍນັ້ນ ເຫມືອນກັບອາໂຣນອ້າຍຂອງເຈົ້າຕາຍຢູ່ເທິງພູໂຮຣ໌
50 ເພາະວ່າຢູ່ຕໍ່ຫນ້າຄົນອິສຣາເອນເຈົ້າທັງສອງບໍ່ເຊື່ອເຮົາ ເມື່ອຢູ່ທີ່ແມ່ນ້ຳເມຣິບັດກາເດສໃນຖິ່ນກັນດານຊິນ
ພວກເຈົ້າກໍບໍ່ໂຄຣົບເຮົາຕໍ່ຫນ້າຄົນທັງຫລາຍ
51 ເຈົ້າຈະຫລຽວເຫັນແຜ່ນດິນນັ້ນໃນໄລຍະໄກ ແຕ່ເຈົ້າຈະບໍ່ໄດ້ເຂົ້າໄປໃນແຜ່ນດິນທີ່ເຮົາຈະຍົກໃຫ້ຊາວອິສຣາ
ເອນ”

## 33 ໂມເຊອວຍພອນໃຫ້ອິສຣາເອນ

Moses’ Final Blessing on Israel

1 ກ່ອນໂມເຊຄົນຂອງພຣະເຈົ້າໃກ້ຈະຕາຍ ເພິ່ນໄດ້ອວຍພອນໃຫ້ຄົນອິສຣາເອນດັ່ງຕໍ່ໄປນີ້
2 ພຣະຜູ້ເປັນເຈົ້າສະເດັດມາຈາກພູຊີນາອີ ຊົງຂຶ້ນມາເຫມືອນຕາເວັນສ່ອງແສງເທິງເມືອງເອໂດມ ຊົງສ່ອງແສງ
ຈາກພູປາຣານມາຍັງໄພ່ພົນຂອງພຣະອົງ ມີພວກເທວະດາເປັນຫມື່ນໆຢູ່ກັບພຣະອົງ ແລະມີໄຟລຸກຮຸ່ງເຮືອງຢູ່
ໃນພຣະຫັດເບື້ອງຂວາຂອງພຣະອົງ
3 ພຣະຜູ້ເປັນເຈົ້າຊົງຮັກໄພ່ພົນຂອງພຣະອົງ ຊົງປົກປ້ອງຄຸ້ມຄອງຄົນຂອງພຣະອົງ ດັ່ງນັ້ນ ພວກເຮົາຈຶ່ງນ້ອມຄຸ້ມ
ຄອງຄົນຂອງພຣະອົງ ແລະທຳຕາມຂໍ້ຄຳສັ່ງຂອງພຣະອົງ
4 ພວກເຮົາເຊື່ອຟັງພຣະທັມທີ່ໂມເຊມອບໃຫ້ ມັນເປັນສົມບັດອັນລ້ຳຄ່າແຫ່ງຊົນຊາດຂອງເຮົາ
5 ພຣະຜູ້ເປັນເຈົ້າຊົງເປັນກະສັດຂອງອິສຣາເອນໄພ່ພົນຂອງພຣະອົງ ເມື່ອຜູ້ນຳ ແລະເຜົ່າຕ່າງໆຂອງເຂົາມາຊຸມ
ນຸມກັນ
6 ໂມເຊໄດ້ເວົ້າເຖິງຕະກູນຣູເບນວ່າ, “ຂໍຢ່າໃຫ້ຣູເບນຕາຍ ແລະຢ່າໃຫ້ຄົນຂອງເຂົາມີຫນ້ອຍ”
7 ເວົ້າເຖິງຕະກູນຢູດາວ່າ, “ໂອ ພຣະຜູ້ເປັນເຈົ້າ ຂໍຊົງຟັງສຽງຮ້ອງໄຫ້ຂໍຄວາມຊ່ອຍເຫລືອຂອງເຂົາແດ່ທ້ອນ ຈົ່ງ
ຮວບຮວມເອົາເຂົາເຂົ້າກັບຕະກູນອື່ນໆອີກ ໂອ ພຣະຜູ້ເປັນເຈົ້າ ຂໍຊົງຕໍ່ສູ້ແທນເຂົາ ແລະຊົງຕໍ່ສູ້ພວກສັດຕຣູ
ຂອງເຂົາ”

8 ເວົ້າເຖິງຕະກູນເລວີວ່າ, “ໂອ ພຣະຜູ້ເປັນເຈົ້າ ຂໍຊົງເປີດເຜີຍພຣະປະສົງຂອງພຣະອົງຜ່ານພວກເລວີ ພວກເຂົາ
ເປັນໄພ່ພົນຜູ້ສັດຊື່ຂອງພຣະອົງ ພຣະອົງຊົງທົດລອງເຂົາແລ້ວທີ່ ມັດສາ ແລະໄດ້ຊົງພິສູດເບິ່ງເຂົາແລ້ວທີ່ນ້ຳ
ອອກບໍ່ ເມຣິບາ
9 ພວກເຂົາມີຄວາມສັດຊື່ຕໍ່ພຣະອົງຫລາຍກວ່າຕໍ່ພໍ່ແມ່ ອ້າຍນ້ອງຫລືລູກຫລານ ໄດ້ທຳຕາມຂໍ້ຄຳສັ່ງຂອງພຣະ
ອົງ ແລະສັດ ຊື່ຕໍ່ຄຳຫມັ້ນສັນຍາຂອງພຣະອົງ
10 ພວກເຂົາຈະບອກສອນໃຫ້ໄພ່ພົນຂອງພຣະອົງທຳຕາມພຣະທັມ ແລະຈະຖວາຍບູຊາເທິງແທ່ນຂອງພຣະອົງ
11 ໂອ ພຣະຜູ້ເປັນເຈົ້າ ຂໍຊົງຊ່ອຍໃຫ້ພວກເຂົາແຂງແຮງຂຶ້ນ ຂໍຊົງຍິນດີໃນສິ່ງທີ່ເຂົາທຳ ຊົງທຳລາຍສັດຕຣູໃຫ້
ຫມົດກ້ຽງ ແລະຢ່າໃຫ້ພວກເຂົາໂງຄໍຂຶ້ນໄດ້ອີກ”
12 ເວົ້າເຖິງຕະກູນເບັນຢາມິນວ່າ, “ພຣະຜູ້ເປັນເຈົ້າຊົງຮັກ ແລະຄຸ້ມຄອງຕະກູນນີ້ ໃນແຕ່ລະວັນ ພວກເຂົາມີຊີວິດ
ຢູ່ຢ່າງປອດພັຍຕໍ່ພຣະພັກພຣະຜູ້ເປັນເຈົ້າ”
13 ເວົ້າເຖິງຕະກູນໂຢເຊັບວ່າ, “ຂໍພຣະຜູ້ເປັນເຈົ້າຊົງອວຍພອນໃຫ້ແຜ່ນດິນຂອງເຂົາມີຝົນຕົກ ແລະນ້ຳບາດານ
14 ຂໍຊົງອວຍພອນໃຫ້ແຜ່ນດິນຂອງເຂົາໄດ້ຮັບຫມາກຜົນຈາກດວງອາທິດ ແລະໄດ້ຮັບຫມາກຜົນຢ່າງດີທີ່ສຸດໃນ
ທຸກຣະດູ
15 ຂໍຊົງໃຫ້ຫນ່ວຍພູອັນເກົ່າແກ່ທັງຫລາຍຂອງເຂົາ ເຕັມໄປດ້ວຍເຄື່ອງປູກຢ່າງດີ
16 ຂໍໃຫ້ແຜ່ນດິນນັ້ນເຕັມໄປດ້ວຍຂອງດີ ຂໍໃຫ້ພຣະຄຸນທີ່ພຣະຜູ້ເປັນເຈົ້າຊົງກ່າວອອກມາຈາກໄຟໃນພຸ່ມໄມ້
ອວຍພອນເຫລົ່ານີ້ໃຫ້ຕະກູນໂຢເຊັບ ເພາະວ່າເຂົາເປັນຫົວຫນ້າພວກອ້າຍນ້ອງຂອງຕົນ
17 ໂຢເຊັບມີເຫື່ອແຮງເຫມືອນງົວເຖິກ ມີກຳລັງເຫມືອນຄວາຍປ່າ ມານັສເຊມີກຳລັງຫລາຍພັນຄົນ ແລະເອຟຣາ
ອິມມີຫລາຍຫມື່ນຄົນ ໂຢເຊັບຂັບໄລ່ຊົນຊາດອື່ນອອກໄປດ້ວຍກຳລັງນັ້ນ ໄດ້ຂັບໄລ່ເຂົາໄປຈົນສຸດແຜ່ນ
ດິນໂລກ”
18 ເວົ້າເຖິງຕະກູນເຊບູລູນ ແລະອິສຊາຄາວ່າ, “ຂໍໃຫ້ການຄ້າຂາຍທາງທະເລຂອງເຊບູລູນຈະເຣີນກ້າວຫນ້າ
ແລະຂໍໃຫ້ຣາຍໄດ້ໃນຄອບຄົວອິສຊາຄາເພີ້ມທະວີຫລາຍຂຶ້ນ
19 ພວກເຂົາເຊີນຊາດທັງຫລາຍມາທີ່ພູເຂົາ ແລ້ວຖວາຍເຄື່ອງບູຊາຢ່າງຖືກຕ້ອງຢູ່ທີ່ນັ້ນ ເພາະວ່າເຂົາຮັ່ງມີຍ້ອນ
ທະເລແລະດິນຊາຍຕາມຕາຝັ່ງ”
20 ເວົ້າເຖິງຕະກູນກາດວ່າ, “ສັຣເສີນພຣະເຈົ້າຜູ້ຊົງຂຍາຍເຂດແດນຂອງຊາວກາດ ຊາວກາດຫມູບດັກຢູ່ເຫມືອນ
ສິງ ເພື່ອຄອຍທັກແຂນ ແລະລອກຫນັງຫົວ
21 ເຂົາເລືອກເອົາແຜ່ນດິນທີ່ອຸດົມສົມບູນ ແລະຮັ່ງມີເປັນຂອງຕົນເອງ ສ່ວນແບ່ງຂອງຜູ້ນຳກໍເປັນຂອງພວກເຂົາ
ເມື່ອພວກຜູ້ນຳອິສຣາເອນເຂົ້າຮ່ວມປະຊຸມກັນ ພວກເຂົາກໍທຳຕາມພຣະທັມ ແລະຂໍ້ຄຳສັ່ງຂອງພຣະຜູ້ເປັນ
ເຈົ້າ”
22 ເວົ້າເຖິງຕະກູນດານວ່າ, “ດານເປັນລູກສິງທີ່ແລ່ນເຕັ້ນມາຈາກບາຊານ
23 ເວົ້າເຖິງຕະກູນເນັຟທາລີວ່າ, “ເນັຟທາລີບໍຣິບູນດ້ວຍພຣະຄຸນທີ່ພຣະຜູ້ເປັນເຈົ້າອວຍພອນໃຫ້ ແຜ່ນດິນຂອງ
ເຂົາຍາວຢຽດໄປເຖິງທະເລສາບຄາລີເລທາງໃຕ້”
24 ເວົ້າເຖິງຕະກູນອາເຊີວ່າ, “ອາເຊີໄດ້ຮັບພຣະພອນຫລາຍກວ່າຕະກູນອື່ນ ຂໍໃຫ້ເຂົາໄດ້ຮັບຄວາມເມດຕາປານີ
ຈາກອ້າຍນ້ອງຂອງຕົນ ຂໍໃຫ້ແຜ່ນດິນຂອງເຂົາອຸດົມສົມບູນໄປດ້ວຍກົກຫມາກກອກເທດ
25 ຂໍໃຫ້ເມືອງຂອງເຂົາມີປະຕູເຫລັກເປັນທີ່ປ້ອງກັນ ແລະໃຫ້ເຂົາມີຊີວິດຢູ່ດ້ວຍຄວາມປອດພັຍຕລອດໄປ”
26 ອິສຣາເອນເອີຍ, ບໍ່ມີພຣະໃດເຫມືອນພຣະເຈົ້າຂອງທ່ານ ພຣະອົງສະເດັດມາທາງທ້ອງຟ້າດ້ວຍສະງ່າຣາສີ
ສະເດັດຜ່ານເມກມາຊ່ອຍເຫລືອທ່ານ

27 ພຣະເຈົ້າຊົງເປັນອົງຄຸ້ມຄອງທ່ານຕລອດໄປ ແຂນອັນຊົງຣິດຂອງພຣະອົງຈະຊົງອູ້ມຊູທ່ານໄວ້ ພຣະອົງຊົງຂັບໄລ່ສັດຕຣູໃຫ້ໜີໄປຈາກທ່ານ ແລະຊົງບອກໃຫ້ທ່ານທຳລາຍເຂົາຖິ້ມ

28 ດັ່ງນີ້ແຫລະເຊື້ອສາຍຂອງຢາໂຄບຈຶ່ງມີຊີວິດຢູ່ດ້ວຍຄວາມສົງບສຸກ ມີຄວາມປອດພັຍຢູ່ໃນແຜ່ນດິນທີ່ອຸດົມດ້ວຍເຂົ້າ ແລະເຫລົ້າອະງຸ່ນ ມີນ້ຳໝອກຈາກຟ້າຕົກລົງມາຍັງດິນ

29 ອິສຣາເອນເອີຍ ທ່ານທັງຫລາຍເປັນສຸກແທ້ ບໍ່ມີໃຜຄືພວກທ່ານເລີຍ ທ່ານເປັນຊົນຊາດທີ່ພຣະຜູ້ເປັນເຈົ້າຊົງຊ່ອຍ ພຣະອົງຊົງເປັນແຜ່ນເຫລັກຕ້ານທານ ແລະດາບຂອງທ່ານ ຊົງປ້ອງກັນແລະໃຫ້ທ່ານມີໄຊຊະນະ ພວກສັດຕຣູຈະມາຂໍຄວາມກະຣຸນາຈາກທ່ານ ແລ້ວທ່ານຈະຢຽບຢ່ຳເຂົາ

## 34 ໂມເຊເຖິງແກ່ກຳ

Moses Dies and Is Buried in the Land of Moab

1 ໂມເຊໄດ້ຂຶ້ນແຕ່ທີ່ຮາບພຽງໂມອາບໄປຍັງພູ ເນໂບ ຂຶ້ນໄປເຖິງຈອມພູປີສກາຊຶ່ງຢູ່ກົງກັນຂ້າມກັບເມືອງເຢຣິໂກ ຢູ່ທີ່ນັ້ນ ພຣະຜູ້ເປັນເຈົ້າໄດ້ຊົງສະແດງໃຫ້ທ່ານເຫັນແຜ່ນດິນທັງໝົດ ຄືຕັ້ງແຕ່ເຂດແດນກີເລອາດໄປເຖິງເຫນືອເມືອງດານ ເຖິງເຂດແດນເນັຟທາລີທັງໝົດ

2 ຕລອດທັງເຂດແດນເອຟຣາອິມ ມານັສເຊ ແລະຢູດາ ໄປເຖິງທະເລເມດີເຕຣາເນທາງທິດຕາເວັນຕົກ

3 ເຖິງເນເກັບ ແລະຈາກທີ່ຮາບພຽງ ຄືທີ່ລຸ່ມເມືອງເຢຣິໂກ ເມືອງກົກຕານນັ້ນໄກໄປເຖິງເມືອງໂຊອາຣ໌

4 ແລ້ວພຣະຜູ້ເປັນເຈົ້າກ່າວຕໍ່ໂມເຊວ່າ, "ນີ້ແມ່ນແຜ່ນດິນທີ່ເຮົາໄດ້ສັນຍາຕໍ່ອັບຣາຮາມ ອີຊາກ ແລະຢາໂຄບວ່າຈະຍົກໃຫ້ແກ່ເຊື້ອສາຍຂອງເຂົາ ເຮົາໄດ້ທຳໃຫ້ເຈົ້າເຫັນກັບຕາແຜ່ນດິນນັ້ນ ແຕ່ຈະບໍ່ໃຫ້ເຈົ້າເຂົ້າໄປ"

5 ດັ່ງນັ້ນ ໂມເຊຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຈຶ່ງໄດ້ສິ້ນຊີວິດຢູ່ທີ່ນັ້ນໃນປະເທດໂມອາບຕາມທີ່ພຣະຜູ້ເປັນເຈົ້າໄດ້ຊົງບອກແລ້ວ

6 ພຣະຜູ້ເປັນເຈົ້າຊົງຝັງສົບທ່ານໄວ້ໃນຮ່ອມພູແຫ່ງນຶ່ງທີ່ປະເທດໂມອາບ ຊຶ່ງກົງກັນຂ້າມກັບເມືອງເບັດເປໂອຣ໌ ແຕ່ຈົນເທົ່າທຸກວັນນີ້ກໍບໍ່ມີໃຜຮູ້ວ່າສົບໂມເຊໄດ້ຝັງໄວ້ຢູ່ໃສ?

7 ໂມເຊຕາຍເມື່ອອາຍຸໄດ້ຮ້ອຍຊາວປີ ທ່ານມີສຸຂະພາບແຂງແຮງ ແລະຕາກໍຍັງເຫັນຮຸ່ງຢູ່ຄືເກົ່າ

8 ຊາວອິສຣາເອນໄດ້ໄວ້ທຸກໃຫ້ໂມເຊເປັນເວລາສາມສິບວັນ ທີ່ທົ່ງຮາບໂມອາບ

9 ໂຢຊວຍ ຊຶ່ງເປັນຜູ້ໄດ້ຮັບໜ້າທີ່ແທນໂມເຊ ຍ້ອນວ່າທ່ານໄດ້ເປັນຜູ້ມີສະຕິປັນຍາດີໂດຍທ່ານໄດ້ຮັບພິທີວາງມືໃສ່ຫົວຈາກໂມເຊ ຊາວອິສຣາເອນຈຶ່ງໄດ້ເຊື່ອຟັງໂຢຊວຍ ແລະທຳຕາມຂໍ້ຄຳສັ່ງທີ່ພຣະຜູ້ເປັນເຈົ້າຊົງບອກໂມເຊນັ້ນ

10 ໃນອິສຣາເອນບໍ່ເຄີຍມີຜູ້ປະກາດພຣະທັມຄົນໃດເຫມືອນໂມເຊ ພຣະຜູ້ເປັນເຈົ້າຊົງກ່າວກັບທ່ານໜ້າຕໍ່ໜ້າ

11 ຊົງໃຫ້ທ່ານທຳການອັສຈັນ ແລະໝາຍສຳຄັນຕໍ່ສູ້ກະສັດເອຢິບ ກັບຂ້າຣາຊການ ແລະໝົດປະເທດຊຶ່ງຜູ້ປະກາດພຣະທັມອື່ນໆທຳບໍ່ໄດ້ເຫມືອນທ່ານ

12 ທ່ານທຳສິ່ງທີ່ໜ້າຢ້ານ ແລະຍິ່ງໃຫຍ່ຕໍ່ໜ້າຊາວອິສຣາເອນ ແຕ່ຄົນອື່ນທຳບໍ່ໄດ້ເຫມືອນທ່ານ